| ກຸ່ມວິຊາສະເພາະ | ສາຍສ້າງຄູປະຖົມຕໍ່ເນື່ອງ ລະບົບ 2 ປີ |
|---|---|

# ວິທີສອນຫ້ອງຮຽນຮ່ວມ 11+1+2 ສາຍຄູປະຖົມ ປີ 2





**ສົກປີ 2024**

# ວິທີສອນຫ້ອງຮຽນຮ່ວມ

| | | |
|---|---|---|
| ສາຍຄູປະຖົມ ລະບົບ 2 ປີ | ປີທີ 2 | ພາກຮຽນ 1 |


ຮຽບຮຽງໂດຍ:

ຊອ ປທ ສົມບູນ ຊາມຸນຕີ

ກວດແກ້ໂດຍ:

ທ່ານ ວັດທະນາ ໝັ້ນວິໄລ

ອຈ ນາງ ສົມປອງ ແສນທະວິສຸກ

ອຈ ນາງ ຄຳສະຫວັນ ຈັນສີຍະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ດດດດດທທທທ

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ເລກທີ 42 ສພ.ວສ

# ໃບຮັບຮອງ

## ອະນຸມັດຜ່ານການຮັບຮອງການຮຽບຮຽງເອກະສານ ປະກອບການສອນພາກວິຊາ ປະຖົມ

- **ອີງຕາມ:** ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ.
- **ອີງຕາມ:** ແຜນປັບປຸງຄຸນນະພາບ QA ຂອງກະຊວງສຶກສາທິການ ແລະ ກິລາ, ໃນມາດຕະຖານທີ 10 ຕົວຊີ້ວັດທີ 48-50 ການຄົ້ນຄວ້າວິທະຍາສາດ ແລະ ການບໍລິການ.
- **ອີງຕາມ:** ຂໍ້ຕົກລົງວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ສະພາວິທະຍາສາດຂອງວິທະຍາໄລຄູສາລະວັນ ສະບັບເລກທີ 05/ສພ.ວສ, ລົງວັນທີ 7 ມີນາ 2024.

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າ ບົດຮຽບຮຽງເອກະສານປະກອບການສອນ ວິຊາ: ການສອນຫ້ອງຮຽນຮ່ວມ ສາຍຄູປະຖົມ ລະບົບ 11+3+2 ປີ 2 ມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປື້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນວິທະຍາໄລຄູສາລະວັນ.

| **ຄະນະກຳມະການກວດສອບ** | **ລາຍເຊັນ** |
|---|---|
| ທ່ານ ຊອ ປອ ໄພທອງ ພົງສົງຄາມ | ........................................ |
| ທ່ານ ອຈ ປທ ແສນຮັກ ບຸນມີ | ........................................ |
| ທ່ານ ອຈ ນາງ ລິດສະໄໝ ສິດທິຈັກ | ........................................ |

**ທີ່, ສາລະວັນ, ວັນທີ .........................**

**ປະທານສະພາວິທະຍາສາດ**

ອຈ. ນ ລິນປອງ ແສນທະວິສຸກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
໑໑໑໑໑໒໒໒໒

ວິທະຍາໄລຄູສາລະວັນ
ສະພາວິທະຍາສາດ
ພາກວິຊາປະຖົມ

# ໃບຮັບຮອງ
## ການກວດແກ້ບົດຮຽບຮຽງເອກະສານປະກອບການສອນ
## ວິຊາ: ການສອນຫ້ອງຮຽນຮ່ວມ ສາຍຄູປະຖົມ ລະບົບ 11+3+2 ປີ 2

**ພາກວິຊາ**: ປະຖົມ

**ຜູ້ຮຽບຮຽງເອກະສານປະກອບການສອນ**

ທ່ານ ຊອ ປທ ສົມບູນ ຊາມຸນຕີ

**ຄະນະກຳມະການກວດແກ້ບົດ** **ລາຍເຊັນ**

ທ່ານ ວັດທະນາ ໝັ້ນວິໄລ ..........................................

ທ່ານ ອຈ ນາງ ສົມປອງ ແສນທະວິສຸກ ..........................................

ທ່ານ ອຈ ນາງ ຄຳສະຫວັນ ຈັນສີຍະວົງ ..........................................

**ທີ່, ສາລະວັນ, ວັນທີ ..........................**
**ພາກວິຊາ.ປະຖົມ................**

ແສນຊັກ ບຸນມີ

# ຄຳນຳ

ປຶ້ມປະກອບການສອນເຫຼັ້ມນີ້ຂ້າພະເຈົ້າໄດ້ຮຽບຮຽງຂຶ້ນເພື່ອປະກອບໃນການຈັດກິດຈະກຳ-ການຮຽນການສອນ ໃນລາຍວິຊາວິທີສອນການສຶກສາຮຽນຮ່ວມ ໃນລະບົບ 11+1+2 ສາຍຄູປະຖົມ ປີທີ 2 ເພື່ອໃຫ້ນັກຮຽນສາມາດບອກໄດ້ຄວາມເປັນມາ, ຄວາມໝາຍ, ຄວາມສຳຄັນ, ລັກສະນະ, ອົງປະກອບ, ນິຕິກຳ, ນະໂຍບາຍທີ່ກ່ຽວຂ້ອງກັບການສຶກສາຮຽນຮ່ວມ, ປະເພດຂອງຄວາມເປັນພິການ, ສິດທິເດັກ ແລະ ບົດບາດຍິງ-ຊາຍໄດ້ ນອກຈານີ້ຍັງໃຫ້ນັກຮຽນນັກຮຽນສາມາດອະທິບາຍໄດ້ຫຼັກການ ແລະ ແຜນການຊ່ວຍເຫຼືອເດັກເປັນລາຍບຸກຄົນອັນສຳຄັນຍິ່ງໄປກວ່ານັ້ນໃຫ້ນັກຮຽນຮູ້ກ່ຽວກັບການຈັດສັນສະພາບແວດລ້ອມໃນຫ້ອງຮຽນຮ່ວມ ແລະ ການຈັດກິດຈະກຳການຮຽນ-ການສອນສຳລັບເດັກທີ່ເປັນພິການ.

ປຶ້ມປະກອບການສອນເຫຼັ້ມນີ້ໄດ້ມີການພັດທະນາຂຶ້ນມາ ພາຍຫຼັງໄດ້ນຳມາສອນຕົວຈິງ ແລະ ຜ່ານຂັ້ນຕອນການກວດແກ້ຂອງທີມງານຄູສອນຫ້ອງຮຽນຮ່ວມ ຂອງວິທະຍາໄລຄູສາລະວັນມາແລ້ວ.

ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ຄູ- ອາຈານ, ນັກຮຽນຄູ ແລະ ແລະ ພາກສ່ວນອື່ນໆຫາກຍັງພົບເຫັນບັນຫາໃດໜຶ່ງທີ່ບໍ່ເໝາະສົມ, ບໍ່ສອດຄ່ອງ ແລະ ບໍ່ທັນສະພາບ, ກະລຸນາປະກອບຄຳເຫັນຂອງຕົນເພື່ອຊ່ວຍປັບປຸງເຮັດໃຫ້ປຶ້ມເຫຼັ້ມນີ້ສົມບູນ ແລະ ມີປະສິດທິຜົນຍິ່ງຂຶ້ນໃນອະນາຄົດ.

ຊອ ປທ ສົມບູນ ຊາມຸນຕີ

# ສາລະບານ


ບົດທີ 1 : ນະໂຍບາຍກ່ຽວກັບການສຶກສາຮຽນຮ່ວມ........................................................................1

ບົດທີ2 : ຄວາມໝາຍ,ຄວາມສຳຄັນ,ອົງປະກອບ, ຄຸນປະໂຫຍດຂອງຫ້ອງຮຽນຮ່ວມ ແລະ ເພື່ອນມິດໃນການຮຽນຮູ້7

ບົດທີ 3: ການສຶກສາຮຽນຮ່ວມຢູ່ ສປປລາວ.............................................................................14

ບົດທີ 4: ແນວຄວາມຄິດ, ຫຼັກການ, ຄວາມສຳຄັນ, ຮູບແບບການຮຽນຮ່ວມ ແລະ ການສຶກສາພິເສດ................17

ບົດທີ 5: ຊຸມຊົນ ແລະ ຫຼັກສູດ.................................................................................................21

ບົດທີ 6: ຂັ້ນຕອນກາຍເປັນໂຮງຮຽນທີ່ມີສະພາບແວດລ້ອມເປັນການຮຽນຮ່ວມ ແລະ ເພື່ອນມິດໃນການຮຽນຮູ້...22

ບົດທີ 7: ຄວາມສະເໝີພາບຍິງ-ຊາຍໃນການສຶກສາ......................................................................31

ບົດທີ 8: ການສອນພາສາລາວໃຫ້ເດັກຊົນເຜົ່າ...........................................................................36

ບົດທີ 9: ການສະໜອງການສຶກສາຮຽນຮ່ວມຕາມໂຄງສ້າງຊິດ...........................................................43

ບົດທີ10: ຄວາມເປັນພິການ......................................................................................................51

ບົດທີ 11 : ການຮຽນຮ່ວມສຳລັບເດັກທີ່ມີປັນຫາທາງດ້ານພຶດຕິກຳ....................................................52

ບົດທີ 12 : ການກຳນົດຊອກຮູ້ຄວາມຕ້ອງການຂອງເດັກທີ່ມີບັນຫາທາງດ້ານສາຍຕາ...................................59

ບົດທີ 13 : ການກຳນົດຊອກຮູ້ຄວາມຕ້ອງການຂອງເດັກທີ່ມີບັນຫາທາງດ້ານການໄດ້ຍິນ...............................66

ບົດທີ 14 : ປະເພດຂອງເດັກທີ່ບໍ່ໄດ້ເຂົ້າໂຮງຮຽນ...........................................................................73

ບົດທີ 15: ການວາງແຜນສຳລັບການສອນ ແລະ ການຮຽນຮູ້..............................................................7

# ບົດທີ 1

# ນະໂຍບາຍທີ່ກ່ຽວກັບການສຶກສາຮຽນຮ່ວມ

**1. ນິຍາມ**

ການສຶກສາຮຽນຮ່ວມ ໝາຍເຖິງ ຂະບວນການສະໜອງການສຶກສາທີ່ມີຄຸນນະພາບ ແລະ ມີການປັບປ່ຽນຢ່າງຕໍ່ເນື່ອງໃຫ້ແທດເໝາະກັບຈຸດພິດເສດ, ຄວາມສາມາດ ແລະ ຄວາມຕ້ອງການທີ່ຫຼາກຫຼາຍຂອງຜູ້ຮຍນທຸກຄົນ, ແນໃສ່ແກ້ໄຂບັນດາອຸປະສັກທີ່ຂີດຂັ້ນ ການເຂົ້າເຖິງການສຶກສາ ໂດຍສ້າງສະພາບແວດລ້ອມການຮຽນທີ່ເປັນມິດ, ປອດໄພ, ປະສາຈາກການຈຳແນກ ແລະ ປົກປ້ອງຜູ້ຮຽນ ພ້ອມທັງຊຸກຍູ້ໃຫ້ຜູ້ຮຽນ, ຄອບຄົວ, ຊຸມຊົນ,ໃຫ້ມີສ່ວນຮ່ວມໃນການຮຽນຮູ້ດັ່ງກ່າວຢ່າງມີປະສິດທິພົນ.

**2. ສົນທິສັນຍາສາກົນ ວ່າດ້ວຍ ສິດທິມະນຸດ ສະບັບເລກທີ 217 A ( III ) ລົງວັນທີ 10ທັນວາ 1946**

ມາດຕາ 1. ມະນຸດທຸກຄົນລ້ວນແຕ່ມີສິດສະເໜີພາບມາແຕ່ກຳເນີດ ແລະ ມີຄວາມສະເໜີພາບມາແຕ່ມື້ເກີດ ແລະ ມີຄວາມສະເໜີພາບທາງດ້ານກົດໝາຍ. ທຸກຄົນປະກອບດ້ວຍສະສະຕິສຳປະສັນຍະ ແລະ ມະໂນທຳສົມຄວນຈະຕ້ອງປະພຶດຕໍ່ກັນ ແລະ ກັນ ດ້ວຍນ້ຳໃຈອັນເປັນພະລະດອນພາບນຳກັນ.

ມາດຕາ 13: ການສຶກສາຂັ້ນພື້ນຖານຈະຕ້ອງໄດ້ຮັບການຊຸກຍູ້ ຫຼື ເລັ່ງລັດເທົ່າທີ່ເປັນໄປໄດ້ສຳລັບຜູ້ທີ່ຍັງບໍ່ທັນສຳເລັດການສຶກສາຂັ້ນພື້ນຖານ ການພັດທະນາລະບົບໂຮງຮຽນໃນທຸກລະດັບ ໂດຍສະເພາະໃຫ້ທຶນການສຶກສາທີ່ສົມເຫດສົມຜົນ.

ມາດຕາ 26: ທຸກຄົນມີສິດໄດ້ຮັບການສຶກສາຈະຕ້ອງບໍ່ໄດ້ເສຍຄ່າຢ່າງໜ້ອຍໃນຊັ້ນປະຖົມສຶກສາແລະ ຂັ້ນພື້ນຖານສ່ວນການສຶກສາຊັ້ນສູງຈະຕ້ອງໄດ້ໃຫ້ທຸກຄົນໄດ້ເຂົ້າຮຽນຢ່າງສະເໜີພາບອີງຕາມຄວາມສາມາດຂອງເຂົາເຈົ້າສົ່ງເສີມຄວາມເຂົ້າໃຈ, ຄວາມຜ່ອນສັ້ນ, ຜ່ອນຍາວ ແລະ ມິດຕະພາບລະຫວ່າງສະຫະປະຊາຊາດ, ກຸ່ມຊົນຊາດ ຫຼື ສາດສະໜາ.

**3. ສົນທິສັນຍາສາກົນດ້ວຍສິດທິຂອງຄົນພິການ ( CRPD )**

ເຄົາລົບສັກສີທີ່ມີມາແຕ່ກຳເນີດ, ການດຳລົງຊີວິດດ້ວຍຕົນເອງ ລວມທັງການຕັດສິນໃຈເລືອກດ້ວຍຕົວເອງ, ອິດສະຫຼະພາບ, ບໍ່ມີການຈຳແນກແຕ່ປະເພດໃດ, ການມີສ່ວນຮ່ວມໃນສັງຄົມ, ເຄົາລົບຄວາມແຕກຕ່າງ ແລະ ຍອມຮັບຄົນພິການເປັນສ່ວນໜຶ່ງຂອງຄວາມຫຼາກຫຼາຍຂອງມະນຸດຊາດ ມີຄວາມເທົ່າທຽບທາງດ້ານໂອກາດ ໃຫ້ໂອກາດເຂົ້າເຖິງ, ມີຄວາມສະເໜີພາບ ແລະ ເທົ່າທຽບລະຫ່ວງ ຍິງ-ຊາຍ, ຍອມຮັບ ແລະ ເຄົາລົບຄວາມສາມາດຂອງເດັກພິການ ແລະ ໃຫ້ການພັດທະນາຢ່າງຕໍ່ເນື່ອງ.

ຍອມຮັບວ່າທຸກຄົນມີຄວາມເທົ່າທຽບກັນຕໍ່ໜ້າກົດໝາຍ ແລະ ມີສິດໄດ້ຮັບການຄຸ້ມຄອງ ແລະ ສິດຜົນປະໂຫຍດທີ່ເທົ່າທຽບກັນຕາມກົດໝາຍລະບຸໄວ້, ໃຫ້ເດັກຍິງ ແລະ ແມ່ຍິງພິການ ໄດ້ຮັບສິດພິເສດຂັ້ນພື້ນຖານທຸກຢ່າງເທົ່າທຽບກັບເດັກ ແລະ ແມ່ຍິງອື່ນໆ.

**4. ສົນທິສັນຍາສາກົນ ວ່າດ້ວຍການຈຳກັດ ການຈຳແນກແມ່ຍິງໃນທຸກຮູບແບບ 34/180 ລົງວັນທີ 18/12/1979**

ພາກທີ III ໂດຍສັງລວມຫຍໍ້ ມາດຕາ10: ລັດພາຄີ ຈະຕ້ອງເອົາທຸກມາດຕະການທີ່ເໝາະສົມເພື່ອກໍາຈັດການຈໍາແນກແມ່ຍິງແນໃສ່ຮັບປະກັນໃຫ້ເຂົາເຈົ້າມີສິດສະເໝີພາບກັບເພດຊາຍໃນດ້ານການສຶກສາ ແລະ ບົນພື້ນຖານຄວາມສະເໝີພາບລະຫ່ວາງຍິງ ແລະ ຊາຍໂດຍສະເພາະແລ້ວແມ່ນຮັບປະກັນ:ເງື່ອນໄຂອັນດຽວກັນ, ແມ່ຍິງໄດ້ຮັບການສຶກໃນຫຼັກສູດອັນດຽວກັນ ການກໍາຈັດຄວາມຄິດເກົ່າແບບຕາຍຕົວ ກ່ຽວກັບບົດບາດຂອງແມ່ຍິງ ແລະ ຊາຍຢູ່ໃນທຸກລະດັບ ແລະ ທຸກຮູບການສຶກສາໃຫ້ໂອກາດອັນດຽວກັນແກ່ແມ່ຍິງໄດ້ຮັບທຶນການສຶກສາ, ເງິນອູດໜູນ, ມີສ່ວນຮ່ວມໃນໂຄງການຕ່າງໆ. ຮັບໂອກາດດຽວກັນແກ່ແມ່ຍິງ ໃນດ້ານການກິລາ ແລະ ກາຍຍະສຶກສາ, ຫຼຸດຜ່ອນອັດຕາການອອກໂຮງຮຽນແກ່ເດັກຍິງ ແລະການໄດ້ຮັບຂໍ້ມູນຂ່າວສານກ່ຽວກັບການສຶກສາສະເພາະໃນການຮັກສາສຸຂະພາບ ແລະ ເບິ່ງແຍງຄວາມຢູ່ດີກິນດີ.

5. **ສົນທິສັນຍາສາກົນ ວ່າດ້ວຍ ສິດທິເດັກ ສະບັບເລກທີ 44/25 ລົງວັນທີ 20 /11/1989**

ສັງລວມຫຍໍ້ເນື້ອໃນທີ່ກ່ຽວຂ້ອງ:

ມາດຕາ 1 : ເດັກນ້ອຍໝາຍເຖິງມະນຸດທຸກຄົນທີ່ມີອາຍຸຕໍ່າກ່ວາ 18 ປີ ເວັ້ນສາຍແຕ່ວ່າ ກົດໝາຍກໍານົດໃຫ້ເດັກພົ້ນກະສຽນໃນໄວອາຍຸຕໍ່າກ່ວາ 18 ປີ.

ມາດຕາ 2 : ຮັບປະກັນສິດໃຫ້ແກ່ເດັກນ້ອຍແຕ່ລະຄົນ ໃນຂອບເຂດສິດອໍານາດຂອງຕົນ ປາສະຈາກການຈໍາແນກດ້ານເຊື້ອຊາດ, ຜິວພັນ, ເພດ, ພາສາ, ສາດສະໜາ, ຄວາມຄິດເຫັນທາງດ້ານການເມືອງ ແລະ ອື່ນໆ ຂອງເດັກນ້ອຍ, ຂອງພໍ່, ແມ່ ແລະ ຜູ້ປົກຄອງຕາມກົດໝາຍ, ສັນຊາດ, ເຜົ່າພັນ, ຫຼື ສັງຄົມເດີມ, ສັບສິນ, ຄວາມບົກຜ່ອທາງດ້ານຮ່າງກາຍ, ຖານະຕົ້ນກໍາເນີດ ແລະ ຖານະອື່ນໆ.

ຮັບປະກັນໃຫ້ເດັກນ້ອຍໄດ້ຮັບການປົກປ້ອງຕ້ານກັບທຸກການຈໍາແນກ ຫຼື ການລົງໂທດ ເນື່ອງມາຈາກຖານະທາງກົດໝາຍ, ການເຄື່ອນໄຫວ, ການສະແດງຄວາມຄິດເຫັນ ຫຼື ຄວາມເຊື່ອຖືຂອງພໍ່, ແມ່, ຂອງຜູ້ປົກຄອງຕາມກົດໝາຍ ຫຼື ສະມາຊິກພາຍໃນຄອບຄົວຂອງເດັກນ້ອຍ.

ມາດຕາ 28:ຮັບປະກັບການໃຫ້ເດັກທຸກຄົນໂອກາດເທົ່າທຽມກັນ.

ເຂົ້າເຖິງການສຶກສາທຸກຂັ້ນພື້ນຖານ ໂດຍບໍ່ເສຍຄ່າ, ສ້າງເງື່ອນໄຂ ແລະ ໂອກາດໃຫ້ເດັກທຸກຄົນໄດ້ເຂົ້າຮຽນ ແລະ ທົ່ວເຖິງ, ເຮັດໃຫ້ການສຶກສາຂັ້ນສູງເອື້ອອໍານວຍໃຫ້ທຸກຄົນສາມາດເຂົ້າຮຽນໄດ້ບົນພື້ນຖານຄວາມສາມາດຂອງນັກຮຽນ, ເຜີຍແຜ່ຂໍ້ມູນຂ່າວສານ ແລະ ທິດທາງກ່ຽວກັບການສຶກສາ ແລະ ວິຊາຊີບໃຫ້ເດັກທຸກຄົນໄດ້ຮັບຊາບຢ່າງທົ່ວເຖິງ, ປຸກລະດົມ, ຊຸກຍູ້ ແລະ ສະໜັບສະໜູນໃຫ້ເດັກທຸກຄົນຂຶ້ນຫ້ອງຮຽນເປັນປົກກະຕິ ແລະ ຫຼຸດຜ່ອນການອອກແຮງງານກ່ອນກໍານົດ.

ຮັບປະກັນໃຫ້ລະບຽບການຄຸ້ມຄອງສຶກສາສອດຄ່ອງກັບກຽດສັກສີ ແຫ່ງຄວາມເປັນມະນຸດຂອງເດັກ, ຊຸກຍູ້ສົ່ງເສີມການຮ່ວມມືດ້ານການສຶກສາສາກົນ ເພື່ອລົບລ້າງການກືກໜັງສື ແລະ ຄວາມຫຼ້າຫຼັງ ເພື່ອອໍານວຍຄວາມສະດວກໃນການໄດ້ຮຽນຮູ້ວິທະຍາສາດເຕັກນິກ ແລະ ຮຽນຮູ້ວິທີສິດສອນທີ່ທັນສະໄໝ.

6. **ກົດໝາຍວ່າດ້ວຍການສຶກສາ 2015**

**ມາດຕາ :24 ການສຶກສາ**

ສົ່ງເສີມການສຶກສາໃຫ້ແກ່ຄົນພິການ ໂດຍປະສະຈາກການຈຳແນກບົນພື້ນຖານໂອກາດເທົ່າທຽມກັນໂດຍນຳໃຊ້ຮູບແບບການຮຽນຮ່ວມໃນທຸກລະດັບການສຶກສາ ແລະ ການຮຽນຮູ້ຕະຫຼອດຊີວິດ ເພື່ອໃຫ້ຄົນພິການບໍ່ຖືກຈຳແນກອອກຈາກລະບົບການສຶກສາທີ່ເປັນຍ້ອນເຫດຜົນຄວາມເປັນພິການ. ຮັບປະກັນບໍ່ໃຫ້ເດັກພິການຖືກກີດຂວາງຈາກລະບົບການສຶກສາ, ປະສະຈາກການເກັບຄ່າລົງທະບຽນລະຄ່າທຳນຽມຕ່າງໆໃນລະດັບການສຶກສາພາກບັງຄັບ, ລະດັບສຶກສາຊັ້ນປະຖົມ ແລະ ມັດທະຍົມ. ສົ່ງເສີມການຮຽນຜ່ານອັກສອນນູນ ຫຼື ຕົວອັກສອນອື່ນໆ, ສາມາດເລືອກວິທີການສື່ສານ , ທັກສະການ ຄຸນເຄີຍກັບສະພາບແວດລ້ອມ ການເຄື່ອນໄຫວ, ສົ່ງເສີມລະບົບເພື່ອນຊ່ວຍເພື່ອນ ແລະ ລະບົບເອື້ອຍ - ອ້າຍຮັກ, ສົ່ງເສີມໃຫ້ມີການຮຽນພາສາມືສຳລັບເດັກພິການຫູ ແລະ ອັກສອນນູນ ສຳລັບເດັກພິການຕາ.

ດຳເນີນການບັນຈຸຄູ ລວມທັງຄູທີ່ເປັນພິການທີ່ມີຄວາມຊຳນານໃນການໃຊ້ພາສາມື ແລະ ອັກສອນນູນເຝິກອົບຮົມຜູ້ປະກອບວິຊາຊີບ ແລະ ເຈົ້າໜ້າທີ່ໃນການທຳງານໃນທຸກລະດັບການສຶກສາກ່ຽວກັບວຽກງານການສຶກສາລະດັບຄົນພິການ ໃຫ້ສາມາດສື່ສານ ຫຼື ໃຊ້ຮູບແບບການສື່ສານຕ່າງໆທີ່ເໝາະສົມ ຄື ເຕັກນິກ ແລະວິຊາການສອນເພື່ອສະໜັບສະໜູນຄົນພິການ.

ໃຫ້ຄົນພິການສາມາດເຂົ້າເຖິງການສຶກສາທົ່ວໄປ ໃນລະດັບການສຶກສາຂັ້ນພື້ນຖານ ການເຝິກອົບຮົມວິຊາຊີບ, ການສຶກສານອກໂຮງຮຽນ ແລະ ການຮຽນຮູ້ຕະຫຼອດຊີວິດໂດຍໃຫ້ໂອກາດເທົ່າທຽມກັບຄົນອື່ນໆໃນການເລືອກ ແຕ່ມີການຊ່ວຍເຫຼືອ ແລະ ສະໜູນສະໜູນທີ່ເໝາະສົມກັບຄົນພິການ.

7. **ມະຕິຕົກລົງຂອງສະພາແຫ່ງຊາດກ່ຽວກັບການຮັບຮອງເອົາເອີ້ນຊື່ ແລະ ຈຳນວນຊົນເຜົ່າ 49 ເຜົ່າ.**

ໃນວົງຄະນາຍາດແຫ່ງຊາດລາວ : ກຳມາທິການບັນດາເຜົ່າ, ສະພາແຫ່ງຊາດ ( 7/ 2009 ) ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 213 / ສພຊ, ລົງວັນທີ 24/11/2008 : ກຳນົດ, ສັບຊ້ອນ ແລະ ຈຳນວນຊົນເຜົ່າໃນ ສປປລາວ.

ຊົນເຜົ່າ ຊຶ່ງຈັດຕາມ 4 ໝວດພາສາ :

1. ໝວດພາສາລາວ - ໄຕ 8 ຊົນເຜົ່າ
2. ໝວດພາສາ ມອນ-ຂະແມ 32 ຊົນເຜົ່າ
3. ໝວດພາສາ ມົ້ງ- ອິວມຽນ 2 ຊົນເຜົ່າ
4. ໝວດພາສາ ຈີນ - ຕິເບດ 7 ຊົນເຜົ່າ

☛ ລົບລ້າງຊື່ເອີນ ຊົນຊາດ ຫຼື 3 ຊົນເຜົ່າ : ລາວລຸ່ມ, ລາວເທີງ ແລະ ລາວສູງ

ແຈ້ງການແນະນຳຂອງສູນກາງແນວລາວສ້າງຊາດສະບັບເລກທີ 004/ສນຊ,ລົງວັນທີ 20/01/2009 :

• ເພື່ອໃຫ້ປະຕິບັດມະຕິຕົກລົງຂອງສະພາແຫ່ງຊາດ ໃຫ້ທຸກຂັ້ນ, ຂົງເຂດ, ປະຊາຊົນບັນດາ ເຜົ່າຊັ້ນຄົນຮັບຮູ້-ເຊື່ອມຊຶມ, ເຂົ້າໃຈ ແລະ ປະຕິບັດ...........

• ເພີ່ມທະວີຄວາມສາມາຄີ, ຄວາມສະເໝີພາບລະຫ່ວາງ ບັນດາເຜົ່າ, ລົບລ້າງທຸກຮ່ອງຮອຍລະແວງສົງໃສ ລະຫ່ວາງ ຊົນເຜົ່າ.

**8. ນະໂຍບາຍແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມ ( 2010 )**

ເປົ້າໝາຍຂອງນະໂຍບາຍການສຶກສາຮຽນຮ່ວມໃຫ້ພົນລະເມືອງລາວທຸກຄົນໂດຍບໍ່ຈຳແນກຊົນເຜົ່າ, ເຊື້ອຊາດ ພາສາ , ສາດສະໜາ, ເພດ, ໄວ, ຄວາມສາມາດ ແລະ ສະຖານະພາບທາງດ້ານເສດຖະກິດ-ສັງຄົມລ້ວນແຕ່ໄດ້ຮັບການສຶກສາ ທີ່ມີຄຸນນະພາບຢ່າງທົ່ວເຖິງ, ເທົ່າທຽມກັນ ແລະ ແທດເໝາະກັບຄວາມສາມາດຂອງແຕ່ລະຄົນຕາມທຸກຫຼັກມູນການສຶກສາ.

ນະໂຍບາຍສະບັບນີ້ປະກອບດ້ວຍ 9 ເນື້ອໃນ ທີ່ສາມາດສັງລວມຫຍໍ້ຄື : ສືບຕໍ່ພັດທະນາສະພາບແວດລ້ອມທາງດ້ານສັງຄົມເພື່ອການຮຽນຮູ້ທີ່ເປັນມິດ ແລະ ເອື້ອອຳນວຍສຳລັບຜູ້ຮຽນທຸກຄົນໃນທຸກຊັ້ນ, ທຸກສາຍປະຕິບັດນະໂຍບາຍລຶບລ້າງການເກັບຄ່າລົງທະບຽນເຂົ້າຮຽນ, ຄ່າຮຽນ, ໃນຊັ້ນປະຖົມສຶກສາ ແລະ ມັດທະຍົມຕອນຕົ້ນ, ຮັບປະກັນໃຫ້ເດັກທຸກຄົນໃນຊັ້ນປະຖົມສູ້ຊົນຫຼຸດຜ່ອນອັດຕາຄ້າງຫ້ອງ ແລະ ອັດຕາປະລະການຮຽນສືບຕໍ່ປະຕິຮູບຫຼັກສູດ ແລະ ສະໜອງອຸປະກອນການຮຽນ-ການສອນໃນທຸກຊັ້ນທຸກສາຍ, ເຝິກອົບຮົມຄູ ເພື່ອປູກຈິດສຳນຶກ, ສ້າງທັດສະນະຄະຕິ ແລະ ທັກສະຕ່າງໆ , ຮັບປະກັນໃຫ້ມີສະຖານທີ່ການສຶກສາ ແລະ ຫໍພັກຕ່າງໆໃຫ້ການບໍລິການທີ່ເໝາະສົມໃຫ້ແກ່ນັກຮຽນພິການ, ສົ່ງເສີມການບັນຈຸສັບຊ້ອນຄູສອນໃຫ້ ເໝາະ ກັບການຮຽນຮ່ວມ ແລະ ບັນຈຸເຂົ້າເປັນລັດຖະກອນ ແລະ ຄູ ນັບມື້ນັບຫຼາຍຂຶ້ນດ ສົ່ງເສີມການມີສ່ວນຮ່ວມຂອງທຸກພາກສ່ວນ ພ້ອມທັງເພີ່ມການລົງທຶນໃສ່ການສຶກສາ ໂດຍສະເພາະການສຶກສາຮຽນຮ່ວມໃຫ້ເພີ່ມຂຶ້ນຕາມລຳດັບ.

**9. ຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມ ( 2011-2015 ) ປະກອບ** ດ້ວຍ 9 ຍຸດທະສາດດ 55 ໜ້າວຽກເປັນຕົ້ນ.

- ເຜີຍແຜ່ນິຕິກຳ, ແນວຄວາມຄິດ, ນິຍາມ ແລະ ຄຳສັບ ທີ່ກ່ຽວຂ້ອງກັບການສຶກສາທີ່ຮຽນຮ່ວມ
- ສະໜອງໂກຕ້າ, ທຶການສຶກສາ ແລະ ການຊ່ວຍເຫຼືອທີ່ຈຳເປັນໃຫ້ແກ່ຜູ້ຮຽນ ເພດຍິງ , ຊົນເຜົ່າ, ພິການ ແລະ ກຸ່ມດ້ອຍໂອກາດອື່ນໆ.
- ອະນຸຍາດໃຫ້ນັກຮຽນພິການເຂົ້າຮຽນໃນສະຖາບັນການສຶກສາຕ່າງໆ ຮ່ວມທັງສະຖາບັນສ້າງຄູ, ອຳນວຍຄວາມສະດວກໃຫ້ນັກຮຽນຍິງທີ່ຖືພາໄດ້ມີທາງເລືອກໃນການສືບຕໍ່ຮໍ່າຮຽນ ແລະ ສ້າງເງື່ອນໄຂໃຫ້ເຂົາເຈົ້າສາມາດກັບມາຮຽນພາຍຫຼັງເກີດລູກ.
- ສົ່ງເສີມຈັນຍາບັນຂອງຄູ, ນຳໃຊ້ທຸກຮູບແບບຂອງການສຶກສາເພື່ອລຶບລ້າງຄວາມຊິນເຄີຍ.
- ຄອງເດີມການວັດຜົນການຮຽນສຳລັບນັກຮຽນທີ່ຈົບຂັ້ນ ປໍ 5, ມ4 ແລະ ມ7 ສຳລັບທາງພາກລັດ ແລະ ພາກເອກະຊົນ, ລະບຽບການຄຸ້ມຄອງກ້ອນທຶບໍລິຫານໂຮງຮຽນເພື່ອກຳນົດເງື່ອນໄຂການນຳໃຊ້ທຶນຢ່າງຖືກຕ້ອງ ແລະ ຮັບປະກັນຄວາມໂປ່ງໃສ່ໃນການຄຸ້ມຄອງນຳໃຊ້ກ້ອນທຶນດັ່ງກ່າວ.
- ສ້າງຕັ້ງໂຮງຮຽນປະຖົມສຶກສາ, ມັດທະຍົມສຶກສາຕອນຕົ້ນ ແລະ ຕອນປາຍໃນບ່ອນທີ່ມີຄວາມຈຳເປັນ.
- ເຝິກອົບຮົມຄູເພື່ອສ້າງຄວາມຮູ້ ຄວາມເຂົ້າໃຈກ່ຽວກັບສິດທິພື້ນຖານຂອງຜູ້ຮຽນ, ພັດທະນາການຂອງຜູ້ຮຽນແຕ່ລະຊ່ຳອາຍຸ, ການຈັດການຮຽນ-ການສອນຫ້ອງຮຽນທີ່ມີຄວາມຫຼາກຫຼາຍ.

- ປັບປຸງວິທີການຮຽນ-ການສອນພາສາລາວໃຫ້ແກ່ຜູ້ຮຽນຊົນເຜົ່າໃຫ້ມີສິດທິພາບເຊັ່ນ :ສອນພາສາລາວແບບເລັ່ງລັດ. ເພື່ອກຽມຄວາມພ້ອມໃຫ້ແກ່ເດັກຊົນເຜົ່າກ່ອນເຂົ້າຮຽນຊັ້ນປະຖົມ.
- ສືບຕໍ່ພັດທະນາ ແລະ ເສີມຂະຫຍາຍແນວຄິດຂອງໂຮງຮຽນຄຸນນະພາບເຂົ້າໃນທຸກຊັ້ນ-ທຸກສາຍຂອງການສຶກສາ.
- ປັບປຸງລະບຽບການຄຸ້ມຄອງສະຖານທີ່ການສຶກສາເພື່ອຮັບປະກັນຄວາມປອດໄພ, ປົກປ້ອງກຸ່ມດ້ອຍໂອກາດ, ຫຼຸດຜ່ອນຄວາມສ່ຽງ ແລະ ປະກົດການຫຍໍ້ທໍ້, ລຶບລ້າງການຈໍາແນກ.
- ປະຕິບັດຫຼັກສູດ, ກິດຈະກໍາ ນອກຫຼັກສູດ ແລະ ສະໜອງສື່ການຮຽນ-ການສອນ ທັກສະຊີວິດກ່ຽວກັບສຸຂະພາບຈະເລີນພັນ, ການປ້ອງໂລກເອດ ແລະ ພະຍາດຕິດຕໍ່ທາງເພດສໍາພັນ, ໂພຊະນາການ, ສຸຂະສຶກສາ, ການປ້ອງກັນອັນຕະລາຍຈາກລະເບີດບໍ່ທັນແຕກ,ການປ້ອງກັນອຸປະຕິເຫດຕາມທ້ອງຖະໜົນ, ການປ້ອງກັນໄພພິບັດ ແລະ ອື່ນໆ.
- ກໍານົດ ແລະ ທົບທວນມາດຕະຖານການປຸກສ້າງໂຮງຮຽນທີ່ຈໍາເປັນ ເພື່ອອໍານວຍຄວາມສະດວກໃຫ້ແກ່ນັກຮຽນພິການສາມາດເຂົ້າເຖິງສະຖານທີ່ການສຶກສາລວມທັງທາງຍ່າງຫໍພັກ, ຫ້ອງນໍ້າ ແລະ ອື່ນໆ.
- ສ້າງໂຮງຮຽນ ແລະ ສູນການສຶກສາພິເສດໃນບ່ອນທີ່ມີຄວາມຈໍາເປັນສໍາລັບຜູ້ພິການໜັກພິການຊໍ້າຊ້ອນ ແລະເພື່ອກະກຽມໃຫ້ເຂົາເຈົ້າສາມາດເຂົ້າຮຽນໃນລະບົບການສຶກສາທົ່ວໄປ.
- ບັນຈຸສັບຊ້ອນຄູແລະ ບຸກຄະລາກອນເພດຍິງ, ຊົນເຜົ່າ ແລະ ຄົນພິຄົນຕາມມາດຕະຖານທີ່ກໍານົດໃຫ້ເທົ່າທຽມ ແລະ ທົ່ວເຖິງ ແລະ ພັດທະນາຄວາມສາມາດໃຫ້ເຂົາເຈົ້າ.
- ສ້າງ, ບັນຈຸ-ສັບຊ້ອນຄູທີ່ມີຄຸນນະພາບ, ໃຫ້ການຊ່ວຍເຫຼືອ, ສະໜອງສິ່ງຈູງໃຈ ແລະ ປະຕິບັດນະໂຍບາຍ, ຮັບປະກັນໃຫ້ຄູຝຶກໃນສະຖາບັນສ້າງຄູມີປະສົບການຕົວຈິງ ແລະ ມີຄວາມເຂົ້າໃຈ ຢ່າງເລິກເຊິ່ງ ກ່ຽວກັບການຄຸ້ມຄອງ ແລະ ສິດສອນຫ້ອງຮຽນທີ່ມີຄວາມແຕກຕ່າງຫຼາກຫຼາຍ ເພື່ອສາມາດໃຫ້ການຊ່ວຍເຫຼືອແກ່ນັກຮຽນຄູໃນການປະຕິບັດບັນດາຫຼັກການການຮຽນຮ່ວມຢ່າງແທ້ຈິງ.
- ສຶກສາ ແລະ ອົບຮົມບັນດານິຕິກໍາແຜນງານ ແລະ ວິຊາການດ້ານຕ່າງໆຢ່າງຕໍ່ເນື່ອງເພື່ອເສີມສ້າງທັດສະນະຄະຕິ, ຄ່ານິຍົມ ແລະ ທັດສະທີ່ຈໍາເປັນກ່ຽວກັບການສຶກສາຮ່ວມໃຫ້ແກ່ບຸກຄະລາກອນທີ່ມີໜ້າທີ່ສົ່ງເສີມ ແລະປະຕິບັດການສຶກສາຮຽນຮ່ວມທັງພາຍໃນ ແລະ ພາຍນອກຂະແໜ່ງການສຶກສາແຕ່ຂັ້ນສູນກາງເຖິງທ້ອງຖິ່ນ.
- ສ້າງຄວາມສາມາດໃຫ້ແກ່ພະນັກງານຄູທີ່ກ່ຽວຂ້ອງຂັ້ນຕ່າງໆທັງພາຍໃນ ແລະ ນອກຂະແໜ່ງການສຶກສາໃນການເກັບກໍາ ແລະ ວິເຄາະຂໍ້ມູນກ່ຽວກັບບັນດາປັດໃຈທີ່ກີດກັ້ນ ການເຂົ້າເຖິງການສຶກສາ ເພດຍິງ, ຊົນເຜົ່າ, ຄົນພິການ ແລະ ກຸ່ມນ້ອຍໂອກາດຕ່າງໆ.
- ປັບປຸງເຄືອຂ່າຍການສຶກສາຮຽນຮ່ວມທັງພາຍໃນ ແລະ ພາຍນອກຂະແໜ່ງການສຶກສາແຕ່ຂັ້ນສູນກາງ ເຖິງທ້ອງຖິ່ນ ເພື່ອປະສານງານການຈັດຕັ້ງປະຕິບັດ, ຕິດຕາມ, ປະເມີນຜົນ, ນະໂຍບາຍ, ຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມ.

- ສະໜັບສະໜູນໃຫ້ອົງການປົກຄອງທ້ອງຖິ່ນ, ຜູ້ນຳຊຸມຊົນ ແລະ ພໍ່ແມ່-ຜູ້ປົກຄອງໃຫ້ເຂົ້າມາມີສ່ວນຮ່ວມຢ່າງຫ້າວຫັນເພື່ອຊ່ວຍໂຮງຮຽນ ແລະຄູ.
- ເຜີຍແຜ່ຜົນສຳເລັດຂອງການສິດສອນ ແລະ ໃຫ້ການຊ່ວຍເຫຼືອ, ໃຫ້ການຍ້ອງຍໍຊົມເຊີຍຢ່າງເປັນທາງການຕໍ່ຜູ້ທີ່ມີຜົນງານດີເດັ່ນໃນການສົ່ງເສີມການສຶກສາຮຽນຮ່ວມ.

**10. ວິໄສທັດຮອດປີ 2030 ຂອງລັດຖະບານ ສປປ ລາວ.**

ສປປ ລາວ ມີຊັບພະຍາກອນມະນຸດທີ່ມີຄຸນນະພາບໃກ້ຄຽງກັບພາກພື້ນ ແລະ ສາກົນ, ເປັນກຳລັງໃຈຜະລິດທີ່ເຂັ້ມແຂງ, ຕອບສະໜອງໄດ້ຄວາມຕ້ອງການຂອງການພັດທະນາເສດຖະກິດສັງຄົມແຫ່ງຊາດຫຼາຍຂຶ້ນ. ຊາວໜຸ່ມລາວທຸກຄົນມີລະດັບການສຶກສາຈົບຊັ້ນມັດທະຍົມຕອນປາຍ, ປະຊາຊົນໄດ້ຮັບການບໍລິການດ້ານສາທາລະນະສຸກທີ່ມີຄຸນນະພາບຢ່າງທົ່ວເຖິງ ແລະ ມີອາຍຸຍືນສະເລ່ຍສູງກ່ວາປີ 75

**11. ວິໄສທັດຮອດປີ 2030 ຂອງກະຊວງສຶກສາທິການ ແລະ ກິລາ**

ຮອດປີ 2030ໃຫ້ພົນລະເມືອງລາວທຸກຄົນໄດ້ຮັບການສຶກສາທີ່ມີຄຸນນະພາບ 2030 ພາບຢ່າງສະໝໍ່າສະເໝີ ແລະ ເທົ່າທຽມກັນເພື່ອໃຫ້ເຂົາເຈົ້າພັດທະນາຕົນເອງການເປັນພົນລະເມືອງດີຂອງຊາດ, ມີຄຸນສົມບັດ, ມີສຸຂະພາບເຂັ້ມແຂງ, ມີຄວາມຮູ້ຄວາມສາມາດສູງ, ມີຄວາມເປັນມືອາຊີບ ເພື່ອພັດທະນາປະເທດຊາດ ໃຫ້ສີວິໄລຍືນຍົງສາມາດເຊື່ອມໂຍງ, ແຂ່ງຂັນກັບພາກພື້ນ ແລະ ສາກົນໄດ້.

## ບົດທີ 2

## ຄວາມໝາຍ, ຄວາມສຳຄັນ, ອົງປະກອບ ແລະ ຄຸນປະໂຫຍດຂອງຫ້ອງຮຽນຮ່ວມ ແລະ ເພື່ອນມິດໃນການຮຽນຮູ້

## 1. ຄວາມໝາຍ ແລະ ຄວາມສຳຄັນຂອງການສຶກສາຮຽນຮ່ວມ.

### 1.1. ຄວາມໝາຍການການສຶກສາຮຽນຮ່ວມ.

ໝາຍເຖິງ ຂະບວນການສະໜອງການສຶກສາທີ່ມີຄຸນນະພາບ ແລະ ມີການປັບປ່ຽນຢ່າງຕໍ່ເນື່ອງໃຫ້ແທດເໝາະກັບຈຸດພິດເສດ, ຄວາມສາມາດ ແລະ ຄວາມຕ້ອງການທີ່ຫຼາກຫຼາຍຂອງຜູ້ຮຽນທຸກຄົນ, ແນໃສ່ແກ້ໄຂບັນດາອຸປະສັກທີ່ຂີດຂັ້ນ ການເຂົ້າເຖິງການສຶກສາ ໂດຍສ້າງສະພາບແວດລ້ອມການຮຽນທີ່ເປັນມິດ, ປອດໄພ, ປະສາຈາກການຈຳແນກ ແລະ ປົກປ້ອງຜູ້ຮຽນ ພ້ອມທັງຊຸກຍູ້ໃຫ້ຜູ້ຮຽນ, ຄອບຄົວ, ຊຸມຊົນ,ໃຫ້ມີສ່ວນຮ່ວມໃນການຮຽນຮູ້ດັ່ງກ່າວຢ່າງມີປະສິດທິພົນ.

### 1.2 ຄວາມສຳຄັນຂອງການສຶກສາຮຽນຮ່ວມ.

ການຮຽນຮ່ວມເປັນການເປີດໂອກາດ ໃຫ້ເດັກທຸກຄົນເຂົ້າຮຽນຮ່ວມກັນໃນໂຮງຮຽນທົ່ວໄປບໍ່ວ່າຈະເປັນເດັກຍິງຜູ້ທີ່ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ສັງຄົມ. ໂດຍປາສະຈາກຄົນພິການ ແລະ ຊົນເຜົ່າ ການຈຳແນກ ແລະ ມີສິດເທົ່າທຽມກັນ ເດັກທຸກຄົນສາມາດປະສົບຜົນສຳເລັດໃນການຮຽນສາມາດປະກອບອາຊີບລ້ຽງກຸ່ມຕົ້ນເອງ ແລະ ຢູ່ຮ່ວມສັງຄົມຢ່າງມີຄວາມສຸກຫຍັງເປັນປະໂຫຍກໃຫ້ແກ່ພໍ່ແມ່ຜູ້ປົກຄອງ, ຜູ້ບໍລິຫານ ແລະ ຊຸມຊົນ.

## 2. ຄຸນລັກສະນະຂອງຫ້ອງຮຽນຮ່ວມ ແລະ ເພື່ອນມິດໃນການຮຽນຮູ້

ບາງຄຳຕອບໃນຕາຕະລາງຂ້າງລຸ່ມຈະນຳສະເໜີບາງຂໍ້ແຕກຕ່າງລະຫ່ວາງຫ້ອງຮຽນແບບເກົ່າ ແລະ ຫ້ອງຮຽນແບບມີສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ທ່ານອາດສາມາດຄົ້ນຄິດສິ່ງອື່ນໆໄດ້ອີກຫຼາຍຢ່າງໂດຍສະເພາະທີ່ສຳຄັນກໍ່ຄືຢູ່ໃນສວນຂອງການພົວພັນ ຢູ່ໃນຫ້ອງຮຽນຮ່ວມ.

| ສະພາບແວດລ້ອມ | ຫ້ອງຮຽນແບບເກົ່າ | ຫ້ອງຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ |
|---|---|---|
| ການພົວພັນ | ຄູເວົ້າກັບນັກຮຽນແບບປິ່ນຫຼັງໃສ່ກັນ | ເປັນມິດ, ອົບອຸ່ນ, ຄູນັ່ງຂ້າງ ແລະ ຍິ້ມແຍ່ມກັບເດັກທີ່ມີບັນຫາທາງດ້ານການໄດ້ຍິນອາດຈະມີຜູ້ປົກຄອງເປັນຜູ້ຊ່ວຍຄູ, ຊົມເຊີຍເດັກຄົນນີ້ ແລະ ຊ່ວຍເດັກຜູ້ອື່ນໆ |
| ມີໃຜແດ່ຢູ່ໃນຫ້ອງຮຽນ | ຄູກໍ່ຄືເດັກນັກຮຽນມີຄວາມສາມາດທີ່ຄ້າຍຄືກັນ | ຄູ ນັກຮຽນທີ່ມີພື້ນຖານ ແລະ ຄວາມສາມາດແຕກຕ່າງສະຫລາດຫລາຍ ແລະຜູ້ອື່ນໆ ເຊັ່ນຜູ້ປົກຄອງທີ່ມາຊ່ວຍເຫຼືອ. |
| ການຈັດບ່ອນນັ່ງ | ມີການຈັດບ່ອນນັ່ງເໝືອນກັບທຸກຫ້ອງຮຽນເດັກທຸກຄົນນັ່ງເປັນແຖວ ແລະ ເດັກຊາຍນັ່ງແຍກກັນຢູ່ຄົນລະຝ່າຍ. | ການຈັດບ່ອນນັ່ງມີຄວາມແຕກຕ່າງກັນເຊັ່ນເ ເດັກຍິງ ແລະ ຊາຍໄດ້ນັ່ງຢູ່ພື້ນຫ້ອງຮ່ວມກັນເປັນ 2ວົງ ຫຼື ນັ່ງຮ່ວມໂຕະດຽວກັນ. |
| ສື່ອຸປະກອນການສອນ | ປຶ້ມຕຳລາແບບຮຽນ, ບົດເຝິກຫັດ, ກະດານນ້ອຍແມ່ນມີແຕ່ສະເພາະຄູ ແລະ | ສື່ອຸປະກອນການຮຽນ-ການສອນມີຫຼາກຫຼາຍສຳລັບເດັກທຸກຄົນເຊັ່ນ : ສື່ການສອນຄະນິດສາດທີ່ເຮັດຈາກໜັງສືພິມເກົ່າ ຫຼື ແຜນໂປດສະເຕີ ຕຸກກະຕາສຳລັບຮຽນວິຊາ |

| | ນັກຮຽນບາງຄົນ | ພາກ. |
|---|---|---|
| ຊັບພະຍາກອນ | ຄູມີປະຕິສຳພັນກັບເດັກໂດຍປະສາຈາກການໃຊ້ສື່ການສອນໃດໆກ | ຄູວາງແຜນການລ່ວງໜ້າເພື່ອຈະສອນ ຄູໃຫ້ເດັກມີສ່ວນຮ່ວມໃນການນຳສື່ການຮຽນ-ການສອນມາຫ້ອງຮຽນ ແລະ ສື່ເຫຼົ່ານີ້ກໍບໍ່ໄດ້ມີຄ່າຊິແຈ້ງຫຍັງ? |
| ການປະເມີນ | ໃຊ້ຂໍ້ສອບແບບຂຽນເປັນມາດຕະຖານ | ມີການປະເມີນແບບຕົວຈິງມີການສັງເກດ, ມີຕົວຢ່າງຜົນງານຂອງເດັກຕະຫຼອດເວລາຂຶ້ນ, ປຶ້ມຜົນງານ. |

ໃຫ້ທ່ານພິຈາລະນາປຽບທຽບຄວາມຄິດຂອງທ່ານກັບແຜນວາດລຸ່ມນີ້:




**ສິ່ງທີ່ຄວນຈື່:** ການປ່ຽນແປງຈາກໂຮງຮຽນຫຼືຫ້ອງຮຽນແບບເກົ່າໃຫ້ເປັນຫ້ອງຮຽນທີ່ມີລັກສະນະ

ຮຽນຮ່ວມ ແລະ ເປັນເພື່ອນມິດນັ້ນເປັນຂະບວນວິວັດທີ່ຕໍ່ເນື່ອງ. ມັນບໍ່ແມ່ນເຫດການອັນໃດອັນໜຶ່ງ ແລະ ມັນກໍ່ບໍ່ໄດ້ເກີດຂຶ້ນໃນຊົ່ວຂ້າມຄືນ, ມັນຕ້ອງໄດ້ໃຊ້ເວລາ ແລະ ທີມງານ. ນອກຈາກນີ້ມັນຍັງສາມາດທີ່ຈະໃຫ້ຜົນປະໂຫຍດຫຼາຍຢ່າງສຳລັບພວກເຮົາໃນການປະກອບອາຊີບຄູ ແລະ ສຳຄັນທີ່ສຸດແມ່ນສຳລັບເດັກນ້ອຍຂອງພວກເຮົາ, ຄອບຄົວ ແລະ ຊຸມຊົນຂອງເຂົາ.

## ૩. ອົງປະກອບຂອງຫ້ອງຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.

### ກ. ການພົວພັນຄອບຄົວ ແລະ ຊຸມຊົນ.

ຊຸມຊົນແມ່ນບອນທີ່ເດັກອາໃສ່ຢູ່ ແລະ ເປັນແຫຼ່ງແຫ່ງການຮຽນຮູ້ ແລະ ເກັບກ່ຽວປະສົບການ ເປັນບ່ອນທີ່ເຂົານໍາໃຊ້ສິ່ງທີ່ພວກເຮົາໄດ້ສິດສອນພວກເຂົາ. ຄຸນຄ່າ ແລະ ການເຂົ້າມີສວນຮ່ວມຂອງຄອບຄົວ, ຜູ້ນໍາຊຸມຊົນ ແລະ ສະມະຊິກຊຸມຊົນແມ່ນມີຄວາມສໍາຄັນທີ່ສຸດເພື່ອຈະນໍາເອົາເດັກທຸກຄົນເຂົ້າໂຮງຮຽນ ແລະ ຊ່ວຍໃຫ້ພວກເຂົ້າຮຽນຈົບສໍາເລັດຜົນ. ເມື່ອໃດຫາກຊຸມຊົນຮູ້ສຶກວ່າຕົນເອງມີຄວາມພວກພັນຕໍ່ໂຮງຮຽນ, ເມື່ອຈະເຮັດຊຸມຊົນໃຫ້ການສະໜັບສະໜູນຫຼາຍຂຶ້ນ.

### ຂ. ບົດບາດຍິງ-ຊາຍ.

ໃນສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້, ແຕ່ລະຄົນແລກປ່ຽນທັດສະນະຄວາມຄິດເຫັນລວມກ່ຽວກັບວິທີທີ່ເດັກຈະເດັກຈະເຮັດວຽກ ( ຮຽນ ) ແລະ ຫຼີ້ນຮ່ວມກັນ. ພວກເຂົາເຊື່ອວ່າການສຶກສາຈໍາເປັນຕ້ອງມີລັກສະນະຮຽນຮ່ວມ, ມີຄວາມຍຸດຕິທໍາໃນບົດບາດຍິງ-ຊາຍ ( ເດັກຍິງມີສິດ ແລະ ມີໂອກາດເໝືອກັບເດັກຊາຍ ) ແລະ ມີການຈໍາແນກ, ມີຄວາມລະອຽດອອນຕໍ່ທຸກວັດທະນາທໍາກໍຄືຕ້ອງສອດຄ່ອງພົວພັນກັບຊີວິດປະຈໍາວັນຂອງເດັກ ແລະ ຄອບຄົວຂອງເຂົ່າ, ຄູສອນ, ຜູ້ບໍລິຫານ ແລະ ນັກຮຽນໃຫ້ຄວາມເຂົາລົບນັບຖື ແລະ ຮັບເອົາຄວາມແຕກຕ່າງຫຼາກຫຼາຍພາສາ, ວັດທະນາທໍາ ແລະ ຄວາມສາມາດ.



**ຮຸບ ບົດບາດຍິງ-ຊາຍໃນການຮຽນ**

### ຄ. ຄວາມປອດໄພ, ການປົກປ້ອງ ແລະ ສົ່ງເສີມສຸຂະພາບ.

ສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ໄດ້ສອນເດັກກ່ຽວກັບທັກສະ ແລະ ວິທີ່ຊີວິດທີ່ຖືກສຸຂະຫຼັກສະນະເພື່ອຈະສາມາດເຮັດການຕັດສິນໃຈທີ່ມີຂໍ້ມູນ ແລະ ປ້ອງເຂົາເອງຈາກພະຍາດຕ່າງໆ ແລະ ການເຈັບເປັນ. ຍິ່ງໄປກ່ວານັ້ນ, ຢູ່ໃນສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ຈະບໍ່ມີການຂົມຂູ່ເດັກ, ບໍ່ມີໄມ້ແສ້ ແລະ ບໍ່ມີການລົງໂທດທາງຮ່າງກາຍຂອງເດັກຮັບປະກັນໃຫ້ເດັກທຸກຄົນມີສຸຂະພາບດີ, ໄດ້ຮບການປົກປ້ອງແລະ ສາມາດຈະຮຽນຮູ້ໄດ້ນີ້ມ່ນພາກສວນທສໍາຄັນຂອງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນູ້ເຄື່ອມື້ນີ້ະນໍາສະເໜີກິດຈະກໍາຕ່າງໆທີ່ສາມາດນໍາໄປໃຊ້ເພືອໂຄສະນາເຜີຍແຜ່ນະໂຍບາຍສົ່ງເສີມສຸຂະພາບໃນໂຮງຮຽນ, ເພື່ອສ້າງຂໍ້ຕົກທົ່ວໄປຮ່ວມກັນສໍາລັບການ

ປະຕິບັດລວມທັງຂໍ້ກໍານົດທີ່ລະບຸວ່ານະໂຍບາຍອັນໃດມີຄວາມຈໍາເປັນເປັທີ່ຮີດດ່ວນ. ການປັບປຸງສຸຂະພາບ ແລະ ານຮຽນຮູ້ຂອເດັກໂດຜ່ານໂງການສົ່ງເສີມສຸຂະພາບ ແລະ ການປ້ອງກັນໃນໂຮງຮຽນ. ມີຫຼາຍໂຮງຮຽນທີ່ມີໂຄງການ ດັ່ງກ່າວຍ້ອນ່າພວກເຂົ່າຮັດີວ່າຄວາມສາມດຂອງເດັກທີ່ຈະໄດ້ຮັບການພັດທະນະເປັນຢ່າງດີ, ມີໂພສະນາການດີ ແລະ ສະພາບວດລ້ອມຂອງການຣນຮູ້ທີ່ປວດພ.ສະນັ້ນ  ມີແຕ່ເມືອໃດຫາກເດັມີຄວາມຮູ້ສຶກປອດໄພທີ່ສຸດເທົ່ານັ້ນ ເດັກຈຶງຈະສມາດທີ່ະຮຽນຮູ້ໄດ້ຢ່າງເຕັມທີ່.

### ງ.  ການພົວພັນເຖງຊີວິດປະຈໍາວັນຂອງເດັກ

ສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ຊຸກຍູ້ສົ່ງເສີມຄູ ແລະ ຜູ້ບໍ່ລິຫານ, ເດັກນັກຮຽນ,ຄອບຄົວ ແລະ ຊຸມຊົນຊ່ວຍເດັກໃຫ້ຮຽນຮູ້ພາຍໃນ ແລະ ນອກຫ້ອງຮຽນ, ຢູ່ໃນຫ້ອງຮຽນ, ທັງເດັກ ແລະ ຄູຕ່າງກໍມີຄວາມຮັບຜິດຊອບຕໍ່ການຮຽນຮູ້ຊອງພວກເຂົາ ແລະ ການມສ່ວນຮ່ວມຢ່າງຕັ້ງໜ້າໃນການຮນຮູ້ໄດ້ ເຊື່ມໂຍງກັບສງທີ່ເດັກຕ້ອງການທີຈໍາເປັນໃນຊີວິດ ( ຄວາມປາດຖະໜາຂອງເຂົາ ) ແລະ ມັນມີຄວາມໝາຍສໍາລັບ ຊີວິດປະຈໍາວນຂອງເຂົາເຈົ້າ.

### ຈ.  ການໃຫ້ກໍາລັງໃຈ.

ສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ບໍ່ພຽງແຕ່ຊຸກຍູ້ ເດັກເທົ່ານັ້ນແຕ່ມັນຍັງພິຈາລະນາເຖິງຄວາມຈໍາເປັນ, ຄວາມສົນໃຈ ແລະຄວາມປາດຖະໜາໃຫ້ແກ້ຄູນໍາອີກ. ມັນສະໜອງໂອກາດໃຫ້ພວກເຮົາໃນຖະນະທີ່ເປັນຄູເພື່ອຮູ້ວິທີ່ສອນທີ່ດີຂຶ້ນ; ມັນສະໜອງຊັບພະຍາກອນທີ່ດີທີ່ສຸດເທົ່າທີ່ເປັນໄປໄດ້ສໍາລັບການສິດສອນ ແລະ ມັນຊື່ນຊົມຍິນດີກັບຄວາມສໍາເລັດຂອງພວກເຮົາໂດຍຜ່ານການໃຫ້ລາງວັນຊົມເຊີຍ ແລະ ການຍອມຮັບທີ່ເໝາະສົມ.



**ຮູບ: ການໃຫ້ກໍາລັງໃຈເດັກ**

## 4. ປະໂຫຍດຂອງຫ້ອງຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.

### 4.1.ຜົນປະໂຫຍດທີ່ເດັກຈະໄດ້ຮັບ.

ສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້, ເດັກ

ຈະກ່າຍເປັນຜູ້ທີ່ມີຄວາມເຊື່ອໝັ້ນໃນຕົວເອງຫຼາຍຂື້ນ ແລະ ຈະພັດທະນາຄວາມພາກພູມໃຈໃນຕົວເອງສູງຂື້ນດ້ວຍຜົນສຳເລັດຂອງພວກເຂົາ. ພວກເຂົາໄດ້ຮຽນຮູ້ວິທີການຮຽນຢ່າງເປັນອິດສະຫຼະຢູ່ທາງພາຍໃນ ແລະ ພາຍນອກໂຮງຮຽນ. ຕົວຢ່າງ : ພວກເຂົາສາມາດຮຽນຮູ້ວິທີຖາມຄຳຖາມທີ່ດີ. ພວກເຂົາຮຽນຮູ້ເພື່ອຈະເຂົ້າໃຈ ແລະ ນຳໃຊ້ສິ່ງທີ່ໄດ້ຮຽນຮູ້ໃນໂຮງຮຽນເຂົ້າໃນຊີວິດປະຈຳວັນເຊັ່ນ: ໃຊ້ຢູ່ໃນການຫຼິ້ນ ແລະ ໃຊ້ຢູ່ເຮືອນຂອງເຂົາ. ພວກເຂົາຍັງໄດ້ຮຽນຮູ້ການປະຕິສຳພັນຢ່າງຕັ້ງໜ້າ, ມ່ວນຊື່ນກັບເພື່ອນຮ່ວມຫ້ອງ ແລະ ຄູ. ພວກເຂົາໄດ້ຮຽນຮູ້ຄວາມສະໜຸກສະໜານໃນການຢູ່ກັບຜູ້ອື່ນທີ່ມີຄວາມແຕກຕ່າງຈາກຕົນເອງລວມທັງວິທີທີ່ຈະເປັນຜູ້ທີ່ມີຄວາມລະອຽດອ່ອນ ແລະ ປັບຕົວເຂົາໃນສິ່ງແຕກຕ່າງເຫຼົ່ານີ້. ເດັກທຸກຄົນໄດ້ຮຽນຮູ້ດ້ວຍກັນ ແລະ ຕີລາຄ່າໄດ້ໃນການພົວພັນຂອງຕົນກັບຄົນອື່ນໂດຍບໍ່ກ່ຽວຂອງເລື່ອງພື້ນຖານ ຫຼື ຄວາມສາມາດຂອງຕົນ. ເດັກຍັງຈະກາຍເປັນຜູ້ທີ່ມີຫົວຄິດປະດິດສ້າງ ແລະ ຮູ້ປັບປຸງການຮຽນຮູ້ໃຫ້ດີຂື້ນເລື່ອຍໆ. ພວກເຂົາຮຽນຮູ້ທີ່ຈະຕີລາຄ່າສູງຕໍ່ພາສາທ້ອງຖິ່ນຂອງເຂົາ, ຊາບຊຶ້ງເຂົ້າໃຈຮີດຄອງປະເພນີວັດທະນາທຳ ແລະ ຮຽນຮູ້ທີ່ຈະພິຈາລະນາວ່າ: ຕົນເອງກໍ່ມີຄວາມແຕກຕ່າງຈາກຄົນອື່ນ ແລະ ເປັນຜູ້ໜຶ່ງທີ່ພິເສດເໜືອກັບຄົນອື່ນໃນສັງຄົມ. ໂດຍພານສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້, ເດັກຈະປັບປຸງທັກສະດ້ານການສື່ສານ ແລະ ເປັນຜູ້ທີ່ໄດ້ຮັບການກຽມເພື່ອຊີວິດທີ່ດີກ່ວາເດັກໄດ້ຮັບ ຫຼື ສາມາດຈະຮັບຄວາມເຄົາລົບນັບຖືໃນຕົນເອງໃນຄະນະທີ່ເຂົາໄດ້ຮຽນຮູ້ເພືອເຄົາລົບນັບຖືຄົນອື່ນ.

## 4.2. ຜົນປະໂຫຍດທີ່ຄູຈະໄດຮັບ.

ຄູໄດ້ຮັບຜົນປະໂຫຍດທີ່ສຳຄັນຈາກການສິດສອນໃນສະພາບແວດລ້ອມທີ່ເປັນການ ຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້. ຄູມີໂອກາດຫຼາຍທີ່ຈະຮຽນຮູ້ວິທີສອນແບບໃໝ່ເພື່ອສອນເດັກປະເພດຕ່າງໆ, ພວກເຂົາໄດ້ຮັບຄວາມຮູ້ໃໝ່ເຊັ່ນ: ວິທີການຮຽນຮູ້ແຕກຕ່າງກັນຂອງເດັກແຕ່ລະຄົນ. ອີກປະການໜຶ່ງກໍ່ຄືໃນຄະນະທີ່ພວມຊອກຫາຊ່ອງທາງເພື່ອເອົາຊະນະບັນດາສິ່ງທ້າທ້າຍ, ພວກເຂົາສາມາດທີ່ຈະພັດທະນາທັດສະນະຄະຕິ ແລະ ວິທີການເຂົ້າເຖິງຄົນອື່ນ ແລະ ສະຖານະການຕ່າງໆໄດ້ຖືກຕ້ອງ. ດັ່ງນັ້ນການສິດສອນຈື່ງກາຍເປັນຄວາມມ່ວນຊື່ນບໍ່ແມ່ນເລື່ອງໜ້າເບື່ອ.ຄູຫຍັງມີໂອກາດຫຼາຍຂື້ນທີ່ຈະສຳຫຼວດຄົ້ນຄ້ວາແນວຄິດໃໝ່ໆໂດຍການສື່ສານທີ່ຂື້ນກັບຜູ້ອື່ນທັງພາຍໃນ ແລະ ນອກໂຮງຮຽນຫຼາຍຂື້ນເຊັ່ນ: ໃນກຸ່ມໂຮງຮຽນ ແລະ ໂໂຮງຮຽນອື່ນໆ ຫຼື ເຄືອຂາຍຂອງຄູ. ໂດຍການນຳໃຊ້ແນວຄິດໃໝ່ເຫຼົ່ານີ້,ຄູສາມາດກະຕຸຊຸກຍູ້ນັກຮຽນໃຫ້ເພີ່ມທະວີຄວາມສົນໃຈ, ຫົວຄິດປະດິດສ້າງ ແລະ ຄວາມຕັ້ງໃຈຫຼາຍຂື້ນ. ດ້ວຍເຫດດັ່ງກາວ, ທັງເດັກ ແລະ ຜູ້ປົກຄອງກໍ່ຈະສາມາດໃຫ້ຂໍ້ຄິດເຫັນສະທ້ອນກັບມາໄປທາງທີ່ດີໄດ້. ພ້ອມກັນນັ້ນພວກເຂົາຍັງບໍ່ສາມາດໄດ້ຮັບການສະໜັບສະໜູນເພີ້ມທະວີຂື້ນຈາກຊຸມຊົນ ແລະ ໄດ້ຮັບການຊຸມເຊີຍຕອບແທ່ນຜົນງານທີ່ພວກເຂົາພວມເຮັດຢູ່.

ຄູສາມາດຈະປະສົມກັບຄວາມເພິ່ງພໍ່ໃຈໃນວຽກງານເພີມຂື້ນ ແລະ ມີຄວາມຮູ້ສຶກທີ່ ດີຂື້ນກັບຜົນສຳເລັດເມືອເຫັນເດັກທຸກຄົນບັນລຸຜົນສຳເລັດໃນໂຮງຮຽນຕາມຄວາມສາມດສູງສຸດຂອງເຂົາເຖິງຢ່າງໃດກໍ່ຕາມທ່ານຄວນຄຳນື່ງວ່າ: ( ເດັກທຸກຄົນມີຜົນສຳເລັດ ) ໝາຍຄວາມວ່າທຸກຄົນເສັງຜ່ານພາກຮຽນໄດ້ສຳເລັດໝັ້ນໝາຍເຖິງການຍອມຮັບຄວາມລາກຫຼາຍໃນວິທີການຮຽນຮູ້ທີ່ແຕກຕ່າງກັນຂອງເດັກລວມທັງວິທີເຂົາສະແດງຜົນສຳເລັດໃນການຮູ້ຂອງເຂົາອອກມາ.

ຕົວຢ່າງ: ພວກເຂົາສາມາດອະທິບາຍແນວຄວາມຄິດລວມຍ້ອນໃດໜຶ່ງໃຫ້ຄູໄດ້ຖືວ່າ ເປັນຜົນສຳເລັດແທ່ນທີ່ຈະເປັນຕອບຄຳຖາມໃນການສອບເສັງພາກຮຽນເທົ່ານັ້ນ. ອີກປະການໜຶ່ງ, ຄູອາດຊຸກຍູ້ໃຫ້ມີອາສາສະໝັກຫຼາຍຄົນຕື່ມໃນການເຮັດວຽກໃນຫ້ອງຮຽນເຊິ່ງຈະຫຼຸດຜ່ອນຄວາມໜັກໜວງໃນການສອນຂອງຄູ.



ຮູບ : ການສະແດງຄວາມສາມາດຂອງນັກຮຽນ

### 4.3. ປະໂຫຍດທີ່ພໍ່-ແມ່ / ຜູ້ປົກຄອງຈະໄດ້ຮັບ.

ໂດຍຜ່ານສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນ ຮູ້, ພໍ່ແມ່ /ຜູ້ປົກຄອງໄດ້ຮຽນຮູ້ຫຼາຍຂຶ້ນກ່ຽວກັບລູກຫຼານຂອງຕົນວ່າໄດ້ຮັບການສຶກສາອົບຮົມແນວໃດ. ພວກເຂົາໄດ້ກາຍເປັນຜູ້ທີ່ມີສ່ວນຮ່ວມດ້ວຍຕົນເອງ ແລະ ຖືເປັນຄວາມສໍາຄັນທີ່ຈະໄດ້ຊ່ວຍລູກຫຼານຕົນເອງໃນການຮຽນຮູ້, ເມື່ອຄູຂໍຄໍາຄິດເຫັນຈາກພວກເຂົາກ່ຽວກັບເດັກ, ພວກເຂົາຈະຮູ້ສຶກສາວ່າມີຄຸນຄ່າ ແລະ ພິຈາລະນາຕົນເອງວ່າມີສ່ວນທີ່ເທົ່າທຽມກັບຜູ້ອື່ນໃນການຕອບສະໜອງໂອກາດການຮຽນຜູ້ທີ່ມີຄຸນນະພາບສໍາລັບລູກຫຼານຂອງຕົນ. ຜູ້ທີ່ປົກຄອງຫຍັງສາມາດຮຽນຮູ້ວິທີ່ແກ້ໄຂບັນຫາກ່ຽວກັບລູກຫຼານຂອງຕົນໄດ້ດີຂຶ້ນໂດຍນໍາໃຊ້ເຕັກນິກຕ່າງໆທີ່ຄູໃຊ້ໃນໂຮງຮຽນ. ນອກນີ້ພວກຍັງໄດ້ຮຽນຮູ້ທີ່ຈະປະຕິສໍາພັນກັບຄົນອື່ນໆໃນຊຸມຊົນລວມທັງເຂົ້າໃຈ ແລະ ໃຫ້ການຊ່ວຍເຫຼືອແກ້ບັນຫາຂອງກັນ ແລະ ກັບອີກດ້ວຍ.  ສິ່ງສໍາຄັນທີ່ສຸດກໍ່ຄືພວກເຂົາຮູ້ວ່າລູກຫຼານຂອງເຂົາ ແລະ ເດັກທຸກຄົນພວມໄດ້ຮັບການສຶກສາທີ່ມີຄຸນນະພາບ.



**ຮູບ : ຄອບຄົວສົ່ງເສີມລູກຫຼານເຂົ້າຮ່ວມກິດຈະກໍາຕ່າງໆ**

### 4.4. ຜົນປະໂຫຍດທີ່ຊຸມຊົນຈະໄດ້ຮັບ

ສະພາບເວດລ້ອມທີ່ເປັນການຮ່ວມຮຽນ ແລະ ເປັນເພື່ອນມິດໃນການຮຽນຮູ້ສາມາດໃຫ້ພົນປະໂຫຍດຫຼາຍຢ່າງຕໍ່ຊຸມຊົນໄດ້ເຊັ່ນ: ຊຸມຊົນມີຄວາມຮູ້ພາກພູມໃຈໃນເມື່ອເດັກໄປໂຮງຮຽນ ແລະ ໄດ້ຮຽນຮູ້ຫຼາຍຂຶ້ນ. ພວກເຂົາຈະຄົ້ນພົບ

ວ່າມີ “  ຜູ້ນຳຊຸມຊົນໃນອານາຄົດ “ ມີຈຳນວນຫຼາຍຂຶ້ນເຊິ່ງພວກເຂົາມີຄວາມກຽມພ້ອມທີ່ຈະເຂົ້າສູ່ສວນຮ່ວມຢ່າງຕັ້ງໜ້າໃນສັງຄົມ. ຊຸມຊົນຈະເຫັນວ່າບັນຫາສັງຄົມອາດຈະເກີດຂຶ້ນເຊັ່ນ: ອາດຊະຍາກຳເລັກໆນ້ອຍໆ ຫຼືບັນຫາຂອງໄວລຸ້ນອາດຈະລົດລົງ. ສະມະຊິກຊຸມຊົນຈະເຂົ້າມາປະກອບສ່ວນໃນໂຮງຮຽນຫຼາຍຂຶ້ນ,ມີການພົວພັນລະຫວ່າງໂຮງຮຽນ ແລະ ຊຸມຊົນທີ່ດີຂຶ້ນກ່ວາເກົ່າ

## ບົດທີ 3

## ການສຶກສາຮຽນຮ່ວມຢູ່ ສ ປ ປ ລາວ

### 1. ການສຶກສາຮຽນຮ່ວມຢູ່ ສ ປ ປ ລາວ

ຂະບວນການສຶກສາແບບຮຽນຮ່ວມເປັນການປະສົມປະສານທີ່ມີລັກສະນະສາກົນ ແລະ ລັກສະນະຂອງລາວເຮົາການຮຽນຮ່ວມດັ່ງກ່າວມີຄວາມເປັນມາໂດຍຫຍໍ້ດັ່ງນີ້ :

- 1989 ກະຊວງສຶກສາຂຽນບົດລາຍງານ ສະພາບທາງດ້ານຄຸນນະພາບການສຶກສາຂອງບັນດານັກຮຽນຢູ່ລາວ.
- 1990 ການປັບປຸງໂຮງຮຽນອະນຸບານ ກໍ່ໄດ້ເລີມຂຶ້ນໂດຍການເຝິກອົບຮົມຄູ ການປະຕິຮູບຫຼັກສູດອະນຸບານພ້ອມດ້ວຍວິທີສິດສອນໃໝ່ກໍ່ໄດ້ເລີມຈັດຕັ້ງຂຶ້ນ.
- 1991 ການປັບປຸງໂຮງຮຽນປະຖົມສຶກສາກໍ່ໄດ້ເລີມຂຶ້ນໂດຍເຝິກອົບຮົມຄູ ກອງປະຊຸມສາກົນຂອງອົງການອຸຍແນັດສະໂກກ່ຽວກັບ “ ການສຶກສາເພື່ອທຸກຄົນ “ ທີ່ຈອມທຽນປະເທດໄທ.
- 1992 ຫ້ອງຮຽນສຳຫຼັບເດັກທີ່ມີຄວາມຕ້ອງການພິເສດທາງຫູ ແລະ ຕາ ກໍ່ໄດ້ຈັດຕັ້ງຂຶ້ນທີ່ສູນຟື້ນຟູຄົນພິການແຫ່ງຊາດວິທີສອນແບບໃໝ່ກໍ່ໄດ້ນຳໃຊ້ຢູ່ຕາມໂຮງຮຽນປະຖົມສາທິດ. ບັນຫາຂອງພວກເດັກທີ່ເສັ່ງຕົກ ແລະ ຖືກຂ້າງຫ້ອງກໍ່ເຫັນແຈ້ງຂຶ້ນກ່ວາເກົ່າ.
- 1993 ຫຼັກສູດຂອງໂຮງຮຽນປະຖົມສຶກສາໄດ້ເລີ່ມປະຕິຮູບຂຶ້ນ ກອງປະຊຸມຂອງຢູ່ແນັດສະໂກລະດັບຂົງເຂດກໍ່ໄດ້ຈັດຕັ້ງຂຶ້ນທີ່ຮາບິນ,ສປຈີນ,ສ ປປ ລາວ ກໍ່ໄດ້ລາຍງານກ່ຽວສະພາບການຢູ່ລາວຕໍ່ກອງປະຊຸມ.ຄະນະບໍ່ລິຫານໂຄງການຮຽນຮ່ວມໄດ້ສ້າງຂຶ້ນ ແລະ ໂຄງການທົດລອງການສຶກສາແບບຮຽນຮ່ວມກໍ່ໄດ້ເລີ່ມປະຕິບັດທີ່ໂຮງຮຽນສະພານທອງເໜືອເມືອງສີສັດຕະນາກນະຄອນຫຼວງວຽງຈັນ.
- 1994 ກອງປະຊຸມຂອງຢູ່ແນັດສະໂກ ໄດ້ຈັດຕັ້ງຂຶ້ນທີ່ລາມັງກາປະເທດສະເປນ ສ ປປ ລາວກໍ່ໄດ້ເຂົ້າຮ່ວມເຊັ່ນສັນຍາຊາລາມັງການຄຽງຄູ່ 187 ປະເທດອື່ນໆທີ່ໃຫ້ຄຳໝັ້ນສັນຍາວ່າຈະປະຕິບັດໃຫ້ໄດ້ ການສຶກສາເພື່ອທຸກຄົນ ສ ປປ ລາວ ຍັງໄດ້ເຊັນສົນທິສັນຍາຂອງສະຫະປະຊາຊາດກ່ຽວກັບສິດທິເດັກໃນນັ້ນໄດ້ລວມເອົາສິດສະເໝີພາບຂອງບັນດາເດັກທີ່ມີຄວາມຕ້ອງການພິເສດທີ່ມີໂອກາດໄດ້ເຂົ້າໂຮງຮຽນນຳໃຊ້ຫຼັກສູດໃໝ່ຂອງໂຮງຮຽນປະຖົມສຶກສາເລີ່ມຕົ້ນ.
- 1995 ຮັບເອົາມະຕິກ່ຽວກັບການສຶກສາພາກບັງຄັບເພື່ອນຳໄປປະຕິບັດກັບພວກເດັກທຸກຄົນຮ່ວມທັງເດັກທີ່ມີຄວາມຕ້ອງການແບບພິເສດເລີ່ມຕົ້ນຂະຫຍາຍໂຄງການສຶກສາແບບຮຽນຮ່ວມສູ່ໂຮງຮຽນອະນຸບານສ້າງຕັ້ງຄະນະປະຕິບັດງານໂຄງການລະດັບກະຊວງນຳໃຊ້ຫຼັກສູດໃໝ່ຂອງຫ້ອງ ປ1 ແລະ ປ
- 1996-2004 ຂະຫຍາຍໂຄງການສຶກສາແບບຮຽນຮ່ວມໄປທົ່ວທຸກແຂວງໃນປະເທດລາວເຮັດໃຫ້ແຂວງເປັນເອກະລາດໃນການດຳເນີນໂຄງການພາຍໃນແຂວງຂອງຕົນ.
- 2004 ເລີ່ມຕົ້ນຂຽນຫຼັກສູດການສຶກາແບບຮຽນຮ່ວມເພື່ອບັນຈຸເຂົ້າເປັນໜ່ວຍກິດໃນການສຶກສາຂອງນັກຮຽນສະຖານບັນສ້າງຄູທົ່ວປະເທດ.
- 2005-2007 ການສຶກສາແບບຮ່ວມກ່າຍເປັນນະໂຍບາຍລະດັບຊາດເພື່ອບັນລຸການສຶກສາເພື່ອທຸຄົນ.

## 2. 17 ຕົວຊີ້ບອກຂອງການສ້າງສະພາບແວດລ້ອມສຳລັບການສຶກສາຮຽນຮ່ວມ.

1. ເດັກທຸກຄົນຈະໄດ້ຮັບການຕ້ອນຮັບຢູ່ໃນ ໂຮງຮຽນ
2. ນັກຮຽນທຸກຄົນ ໃຫ້ການຊ່ວຍເຫຼືອເຊິ່ງກັນ ແລະ ກັນ

3. ນັກຮຽນທຸກຄົນ ຈະໄດ້ຮັບການຊ່ວຍເຫຼືອ ຈາກພະນັກງານທຸກຄົນ ໃນ ໂຮງຮຽນ

4. ອາຈານ ແລະ ພໍ່ແມ່ນັກຮຽນ ມີຄວາມຮ່ວມມືກັນດີ

5. ນັກຮຽນທຸກຄົນໄດ້ຮັບການປະຕິບັດແບບເທົ່າທຽມກັນ ເຊັ່ນດຽວກັນກັບສະມາຊິກຂອງ ໂຮງຮຽນ ໝົດທຸກຄົນ.

6. ນັກຮຽນທຸກຄົນຈະຮູ້ສຶກວ່າ ທຸກຄາເຫັນ ແລະ ທັດສະນະຄະຕິຂອງພວກເຂົາທີ່ສະແດງອອກນັ້ນມີຄຸນຄ່າ.

7. ນັກຮຽນທຸກຄົນສາມາດເຂົ້າເຖິງການຮຽນ ໃນທຸກໆບົດທີ່ສອນທັງໝົດ.

8. ນັກຮຽນທຸກຄົນ ສາມາດເຂົ້າເຖິງທຸກ ພາກສ່ວນຂອງອາຄານຮຽນ

9. ນັກຮຽນທຸກຄົນເຂົ້າຮຽນແບບເປັນປະຈາທຸກມື້

10. ນັກຮຽນທຸກຄົນມີຄວາມມ່ວນຊື່ນ ກັບ ການຮຽນ

11. ນັກຮຽນທຸກຄົນມີສ່ວນຮ່ວມ ກັບ ກິດຈະກາການຮຽນທຸກອັນ



ຮູບທີ : ເດັກທຸກຄົນມີສ່ວຍຮ່ວມໃນການເຮັດກິດຈະກຳ

12. ນັກຮຽນທຸກຄົນ ປະສົບຜົນສາເລັດ ໃນການຮຽນໃນທຸກວິຊາ ອີງຕາມຄວາມສາມາດຂອງແຕ່ລະບຸກຄົນ

13. ນັກຮຽນທຸກຄົນຮຽນໜັງສືນຳກັນ

14. ນັກຮຽນທຸກຄົນສາມາດເຂົ້າເຖິງການບໍລິການ

15. ໂຮງຮຽນ ເປັນຕົວສ້າງຄວາມເຊື່ອໝັ້ນໃຈ ວ່ານັກຮຽນທຸກຄົນໄດ້ເຂົ້າຮຽນຢູ່ ໂຮງຮຽນ

16. ນັກຮຽນ ທີ່ດ້ອຍ ໂອກາດໄດ້ປະສົບຜົນສາເລັດໃນການເຂົ້າຮ່າຮຽນ.



ຮູບທີ  : ນັກຮຽນເຮັດກິດຈະກຳຮ່ວມກັນ

17. ສ້າງສະພາບແວດລ້ອມພາຍໃນ ໂຮງຮຽນທີ່ຊ່ວຍສົ່ງເສີມການຮຽນຂອງນັກຮຽນທຸກຄົນ



ຮູບ : ສະພາບແວດລ້ອມພາຍໃນຫ້ອງຮຽນ

ເພື່ອຊ່ວຍອະທິບາຍ ໃຫ້ແຈ່ມແຈ້ງ ແລະ ເຂົ້າໃຈເຖິງຄວາມໝາຍຂອງຕົວຊີ້ບອກ, ແຕ່ລະຕົວຊີ້ບອກຈະມີຄຳຖາມ ຈຳນວນໜຶ່ງ ທີ່ຖືກຕັ້ງຂຶ້ນມາເພື່ອຊຸກຍູ້ ໃຫ້ມີການສົນທະນາ ແລະ ມີການສະເໜີແນວທາງຕ່າງໆ ທັງໝົດເຫຼົ່ານັ້ນ ແມ່ນ ຈະພົບເຫັນໃນຂ້າງລຸ່ມນີ້. ສິ່ງສຳຄັນທີ່ຄວນຄຳນຶງເຖິງແມ່ນ ເຄື່ອງມື ໃນການປະເມີນຜົນຕົນເອງ ເຊິ່ງ ມັນແມ່ນຂະບວນການໜຶ່ງທີ່ໃຊ້ເພື່ອການສົນທະນາ ແລະ ແບ່ງປັນຄວາມຄິດ ເຊິ່ງຖືວ່າເປັນຂະບວນການທີ່ສຳຄັນຫຼາຍ ມັນເປັນພຽງການແບ່ງຄວາມຄິດເຫັນ,ທັດສະນະ ແລະ ຄຳຖາມແບບເປີດ ເຊິ່ງຜູ້ເຂົ້າຮ່ວມສາມາດເລີ່ມຄົ້ນຫາຄວາມຄິດຂອງຕົນ ແລະ ແບ່ງປັນປະສົບການຂອງພວກເຂົາຕາມຄວາມຈິງ.

# ບົດທີ 4

# ແນວຄວາມຄິດ, ຫຼັກການ, ຄວາມສຳຄັນ ແລະ ຮູບແບບການຮຽນຮ່ວມ ແລະ ການສຶກສາພິເສດ

## 1. ແນວຄວາມຄິດການສຶກສາ ແລະ ການສຶກສາພິເສດ

- ແນວພິການທຸກຄົນສາມາດເຂົ້າເຖິງການສຶກສາຢ່າງເທົ່າທຽມກັບເດັກທົ່ວໄປ ແລະ ໄດ້ຮັບການພັດທະນາຕົນເອງໃຫ້ເປັນປະໂຫຍດສູງສຸດ.
- ການສຶກສາຮຽນຮ່ວມຕ້ອງຄຳນຶງເຖິງຜົນປະໂຫຍດ ຂອງເດັກທຸກຄົນທີ່ຈະໄດ້ຮັບັປັນສິ່ງສຳຄັນ.
- ຄວາມເປັນພິການຂອງເດັກບາງຄົນບໍ່ຖືວ່າເປັນພິການ ຕະຫຼອດໄປ ໃນກໍລະນີການສຶກສາພິເສດເປັນພຽງສ້າງ ຄວາມພ້ອມ ໃຫ້ແກ່ເດັກພິການກ່ອນການເຂົ້າຮຽນຮ່ວມ.
- ການສຶກສາພິເສດຄວນຈັດຕັ້ງແຕ່ການສຶກສາກ່ອນໄວຮຽນເພື່ອປ້ອງກັນ ແລະ ຫຼຸດຜ່ອນບັນຫາຄວາມເປັນພິການ.
- ຄຸນນະພາບ ແລະ ປະສິດທິຜົນຂອງການຮຽນບໍ່ຂຶ້ນກັບຄວາມພິການ.
- ການສຶກສາພິເສດຄວນມີການດັດປັບເນື້ອໃນຫຼັກສູດ ແລະ ສ້າງສະພາບແວດລ້ອມທີ່ເປັນມິດໃນການຮຽນຮູ້ໃຫ້ແທດເໝາະກັບຄວາມສາມາດ, ຄວາມຕ້ອງການ ແລະ ຄວາມເປັນພິການແຕ່ລະຄົນ.
- ການສຶກສາພິເສດຄວາມເຊື່ອຫຼັກສູດວິຊາຊີບຂັ້ນພື້ນຖານເຂົ້າໃນຂະບວນການຮຽນ-ການສອນທີ່ແທດເໝາະກັບຄວາມສາມາດຂອງເດັກພິການ ເພື່ອກຽມຄວາມພ້ອມໃຫ້ເດັກພິການ ແລະ ສາມາດໃຊ້ຊີວິດຢູ່ຮ່ວມກັບສັງຄົມຢ່າງມີຄວາມສຸກ.
- ບຸກຄະລາກອນສຳລັບການສຶກສາຮຽນຮ່ວມ ແລະ ການສຶກສາພິເສດຕ້ອງເປັນຄົນທີ່ມີຄວາມຮູ້ ຄວາມສາມາດ ແລະມີປະສົບການໃນວຽກງານການສຶກສາຮຽນຮ່ວມ ແລະ ການສຶກສາພິເສດ.
- ຜູ້ບໍລິຫານການສຶກສາ ແລະ ຄູອາຈານສອນຄວາມເຂົ້າໃຈ ກ່ຽວກັບພັດທະນາການຂອງເດັກພິການ ແລະ ຍອມຮັບສະພາບຄວາມເປັນຈິງຂອງເດັກ.

## 2. ຫຼັກການສຶກສາຮຽນຮ່ວມ ແລະ ການສຶກສາພິເສດ

### 2.1. ການຮຽນຮ່ວມຕ້ອງຄຳນຶງເຖິງຄຸນນະພາບ ແລະ ມາດຕະຖານສຶກສາ

ການມີສ່ວນຮ່ວມຢ່າງສົມບູນການສຶກສາແບບຮຽນຮ່ວມ ແມ່ນ ສ້າງໂອກາດເພື່ອການສ້າງຄຸນນະພາບຂອງການສຶກສາການຮຽນຮ່ວມບໍາຄວນກໍ່ໃຫ້ເກີດ ຄວາມເສຍຫາຍແກ່ເດັກຄົນອື່ນໆ ທີ່ຮຽນຮ່ວມກັນ ການສຶກສາແບບຮຽນຮ່ວມມີຄວາມຈຳເປັນທີ່ຕ້ອງຈັດຕັ້ງປະຕິບັດ ເພາະການສຶກສາແບບຮຽນຮ່ວມຈະນໍາເອົາປະໂຫຍດມາສູ່ແຕ່ລະໂຮງຮຽນ ແລະ ແຕ່ລະຫ້ອງຮຽນ ໂດຍຜ່ານການປັບປຸງທາງດ້ານທັກສະ.

### 2.2. ການມີສ່ວນຮ່ວມຢ່າງສົມບູນ

ການໃຫ້ໂອກາດທາງການສຶກສາ ແກ່ກຸ່ມເດັກທີ່ມີຄວາມຕ້ອງການ ພິເສດໃນໂຮງຮຽນ

ສາມັນສຶກສາແມ່ນ ອີງໃສ່ມາດຖານຫຼັກສູດສາມັນສຶກສາ ຄວາມຄາດຫວັງຂອງການສຶກສາແບບຮຽນຮ່ວມກໍຄື ການທີ່ເດັກທຸກຄົນສາມາດເຂົ້າມີສ່ວນຮ່ວມ ໃນທຸກໆກິດຈະກຳຂອງທາງຫ້ອງຮຽນ ຫຼື ທາງ ໂຮງຮຽນຈັດຂຶ້ນໂດຍມີການປັບປຸງ ຫຼື ປ່ຽນເລັກໆໜ້ອຍໆ ຫຼື ມີສ່ວນຊ່ວຍເຫຼືອພິເສດ ທີ່ພໍໄປພໍໄດ້ການມີໜ້າທີ່ຂອງ ໂຮງຮຽນ ທີ່ມີຄວາມຕ້ອງການພິເສດໃນຫ້ອງ ຍັງສາມາດເວົ້າໄດ້ວ່າການມີສ່ວນຮ່ວມເກີດຂຶ້ນແລ້ວນອກຈາກວ່າພວກເຂົາໄດ້ມີສ່ວນຮ່ວມ ໃນທຸກໆກິດຈະກຳຂອງການຮຽນ-ການສອນເພື່ອປັບປຸງສິ່ງດັ່ງກ່າວກ່ອນອື່ນໝົດຄູຕ້ອງ:

- ຊອກຫາວິທີສອນເພື່ອໃຫ້ເດັກພິເສດ ອາດສາມາດປະກອບສ່ວນ ໄດ້ໂດຍມີການປ່ຽນແປງ ໂດຍມີການນຳໃຊ້ວິທີການ ສິດສອນຫຼາຍຮູບແບບ ຫຼື ຫຼາກຫຼາຍກິດຈະກຳ ຮູບແບບການສິດສອນເຊັ່ນ: ຈັດກຸ່ມ,ຫຼິ້ນເກມ,ສົນທະນາສັງເກດຮູບພາບ,ບົດບາດສົມມຸດ ແລະ ອື່ນໆ.
- ມີການປັບປຸງ ຫຼື ຈັດກິດຈະກຳເລັກໆນ້ອຍໆ ເພື່ອຈະໃຫ້ເດັກພິເສດ ຄົນໃດຄົນໜຶ່ງ ສາມາດປະກອບສ່ວນເຂົ້າໃນການເຮັດກິດຈະກຳໃດໜຶ່ງ ຖ້າບໍ່ດັ່ງນັ້ນເດັກຈະພົບອຸປະສັກເຊັ່ນ: ຄູຂຽນໜັງສືສີໃຫ້ໃຫ່ຍຂຶ້ນ ແລະ ແຈ່ມແຈ້ງສຳລັບເດັກທີ່ມີບັນຫາ ທາງດ້ານພາສາ ຄູ ຜະລິດ ເຂັມທີ່ມີຮູຂະໜາດໃຫ່ຍຂຶ້ນ ໃຫ້ເດັກທີ່ມີບັນຫາດ້ານສາຍຕາໃຊ້ເພື່ອເຮັດກິດຈະກຳຮ້ອຍຫໍ່ ຫຼື ຮ້ອຍສິ່ງຂອງຕ່າງໆ.

### 2.3. ການເລີ່ມເຂົ້າຮຽນຕັ້ງແຕ່ເຍົາໄວ

ທຸກໆປີເດັກມີຄວາມເປັນພິການ ໄດ້ຖືກປະຕິເສດທີ່ຈະໄດ້ເຂົ້າຮຽນ ໂດຍການປະຖິ້ມໂອກາດ ແລະ ການຊ່ວຍເຫຼືອທີ່ພວກເຂົາຕ້ອງການ ເຊິ່ງການກະທຳດັ່ງກ່າວ ຈະສ້າງບັນຫາຫຍຸ້ງຍາກຫຼາຍຂຶ້ນ ໃນເມືອພວກເຂົາແກ່ໂຕຂຶ້ນ ແຕ່ຖ້າເມື່ອເດັກໄດ້ຮັບການຊ່ວຍເຫຼືອ ແຕ່ຍັງເຍົາໄວ ເດັກຈະມີໂອກາດທີ່ດີທີ່ສຸດ ເພື່ອບັນລຸຄວາມສາມາດອັນລີ້ຊ້ອນຢ່າງເຕັມປ່ຽມ ຂອງເຂົາບໍ່ພຽງແຕ່ເທົ່ານັ້ນ ພາລະຂອງຄອບຄົວ ແລະ ຄູ ກໍ່ຈະງ່າຍຂຶ້ນ ແລະ ຄວາມພິການບາງຢ່າງຈະສາມາດພື້ນພູໄດ້ດີຂຶ້ນກວ່າໄວກວ່າ.



### 2.4. ການພັດທະນາການຊັບມະຍາກອນມະນຸດ

ເປັນປັດໃຈໜຶ່ງທີ່ສຳຄັນ ທີ່ສຸດໃນການທີ່ຈະປ່ຽນແປງ ຫຼື ພັດທະນາສິ່ງໃດສິ່ງໜຶ່ງໃຫ້ດີຂຶ້ນ

ແຜນງານ ໂຄງການໃດໆກໍຕາມ ຈະບໍ່ສາມາດບັນລຸເຖິງຜົນສຳເລັດໄດ້ ຖ້າວ່າຊັບພະຍາກອນມະນຸດບໍ່ໄດ້ຮັບການພັດທະນາຢ່າງເຕັມປ່ຽມຖ້າພັດທະນາຊັບພະຍາກອນມະນຸດ ແມ່ນ ມີຄວາມຈຳເປັນ ແລະ ຄວາມພັດທະນາຕໍ່ເນື່ອງ ຜົນ

ຂອງການພັດທະນາຢ່າງເຕັມປ່ຽມ ຈະເຮັດໃຫ້ເຮົາມີຄວາມຮູ້ທັດສະນະຄະຕິທັກສະ(ຄວາມສາມດ) ຄວາມຮູ້ ,ທັດສະນະຄະຕິ ແລະ ທັກສະຈະສອດຄ່ອງ ຫຼື ບໍ່ສອດຕ່ອງກັບຄວາມຕ້ອງການ ແມ່ນ ຂຶ້ນຢູ່ກັບການປ່ຽນແປງຂອງຍຸກສະໄໝ ຕົວຢ່າງ ເມື່ອສິບກວ່າປີທີ່ຜ່ານມາການສິດສອນ ໃນ ໂຮງຮຽນ ໄດ້ນໍາໃຊ້ວິທີສິດສອນແບບຄູເປັນໃຈກາງ ຂອງການສິດສອນ ດ້ວຍຕົນເອງເປັນສ່ວນຫຼາຍ ແລະ ສິດສອນກໍມີແຕ່ວິທີ ແບບບັນຍາຍອ່ານ ແລະ ຈົດໃສ່ກະດານໃຫ້ນັກຮຽນກ່າຍ.

### 2.5. ການພົວພັນຮ່ວມມືກັບຄອບຄົວຢ່າງໃກ້ຊິດ

ການສຶກສາຮຽນຮ່ວມມີຄວາມຈໍາເປັນທີ່ສຸດຕ້ອງການພົວພັນຮ່ວມມືກັບຄອບຄົວຢ່າງໃກ້ສິດ ແລະ ແລກປ່ຽນຄໍາຄິດຄໍາເຫັນກັບຄອບຄົວເປັນປະຈໍາກ່ຽວກັບຕົວນັກຮຽນ.

### 2.6. ການພົວພັນຮ່ວມມືກັບຊຸມຊົນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ

ຖ້າເວົ້າເຖິງການພົວພັນແນ່ນອນວ່າຄົນເຮົາຍ່ອມມີການພົວພັນເຊິ່ງກັນ ແລະ ກັນໂດຍສະເພາະການສຶກສາຮຽນຮ່ວມຍິ່ງມີຄວາມສໍາຄັນຕ້ອງກັນມີການພົວພັນກັບຊຸມຊົນ ແລະ ຂະແໜ່ງການອື່ນທີ່ກ່ຽວຂ້ອງ, ເພື່ອໃຫ້ການສະໜັບສະໜູນທາງດ້ານການແກ້ໄຂບັນຫາກ່ຽວກັບນັກຮຽນ, ວັດຖຸແລະ ສິ່ງອໍານວຍຄວາມສະດວກຕ່າງໆ ເພື່ອໃຫ້ການສຶກສາຮຽນຮ່ວມ ແລະ ບົດບາດຍິງ-ຊາຍໄດ້ຮັບການພັດທະນາຂຶ້ນເລື້ອຍໆ.

### 2.7. ການຮ່ວມມືລະຫວ່າງຄູ ແລະ ລະຫວ່າງໂຮງຮຽນ

ສາມາດ ລົດຊ່ອງຫວ່າງລະຫວ່າງເດັກກັບ ຄູ ຫາກຄູມີຄວາມສໍາພັນທີ່ດີ ກັບຜູ້ປົກຄອງ ໃຫ້ຂໍ້ມູນທີ່ຈໍາເປັນກ່ຽວກັບ ໂຮງຮຽນ ແລະ ຄູ ແກ່ຜູ້ປົກຄອງ ການຮ່ວມມືລະຫວ່າງຄູ ແລະ ໂຮງຮຽນຕ້ອງມີການຮ່ວມມືກັບຊຸມຊົນໂດຍທາງ ໂຮງຮຽນ ກ່ອນມີສິດການຮ່ວມມືມາຍັງຊຸມຊົນ ໃນດ້ານການເປັນວິທະຍາການ ຫຼື ເປັນແຫຼ່ງສຶກສາຫາຄວາມຮູ້ຮູ້ ຄວາມຈໍາເປັນຂອງການຈັດການສຶກສາ ແບບມີການຮ່ວມມືກັບຊຸມຊົນ, ບ້ານ ໂຮງຮຽນ ເຄືອຄ່າຍ ໂຮງຮຽນ ເພື່ອຄວາມເຂົ້າອັນດີລະຫວ່າງຊາດທີ່ມີເປົ້າໝາຍໃນການເສີມສ້າງ ແລະ ຮັກສາສັນຕິພາບໂດຍຄວາມຮ່ວມມືທາງການສຶກສາ.

## 3. ຄວາມໝາຍຂອງເດັກທີ່ມີຄວາມຕ້ອງການພິເສດ

### ກ. ຄວາມຕ້ອງການພິເສດແມ່ນຫຍັງ ?

ບໍ່ມີຈັກເທື່ອທີ່ວ່າເດັກ 2 ຄົນຈະເໝືອນກັນ. ເຮົາລອງທົບທວນເບິ່ງຫ້ອງຮຽນຫ້ອງໜຶ່ງທີ່ເຮົາເຄີຍໄດ້ເຂົ້າຮຽນ. ນັກຮຽນ 2 ຄົນໃນຫ້ອງອາດມີໄວອາຍຸເໝືອນກັນ, ແຕ່ວ່າພວກເຂົາຈະມີສິ່ງເໝືອນກັນທຸກຢ່າງບໍ ?ເປັນໄປບໍ່ໄດ້ທີ່ຈະມີສິ່ງເໝືອນກັນທຸກຢ່າງ! ຖ້າເປັນຄືດັ່ງກ່າວ, ພວກເຂົາມີຄວາມແຕກຕ່າງກັນຢູ່ບ່ອນໃດແດ່ ?

ເດັກບາງຄົນອາດຈະສູງໃຫ່ຍ, ເດັກບາງຄົນອາດຈະຕົວນ້ອຍ, ບາງຄົນຂີ້ອາຍ, ແຕ່ບາງຄົນພັດກ້າຫານກ້າວໜ້າ. ເດັກບາງຄົນຮຽນໄດ້ໄວ ແຕ່ບາງຄົນພັດຮຽນຊ້າ. ຖ້າຄິດເພີ້ມອີກຈັກໜ່ອຍເຮົາອາດຈະເຫັນເດັກບາງຄົນມັກກິລາ, ບາງຄົນມັກສິລະປະວັນນະຄະດີ, ບາງຄົນມັກອ່ານ, ບາງຄົນບໍ່ມັກ, ບາງຄົນຂີ້ດື້, ບາງຄົນຄໍາຮູ້ ແລະ ອື່ນໆ.

ຄວາມພິການ ແລະ ຄວາມຕ້ອງການພິເສດ ແມ່ນສອງຄຳສັບທີ່ມີຄວາມໝາຍແຕກຕ່າງກັນ ແຕ່ສາມາດໃຊ້ກັບກັນໄດ້. ຄວາມພິການ( impairment ) ອາດມີສາເຫດມາຕັ້ງແຕ່ກຳເນີດເຊັ່ນ : ສາຍຕາສັ້ນ ຫຼື ຕາບອດ, ແຂນຂາ ຜິດປົກກະຕິ ຫຼື ສະໝອງພັດທະນາຊ້າຜິດປົກກະຕິ. ຄວາມພິການຍັງມີສາຍເຫດມາຈາກອຸປະຕິເຫດເຊັ່ນ : ການຖືກໄຟໃໝ້, ການຕົກຈາກທີ່ສູງ ຫຼື ອຸປະຕິເຫດບົນຖະໜົນ, ເດັກທີ່ປ່ວຍໄຂ້ດ້ວຍພະຍາດທີ່ກ່ຽວຂ້ອງກັບກ້າມຊີ້ນເຊັ່ນ : ໂປລີໂອ ແລະ ໄຂ້ຊັກກໍກາຍເປັນພິການໄດ້. ການຂາດຄວາມອົບອຸ່ນ ( Deprivation ) ເດັກບາງຄົນມີການຈະເລີນເຕີບໂຕ ແລະ ພັດທະນາການບົກຜ່ອງ ເນື່ອງຈາກສິ່ງແວດລ້ອມທີ່ເຂົາອາໃສຢູ່ທຸກຍາກຂາດເຂີນ ເດັກເລົ່ານີ້ອາດບໍ່ໄດ້ຮັບປະທານອາຫານທີ່ບມີປະໂຫຍດ ແລະ ພຽງພໍ ອາໃສຢູ່ເຮືອນ ທີ່ຄັບແຄບບໍ່ມີອະນາໄມເຊິ່ງກຊໍ່ໃຫ້ເກີດການເຈັບປ່ວຍຢູ່ເລື້ອຍໆ. ເດັກບາງຄົນອາດຖືກຂ້ຽນຕີ, ພໍ່ແມ່ປະຮ້າງກັນບໍມີຄວາມອົບອຸ່ນ, ຕິດຢາເສບຕິດ ແລະ ອື່ນໆ.

ເດັກພິການ ແລະ ເດັກຂາດຄວາມອົບອຸ່ນດັ່ງກ່າວຂ້າງເທິງ ຖ້າໄດ້ເຂົ້າຮຽນໃນໂຮງຮຽນສາມັນສຶກສາຈະມີຄວາມຕ້ອງການ ການຊ່ວຍເຫຼືອພິເສດໃນການຮຽນຮູ້.

ຄວາມຕ້ອງການພິເສດຂອງເດັກແຕ່ລະຄົນມີຄວາມແຕກຕ່າງກັນ, ບາງຄັ້ງກ່າວາຈະຄົ້ນພົບຄວາມຕ້ອງການຊ່ວຍເຫຼືອພິເສດທີ່ຖືກຕ້ອງສໍາລັບເດັກຕ້ອງໃຊ້ເວລາພໍສົມຄວນ, ຄູອາດຈະເປັນຕ້ອງໄປສຳພາດພໍ່ແມ່ ພີ່ນ້ອງຂອງເດັກເພື່ອເຂົ້າໃຈຄວາມເປັນມາຂອງເດັກ ແລະ ຄອບຄົວ ຄູຈຳເປັນຕ້ອງຂໍຄຳປຶກສາແນະນຳຈາກຄະນະອຳນວຍການໂຮງຮຽນ ຂໍໃຫ້ແພດກວດກາ ຫຼື ນັກ ຈິດຕະວິທະຍາຊ່ວຍຕີລາຄາສາເຫດຂອງຄວາມຫຍຸ້ງຍາກ ແລະ ຮ່ວມກັນຊອກວິທີໃຫ້ການຊ່ວຍເຫຼືອເຫດທີ່ເໝາະສົມແກ່ເດັກ.

## 4. ຮູບແບບການສຶກສາຮຽນຮ່ວມສຳລັບຄົນພິເສດ

1. ເດັກທີ່ມີຕິຄວາມບົກຜ່ອງທາງດ້ານສະຕິປັນຍາ
2. ເດັກທີ່ມີຄວາມບົກຜ່ອງທາງດ້ານການເບິ່ງເຫັນ
3. ເດັກທີ່ບົກຜ່ອງທາງດ້ານການໄດ້ຍິນ
4. ເດັກທີ່ບົກຜ່ອງທາງດ້ານຮ່າງກາຍ
5. ເດັກທີ່ບົກຜ່ອງທາງດ້ານພາສາ ແລະ ການເວົ້າ
6. ເດັກທີ່ມີຄວາມບົກຜ່ອງທາງດ້ານພຶດຕິກຳ
7. ເດັກທີ່ມີຄວາມບົກຜ່ອງຊ້ຳຊ້ອນ
8. ເດັກທີ່ມີຄວາມບົກຜ່ອງທາງດ້ານການຮຽນຮູ້
9. ເດັກອໍທິສະຕິ

# ບົດທີ 5

# ຊຸມຊົນ ແລະ ຫຼັກສູດ

## 1. ຊຸມຊົນກັບຫ້ອງຮຽນ

**ການມີສ່ວນຮ່ວມຂອງຊຸມຊົນກັບຫ້ອງຮຽນມີດັ່ງນີ້:**

- ມີສ່ວນຮ່ວມເປັນອາສາສະໝັກຊ່ວຍຄູເຮັດກິດຈະກຳໃນຫ້ອງຮຽນ
- ຊຸກຍູ້ສົ່ງເສີມເດັກໃນການຮຽນຈົນປະສົບຜົນສຳເລັດ
- ເຂົ້າຮ່ວມກອງປະຊຸມ, ແລກປ່ຽນຂໍ້ມູນຄວາມຮູ້, ປະສົບການຮຽນຮູ້ກ່ຽວກັບຫຼັກສູດຂອງການຮຽນ
- ສະໜັບສະໜູນວັດສະດຸ ອຸປະກອນຕ່າງໆໃຫ້ແກ່ໂຮງຮຽນ

## 2. ຫ້ອງຮຽນກັບຊຸມຊົນ

**ການມີສ່ວນຮ່ວມຂອງຫ້ອງຮຽນກັບຊຸມຊົນມີດັ່ງນີ້:**

- ເດັກສາມາດຮຽນຮູ້ຈາກປະສົບການຂອງພໍ່ແມ່ຜູ້ / ປົກຄອງ
- ນຳໃຊ້ບົດຮຽນຈາກຊຸມມາສົມທຽບກັບບົດຮຽນໃນຫ້ອງຮຽນ
- ສາມາດສ້າງແຜນທີ່ຊຸມຊົນ ແລະ ຊ່ວຍຊອກຫາຂໍ້ມູນກ່ຽວກັບເດັກທີ່ບໍ່ໄດ້ເຂົ້າໂຮງຮຽນ
- ສາມາດເຂົ້າຮ່ວມທຸກກິດຈະກຳທີ່ຊຸມຊົນຈັດຂຶ້ນ

❖ **ໝາຍເຫດ: ບັນຫາທີ່ເກີດຂຶ້ນໃນໂຮງຮຽນກ່ຽວກັບການມີສ່ວນຮ່ວມຂອງຊຸມຊົນມີຄື:**

- ຊຸມຊົນບໍ່ເຂົ້າຈຕໍ່ຄວາມສຳຄັນຂອງວຽກງານການສຶກສາ ແລະ ອະນາຄົດຂອງລູກຫຼານ
- ຊຸມຊົນບໍ່ທັນເຂົ້າໃຈເຖິງຄູນປະໂຫຍດຂອງການມີສ່ວນຮ່ວມ ແລະ ຄວາມສະເໝີພາບບົດບາດລະຫວ່າງ ຍິງ-ຊາຍ ໃນຊຸມຊົນຂອງເຂົາເຈົ້າ
- ຄວາມທຸກຈົນຂອງຊຸມຊົນ, ຮີດຄອງປະເພນີອັນເກົ່າແກ່ຫຼ້າຫຼັງບາງຢ່າງຍັງກີດໜ່ວງການພັດທະນາ ແລະ ຄວາມກ້າວໜ້າຂອງຊຸມຊົນ
- ຂອດການປະສານງານລະຫວ່າງພາກສ່ວນທີ່ກ່ຽວຂ້ອງຢູ່ຂັ້ນຕ່າງໆຍັງບໍ່ທັນໄດ້ດີ
- ໜ້າວຽກບາງຢ່າງບໍ່ມີຄ່າຕອບແທນແຮງງານ ເຮັດໃຫ້ຊຸມຊົນບໍ່ຢາກເຂົ້າຮ່ວມ ໃນການປະຕິບັດວຽກງານນຳ ການແກ້ໄຂບັນຫາຂອງອຳນາດການປົກຄອງບາງແຫ່ງບາງຄັ້ງບໍ່ລະອຽດຈະແຈ້ງ.

# ບົດທີ 6

## ຂັ້ນຕອນເພື່ອກາຍເປັນໂຮງຮຽນທີ່ມີສະພາບແວດລ້ອມເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້

**1. ວິທີວາງແຜນເພື່ອກະຈ່າຍເປັນໂຮງຮຽນທີ່ມີສະພາບແວດລ້ອມໂຮງຮຽນເອື້ອອຳນວຍຕໍ່ການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.**

**ກ. ຄວາມໝາຍ, ຄວາມສຳຄັນ ຂອງການຈັດສະພາບແວດລ້ອມສຳລັບການສຶກສາຮຽນຮ່ວມ.**

ການຈັດສະພາບແວດລ້ອມໂຮງຮຽນ ເອື້ອອຳນວຍຕໍ່ການຮ່ວມຮຽນ ແລະ ເປັນເພື່ອນມິໃນການຮຽໜຮູ້ ໃນທີ່ນີ້ ໝາຍເຖິງ ການເອົາໃຈໃສ່ ໃນການຈັດສະພາບແວດລ້ອມ ຂອງ ໂຮງຮຽນ ລວມທັງ ໂຄງລ່າງພື້ນຖານ( ອາຄານຮຽນ ແລະ ຫ້ອງຮຽນ) ທີ່ປົກປ້ອງ ແລະ ປອດໄພ,ການຮຽຮ-ການສອນ ແລະ ບັນຍາກາດ,ການຕ້ອງຮັບ ປຸກຈິດສຳນຶກໃນການເຄົາລົບເຊິ່ງກັນ ແລະ ກັນ ຍອມຮັບຄວາມຫຼາກຫຼາຍ ແລະ ແຕກຕ່າງກັນ,ໃຫ້ໂອກາດແກ່ທຸກຄົນເຂົ້າເຖິງການຮຽນທີ່ມີຄຸນນະພາບເທົ່າທຽມ ແລະ ສະເໜີພາບ ແນໃສ່ໃຫ້ເດັກທຸກຄົນໄດ້ຜົນປະໂຫຍດສູງສຸດ ຈາກການຮຽນຮູ້ໃນໂຮງຮຽນ ໂດຍໃຫ້ພໍ່-ແມ່ ,ຜູ້ປົກຄອງ,ຊຸມຊົນ ແລະ ທຸກພາກສ່ວນມີສ່ວນປະກອບສ່ວນຕໍ່ການຮຽໜ-ການສອນ ໃນ ແລະ ນອກ ໂຮງຮຽນ ສະພາບແວດລ້ອມ ໂຮງຮຽນ ເອື້ອອຳນວຍຕໍ່ການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ສາມາດປະຕິບັດດັ່ງໄປນີ້:

**ວິທີວາງແຜນເພື່ອຈະກາຍເປັນ ໂຮງຮຽນ ທີ່ມີສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.**

ຫຼັງຈາກທີ່ໄດ້ປະເມີນວ່າ ໂຮງຮຽນຂອງທ່ານພວມເດີນທາງຮອດບ່ອນໃດແລ້ວ ເພື່ອຈະກາຍເປັນ ໂຮງຮຽນ ທີ່ມີສະພາບແວດລ້ອມແບບຮຽນຮ່ວມ,ເປັນເພື່ອນມິດ ໃນການຮຽນຮູ້ ແລະ ໄດ້ຮັບຮູ້ວ່າຂະບວນການປ່ຽນແປງເກີດຂຶ້ນຄືແນວໃດແລ້ວ,ທ່ານຈະຕ້ອງການຕັດສິນໃຈວ່າ ຈະເລີ່ມດ້ວຍຂັ້ນຕອນອັນໃດໃນຂັ້ນຕອນຕໍ່ໄປ ເພື່ອຈະສ້າງສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ , ຈະພຽງໜຶ່ງຫ້ອງຮຽນ ຫຼື ທັງໝົດ ໂຮງຮຽນ ຂ້າງລຸ່ມນີ້ ຈະເປັນຂໍ້ແນະນຳຂັ້ນຕອນຕ່າງໆເພື່ອວາງແຜນ ແລະ ປະຕິບັດການສ້າງສະພາບແວດລ້ອມແບບຮຽນຮ່ວມ.

**ການວາງແຜນໃນການຈັດສະພາບແວດລ້ອມສຳລັບການສຶກສາຮຽນຮ່ວມ.**

**ຄວນເປັນໄປຕາມ 6 ຂັ້ນຕອນດັ່ງນີ້:**






ຮູບທີ 10 : ການຈັດສະພາບແວດລ້ອມພາຍນອກຫ້ອງຮຽນ

- **ຂັ້ນຕອນທີ່ 1: ສ້າງຕັ້ງຄະນະຮັບຜິດຊອບສ້າງສະພາບແວດລ້ອມການ ຮຽນຮ່ວມ ແລະ ເປັນເພື່ອນມິດ ໃນການຮຽນຮູ້.**

ກຳນົດບຸກຄົນທີ່ຈະມີບົດບາດ ໃນການວາງແຜນ ແລະ ປະຕິບັດການສ້າງແຜນສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ແລະ ຕັ້ງກຸ່ມປະສານງານບຸກຄົນເລົ່ານີ້ຈະຈັດຕັ້ງຮັບຜິດຊອບ ສ້າງສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນ ມິດ ໃນການຮຽຮູ້ ຄະນະຮັບຜິດຊອບອາດຈະປະກອບດ້ວຍຄູ 3-4 ທ່ານ

ຜູ້ອຳນວຍການ ໂຮງຮຽນ ແລະ ຜູ້ປົກຄອງ 2-3 ທ່ານ ຫຼື ອາດ ຈະເປັນຄະນະ ໃຫ່ຍກວ່ານີ້ກໍໄດ້. ກຸ່ມປະສານງານອາດປະກອບດ້ວຍ ຄູ ,ຜູ້ບໍລິຫານ ແລະ ອື່ນໆ ໃນ ໂຮງຮຽນ ນັກການສຶກສາ ແລະ ຜູ້ບໍລິການສຸຂະພາບ ບຸກຄົນຈາກກຸ່ມດ້ອຍຕ່າງໆ; ຄົນພິການ;ນັກຮຽນຫ້ອງໃຫ່ຍ;ຜູ້ປົກຄອງ ສະມາຊິກຊຸມຊົນ ແລະ ອົງການຈັດຕັ້ງທ້ອງຖິ່ນ.

- ❖ **ຂັ້ນຕອນທີ2: ລະບຸຄວາມຕ້ອງການ.**

ກ. **ຄົນສ່ວນຫຼາຍໄດ້ຮູ້ຫຍັງມາແດ່ແລ້ວ ແລະ ສິ່ງໃດທີ່ພວກເຂົາຕ້ອງຮຽນຮູ້ອີກ.**

1. ການສາຫຼວດຄວາມຮູ້ຂອງກຸ່ມປະສານງານ ໃນບັນດາສະມາຊິກ ຄະນະຮັບຜິດຊອບ ສ້າງສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ໄດ້ຮູ້ຫຍັງແດ່ແລ້ວກ່ຽວກັບຄູ ລັກສະນະ ແລະ ຜົນປະໂຫຍດຂອງສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດ ໃນການຮຽນຮູ້? ທ່ານ ແລະ ພວກເຂົາເລົ່ານີ້ຈຳເປັນ ຕ້ອງຮຽນຮູ້ຫຍັງແດ່ ແລະ ແຕ່ລະຄົນຈະຮຽນຮູ້ແນວໃດ?

ຕົວຢ່າງ: ເຊີນແຂກມາປະຖະກະຖາໃຫ້ຄວາມຮູ້, ພົບປະກັບວິທະຍາກອນ ທີ່ຈະໃຫ້ຄວາມຮູ້ ແລະ ຊັບພະຍາກອນຕ່າງໆ.

2. ສຳຫຼວດຄວາມຮູ້ຂອງນັກຮຽນ, ພະນັກງານ, ຄູ-ອາຈານ, ພໍ່-ແມ່ ຜູ້ປົກຄອງ ແລະ ສະມາຊິກຊຸມຊົນ ເມື່ອກຸ່ມປະສານງານມີຄວາມຮູ້ກ່ຽວກັບສະພາບ ແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ແລ້ວ , ໃຫ້ຕັດສິນໃຈຈະຖາມຜູ້ອື່ນໆ ມີຫຍັງແດ່? ສິ່ງນີ້ອາດຈະກ່ຽວຂ້ອງ ກັບການສຳພາດສ່ວນບຸກຄົນ ແບບງ່າຍໆ ຫຼື ສົນທະນາເປັນກຸ່ມ ຫຼື ທ່ານ ຈະອອກແບບສອບຖາມສັ້ນໆກໍ່ໄດ້.

**ຂ. ຮຽນຮູ້ກ່ຽວກັບ ໂຮງຮຽນ ແລະ ເດັກ ໃນຊຸມຊົນ.**

1. ທົບທວນ ຫຼື ເຮັດໃຫ້ແລ້ວ ແບບສອບຖາມປະເມີນຕົນເອງ ກ່ຽວກັບສະພາບແວດລ້ອມ ແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ທີ່ບັນຈຸໃນຕອນຕົ້ນຂອງເຄື່ອງມືນີ້ ກ່ຽວກັບ ດຽວນີ້ ພວກເຮົາ ພວມຢູ່ຈຸດໃດ. ເຮັດເປັນລາຍການສິ່ງທີ່ ໂຮງຮຽນ ຂອງທ່ານ ພວມເຮັດຢູ່ແລ້ວ ແລະ ສິ່ງທີ່ ຈຳເປັນຕ້ອງເຮັດ ເພື່ອໃຫ້ປ່ຽນເປັນສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດ ໃນການຮຽນຮູ້.

2. ຊອກເບິ່ງວ່າຍັງມີເດັກຄົນໃດ ທີ່ຍັງບໍ່ມາເຂົ້າ ໂຮງຮຽນ ການນາເອົາເດັກທຸກຄົນເຂົ້າ ໂຮງຮຽນ ແລະ ຮຽນຮູ້.

3. ການົດຄວາມຈາເປັນທາງການສຶກສາຂອງນັກຮຽນ ແລະ ບັນດາເດັກທີ່ເຄີຍປ່ອຍປະ ໃນຊຸມຊົນຂອງທ່ານ ຄະນະຮັບຜິດຊອບຈຳເປັນຕ້ອງເຂົ້າໃຈ ຄວາມຈຳເປັນເຫຼົ່ານີ້ຕ້ອງເຖິງຖອງເທົ່າທີ່ຈະເປັນໄປໄດ້ ເພື່ອຈະສ້າງແຜນທີ່ດີຂອງຫ້ອງຮຽນ ແລະ ໂຮງຮຽນ ສໍາລັບທີ່ຈະບັນຈຸເອົາເດັກເຫຼົ່ານີ້ເຂົ້າຮຽນ ຄະນະຮັບຜິດຊອບອາດຈະຕ້ອງເຮັດການປະເມີນຄວາມຕ້ອງການ.

- ຖ້າຫາກການຮຽນຂອງນັກຮຽນ ຍັງເຮັດບໍ່ທັນສຳເລັດຜົນເທື່ອ ພໍ່ແມ່ຜູ້ປົກຄອງ ສາມາດໃຫ້ຂໍ້ມູນ ທີ່ເປັນປະໂຫຍດກ່ຽວກັບລູກຫຼານ ຂອງເຂົາແກ່ຄະນະຮັບຜິດຊອບ

4. ການິດ ຊັບພະຍາກອນ ທີ່ມີຢູ່ ໃນ ໂຮງຮຽນ ແລະ ຊຸມຊົນຂອງທ່ານ ລຽງລາຍການສະໜັບສະໜູນ ແລະ ການບໍລິການທີ່ຮຽກຮ້ອງຕ້ອງການ  ສຳລັບເດັກທີ່ມີພື້ນຖານ ແລະ ຄວາມສາມາດແຕກຕ່າງກັນ ສິ່ງເຫຼົ່ານີ້ອາດລວມການບໍລິການຂອງລັດ, ອົງກອນທີ່ບໍ່ສັງກັດລັດ ຄຣີນິກ ສຸຂະພາບ ແລະ ພາກສ່ວນເອກະຊົນຕ່າງໆ.

5. ພັນລະນາບັນຍາຍເຖິງແຜນງານ ການສຶກສາ ໃນປັດຈະບັນ ແລະ ສະພາບແວດລ້ອມຂອງ ໂຮງຮຽນ ການບັນຍາຍນີ້ຄວນຊີ້ໃຫ້ເຫັນຢ່າງຈະແຈ້ງວ່າ: ມີອາຄານສະຖານທີ່,ເຟີນີເຈີ ແລະ ວັດຖຸອຸປະກອນຕ່າງໆ ອັນໃດແດ່ທີ່ສະໜອງໃຫ້ ແລະ ໄດ້ນຳໃຊ້ຢູ່ໃນ ປັດຈຸບັນ ເດັກທຸກຄົນສາມາດເຂົ້າເຖິງສິ່ງເຫຼົ່ານີ້ໄດ້ບໍ່?ຖ້າບໍ່,ຈະເຮັດແນວໃດເພື່ອຈະເຮັດໃຫ້ເຂົ້າເຖິງໄດ້.

6. ການິດ ແລະ ພັນລະນາເຖິງການຮຽນ-ການສອນ ຢ້ຽມຢາມຫ້ອງຮຽນ ແລະ ພັນລະນາລະອຽດຕາມທີ່ເຮົາໄດ້ເຫັນກ່ຽວກັບສິ່ງທີ່ຄູ ແລະ ນັກຮຽນໄດ້ເຮັດ ຫ້ອງຮຽນເຫຼົ່ານີ້ມີລັກສະນະການຮຽນຮ່ວມ ແລະ ເປັນ ມິດຕໍ່ການຮຽນຮູ້ບໍ່? ຍ້ອນຫຍັງຈຶ່ງມັກມີ?ຍ້ອນຫຍັງຈຶ່ງບໍ່ມັກມີ? ໃຫ້ວິເຄາະຂໍ້ມູນເຫຼົ່ານີ້ ໃຫ້ບັນຍາຍທີ່ຈຳເປັນ ຕ້ອງເຮັດເພື່ອສ້າງຫ້ອງຮຽນທີ່ມີລັກສະນະຮຽນຮ່ວມ ແລະ ເປັນມິດຕໍ່ການຮຽນຮູ້ ໃຫ້ພິຈາລະນາຂະໜາດຫ້ອງຮຽນ,ຍຸດທະສາດການສອນ,ຮູບແບບການສອນ,ການພົວພັນລະຫວ່າງຄູ ແລະ ນັກຮຽນ ແລະ ສື່ອຸປະກອນທີ່ໃຊ້ ໃຫ້ເກັບຂໍ້ມູນຕື່ມອີກ ຂໍ້ມູນທີ່ທ່ານລວບລວມໄດ້ນັ້ນ ອາດກໍ່ໃຫ້ເກີດບັນຫາໃໝ່ ຫຼື ບັນຫາເພີ່ມເຕີມຂຶ້ນມາ ໃຫ້ລວບລວມເອົາຂໍ້ມູນເພີ່ມເຕີມ. ເພື່ອ ທ່ານຈະສາມາດ ເຮັດການຕັດສິນໃຈ ໂດຍອີງໃສ່ຂໍ້ມູນທີ່ກ່ຽວຂ້ອງທັງໝົດ ບໍ່ໃຫ້ອີງໃສ່ຄຳຄິດເຫັນ ຫຼື ແນວ ຄິດຕ່າງໆ.

- **ຂັ້ນຕອນທີ 3 : ສ້າງວິໄສທັດ**

ໃຫ້ບັນຍາຍເຖິງສະພາບແວດລ້ອມຂອງຫ້ອງຮຽນທີ່ທ່ານ ປາຖະຖະໜາ ຫຼື ຫ້ອງຮຽນ ໃນຝັນ( ອຸດົມການ) ຂອງທ່ານກໍໄດ້ ເມື່ອ ຕົວທ່ານເອງ ແລະ ເດັກນັກຮຽນ ຍ່າງເຂົ້າໄປໃນຫ້ອງຮຽນ ໃຫ້ນຶກພາບເບິ່ງວ່າ ຄວນຈະເປັນແນວໃດ? ມັນໜ້າຈະມີການຕົບແຕ່ງຫຍັງແດ່?ຄູ ຄວນຈະເຮັດຫຍັງແດ່? ນັກຮຽນຄວນຈະເຮັດແນວໃດ? ຝາຫ້ອງຄວນຈະເປັນແນວໃດ?ໃຫ້ພິຈາລະນາກ່ຽວກັບຜູ້ຍິງ ແລະ ເດັກຊາຍ ເດັກທີ່ບໍ່ເວົ້າພາສາທີ່ຄົນສ່ວນຫຼາຍເວົ້າກັນ;ເດັກທີ່ມີບັນຫາທາງດ້ານຫູ,ສາຍຕາ ຫຼື ສະຕິປັນຍາ ເດັກທີ່ມີພື້ນຖານທາງດ້ານສາສະໜາ ແລະ ສະຖານະພາບທາງດ້ານເສດຖະກິດ-ສັງຄົມທີ່ແຕກຕ່າງກັນ. ຖ້າເດັກໃນເກນອາຍຸຮຽນໃນຊຸມຊົນໄດ້ເຂົ້າ ໂຮງຮຽນໝົດ ຄວາມຕ້ອງການທາງການຮຽນຮູ້ ທີ່ແຕກຕ່າງກັນຈະມີຄວາມໝາຍແນວໃດ ແລະ ຈະຕອບສະໜອງຄວາມຕ້ອງການເຫຼົ່ານີ້ໄດ້ຢ່າງໃດ? ໃຫ້ທ່ານຂຽນ ວິໄສທັດຂອງຫ້ອງຮຽນ ໃນຝັນ ຂອງທ່ານ ໃຫ້ຖືກກັບຄວາມຕ້ອງການເທົ່າທີ່ຈະສາມາດເປັນ ໄປໄດ້ ເຊິ່ງ ມັນເປັນເປົ້າໝາຍ ໃນການສ້າງສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.

- **ຂັ້ນຕອນທີ່4: ການສ້າງແຜນພັດທະນາ**

ໃຫ້ເຮັດຕາຕະລາງເວລາປະຕິບັດກິດຈະກຳຕ່າງໆ ເພື່ອສ້າງ ແລະ ດຳເນີນການສ້າງສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້  ທ່ານ ຈະຕ້ອງບອກລາຍລະອຽດກ່ຽວກັບການປ່ຽນແປງຕ່າງໆທີ່ຕ້ອງການ ແລະ ເວລາທີ່ດຳເນີນການ ພ້ອມກັນນັ້ນທ່ານ ກໍຄວນຈະລົງບັນຊີສື່ ອຸປະກອນ. ແລະ ການບໍລິການຕ່າງໆ  ຄົນຮັບຜິດຊອບເພື່ອສະໜອງການບໍລິການເລົ່ານີ້ ແລະ ບັນດາຊັບພະຍາກອນອື່ນໆ ທີ່ຈຳເປັນຕື່ມອີກ ຕາຕະລາງຂອງທ່ານ

ຄວນປະກອບມີວັນເວລາທີ່ເປັນຈິງ ເພື່ອປະຕິບັດການປ່ຽນແປງໃຫ້ເກີດຂຶ້ນ ມັນຄວນຈະມີເປົ້າໝາຍທີ່ແນ່ນອນ ແຕ່ກໍ່ຄວນມີຄວາມຢືດຢຸ່ນ ເພື່ອຕອບຮັບກັບຄວາມຈຳເປັນ ແລະ ເງື່ອນໄຂຂອງການປ່ຽນແປງ.

ໃຫ້ຈັດຊັບພະຍາກອນເພີ່ມເຕີມເມື່ອເວລາຈຳເປັນ. ໃຫ້ກຽມໄວ້ລ່ວງໜ້າເພື່ອຈະເພີ່ມຊັບພະຍາກອນທີ່ຈຳເປັນ ເຊັ່ນ: ການຂື້ນງົບປະມານສຳລັບສື່ການສອນ ການພັດທະນາລະບົບເພື່ອນສອນ ຫຼື ການສ້າງຕັ້ງຄະນະກຳມະການ ຜູ້ປົກຄອງ-ຄູ ຂຶ້ນເປັນພິເສດ ເພື່ອການພັດທະນາຊັບພະຍາກອນ.

ໃຫ້ພັດທະນາເຖິງແນວຄິດຈິດໃຈ ການພັດທະນາການສຶກສາເພື່ອທີ່ຈະໃຫ້ມັນຊຸກຍູ້ການຮຽນ ແລະ ມີສ່ວນຮ່ວມຂອງນັກຮຽນ ໃຫ້ເກີດຂຶ້ນໃນ 2 ແນວທາງ ໂດຍຜ່ານການວິເຄາະລະອຽດ ແລະ ວາງແຜນ ໂດຍຜ່ານການປ່ຽນແປງ ໃນແນວຄິດຈິດໃຈຂອງຄົນ ທ່ານ ອາດຈະໃຊ້ແບບຟອມ ປະເມີນຕົນເອງ ກ່ຽວກັບສະພາບແວດລ້ອມ ແບບຮຽນຮ່ວມ ແລະ ເປັນເພື່ອນມິດ ໃນການຮຽນຮູ້ ແລະ ຄູ່ມືເຫຼົ່ານີ້ ເພື່ອເຮັດການວິເຄາະລະອຽດ ທ່ານຈະຕ້ອງເຮັດຫຍັງແດ່ ເພື່ອພະຍາຍາມໃຫ້ເກີດມີການປ່ຽນແປງໃນແນວຄິດຈິດໃຈຂອງຄົນ? ຍົກຕົວຢ່າງ ລອງເລີ່ມຕົ້ນດ້ວຍການເພີ່ມທະວີການມີສ່ວນຮ່ວມຂອງພໍ່ແມ່ ຜູ້ປົກຄອງ ແລະ ສະມາຊິກ ໃນຊຸມຊົມຢູ່ໃນຫ້ອງຮຽນຂອງທ່ານ ດ້ວຍວິທີນີ້, ພວກເຂົາຈະສາມາດຮຽນຮູ້ດ້ວຍຕົນເອງກ່ຽວກັບຜົນປະໂຫຍດຂອງການມີສະພາບແວດລ້ອມ ແບບຮ່ຽນຮ່ວມ ແລະ ເປັນເພື່ອນມິດ ໃນການຮຽນຮູ້ ແລະ ເຂົາຈະສາມາດຊ່ວຍທ່ານໄດ້ຫຼາຍຂຶ້ນ ໃນການສິດສອນ-ການຮຽນຮູ້ຂອງນັກຮຽນ.

- ❖ **ຂັ້ນຕອນທີ່ 5: ດຳເນີນຕາມແຜນທີ່ວາງໄວ້**

ຖ້າຈຳເປັນກໍຄວນສະໜອງຄວາມຊ່ວຍເຫຼືອດ້ານວິຊາການແກ່ພະນັກງານ-ຄູ ການຊ່ວຍເຫຼືອດ້ານວິຊາການມີຄວາມຈຳເປັນ ຫຼື ບໍ່ ເຊັ່ນ: ການຈັດເຝິກອົບຮົມກ່ຽວກັບຫົວຂໍ້ໃດໜຶ່ງ ໂດຍບຸກຄົນທີ່ມີປະສົບການມາແລ້ວ? ຖ້າເປັນເຊັ່ນນັ້ນ, ຮູບແບບໃດຂອງຄວາມຊ່ວຍເຫຼືອທີ່ມີຄວາມຈຳເປັນ ແລະ ໃຜຈະເປັນຜູ້ສະໜອງໃຫ້ ? ຈະມີການດຳເນີນການຄືແນວໃດ? ແລະ ຈະຈັດໃຫ້ຈັກເທື່ອ? ເຝິກອົບຮົມໃຫ້ພະນັກງານ-ຄູ
(ທັງຜູ້ສອນ ແລະ ຜູ້ບໍ່ໄດ້ສອນ) ແລະ ນັກຮຽນຕາມຄວາມຈາເປັນ ຫົວຂໍ້ການເຝິກອົບຮົມ ຄວນກວມເອົາສິດທິເດັກ ແລະ ການນຳໃຊ້ເຂົ້າໃນການສຶກສາ ,ຄວາມສະເໝີພາບ ແລະ ຄວາມສະເໝີພາບລະຫວ່າງບົດບາດຍິງ-ຊາຍ ຄວາມແຕກຕ່າງ ແລະ ຄວາມຄ້າຍຄືກັນທາງວັດທະນະທຳ ແລະ ພາສາ , ຄວາມຮັບຮູ້ກ່ຽວກັບຄວາມພິການ, ການແນະນຳການດູແລການເບິ່ງແຍງພິເສດ, ໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບຄວາມຮັບຜິດຊອບຂອງແຕ່ລະບຸກຄົນ,ຍຸດທະສາດການສິດສອນແບຮ່ວມມື ແລະ ອື່ນໆ. ສົ່ງເສີມການຕັ້ງໜ້າຂອງພໍ່ແມ່ ຜູ້ປົກຄອງ ຄະນະວາງແຜນຄວາມພັດທະນາ ລະບົບສຳລັບການສື່ສານ ຂອງຜູ້ປົກຄອງ ການປະກອບສ່ວນຂອງພໍ່ແມ່ ຜູ້ປົກຄອງ ຄວນໄດ້ຮັບການກະຕຸກຊຸກຍູ້ ແລະ ໄດ້ຮັບການພິຈາລະນາຢ່າງຈິງຈັງຕະຫຼອດ ຂະບວນການວາງແຜນ ແລະ ຈັດຕັ້ງປະຕິບັດ ການວາງແຜນ ວິທີທີ່ຈະແກ້ໄຂບັນຫາກ່ຽວກັບການຕໍ່ຕ້ານ ທີ່ ໂຮງຮຽນ (ມ) ຜູ້ອຳນວຍການ ໂຮງຮຽນອະນຸຍາດໃຫ້ມີການປ່ຽນແປງໄປຕາມຈັງຫວະຄວາມໄວທີ່ເຂົາເຈົ້າສະດວກ ໃນການປະຕິບັດ ຄູສ່ວນໃຫ່ຍໄດ້ນຳໃຊ້ການສິດສອນແບບເອົານັກຮຽນເປັນໃຈກາງຢ່າງວ່ອງໄວ, ຄູບາງຄົນກໍ່ບໍ່ສາມາດເຮັດໄດ້ຄືແນວນັ້ນ ພໍ່-ແມ່ ຜູ້ປົກຄອງ ສ່ວນໃຫ່ຍໄດ້ໃຫ້ການສະໜັບສະໜູນ ແລະ ຕັດສິນໃຈ ຂອງໂຮງຮຽນ ເພື່ອສ້າງ ໂຮງຮຽນ ທີ່ມີລັກສະນະຮ່ວມຮຽນຫຼາຍຂຶ້ນ, ແຕ່ຜູ້ປົກຄອງບາງຄົນຍັງກັງວົນກັບ ຈຳນວນເດັກພິການ

ທີ່ຈະຮັບເຂົ້າມາຮຽນ ນັ້ນຄວນມີເທົ່າໃດ ພວກເຂົາບໍ່ຕ້ອງການໃຫ້ ໂຮງຮຽນ ກາຍເປັນທີ່ຮູ້ຈັກກັນວ່າ ເປັນພຽງ ໂຮງຮຽນ ສຳລັບເດັກພິການ ຫຼື ເດັກທີ່ມີຄວາມຕ້ອງການພິເສດ ໂຮງຮຽນໄດ້ແກ້ໄຂບັນຫານີ້ ດ້ວຍການສະເລ່ຍເປັນເປີເຊັນ ເພື່ອ ຈະກຳນົດກ່ຽວກັບການຕໍ່ຕ້ານ ທີ່ເປັນໄປໄດ້ອາດເກີດຂຶ້ນມີຫຍັງແດ່ ແລະ ວິທີທີ່ ຈະເອົາຊະນະມັນ.

❖ **ຂັ້ນຕອນທີ6: ປະເມີນຜົນຈາກການປະປະບັດ**

ໃຫ້ຕິດຕາມຊຸກຍູ້ຄວາມກ້າວໜ້າ ແລະ ດັດແກ້ແຜນຂອງທ່ານ ເມື່ອຈຳເປັນ ຄະນະຮັບຜິດຊອບສ້າງສະພາບ ແວດລ້ອມ ແບບຮຽນຮ່ວມ ແລະ ເປັນມິດໃນການຮຽນ ຮູ້ ເປັນຊັບພະຍາກອນຕໍ່ເນື່ອງ ທີ່ຈະຖືກໃຊ້ຕະຫຼອດປີຮຽນ ໃຫ້ ກຽມຕາຕະລາງເວລາ ເພື່ອ ຈັດກອງປະຊຸມ ຕິດຕາມຕັດສິນໃຈ ວິທີຕິດຕາມຊຸກຍູ້ ວ່າຈະເຮັດແນວໃດ ໃຫ້ຕັດສິນໃຈວ່າ ການຊ່ວຍເຫຼືອ ທີ່ມີ ຢູ່ເໝາະສົມຫຼື ບໍ່ ຫຼື ມີຄວາມຈຳເປັນຈະຕ້ອງປັບປຸງ ຫຼື ລົບລ້າງ.

ຈົ່ງສະຫຼອງຜົນສຳເລັດຂອງທ່ານ ການບັນລຸການປ່ຽນແປງທີ່ສຳຄັນ ໃນແຜນງານການສຶກສາ ໂດຍສະເພາະ ໂຕທີ່ໄດ້ ກວມເອົາການລົງທຶນຊັບພະຍາກອນມະນຸດ ແລະ ວັດຖຸສິ່ງຂອງ ເພາະ ສະນັ້ນສົມຄວນທີ່ຈະໄດ້ຮັບການ ສະເຫຼີມສະຫຼອງ.

ໃນເມື່ອໄດ້ນຳຊຸມຊົນເຂົ້າມີສ່ວນຮ່ວມ ຢ່າງມີຄວາມຫວັງ ໃນແຕ່ລະບາດກ້າວຂອງແຕ່ລະເສັ້ນທາງ ໃຫ້ເຊີນຊຸມຊົນ ການປ່ຽນແປງ ໃນ ໂຮງຮຽນ ຂອງທ່ານ ດ້ວຍການຈັດງານວາງສະແດງ,ງານບຸນ ຫຼື ວັນເປີດ ໂຮງຮຽນ ຢູ່ໃນວັນເປີດຊົມ ໂຮງຮຽນ ,ພໍ່ແມ່ຜູ້ປົກຄອງ ສະມາຊິກຊຸມຊົນ ແລະ ພະນັກງານຈາກພາກສ່ວນຕ່າງໆ ກໍຈະຖືກເຊີນມາ ໂຮງຮຽນ ຜົນງານທີ່ ເປັນຕົວແທນຈາກນັກຮຽນ ທຸກຄົນຈະຖືກວາງສະແດງຄຽງຄູ່ ກັບສື່ອຸປະກອນການຮຽນ-ການສອນ ຄູ ສະແດງ ຫຼື ສາທິດທັກສະໃໝ່ ໃນການປະເມີນຜົນ ແລະ ການສິດສອນ ສັງລວມ ເດັກທີ່ມີຄວາມສາມາດແຕກຕ່າງກັນ ທັງໝົດກໍສະແດງ ຫຼື ສາທິດສິ່ງທີ່ເຂົາໄດ້ຮຽນຮູ້ມາ.

ທັງໝົດທຸກຂັ້ນຕອນທີ່ກ່າວ.ມາຂ້າງເທິງນັ້ນ ແມ່ນ ມີຄວາມສຳຄັນຢ່າງຍິ່ງ ໃນການທີ່ຈະກາຍມາເປັນ ໂຮງຮຽນ ທີ່ມີ ສະພາບ ແວດລ້ອມຮຽນຮ່ວມ ແລະ ເປັນເພື່ອນ ມິດໃນການຮຽນຮູ້.

## 2. ວິທີຕິດຕາມຄວາມກ້າວໜ້າ.

ພວກເຮົາໄດ້ສ້າງຄວາມແຕກຕ່າງຫຍັງແດ່ ? ຫ້ອງຮຽນ ແລະ ໂຮງຮຽນຂອງພວກເຮົາໄດ້ປ່ຽນເປັນການຮຽນຮ່ວມ ລະ ເປັນເພື່ອນມິດໃນການຮຽນຮູ້ຫຼາຍຂຶ້ນ ຫຼື ບໍ່ ? ເພື່ອຈະຊອກເບິ່ງວ່າ ການປະສົບຜົນສຳເລັດໃນການພັດທະນາສະພາບ ແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ຫຼື ບໍ່ນັ້ນ ທ່ານຈະຕ້ອງຖາມຄຳຖາມ 2ຄຳຖາມສຳ ຄັນຄື :

1.) ພວກເຮົາເປັນ ‘ ລັກຊະນະຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ “ ໃນທິດທາງທີ່ພວກເຮົາຕັ້ງໃຈຢາກຈະ ເປັນແລ້ວຫຼື້ ບໍ່ ? ປ ພວກເຮົາຈະສາມາດປັບປຸງສິ່ງທີ່ພວກເຮົາໄດ້ເຮັດແນວໃດ ?

2.) ພວກເຮົາໄດ້ສ້າງຄວາມແຕກຕ່າງອັນໃດແດ່ , ໂດຍສະເພາະໃນການປັບປຸງການຮຽນຂອງເດັກ ?

ທ່ານສາມາດປະເມີນຂະບວນການ ປລະ ຜົນໄດ້ຮັບຂອງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນ ເພື່ອນມິດໃນການຮຽນຮູ້ແບບເປັນທາງການ ແລະ ບໍ່ເປັນທາງການ, ທ່ນ ແລະ ຜູ້ອື່ນໆພາຍໃນໂຮງຮຽນສາມາດດຳເນີນ

ການປະເມີນຜົນແບບບໍ່ເປັນທາງການໄດ້.ແລ້ວກໍ່ໃຊ້ຂໍ້ມູນທີ່ທ່ານເກັບກຳເພື່ອສ້າງເປັນຮູບເປັນຮ່າງ ຫຼື ເຮັດການປ່ຽນແປງໃນແຜນງານໂຄງການ.

ນອກຈາກການປະເມີນຜົນແບບບໍ່ເປັນທາງການແລ້ວ, ມັນກໍ່ຈະເປັນການດີທີ່ຈະໃຫ້ມີບຸກຄົນຂ້າງນອກທີ່ເຊື່ອຖືໄດ້ເຂົ້າມາປະເມີນແບບເປັນທາງການຢ່າງເປັນປົກກະຕິ. ການປະເມີນຜົນນີ້ອາດເປັນພາກສ່ວນໜຶ່ງຂອງການຢ້ຽມຢາມເພື່ອໃຫ້ກຽດຄືຍົດໂຮງຮຽນ ຫຼື ເປັນແນວທາງການປະເມີນໂຮງຮຽນໂດຍຜ່ານ ‘ ສາຍຕາສິດໆ ’ ຢູ່ໂຮງຮຽນ ‘ ມ ’ ໃນວັນເປີດໂຮງຮຽນປະຈຳປີ, ພໍ່ ແມ່ຜູ້ປົກຄອງຈະຕື່ມແບບສອບຖາມເພື່ອປະເມີນອາຄານສະຖານທີ່ໂຮງຮຽນ, ຜົນການດຳເນີນງານ ແລະ ການຮຽນຮູ້ຂອງນັກຮຽນລວມທັງສະເໜີແນະ ເພື່ອການປັບປຸງດ້ານຕ່າງໆ ດ້ວຍວິທີນີ້, ພວກເຂົາໄດ້ໃຫ້ຂໍ້ຄິດເຫັນທີ່ດີຫຼາຍຢ່າງ, ເຮົາຄວນຈຳໄວ້ອີກວ່າເດັກກໍສາມາດເປັນຜູ້ຕິດຕາມ ແລະ ປະເມີນຜົນທີ່ດີ ໄດ້ເໝືອນກັນເຊິ່ງພວກເຮົາກໍ່ຄນຈຳໄວ້ອີກວ່າ ເດັກກໍ່ສາມາດເປັນຜູ້ຕິດຕາມ ແລະ ປະເມີນຜົນຕົນເອງຂອງການສ້າງສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ທີ່ໃຫ້ໄວ້ໃນຕອນຕົ້ນຂອງຄູມືເຫຼັ້ມນີ້, ນອກຈາກນີ້ຍັງສາມາດປະເມີນຜົນຈາກແຟ້ມສະສົມຜົນງານທີ່ໂຮງຮຽນ ຫຼື ຫ້ອງຮຽນຂອງທ່ານຕາມຮ່າງດັ່ງລຸ່ມນີ້:

| | ການສັງເກດ | ການປະຕິບັດການຮຽນຮູ້ | ແຟ້ມສະສົມຜົນງານ | ການກວດການແບບມີນິດໃສ | ອື່ນໆ |
|---|---|---|---|---|---|
| ປະຈຳວັນ | | | | | |
| ປະຈຳອາທິດ | | | | | |
| ປະຈຳພາກ | | | | | |
| ປະຈຳປີ | | | | | |

ນອກຈາກໃຊ້ແບບຟອມສອບຖາມແລ້ວ, ຍັງມີອີກ 5 ວິທີ ສຳລັບການລວມລວບຂໍ້ມູນເພື່ອສຳຫຼວດເບິ່ງວ່າໂຮງຮຽນພວມກ້າວໄປສູ່ການສ້າງສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ຫຼືບໍ່.

**1. ບັນທຶກປະຈຳວັນ**

ທ່ານ ແລະເພື່ອນຄູຂອງທ່ານ ສາມາດເຮັດປຶດບັນທຶກສັ້ນໆ ໃນແຕ່ລະເດືອນສິ່ງທີ່ທ່ານ ບັນລຸຜົນສຳເລັດໃນການພັດທະນາກສະພາບແວດລ້ອມ ແບບຮຍນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ໃນນີ້ ຈະປະກອບມີ ການບັນທຶກກິດຈະກຳຕ່າງໆ ແລະ ກອງປະຊຸມຢູ່ໃນໂຮງຮຽນ ແລະ ຊຸມຊົນ ຜູ້ຕິດຕາມຫ້ອງາຽນ ຫຼື ນັກຮຽນກໍ່ສາມາດເຮັດແບບບັນທຶກແບບງ່າຍໆ ໄດ້ເຊັ່ນກັບກ່ຽວກັບ ສິ່ງທີ່ເກີດຂຶ້ນ ແລະ ສາມາດທີ່ຈະນຳມາສົນທະນາອະທິປາຍມັນກັບບັນດາຄູ ແລະ ທັງໝົດໂຮງຮຽນ ໃນແຕ່ລະເດືອນ ຜູ້ນຳຊຸມຊົນ ຫຼື ພໍ່ແມ່ຜູ້ປົກຄອງ ກໍ່ສາມາດມາຢ້ຽມຢາມໂຮງຮຽນປົກກະຕິ ແລະ ຈົດບັນທຶກໄດ້ເຊັ່ນກັນ.

**2. ເວົ້າລົມກັບຜູ້ອື່ນໆ**

ກິດຈະກິດນີ້ສ່ວນໃຫ່ຍຈະຖືກປະຕິບັດແບບບໍ່ເປັນທາງການ ໃນຂະນະທີ່ສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ພັດທະນາຂຶ້ນ, ແຕ່ບາງຄັ້ງທ່ານກໍ່ຈຳເປັນຕ້ອງຂຶ້ນແຜນຫາໂອກາດພິເສດ ເມື່ອ

ທ່ານຢາກຊອກຫາຄຳຕອບແກ້ບັນຫາ, ທ່ານສາມາດເຮັດສິ່ງນີ້ໂດຍໃຊ້ຄຳຖາມຕ່າງໆ ແລະ ບັນທຶກຄຳຕອບໄວ້, ໃຫ້ເວົ້າລົມກັບນັກຮຽນ, ຜູ້ປົກຄອງ ແລະ ຜູ້ອື່ນໆ ຈະເປັນແບບບຸກຄົນ ຫຼື ເປັນແບບກຸ່ມກໍ່ໄດ້ , ສິ່ງສຳຄັນສຳລັບທ່ານກໍ່ຕ້ອງຖາມຄຳຖາມທີ່ຈະໄດ້ຂໍ້ມູນຂ່າວສານ ແລະ ໄດ້ຄຳຄິດ ເຫັນ ແທນທີ່ຈະເປັນຄຳຕອບທີ່ຄົນຄິດວ່າທ່ານຢາກໄດ້.

**3. ປະເມີນຄວາມຮູ້ ແລະ ທັກສະ ໂດຍຜ່ານການຂຽນບົດ.**

ຄູຜູ້ອື່ນໆ ແລະ ທ່ານຮູ້ຫຍັງແດ່ ກ່ຽວກັບປະຊາກອນນັກຮຽນທີ່ຫຼາກຫຼາຍ ໃນໂຮງຮຽນ ທ່ານອາດຈະຂໍໃຫ້ຄູຜູ້ອື່ນໆຂຽນບົດກ່ຽວກັບສິ່ງທີ່ເຂົາຮູ້ແລ້ວ ຂຽນບັນດາຄຳຖາມກ່ຽວກັບສິ່ງທີ່ເຂົາຄິດວ່າຍັງຢາກຈະຮູ້, ສິ່ງທີ່ຍັງເປັນກິດຈະກຳທີ່ດີເພື່ອໃຫ້ນັກຮຽນເຮັດອີກດ້ວຍ.

**4. ການສັງເກດການ**

ແມ່ນໃຜ ແລະ ສິ່ງໃດທີ່ຄວນຈະສັງເກດ ? ຜູ້ອຳນວຍການໂຮງຮຽນຈຳເປັນຕ້ອງສັງເກດ ການສອນຂອງຄູ ໃນຫ້ອງຮຽນເປັນພາກສ່ວນໜຶ່ງ ຂອງການພັດທະນາວິຊາຊີບໂດຍທົ່ວໄປ, ( ບັນທຶກວ່າຫົວໜ້າໂຮງຮຽນໄປຢ້ຽມຄູ່ສ່ຳໃດ ແລະ ມີການສົນທະນາຫຍັງແດ່ ) ການສັງເກດເພື່ອນດ້ວຍກັນກໍ່ເປັນປະໂຫຍດໂດຍສະເພາະແລ້ວມັນເປັນສ່ວນໜຶ່ງຂອງການສອນແບບເປັນທີມ, ຄູສອນຈາກສອນໜຶ່ງສາມາດສັງເກດນັກຮຽນຈາກອື່ນອື່ນ, ໃຫ້ບັນທຶກການສັງເກດ ແລະ ປະກອບຄຳເຫັນ ຈາກນັ້ນກໍ່ສົນທະນາ ເປັນກຸ່ມທີ່ປະກອບມີຫົວໜ້າໂຮງຮຽນ ແລະ ຄູ່ຢ່າງເປັນໄລຍະໆ ໃຫ້ເບິ່ງອາຄານ ແລະ ສະພາບແວດລ້ອມຕ່າງໆ ກິດຈະກຳສ້າງສະພາບແວດລ້ອມແບບຮຽນຮ່ວມ ແລະເປັນເພື່ອນມິດ ?ການຮຽນຮູ້ ໄດ້ມີຜົນກະທົບຕໍ່ປະກົດການຂອງໂຮງຮຽນບໍ່ ? ອຸປະສັກ ກີດຂວາງໝົດໄປ ແລ້ວຫຼືບໍ? ຫ້ອງນ້ຳຍິງ, ແລະ ຊາຍແຍກກັນ ຫຼື ບໍ່ ? ເດັກຍິງ ແລະ ເດັກຊາຍທີ່ມີຄວາມສາມາດແຕກຕ່າງທັງໝົດ ໄດ້ເຂົ້າເຖິງບ່ອນຫຼິ້ນຄືກັນບໍ່ ? ໃຫ້ສັງເກດການປ່ຽນແປງໃນເວລາທີ່ເດັກນັກຮຽນສະແດງອອກ ແລະ ປະພຶດຕົນ . ພວກເຂົາໄດ້ຊ່ວຍເຫຼືອເຊິ່ງກັນລະກັນ ຫຼື ບໍ່ ? ເຊິ່ງປະກົດການອັນນີ້ໃນເມື່ອກ່ອນບໍ່ເຄີຍມີ ?

**5. ເອກະສານຕ່າງໆ**

ສຳຫຼວດກວດກາເອກະສານຕ່າງໆຂອງໂຮງຮຽນເຊັ່ນ : ວາລະສານ, ຈົດໝາຍໜັງສືຫາຜູ້ປົກຄອງ, ບົດລາຍງານ, ແຜນການສອນ ແລະ ເອກະສານໂຄງການຫຼັກສູດ, ເອກະສານຕ່າງໆຂອງໂຮງຮຽນທີ່ຂຽນເຖິງພໍ່ແມ່ຜູ້ປົກຄອງ ແລະ ຊຸມຊົນກ່ຽວກັບສະພາບແວດລ້ອມ ທີ່ເປັນການຮຽນຮ່ວມ ທີ່ທ່ານພະຍາຍາມຈະເຮັດ ຫຼື ບໍ່ ? ແຜນການສອນຂອງຄູ ແລະຫຼັກສູດສະທ້ອນເຖິງສະພາບແແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ຫຼື ບໍ່?

# ບົດທີ 7

# ຄວາມສະເໝີພາບຍິງ - ຊາຍໃນການສຶກສາ

## 1. ຄວາມໝາຍ, ຄວາມສຳຄັນຂອງເພດ ແລະ ບົດບາດຍິງ - ຊາຍ

### 1.1. ເພດແມ່ນຫຍັງ ?

ເພດແມ່ນຄວາມແຕກຕ່າງລະຫວ່າງຍິງ - ຊາຍທາງດ້ານຊີວະສາດ, ທຳມະຊາດສ້າງຂຶ້ນ ເປັນມາແຕ່ເກີດຄືກັນໝົດໃນທົ່ວໂລກ

### 1.2. ບົດບາດຍິງ - ຊາຍແມ່ນຫຍັງ?

ແມ່ນການເຄື່ອນໄຫວຂອງຍິງ ແລະ ຊາຍໃນຊີວິດປະຈຳວັນຂອງເຂົາເຈົ້າໃນສະພາບທີ່ແຕກຕ່າງກັນແຕ່ຄຳວ່າ: ບົດບາດບໍ່ໝາຍເຖິງ ມີການເຄື່ອນໄຫວເທົ່ານັ້ນ, ແຕ່ຍັງກວມເອົາໜ້າທີ່ ແລະ ຄວາຮັບຜິດຊອບນຳດ້ວຍ " ບົດບາດ: ສາມາດປ່ຽນແປງໄປຕາມສະພາບເສດຖະກິດ - ສັງຄົມ, ຄ່ານິຍົມ, ຈິດສານຶກ, ຄວາມຕ້ອງການຂອງຄົນເຮົາ" ໃນສະພາບສັງຄົມປັດຈຸບັນແມ່ຍິງ - ຜູ້ຊາຍ: ມີບົດບາດຕ່າງກັນບາງເລັກນ້ອຍ ແລະ ມີຫຼາຍຢ່າງທີ່ຄ້າຍຄືກັນ, ຄວາມສາພັນຂອງຍິງ-ຊາຍສະແດງອອກຢູ່ 3 ບົດບາດດັ່ງນີ້:

### 1.3. ບົດບາດ ແລະ ການເບິ່ງແຍງດູແລຄອບຄົວ ແລະ ຖະນຸບຳລຸງຊັບພະຍາກອນມະນຸດ:

ໝາຍເຖິງການເບິ່ງແຍງລ້ຽງດູລູກນັບແຕ່ມື້ເກີດ ແລະ ດູແລຖະນຸບຳລຸງທຸກຄົນໃນຄອບຄົວ ບົດບາດນີ້ໂດຍທົ່ວໄປແລ້ວແມ່ນສ່ວນຫຼາຍຈະເປັນແມ່ຍິງເປັນຜູ້ຮັບຜິດຊອບຈາກການອົບຮົມສັ່ງສອນພຶດຕິກຳຕົວຈິງທີ່ປະຕິບັດຢູ່ໃນຄອບຄົວແຕ່ລະມື້ແຕ່ລະວັນ ຈຶ່ງເຮັດໃຫ້ບົດບາດນີ້ກາຍເປັນຈິດສຳນຶກ ຄວາມຊຶ້ນເຄີຍຄ່ານິຍົມ, ດົນນານເຂົ້າຈຶ່ງກາຍເປັນຮີດຄອງປະເພນີ ແລະ ສືບທອດເປັນວັດທະນະທຳຕໍ່ໆ ກັນມາເຖິງສັງຄົມປະຈຸບັນ, ດັ່ງທີ່ພວກເຮົາເຫັນໄດ້ເຊັ່ນ:

- ແມ່ຍິງມີບົດບາດໃນການຮັບປະກັນສະບຽງອາຫານ ແລະ ຮັກສາສຸຂະພາບຂອງທຸກຄົນໃນຄອບຄົວ
- ແມ່ຍິງມີບົດບາດເບິ່ງແຍງໃນຄອບຄົວ ເຊັ່ນ: ອາຫານການກິນ ໂດຍສະເພາະການແຕ່ງຢູ່ຄົວກິນ, ການເບິ່ງແຍງຮັກສາອະນາໄມເຮືອນຊານ-ເສື້ອຜ້າ, ການເບິ່ງແຍງຮັກສາສຸຂະພາບ ຍາມເວລາເຈັບເປັນສະນັ້ນ, ແມ່ຍິງທີ່ເຮັດວຽກເຮືອນການຊານເປັນທີ່ບໍ່ແລ້ວຈັກເທື່ອ.
  - ຜູ້ຊາຍກໍ່ມີຄວາມຮັບຜິດຊອບວຽກທຸກຢ່າງຕໍ່ກັບຄອບຄົວ: ເໝືອນກັນແຕ່ວຽກ ຫຼື ບົດບາດທີ່ຜູ້ຊາຍເຮັດສ່ວນຫຼາຍເປັນວຽກທີ່ພົວພັນຢູ່ນອກເຮືອນເຊັ່ນ: ວຽກພົວພັນສັງຄົມ, ຊຸມຊົນ...

### 1.4. ບົດບາດໃນການຜະລິດ

ໝາຍເຖິງວຽກທີ່ແມ່ຍິງ ແລະ ຜູ້ຊາຍເຮັດເພື່ອຫາລ້ຽງຊີບໃນຄອບຄົວ ແລະ ຍັງສາມາດເປັນສິນຄ້າໄດ້ເພື່ອຂາຍ ແລະ ແລກປ່ຽນເງິນເຊັ່ນ: ການປູກຝັງ, ລ້ຽງສັດ, ຈັດສານ, ຫັດຖະກຳ, ຕ່ຳຫູກ ແລະ ອື່ນໆ

- ຢູ່ໃນລາວເຮົາການຜະລິດໃນຂົງເຂດກະສິກຳແມ່ຍິງລວມກວມ 54 % ຂອງກຳລັງແຮງງານຖ້າທຽບໃສ່ຊາດອື່ນໃນທະວີບອາຊີ
- ເວົ້າລວມແລ້ວແມ່ຍິງ ປະກອບເປັນກຳລັງແຮງງານໃນການຜະລິດກະສິກຳ ກວມອັດຕາສ່ວນກ່ວາຜູ້ຊາຍ.

### 1.5. ບົດບາດຕໍ່ຊຸມຊົນແບ່ງອອກເປັນສອງປະເພດ

- ບົດບາດບໍລິຫານ ແລະ ຮັບໃຊ້ແກ່ຊຸມຊົນ: ໝາຍເຖິງການເຄື່ອນໄຫວທີ່ຢູ່ນອກ ຈາກຄອບຄົວຂອງຕົນ, ແມ່ນການເຄື່ອນໄຫວເພື່ອຜົນປະໂຫຍດສ່ວນລວມ ທີ່ແນໃສ່ເພື່ອປັບປຸງຊີວິດການເປັນຢູ່ຂອງຊຸມຊົນໃຫ້ດີຂຶ້ນ

- ບົດບາດການເມືອງ ແລະ ນຳພາຊຸມຊົນ: ສິ່ງເຫຼົ່ານີ້ແມ່ນພົວພັນເຖິງການມີອຳນາດ, ການຕັດສິນບັນຫາ, ການປົກຄອງໃນລະດັບຊຸມຊົນ ເພື່ອປັບປຸງສິດທິ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ຄວາມຍຸດຕິທຳລະຫວ່າງຜູ້ຮັ່ງມີ ແລະ ຜູ້ທຸກຍາກ, ຜູ້ມີອຳນາດ ແລະ ຊຸມຊົນ.

➢ ການແບ່ງງານ: ແມ່ນການມອບໝາຍໜ້າທີ່ ແລະ ຄວາມຮັບຜິດຊອບໃນການເຄື່ອນໄຫວວຽກງານ ຫຼື ກິດຈະກຳ. ເພື່ອຈຸດປະສົງ ຍຸກສູງການດຳລົງຊີວິດໃຫ້ເພດຍິງ ແລະ ຊາຍ ໂດຍໃຫ້ເໝາະສົມຕາມເຄື່ອນໄຂເສດຖະກິດ ແລະ ສອດຄ່ອງກັບສະພາບສັງຄົມ ແລະ ປະເພນີຂອງລາວເຮົາ:

➢ ຂອງວຽກງານທີ່ແມ່ຍິງ ແລະ ຜູ້ຊາຍ:
    - ແມ່ຍິງໂດຍທົ່ວໄປເຮັດຫຼາຍບົດບາດໃນເວລາດຽວກັນເຊັ່ນ: ອູ້ມລູກກິນນົມທັງແຕ່ງກິນ ຫຼື ວຽກອື່ນໆ ເຊິ່ງໃນສັງຄົມລາວເຄີຍເວົ້າວ່າ: “ເຮັດວຽກມະຍົກມະຍ່ອຍ” ໃນຄອບຄົວ
    - ແຕ່ຜູ້ຊາຍເຮັດວຽກໃນບົດບາດອັນດຽວໃນເວລາດຽວເຮັດອັນໃດອັນນັ້ນ“ ໄປເຮັດນາ, ໄປຕຶກປາ ”



ຮູບ : ບົດບາດຍິງ-ຊາຍ

## 2. ການເຊື່ອມບົດບາດຍິງ - ຊາຍເຂົ້າໃນການພັດທະນາການສຶກສາ

### 2.1 ຄວາມສະເໝີພາບດ້ານບົດບາດຍິງ-ຊາຍ ໃນເນື້ອໃນຫຼັກສູດ.

- ຕໍ່ຜູ້ປົກຄອງເດັກ ແລະ ອຳນາດການປົກຄອງ

- ສົ່ງເສີມ ແລະ ຊຸກຍູ້ໃຫ້ເດັກໃນເກນອາຍຸເຂົ້າຮຽນໃຫ້ໄດ້ເຂົ້າຮຽນໝົດທຸກຄົນ
- ສະໜັບສະໜູນ ແລະ ໃຫ້ການຊ່ວຍເຫຼືອເດັກທຸກຄົນຮຽນຈົນຈົບຊັ້ນປະຖົມພາກບັງຄັບ



ຮູບທີ : ສົ່ງເສີມ ແລະ ຊຸກຍູ້ໃຫ້ເດັກໃນເກນອາຍຸເຂົ້າຮຽນ

### 2.2. ຄວາມສະເໝີພາບດ້ານບົດບາດຍິງຊາຍໃນກິດຈະກຳການຮຽນ - ການສອນ

ການເຊື່ອມບົດບາດຍິງ - ຊາຍເຂົ້າໃນການຈັດຕັ້ງການຮຽນ - ການສອນ ແມ່ນການສອດແຊກເຂົ້າໃນບົດສອນ, ອຸປະກອນ/ສື່ການຮຽນການສອນ, ການຈັດວາງຫ້ອງຮຽນ, ການບໍລິຫານຫ້ອງຮຽນ, ຂະບວນການຮຽນ - ການສອນ, ບົດບາດຂອງເດັກຍິງ - ເດັກຊາຍ ໃນ ແລະ ນອກຫ້ອງຮຽນ, ອາຫານໃນໂຮງຮຽນ, ການປະເມີນຜົນ ແລະ ອື່ນໆ. ດັ່ງສະແດງອອກໃນແຜນວາດລຸ່ມນີ້:



ບາງຕົວຢ່າງໃນການສອດແຊກບົດບາດຍິງ-ຊາຍ ເຂົ້າໃນການຈັດຕັ້ງການຮຽນ-ການສອນ:

1. ບົດສອນ: ຄວນຖາມນັກຮຽນທັງຍິງ ແລະ ຊາຍ, ການຈັດກຸ່ມແບບປະສົມຍິງ ແລະ ຊາຍ, ໃຫ້ໂອກາດໃນການຖາມ ແລະ ມີຄວາມເຫັນຂອງນັກຮຽນຍິງ - ຊາຍຢ່າງເທົ່າທຽມໃນການສອນ



ຮູບທີ 22 : ການຈັດກຸ່ມແບບປະສົມຍິງ ແລະ ຊາຍ

2. ການຈັດຫ້ອງຮຽນ: ການຈັດໃຫ້ນັກຮຽນຍິງ-ຊາຍ ນັ່ງສະຫຼັບກັນອາດຈະຊ່ວຍໃຫ້ມີຄວາມຮູ້ສຶກແຕກຕ່າງທາງເພດຂອງເດັກລຶດລົງ. ແທນທີ່ຈະໃຫ້ນັກຮຽນຍິງທັງໝົດນັ່ງດ້ານໜ້າ ສ່ວນນັກຮຽນຊາຍນັ່ງດ້ານຫຼັງ



ຮູບທີ :ການຈັດໃຫ້ນັກຮຽນຍິງ-ຊາຍ ນັ່ງສະຫຼັບກັນ

## 2.3. ຄວາມສະເໝີພາບດ້ານບົດບາດຍິງ-ຊາຍໃນການມີສ່ວນຮ່ວມ.

1. ການບໍລິຫານຫ້ອງຮຽນ: ຄະນະຫ້ອງ ຫຼື ຄະນະໜ່ວຍ ບໍ່ຄວນເລືອກຜູ້ຊາຍ ຫຼື ຜູ້ຍິງພຽງເພດດຽວ. ຖ້າຄະນະຫ້ອງປະກອບດ້ວຍ 2 ຍິງ 1 ຊາຍ ຫຼື 2 ຊາຍ 1 ຍິງ ຈະເປັນການດີ.

2. ບົດບາດຂອງນັກຮຽນຍິງ-ຊາຍ ຢູ່ໃນ ແລະ ນອກຫ້ອງຮຽນ: ຊຸກຍູ້ໃຫ້ນັກຮຽນຍິງ-ຊາຍໄດ້ຮຽນຮ່ວມກັນ ແລະ ຫຼິ້ນດ້ວຍກັນ, ບໍ່ຈໍາແນກວ່າສິ່ງນີ້ບໍ່ເໝາະສົມກັບນັກຮຽນຍິງ ສິ່ງນັ້ນບໍ່ເໝາະສົມກັບນັກຮຽນຊາຍທີ່ຈະເຮັດ ຫຼື ຫຼິ້ນ.
3. ກິດຈະກໍານອກໂມງຮຽນ: ໃຫ້ນັກຮຽນຍິງ ແລະ ຊາຍໄດ້ຮ່ວມເຮັດກິດຈະກໍາຮ່ວມດ້ວຍກັນ ຫຼື ແບ່ງງານກັນເຊັ່ນ: ການເຮັດສວນຄົວ, ການອະນາໄມໂຮງຮຽນ ແລະ ອື່ນໆ .
4. ການປະເມີນຜົນ: ຄູບໍ່ຄວນລໍາອຽງ ໃນການປະເມີນນັກຮຽນ. ການໃຫ້ຄະແນນ ຫຼື ຕີລາຄານັກຮຽນບໍ່ຄວນຄໍານຶງເຖິງຄວາມແຕກຕ່າງລະຫວ່າງເພດຂອງນັກຮຽນ.
5. ອຸປະກອນນັກຮຽນ: ອຸປະກອນການສອນທີ່ຄູຜະລິດຄວນໃຫ້ມີຮູບພາບທັງຍິງ ແລະ ຊາຍ

# ບົດທີ 8
# ການສອນພາສາລາວສຳລັບນັກຮຽນຊົນເຜົ່າ

## 1.ການສອນແບບເນັ້ນການຟັງ-ການເວົ້າ

- **ຈຸດປະສົງ** ໃຫ້ນັກຮຽນສາມາດ

- ບອກເນື້ອໃນຂອງບົດເພງໄດ້ ແລະ ມີຄວາມເບີກບານມ່ວນຊື່ນໃນເວລາຮຽນ
- ສາມາດຮ້ອງເພງນໍາຄູໄດ້

ບົດເພງ: ພົບກັນ

ພົບກັນ ວັນນີ້ສຸກໃຈ
ສະບາຍດີ ຫຼືບອກມາ
ຫາກເຈົ້າ ຫງ່ວມເຫງົາອຸລາ
ຮ້ອງເພງດີກວ່າ ວັນນີ້ສຸກໃຈ (ຊໍ້າ)

- **ເນື້ອໃນ**

- ເພງ: ພົບກັນ

- **ອຸປະກອນ**

- ເຈ້ຍບົດເພງ: ພົບກັນ

ພົບກັນ ວັນນີ້ສຸກໃຈ
ສະບາຍດີ ຫຼືບອກມາ
ຫາກເຈົ້າ ຫງ່ວມເຫງົາອຸລາ
ຮ້ອງເພງດີກວ່າ ວັນນີ້ສຸກໃຈ (ຊໍ້າ)

- **ກິດຈະກຳການຮຽນ-ການສອນ**

- ຄູຂຽນຫົວບົດໃສ່ກະດານ
- ຄູເອົາເຈ້ຍບົດເພງຕິດໃສ່ກະດານ ຫຼື ຂຽນໃສ່ກະດານ
- ຄູສາທິດການຮ້ອງເພງໃຫ້ນັກຮຽນຟັງຈົນເຂົ້າໃຈຈັງຫວະທຳນອງເປັນຢ່າງດີ
- ຄູພານັກຮຽນສ້າງບັນຍາກາດດ້ວຍການຮ້ອງເພງ: ພົບກັນ ພ້ອມກັນໝົດຫ້ອງ
- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ
- ຄູໃຫ້ເດັກແຕ່ລະກຸ່ມພັດປ່ຽນກັນອອກມາຮ້ອງເພງ
- ຄູ ແລະ ເດັກຮ້ອງນຳກັນໝົດຫ້ອງ.

## 2. ການສອນແບບເນັ້ນການເຄື່ອນໄຫວ

- **ຈຸດປະສົງ** ໃຫ້ນັກຮຽນສາມາດ

- ຟັງ, ເວົ້າ ແລະ ເຂົ້າໃຈຄຳສັບໄດ້ຢ່າງຖືກຕ້ອງ
- ປະຕິບັດຕາມຄຳສັ່ງຂອງຄູໄດ້ຢ່າງຖືກຕ້ອງ

- **ເນື້ອໃນ**

- ຄຳສັບທີ່ເປັນຄຳສັ່ງ: ຢືນຂຶ້ນ, ນັ່ງລົງ, ຍ່າງໄປ, ຍ່າງມາ, ຢຸດ…

• **ອຸປະກອນ**

- ຕັ່ງ

• **ກິດຈະກຳການຮຽນ-ການສອນ**

- ຄູທັກທາຍເດັກ ແລະ ສ້າງບັນຍາກາດດ້ວຍການຮ້ອງເພງ: "ໂຮງຮຽນ" ລວມກັນໝົດຫ້ອງ
- ຄູສາທິດການຢືນ, ການນັ່ງ, ການຍ່າງ, ການຢຸດໃຫ້ນັກຮຽນເບິ່ງກ່ອນ
- ຄູເວົ້າຄຳສັບຢືນຂຶ້ນ, ນັ່ງລົງ, ຍ່າງໄປ, ຍ່າງມາ, ຢຸດ.
- ຄູ ແລະ ເດັກພ້ອມກັນປະຕິບັດ (ທັງເວົ້າທັງເຮັດ)
- ຄູໃຫ້ເດັກໝົດທຸກຄົນຢືນຂຶ້ນ ແລ້ວປະຕິບັດຕາມຄຳສັ່ງຂອງຄູປະມານ 2-3 ເທື່ອ
- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ
- ຄູໃຫ້ແຕ່ລະກຸ່ມພັດປ່ຽນກັນປະຕິບັດຄຳສັ່ງຂອງຄູ
- ຄູໃຫ້ເດັກປະຕິບັດຄຳສັ່ງເທື່ອລະ 2 ຄົນ/ ເທື່ອລະ1 ຄົນ/ ໝົດຫ້ອງ.
- ຄູແນະນຳນັກຮຽນບາງບາງກຸ່ມທີ່ເຮັດບໍ່ທັນໄດ້ດີ, ຍ້ອງຍໍຊົມກຸ່ມທີ່ເຮັດໄດ້ດີ

## 3.ການສອນແບບເນັ້ນການສື່ສານ

ການສອນແບບນີ້ຈະເນັ້ນການພົວພັນເຊິ່ງກັນ ແລະ ກັນລະຫວ່າງນັກຮຽນດ້ວຍກັນສິ່ງສຳຄັນໃນນີ້ ຄູຕ້ອງໃຫ່ໂອກາດນັກຮຽນໄດ້ຄົ້ນຄິດ ແລະ ໃຊ້ຄວາມພະຍາຍາມຂອງຕົນ ເພື່ອສື່ຄວາມໝາຍທີ່ຕົນຕ້ອງການໃຫ້ຜູ້ອື່ນເຂົ້າໃຈໂດຍຜ່ານສຽງ ( ການຟັງ, ການເວົ້າ), ຕົວອັກສອນ( ການອ່ານ, ການຂຽນ)ແລ້ວໃຊ້ທ່າທາງ, ການໃຫ້ນັກຮຽນກ້າລອງຜິດລອງຖືກໃນເວລາປະຕິບັດກິດຈະກຳທາງພາສາ. ຄູຕ້ອງແນະນຳຊ່ວຍເຫຼືອ ແລະ ລະດົມກຳລັງໃຈ.

ເພື່ອສ້າງເງື່ອນໄຂໃຫນັກຮຽນໄດ້ສະແດງຕົນໃນການໃຊ້ພາສາຄູຕ້ອງຈັດການຮຽນເປັນກຸ່ມເພື່ອອ່ານນຳກັນ, ຂຽນນຳກັນ, ກຽມຕອບ ແລະ ສະເໜີຄວາມຄິດຄວາມເຫັນນຳກັນກ່ຽວກັບເລື່ອງໃດເລື່ອງໜຶ່ງທີ່ຕົນໄດ້ອ່ານ

• **ຈຸດປະສົງ** ໃຫ້ນັກຮຽນສາມາດ

- ທັກທາຍ ແລະ ແນະນຳຕົນເອງໄດ້

• **ເນື້ອໃນ**

- ທັກທາຍ ແລະ ແນະນຳຕົນເອງ

• **ອຸປະກອນ**

- ຮູບພາບ, ຕຸກກະຕາມື

• **ກິດຈະກຳການຮຽນ-ການສອນ**

1)ຄູໃຊ້ຕຸກກະຕາມືສຸບໃສ່ມືພ້ອມທັງເວົ້າບົດສົນທະນາສະແດງທ່າທາງປະກອບເຊັ່ນ:

- ສະບາຍດີ ສະບາຍດີ
- ຂ້ອຍຊື່ນາງມີ
- ຂ້ອນເປັນຊົນເຜົ່າກຶມມຸ

- ຂ້ອຍຊື່ທ້າວຢ່າງວີ
- ຂ້ອຍເປັນຊົນເຜົ່າມົ້ງ

2) ຄູພານັກຮຽນເວົ້າລົ້ມຄືນໄປລົ້ມຄືນມາຫຼາຍເທື່ອ

3) ຄູໃຫ້ນັກຮຽນແຕ່ລະຄົນໃຊ້ຕຸກກະຕາມືສຸບໃສ່ມື ພ້ອມທັງເວົ້າບົດສົນທະນາສະແດງທ່າ ທາງປະກອບໄປພ້ອມ.

4) ຄູຈັດນັກສຶກສາເປັນຄູ່ແລ້ວໃຫ້ແຕ່ລະຄູ່ສົນທະນາກັນ ດັ່ງຕົວຢ່າງລຸ່ມນີ້

ທ້າວ ຢາງວີ ສະບາຍດີ

ນາງ ມີ ສະບາຍດີ

ທ້າວ ຢາງວີ ຂ້ອຍຊື່ ທ້າວ ຢ່າງວີ ແລະ ເຈົ້າເດຊື່ຫຍັງ

ນາງ ມີ ຂ້ອຍຊື່ ນາງ ມີ ເຈົ້າເປັນຄົນຊົນເຜົ່າໃດ?

ທ້າວ ຢ່າງວີ ຂ້ອຍເປັນຄົນຊົນເຜົ່າມົ້ງ ແລະ ເຈົ້າເດເປັນຄົນຊົນເຜົ່າໃດ?

ນາງ ມີ ຂ້ອຍເປັນຄົນຊົນເຜົ່າກຶມມຸ.

**ໝາຍເຫດ:** ໃນບົດນີ້ນັກສຶກສາຄູໄດ້ຮຽນຮູ້ຄວາມສຳຄັນຂອງການສອນພາສາລາວໃຫ້ເດັກຊົນເຜົ່າດ ຄວກໃນການຮຽນພາສາລາວຂອງເດັກຊົນເຜົ່າ ແລະ ຂັ້ນຕອນການຮຽນພາສາລາວ. ເພື່ອແນໃສ່ໃຫ້ນັກສຶກສາມີຄວາມຮູ້ຄວາມເຂົ້າໃຈຕໍ່ການສອນແບບເນັ້ນການຟັງ-ເວົ້າ, ເນັ້ນການເຄື່ອນໄຫວ ແລະ ເນັ້ນການສື່ສານ.

## • <u>ກິດຈະກຳເພີ່ມເຕີມ</u>

**ກິດຈະກຳ 1: ສົນທະນາຮູບພາບໃຫຍ່**

- ຄູເອົາຮູບພາບ ມ້າ ແລະ ຮູບພາບນົກ ແຜ່ນໃຫຍ່ ຕິດ ຫຼື ຕັ້ງທາງໜ້າກະດານ
- ຄູຖາມນັກຮຽນໝົດຫ້ອງວ່າ: ໃນຮູບນີ້ພວກນ້ອງເຫັນຫຍັງແດ່? (ເຫັນມ້າ, ນົກ, ຕັກແຕນ, ກົກໄມ້, ໃບຫຍ້າ.

• <u>ສົນທະນາຮູບມ້າ</u>

1) ຮູບຮ່າງຂອງໂຕມ້າປະກອບມີຫຍັງແດ່? (ມີເລົາຄີງ, ມີຂາ, ມີຫາງ, ມີຫົວ, ມີຫູ, ມີຕາ, ມີຮູດັງ, ມີຂົນຍາວ...)

2) ມ້າກຳລັງເຮັດຫຍັງ? ມ້າມີຈັກຂາ ນັບພ້ອມກັນເບິ່ງ 1, 2, 3, 4 ເກັ່ງຫຼາຍ.

3) ມ້າເຄື່ອນໄຫວໄປມາດ້ວຍວິທີໃດ? (ຍ່າງ, ແລ່ນ, ດ້ວຍຂາ...)

4) ມ້າກິນຫຍັງເປັນອາຫານ? (ກິນຫຍ້າ, ໃບໄມ້ບາງຊະນິດ, ໝາກໄມ້ບາງຊະນິດ...)

5) ເພິ່ນລ້ຽງມ້າໄວ້ເຮັດຫຍັງ? (ໄວ້ເບິ່ງ, ໄວ້ຂີ່, ໄວ້ກິນຊີ້ນ, ໄວ້ຂາຍ, ໄວ້ລາກແກ່...)

6) ໂຕມ້າບ້ານໃຜມີແດ່? ຍົກມືຂຶ້ນເບິ່ງ...ເກັ່ງຫຼາຍ, ມ້າບ້ານນ້ອງຄືຮູບນີ້ບໍ່? ມັນເປັນແນວໃດ? ເວົ້າໃຫ້ໝູ່ຟັງເບິ່ງ?...ຫຼານລ້ຽງໄວ້ເຮັດຫຍັງ?...

• <u>ສົນທະນາຮູບນົກ</u>

1) ຮູບຮ່າງຂອງໂຕນົກປະກອບມີຫຍັງແດ່? (ມີຫົວ, ມີປີກ, ມີຫາງ, ມີຂົນ, ມີສົບ, ມີຕາ, ມີຂົນຍາວ...)

2) ນົກກຳລັງເຮັດຫຍັງ? ມີຈັກຂາ ນັບພ້ອມກັນເບິ່ງ 1, 2, ເກັ່ງຫຼາຍ.

3) ນົກເຄື່ອນໄຫວໄປມາດ້ວຍວິທີໃດ? (ຍ່າງ, ແລ່ນ, ບິນ...)

4) ນົກອາໄສຢູ່ໃສ? ກິນຫຍັງເປັນອາຫານ? (ປ່າ, ກິນຫຍ້າ, ໃບໄມ້ບາງຊະນິດ, ໝາກໄມ້ບາງຊະນິດ...)

5) ເພິ່ນລ້ຽງນົກໄວ້ເຮັດຫຍັງ? (ໄວ້ເບິ່ງ, ໄວ້ເປັນອາຫານ, ໄວ້ຂາຍ, ໄວ້ຂັນ...)

6) ບ້ານພວກນ້ອງມີນົກຫຍັງແດ່? (ນົກອ້ຽງ, ນົກຈອກ, ນົກເຂົາ, ນົກາງແກ…)

7) ໃຜເຄີຍລ້ຽງນົກແດ່? ລ້ຽງໄວ້ເຮັດຫຍັງ? ລ້ຽງແນວໃດ? ເອົາຫຍັງເກືອມັນແດ່?...

8) ມ້າກັບນົກເຈົ້າຢາກລ້ຽງຫຍັງ? ເປັນຫຍັງຈຶ່ງຢາກລ້ຽງ…? ຄູຖາມຜູ້ຕໍ່ໄປເຈົ້າເດ ຢາກລ້ຽງຫຍັງ? ເປັນຫຍັງຈຶ່ງຢາກລ້ຽງ…?...

**ກິດຈະກໍາ 2: ສົນທະນາຮູບພາບນ້ອຍ (ແມວ)**

- ຄູເອົາຮູບພາບ ມ້າ ແຕ່ລະຮູບຕັ້ງທາງໜ້າກະດານ
- ຄູຖາມນັກຮຽນໝົດຫ້ອງວ່າ: ໃນຮູບນີ້ແມວກໍາລັງເຮັດຫຍັງ? ຄູຖາມ ແລະ ສົນທະນາໄປແຕ່ລະຮູບ.

**ກິດຈະກໍາ 3: ປະຕິບັດຕາມຄູ**

- ຄູເຮັດໃຫ້ເບິ່ງ: ຄູເວົ້າ: ລຸກຂຶ້ນ(ຮ່າງກາຍລຸກຂຶ້ນ), ນັ່ງລົງ(ຮ່າງກາຍນັ່ງລົງ), ນິບ(ຄູນິບ).
- ຄູ-ນັກຮຽນເຮັດນໍາກັນ ຄູເວົ້າ: ລຸກຂຶ້ນ(ຄູ-ນັກຮຽນລຸກຂຶ້ນ), ນັ່ງລົງ(ຄູ-ນັກຮຽນນັ່ງລົງ), ນິບ(ຄູ-ນັກຮຽນນິບ).
- ນັກຮຽນເຮັດ: ຄູເວົ້າ: ລຸກຂຶ້ນ(ນັກຮຽນລຸກຂຶ້ນ), ນັ່ງລົງ(ນັກຮຽນນັ່ງລົງ), ນິບ(ນັກຮຽນນິບ), ຄູເວົ້າສະຫຼັບໄປສະຫຼັບມາໃຫ້ນັກຮຽນປະຕິບັດ.

**ກິດຈະກໍາ 4: ເລືອກຮູບ ແລະ ແອບເວົ້າເປັນປະໂຫຍກ**

- **<u>ເລືອກຮູບ</u>**

- ຄູເອົາຮູບຫຼາຍໆແຜ່ນວາງໄວ້ທາງໜ້າກະດານ ຫຼື ນອກສະຖານທີ່ ຕາມຄວາມເໝາະສົມເຊັ່ນ: ຮູບມ້າ, ຮູບນົກ, ຮູບແມວ, ຮູບໝາກມີ້, ຮູບໝາກມ່ວງ, ຮູບມົດ, ຮູບແມງມຸມ, ຮູບໝາກໂມ, ຮູບແມ່ນໍ້າ, ຮູບນາ…
- ຄູຈັດນັກຮຽນນັ່ງ ຫຼື ຢືນ ເປັນວົງວົນໃນຫ້ອງ ຫຼື ນອກສະຖານທີ່ ຕາມຄວາມເໝາະສົມ
- ຄູເອີ້ນນັກຮຽນຄົນທີ 1 ເຕັ້ນສອງຂາອອກມາເລືອກເອົາຮູບ ແລ້ວຍ່າງກັບໄປບ່ອນ
- ຄູເອີ້ນນັກຮຽນຄົນທີ 2 ເຕັ້ນຂາດຽວອອກມາເລືອກເອົາຮູບ ແລ້ວຍ່າງກັບໄປບ່ອນ
- ຄູເອີ້ນນັກຮຽນຄົນທີ 3 ອ້າປາກຍ່າງອອກມາເລືອກເອົາຮູບ ແລ້ວຍ່າງກັບໄປບ່ອນ
- ຄູເອີ້ນນັກຮຽນຄົນທີ 4 ເອົາມືຄໍ້າແອວຍ່າງອອກມາເລືອກເອົາຮູບ ແລ້ວຍ່າງກັບໄປບ່ອນ ແລະ ຜູ້ຕໍ່ໆໄປຈົນໝົດທຸກຄົນ.

- **<u>ແອບເວົ້າເປັນປະໂຫຍກ</u>**

- ຄູເລືອກຮູບມ້າແລ້ວເວົ້າວ່າ: ຢູ່ເຮືອນຂ້ອຍລ້ຽງມ້າ ຖາມ ທ້າວ ກ ຕໍ່ວ່າ: ເຮືອນເຈົ້າລ້ຽງຫຍັງ? ທ້າວ ກ ຕອບວ່າ ຢູ່ເຮືອນຂ້ອຍລ້ຽງແມວ, ທ້າວ ກ ຖາມຜູ້ຕໍ່ໄປວ່າ ຢູ່ເຮືອນເຈົ້າລ້ຽງຫຍັງ? ແລະ ຖາມຕໍ່ໆກັນໄປ ຫຼື ຖາມສະຫຼັບກັນໄປກໍໄດ້.
- ເມື່ອນັກຮຽນໄດ້ເວົ້າໝົດທຸກຄົນ ຄູເກັບຮູບນໍານັກຮຽນຄືນ ແລະ ບອກນັກຮຽນໄປປະຈໍາບ່ອນ.

**ກິດຈະກໍາ 5: ສົນທະນາບັດຮູບ ແລະ ບັດອັກສອນ**

-ຄູຍົກບັດຮູບ **ມ້າ, ແມວ…** ຂຶ້ນໃຫ້ນັກຮຽນເບິ່ງ ແລະ ຖາມນັກຮຽນວ່າ: ນີ້ແມ່ນຮູບຫຍັງ, ເຄີຍເຫັນບໍ່, ບ້ານນ້ອງມີບໍ່, ເພິ່ນລ້ຽງໄວ້ເຮັດຫຍັງ ຄໍາວ່າ: ມ້າ ອອກສຽງພະຍັນຊະນະຫຍັງ(ມ)…ແລ້ວໄປສຽບໃສ່ຖົງບັດຄໍາ

-ຄູຍົກບັດຮູບ **ນົກ…** ຂຶ້ນໃຫ້ນັກຮຽນເບິ່ງ ແລະ ຖາມນັກຮຽນວ່າ: ນີ້ແມ່ນຮູບຫຍັງ?, ເຄີຍເຫັນບໍ່?, ອາໄສຢູ່ໃສ?, ກິນຫຍັງເປັນອາຫານ?, ເຮືອນນ້ອງມີບໍ່?, ເຄີຍລ້ຽງບໍ່?, ລ້ຽງໄວ້ເຮັດຫຍັງ? ລ້ຽງແນວໃດ? ຄໍາວ່າ: ນົກ ອອກສຽງພະຍັນຊະນະຫຍັງ…ແລ້ວໄປສຽບໃສ່ຖົງບັດຄໍາ

-ຈາກນັ້ນຄູເອົາບັດອັກສອນຂຶ້ນມາແລ້ວຖາມນັກຮຽນວ່າ ນີ້ແມ່ນພະຍັນຊະນະຫຍັງ..ໂຕ **ມ** ໂຕ **ນ** ພານັກຮຽນເວົ້າແຮງໆຫຼາຍເທື່ອ ແລ້ວໄປສຽບໃສ່ກ້ອງຮູບ.

-ຈາກນັ້ນຄູຊີ້ໃສ່ຮູບ ແລະ ໃສ່ໂຕ **ມ ນ** ພານັກຮຽນອ່ານຢູ່ຖົງບັດຄຳ.

**ກິດຈະກຳ 6: ເລືອກບັດອັກສອນ**

- ຄູເອົາບັດອັກສອນວາງໄວ້ໂຕະຄູ ໂດຍປະສົມປະສານກັບພະຍັນຊະນະ ແລະ ສະຫຼະ ຫຼາຍໂຕ
- ໃຫ້ນັກຮຽນອອກໄປເລືອກ ພະຍັນຊະນະ ໂຕ **ມ ນ** ໄປຕິດໃສ່ກ້ອງຮູບໃນຖົງບັດຄຳແຕ່ລະຮູບ
- ນັກຮຽນຄົນໃດເລືອກບໍ່ຖືກຄູ ແລະ ໝູ່ໃນຫ້ອງຊ່ວຍ
- ນັກຮຽນຄົນໃດເລືອກຖືກ ຄູຕົບມືຊົມເຊີຍ

**ກິດຈະກຳ 7: ການສ້າງແຜນວາດຊ່ວຍຈື່**

- ຜ່ານໄປເຮົາຮຽນກ່ຽວກັບໂຕອັກສອນຫຍັງ/ນັກຮຽນບອກ
- ຄູຂຽນ ໂຕ ມ ແລະ ນ ເປັນຫົວຂໍ້ໃຫຍ່ ໃສ່ກະດານ
- ຄູຖາມນັກຮຽນວ່າ: ມີວັດຖຸສິ່ງຂອງ, ພືດ, ສັດ ຊະນິດໃດທີ່ມີຊື່ອອກສຽງພະຍັນຊະນະ ມ
- ນັກຮຽນເວົ້າ, ຄູຂຽນໃສ່ແຜນມະໂນພາບ
- ຫຼັງຈາກໄດ້ຕາມຄວາມເໝາະສົມແລ້ວຄູກໍພານັກຮຽນອ່ານຄືນ







## II. ຂັ້ນຕອນການສອນຂຽນ

**ກິດຈະກຳ 1: ສາທິດການຂຽນອັກສອນ ມ ນ**

- ຄູສາທິດການຂຽນພະຍັນຊະນະ ມ ນ ໃສ່ກະດານໃຫ້ນັກຮຽນສັງເກດ ແລະ ອະທິບາຍວ່າ: ການຂຽນພະຍັນຊະນະຕ້ອງຂຽນແຕ່ຫົວຫາຫາງ.
- ຄູແນະນຳນັກຮຽນກ່າຍຫົວບົດໃສ່ປຶ້ມ
- ຄູຕິດຕາມການຂຽນຂອງນັກຮຽນ ແລະ ແນະນຳຊ່ວຍເຫຼືອນັກຮຽນຜູ້ຂຽນບໍ່ທັນໄດ້ດີໄປພ້ອມ

**ກິດຈະກຳ 2: ຝຶກນັກຮຽນຂຽນຢູ່ກະດານ**

- ຄູໃຫ້ນັກຮຽນອອກມາຂຽນຢູ່ກະດານເທື່ອລະຄົນ
- ຄູຕິດຕາມ ແລະ ຊ່ວຍເຫຼືອນັກຮຽນບາງຄົນ
- ຄູຊົມເຊີຍນັກຮຽນ

**ກິດຈະກຳ 3: ຝຶກເອົານິ້ວມືຂຽນພະຍັນຊະນະເທິງອາກາດ(ມື,ຫົວ,ກົ້ນ)**

- ຄູສາທິດການຂຽນອັກສອນເທິງອາກາດດ້ວຍມື,ຫົວ,ກົ້ນໃຫ້ນັກຮຽນເບິ່ງ
- ຄູ ແລະ ນັກຮຽນພ້ອມກັນຝຶກຂຽນ
- ຄູໃຫ້ນັກຮຽນຂຽນເອງໂດຍຄູອອກຄຳສັ່ງ
- ຄູພານັກຮຽນຕົບມືຊົມເຊີຍ

**ກິດຈະກຳ 4: ກໍ່ຕົວອັກສອນດ້ວຍກ້ອນຫີນ**

-ຄູຢາຍກ້ອນຫີນ ຫຼື ແກ່ນໝາກໄມ້ໃຫ້ນັກຮຽນແຕ່ລະໂຕະ

-ຄູອອກຄຳສັ່ງກໍ່ຕົວ ມ ນັກຮຽນແຂ່ງຂັນກັນກໍ່ ຖ້າແລ້ວໃຫ້ຍົກມືຂຶ້ນ ແລະ ສັ່ງກໍ່ໂຕອັກສອນຕໍ່ໄປ

-ຄູຕິດຕາມ ແລະ ຊົມເຊີຍຜົນງານນັກຮຽນທີ່ກໍ່ໄວ ແລະ ງາມ

**ກິດຈະກຳ 5: ການຂຽນເນື້ອໃນບົດ**

- ຄູຂຽນເນື້ອໃນບົດໃສ່ກະດານ ໂດຍສືບຕໍ່ຈາກຫົວບົດ

| | |
|---|---|
| ມ້າ | ນາ |
| ມ້າດີ | ນາປີ |
| ນາມີປາ | ມ້າຕາດີ |

- ຄູແນະນຳນັກຮຽນກ່າຍໃສ່ປຶ້ມ
- ຄູຕິດຕາມການຂຽນຂອງນັກຮຽນ ແລະ ຊ່ວຍເລືອນັກຮຽນບາງຄົນ

**ກິດຈະກຳ6: ຫັດຂຽນງາມ**

-ຄູແຕ້ມເສັ້ນ ແລະ ຂຽນບົດຫັດຂຽນງາມໃສ່ກະດານ

-ຄູອະທິບາຍວິທີການຂຽນງາມໃຫ້ນັກຮຽນເຂົ້າໃຈ

-ຄູແນະນຳນັກຮຽນລົງມືຂຽນຫັດຂຽນງາມ

-ຄູຕິດຕາມການຂຽນຂອງນັກຮຽນ

-ຄູຊ່ວຍເຫຼືອນັກຮຽນບາງຄົນ

-ຄູໃຫ້ນັກຮຽນເກັບປຶ້ມມາກວດ ແລະ ໃຫ້ຄະແນນ

ມ ມ້າ ນ ນາ

**ໝາຍເຫດ:** ກິດຈະກຳນີ້ອາດນຳພານັກຮຽນຂຽນລັງຈາກໄດ້ຝຶກທັກສະການອ່ານແລ້ວ ເປັນການຂຽນກິດຈະກຳສຸດທ້າຍໃນບົດນີ້

**III. ຂັ້ນຕອນການສອນອ່ານ**

**ກິດຈະກຳ1: ການອ່ານເນື້ອໃນບົດ**

- ຄູອ່ານເປັນຕົວຢ່າງໃຫ້ນັກຮຽນຟັງ1-2ເທື່ອ
- ຄູໃຫ້ນັກຮຽນອ່ານຕາມຫຼັງຄູ
- ຄູນັກຮຽນອ່ານພ້ອມກັນ1-2ເທື່ອ
- ຄູຊີ້ໃຫ້ນັກຮຽນອ່ານພ້ອມກັນໝົດຫ້ອງດ້ວຍວິທີການຕ່າງໆ
- ຄູໃຫ້ນັກຮຽນແຕ່ລະຄົນພັດປ່ຽນກັນອອກມາອ່ານຕາມລຳດັບ
- ຄູຕິດຕາມການອ່ານຂອງນັກຮຽນ

## ຄຳຖາມ

1. ຂັ້ນຕອນການສອນແບບເນັ້ນຟັງ-ເວົ້າມີຄືແນວໃດ?
2. ຂັ້ນຕອນການສອນແບບເນັ້ນການເຄື່ອນໄຫວມີຄືແນວໃດ?
3. ຂັ້ນຕອນການສອນແບບເນັ້ນການສື່ສານມີຄືແນວໃດ?

# ບົດທີ 9
# ການສະໜອງການສຶກສາຮຽນຮ່ວມຕາມໂຄງສ້າງຊີດ
# ( SEAT Framework )




## 1. ການກຽມຄວາມພ້ອມໃຫ້ແກ່ຜູ້ຮຽນ.

### 1.1. ການກຽມຄວາມພ້ອມໃຫ້ແກ່ຜູ້ຮຽນ.

ກ່ອນຜູ້ຮຽນທີ່ເປັນຄົນພິການຈະເຂົ້າຮຽນຮ່ວມ ຜູ້ບໍລິຫານ, ຄູສອນ ແລະ ຜູ້ປົກຄອງຄວນກຽມຄວາມພ້ອມຂັ້ນພື້ນຖານໃຫ້ແກ່ຜູ້ຮຽນພິການເປັນຕົ້ນແມ່ນ ການອ່ານ, ການຂຽນອັກສອນຟູ, ພາສາມື, ອາລົມ, ສັງຄົມ ການຊ່ວຍເຫຼືອຂອງຕົນເອງ.

**1.2.ການກຽມຄວາມພ້ອມໃຫ້ແກ່ຜູ້ຮຽນທີ່ເປັນພິການ**

ຜູ້ບໍລິຫານ, ຄູສອນ ແລະ ຜູ້ປົກຄອງ ຄວນກຽມຄວາມພ້ອມໃຫ້ແກ່ຜູ້ຮຽນທີ່ບໍ່ພິການ ໂດຍອະທິບາຍໃຫ້ຜູ່ທີ່ບໍ່ເປັນພິການຮູ້ ແລະ ເຂົ້າໃຈຄວາມຈຳເປັນ, ຄວາມສາມາດພິເສດ, ຄວາມແຕກຕ່າງ ແລະ ຄວາມຕ້ອງການຂອງຜູ້ຮຽນທີ່ເປັນພິການ ເພື່ອແນ່ໃສເພື່ອບໍ່ໃຫ້ຈຳແນກ ແລະ ຄວນຈັດກິດຈະກຳການຮຽນ-ການສອນໃຫ້ທຸກຄົນມີສ່ວນຮ່ວມໃຫ້ຫຼາຍຂຶ້ນ ເພື່ອໃຫ້ເກີດການຮຽນຮູ້ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ນອກຈາກນັ້ນໂຮງຮຽນຄວນສອນທັກສະການຊ່ວຍເຫຼືອຂັ້ນພື້ນຖານ ໃຫ້ຜູ່ຮຽນບໍ່ການເພື່ອຊ່ວຍເຫຼືອຜູ້ຮຽນທີ່ເປັນພິການ.

## 2. ສະພາບແວດລ້ອມ

ສະພາບແວດລ້ອມຄວນພິຈາລະນາ 2 ຢ່າງຄື : ສະພາບແວດລ້ອມທາງກາຍຍະພາບ ແລະ ບຸກຄົນທີ່ກ່ຽວຂ້ອງ. ສະຖານະການສຶກສາຄວນຈັດສະພາບແວດລ້ອມ ແລະ ສິ່ງເອື້ອອຳນວຍແກ່ຜູ້ຮຽນທີ່ເປັນພິການ ເຊັ່ນ : ຂະໜາດຂອງປະຕູ, ທາງເດີນ ແລະ ຫ້ອງນໍ້າ ນອກຈາກນີ້ຄວນມີປະຊຸມຊີ້ແຈງ ເພື່ອກຳນົດນະໂຍບາຍ ແລະ ວາງແຜນປະຕິບັດງານໃຫ້ການສະໜອງການສຶກສາຮຽນຮ່ວມ ລວມທັງການພົວພັນທີ່ໃກຊິດກັບບຸກຄົນທີ່ກ່ຽວຂ້ອງ ແລະ ມີການປະສານງານກັນຢ່າງຕໍ່ເນື່ອງ.

**2.1. ການອອກແບບສະພາບແວດລ້ອມທາງກາຍຍະພາບ:**

ການອອກແບບສະພາບແວດລ້ອມທາງກາຍຍະພາບຄວນຄຳນຶງເຖິງ 7 ຫຼັກການ ອອກແບບທົ່ວໄປຂອງສາກົນດັ່ງນີ້:

### ✦ ຫຼັກການທີ 1 : ມີຄວາມຍຸຕິທຳໃນການນຳໃຊ້

ການອອກແບບສະພາບແວດລ້ອມທີ່ເປັນປະໂຫຍດ ສຳລັບທຸກຄົນທີ່ມີຄວາມສາມາດທີ່ແຕກຕ່າງກັນ ( ລວມທັງຄົນພິການ ແລະ ຄົນປົກກະຕິ ) , ມີໂອກາດແບບເທົ່າທຽມກັນສຳລັບເດັກທຸກຄົນໃນການເຂົ້າຮຽນ ແລະ ເຂົ້າເຖິງສິ່ງອຳນວຍຄວາມສະດວກຂອງໂຮງຮຽນສາມາດປະຕິບັດວິທີແບບງ່າຍດາຍ ແລະ ລາຄາບໍ່ແພງ.

**ຄຳແນະນຳ :**

ກ. ສະໜອງວິທີເຮັດແບບດຽວກັນຜູ້ໃຊ້ທຸກຄົນ.

ຂ. ຫຼີກເວັ້ນການຈຳແນກ ແລະ ການວິຈານຈາກຜູ້ນຳໃຊ້.

ຄ. ຕອບສະໜອງຄວາມຕ້ອງການສ່ວນບຸກຄົນ, ມີຄວາມໝັ້ນຄົງ ແລະ ມີຄວາມປອດໄພ ຄວນມີໄວເທົ່າທຽມກັນສຳລັບຜູ້ນຳໃຊ້ທຸກຄົນ.

ງ. ການອອກແບບຕອບສະໜອງຄວາມຕ້ອງການຂອງຜູ້ນຳໃຊ້ທຸກຄົນ.

### ✦ ຫຼັກການທີ 2 ມີຄວາມຢືດຢຸ່ນໃນການນຳໃຊ້

ການອອກແບບສິ່ງອຳນວຍຄວາມສະດວກອັນກ້ວາງຂວາງຕາມຄວາມສາມາດຂອງຜູ້ນຳໃຊ້.

**ຄຳແນະນຳ:**

ກ. ສະໜອງທາງເລືອກ ແລະ ແບບວິທີການນຳໃຊ້ຫຼາກຫຼາຍ

ຂ. ປະກອບຮາວຈັບເບື້ອງຂວາ ຫຼື ຊ້າຍ ເພື່ອເຂົ້າເຖິງອາຄານ ແລະ ສ້າງໃຫ້ນຳໃຊ້ໄດ້.

ຄ. ສ້າງຄວາມສະດວກດ້ານຄວາມແທດເໝາະ ແລະ ຄວາມຊັດເຈນຂອງຜູ້ນຳໃຊ້

ງ. ໃຫ້ມີການປັບປ່ຽນຕາມຈຳເປັນຂອງຜູ້ນຳໃຊ້.

✦ **ຫຼັກການທີ 3 :** ສາມາດນຳໃຊ້ໄດ້ງ່າຍ ແລະ ເຂົ້າໃຈງ່າຍ ບໍ່ມີການຈຳແນກຄວາມຮູ້, ທັກສະທາງດ້ານພາສາຂອງຜູ້ນຳໃຊ້ ຫຼື ການເຈາະຈິງໃສ່ລະດັບໃນປະຈຸບັນ.

**ຄຳແນະນຳ**

ກ. ລຶບລ້າງການກໍ່ສ້າງທີ່ຊໍ້າຊ້ອນທີ່ບໍ່ຈຳເປັນ

ຂ. ເຫັນພ້ອມກັບຄວາມຄາດຫັວງ ແລະ ຄວາມເຂົ້າໃຈຂອງຜູ້ນຳໃຊ້

ຄ. ສະໜອງຄວາມທັກສະ ກ່ຽວກັບການອ່ານ ແລະ ພາສາໃຫ້ຫຼາກຫຼາຍ

ງ. ຈັດສັນຂໍ້ມູນໃຫ້ເປັນລະບົບ , ສອງຄ່ອງ ແລະ ໃຫ້ມີຄວາມສຳຄັນ

ນຳໃຊ້ການອອກແບບ ແບບພື້ນຖານ ແລະ ແບບບູຮານ ທີ່ໄດ້ປັບໄປຕາມຄວາມຕ້ອງການເຂົ້າເຖິງໄດ້ ແລະ ສ້າງຄວາມລຶ້ງເຄີຍ ໃຫ້ແກ່ເດັກໃນຊຸມຊົນ ເຖິງແມ່ນວ່າເດັກຈຳນວນໜຶ່ງ ຈະມີປະສົບການໜ້ອຍກ່ຽວກັບການຮຽນ ຫຼື ບໍ່ມີປະສົບການກ່ຽວກັບການຮຽນກໍ່ຕາມ.

✦ **ຫຼັກການທີ 4** ຂໍ້ມູນທີ່ສະແດງສາມາດເຫັນໄດ້ຢ່າງຈະແຈ້ງ

ການອອກແບບໃນການສື່ສານດ້ວຍຂໍ້ມູນທີ່ຈຳເປັນ ຢ່າງມີປະສິດທິຜົນໃຫ້ແກ່ຜູ້ນຳໃຊ້ ໂດຍບໍ່ມີການຈຳແນກເງື່ອນໄຂອ້ອມຮອບຕົວ ຫຼື ຄວາມສາມາດຂອງຜູ້ນຳໃຊ້, ສິ່ງສຳຄັນ, ປື້ມແບບຮຽນທີ່ພິມເປັນຕົວອັກສອນຟູຕ້ອງນຳໃຊ້ເຈ້ຍສະເພາະ ເດັກຜູ້ທີ່ມີສາຍຕາພິການ ( ສາຍຕາມົວ ຫຼື ສາຍຕາຟາງ ) ຕ້ອງນຳໃຊ້ມືກພິມທີ່ມີຄຸນນະພາບ, ຕົວໜັງສືທີ່ພິມຕ້ອງໃຊ້ຂະໜາດຢ່າງໜ້ອຍ 14 ຂຶ້ນໄປ.

**ຄຳແນະນຳ**

ກ. ນຳໃຊ້ຫຼາຍຮູບແບບແຕກຕ່າງກັນເຊັ່ນ : ຮູບພາບ, ຄຳເວົ້າ ຫຼື ສັນຍາລັກເພື່ອໃຊ້ແທນຂໍ້ມູນທີ່ສຳຄັນ

ຂ. ສ້າງຂໍ້ມູນທີ່ຈຳເປັນທີ່ສາມາດອ່ານໄດ້, ໝາຍຄວາມວ່າເຮັດໃຫ້ຜູ້ນຳໃຊ້ສາມາດເຂົ້າໃຈ ນັບທັງຄຳເວົ້າ ແລະ ການສຳຜັດ.

ຄ. ຈຳແນກອົງປະກອບຕ່າງໆ ດ້ວຍວິທີທີ່ສາມາດອະທິບາຍໄດ້, ໝາຍຄວາມວ່າເຮັດໃຫ້ງ່າຍໃນການສຶກສາ ແລະ ການແນະນຳ.

ງ. ສະໜອງວິທີການທີ່ສອດຄ່ອງ ແລະ ເຄື່ອງມືຫຼາກຫຼາຍ ເພື່ອຊ່ວຍໃຫ້ຜູ້ມີຄວາມສາມາດຈຳກັດທາງການສຳຜັດ.

✦ **ຫຼັກການທີ 5** : ຍອມຮັບຂໍ້ຜິດພາດ.

ການອອກແບບເພື່ອຫຼຸດຜ່ອນຄວາມສ່ຽງໃຫ້ມີໜ້ອຍທີ່ສຸດ ແລະ ຫຼີກເວັ້ນຈາກຜົນທີ່ໄດ້ຮັບທີ່ບໍ່ເປັນໜ້າທີ່ເພິ່ງພໍໃຈຈາກພາກປະຕິບັດຕົວຈິງທີ່ຈະເກີດຂຶ້ນໂດຍບັງເອີນ ຫຼື ບໍ່ໄດ້ຕັ້ງໃຈ

**ຄຳແນະນຳ**

ກ. ຈັດປະເພດອົງປະກອບຕ່າງໆເພື່ອຫຼີກລ້ຽງຄວາມສ່ຽງ ແລະ ຂໍ້ ຜິດພາດ : ອົງປະກອບທີ່ໃຊ້ຫຼາຍກ່ວາໝູ່, ອົງປະກອບທີ່ສາມາດເຂົ້າເຖິງຫຼາຍກ່ວາໝູ່, ອົງປະກອບທີ່ມີຄວາມສ່ຽງທີ່ຕ້ອງລຶບລ້າງ, ຕ້ອງແຍກອອກ ຫຼື ຕ້ອງຮັກສາ.

ຂ. ໃຫ້ຄຳເຕືອນກ່ຽວກັບຄວາມສ່ຽງ ແລະ ຄວາມຜິດພາດ.

ຄ. ສະໜອງສັນຍາລັກເພື່ອຄວາມປອດໄພ.

ງ. ກຳຈັດພາກປະຕິບັດທີ່ຂາດສະຕິໃນໜ້າທີ່ວຽກງານທີ່ຮຽກຮ້ອງຕໍ່ຄວາມເອົາໃຈໃສ່, ດອກໄມ້ ຫຼື ຕົ້ນໄມ້ ຢູ່ໃນບໍລິເວນໂຮງຮຽນຂອງພວກຂ້ອຍ ຖືກອ້ອມຮອບດ້ວຍກ້ອນຫີນ ແລະ ດິນກາໂລ, ເວລາພວກຂ້ອຍເລີ່ມປະຕິບັດການຮຽນຮ່ວມ ແລະ ສະພາບແວດລ້ອມທີ່ເປັນມິດຢູ່ໃນໂຮງຮຽນ

ຂອງພວກຂ້ອຍ, ພວກເຮົາເຫັນວ່າກ້ອນຫີນເຫຼົ່ານີ້ອາດເປັນອັນຕະ
ລາຍແກ່ເດັກຖ້າຫາກເດັກລົ້ມລົງໃສ່ກ້ອນຫີນ ຫຼື ແລ່ນຂ້າມກ້ອນຫີນ
ເຫຼົ່ານັ້ນໃນເວລາເຂົາເຈົ້າຫຼິ້ນນຳກັນ ຫຼື ເວລາຫຼິ້ນກິລາ. ດັ່ງນັ້ນ, ພວກຂ້ອຍ
ຈຶ່ງໄດ້ຍ້າຍກ້ອນຫີນອອກໄປ ແລະ ພວກເຮົາກໍ່ບໍ່ໄດ້ເປັນຫ່ວງດອກໄມ້ອີກ,
ແຕ່ພວກເຮົາມີຄວາມເປັນຫ່ວງກ່ຽວກັບຄວາມປອດໄພຂອງເດັກຫຼາຍກ່ວາ.

## ✦ ຫຼັກການທີ 6: ໃຊ້ກຳລັງແຮງຂອງຮ່າງກາຍໃຫ້ໜ້ອຍທີ່ສຸດ.

ການອອກແບບສາມາດນຳໃຊ້ຢ່າງມີປະສິດທິພາບ, ສະດວກສະບາຍ ແລະ ມີຄວາມອິດເມື່ອຍໜ້ອຍທີ່ສຸດ.

**ຄຳແນະນຳ**

ກ. ເຮັດໃຫ້ຜູ້ນຳໃຊ້ຮັກສາຕົວໃນທ່າປົກກະຕິ
ຂ. ໃຊ້ກຳລັງແຮງຂອງຮ່າງກາຍທີ່ເໝາະສົມກັບຕົວຈິງ
ຄ. ເຮັດໃຫ້ການປະຕິບັດທີ່ຊ້ຳໄປຊ້ຳມາມີໜ້ອຍທີ່ສຸດ
ງ. ພະຍາຍາມເຮັດໃຫ້ການໃຊ້ກຳລັງແຮງຂອງຮ່າງກາຍໃຫ້ໜ້ອຍທີ່ສຸດ

ບັນດາຈຸດສຳຄັນທີ່ຄວນເອົາໃຈໃສ່ໃນການສ້າງສະພາບແວດລ້ອມຂອງຫ້ອງຮຽນໃຫ້ສະດວກແກ່ທ່ານເຂົ້າຮຽນ

- ຄວນຕິດຕັ້ງປະຕູຫ້ອງຮຽນທີ່ເປີດ-ປິດໄດ້ງ່າຍ ແລະ ບໍ່ຕ້ອງໃຊ້ກຳລັງແຮງຫຼາຍ
ແລະ ຕ້ອງມີການດັດແປງ ຫຼື ປ່ຽນປະຕູເກົ່າຖ້າມີຄວາມຈຳເປັນ.
- ຄວນຕິດຕັ້ງປະຕູທີ່ບໍ່ມີຂອບຕີນປະຕູ ເພື່ອໃຫ້ເດັກ
ພິການສາມາດນຳໃຊ້ລໍ່ເລື່ອນ, ສາມາດເຂົ້າ-ອອກໄດ້ຢ່າງສະດວກ
ສະບາຍ.
- ປະຕູຄວນມີຂະໜາດທີ່ກ້ວາງຂວາງໃຫ້ເໝາະສົມໃຫ້ຜູ້ນັ່ງລໍ້ເລື່ອນສາມາດເຂົ້າອອກໄດ້ຢ່າງສະດວກ.
- ຄວນສ້າງທາງເນີນສຳລັບຜູ້ໃຊ້ລໍ້ເລື່ອນບໍ່ຄວນໃຫ້ຊັນຫຼາຍເກີນໄປ, ຄວນຢູ່ໃນຂະໜາດ 1,12 ແມັດ( ລວງສູງ 1 ແມັດຕໍ່ລວງຍາວ 12 ແມັດ )
- ຄວນຕິດຕັ້ງເຄື່ອງໝາຍແຄມທາງຍ່າງ,ເພື່ອເປັນສັນຍາລັກໃນການແນະນຳໄປຫາປະຕູ ສຳລັບຄູພິການໃນເວລາທີ່ເຂົາເຈົ້າຍ່າງໄປໄຂປະຕູ ເຂົາເຈົ້າອາດຈະຕຳກັບເດັກຄົນອື່ນ, ໂດຍສະເພາະແມ່ນເດັກທີ່ມີຄວາມເປັນພິການທາງດ້ານການເບິ່ງເຫັນ.
- ບ່ອນເປີດ - ປິດໄຟຄວນຕັ້ງຢູ່ໃນລະດັບທີ່ມີຄວາມແຕກຕ່າງກັນ ເພື່ອໃຫ້ເດັກທຸກຄົນສາມາດເປີດ - ປິດໄຟໄດ້.
- ຮູປັກສຽບໄຟຟ້າຄວນຕິດຕັ້ງໃສ່ຈຸດດຽວກັນ ແລະ ມີທຸກຫ້ອງຮຽນທີ່ໃກ້ກັບບ່ອນເປີດໄຟໃຫ້ຕິດຕັ້ງໃນລະດັບສູງຂອງໂຕະ ເພື່ອໃຫ້ເດັກທຸກຄົນສາມາດເຂົ້າເຖິງໄດ້, ໂດຍສະເພາະເດັກທີ່ມີຄວາມເປັນພິການທາງດ້ານການເບິ່ງເຫັນ ແລະ ຄວາມເປັນພິການທາງດ້ານການເຄື່ອນໄຫວ, ຄວນມີຝາປິດຮູປັກສຽບໄປເພື່ອປ້ອງກັນບໍ່ໃຫ້ເດັກເອົານິ້ວມືແຍ່ເຂົ້າໃສ່ ແລະ ຈະຖືກໄຟຊ໊ອດ.
- ຄວນນຳໃຊ້ສີທີ່ແຕກຕ່າງກັນ ເພື່ອຈັດການຮຽນແບບເພື່ອນມິດ ແລະ ເຂົ້າເຖິງສະພາບແວດລ້ອມ.
- ຄວນຫຼຸດຜ່ອນລະດັບຄວາມດັງຂອງສຽງ ດ້ວຍວິທີກັນສຽງໂດຍໃຊ້ຜ້າກັ້ງ ຫຼື ຜ້າໄໝປະດັບ ແລະ ອຸປະກອນອື່ນໆທີ່ສາມາດກັນສຽງໄດ້.

- ຄວນນຳໃຊ້ນ້ຳສີໝາຍເປັນລະຫັດເພື່ອກຳນົດຫ້ອງຮຽນຕ່າງໆ ເພື່ອຄວາມສະດວກໃນການແນະນຳໃຫ້ຜູ້ຮຽນທີ່ມີຄວາມບົກຜ່ອງທາງດ້ານສາຍຕາ ( ສາຍຕາເລື່ອນລາງ ) ແລະ ເດັກທີ່ມີຄວາມພິການດ້ານການຮຽນຮູ້, ຈະຊ່ວຍໃຫ້ຜູ້ຮຽນເຫັນໄດ້ຢ່າງຈະແຈ້ງ ແລະ ມີຄວາມເບີກບານມ່ວນຊື່ນຢູ່ໃນໂຮງຮຽນ.

### ✦ ຫຼັກການທີ 7: ມີຂະໜາດບ່ອນຫ່ວາງທີ່ເໝາະສົມ

ການສະໜອງຂະໜາດ ແລະ ບ່ອນຫ່ວາງທີ່ເໝາະສົມສຳລັບການປະຕິບັດກິດຈະກຳ ແລະ ການນຳໃຊ້ໄດ້ສະດວກໂດຍບໍ່ກ່ຽວຂ້ອງກັບຂະໜາດຮ່າງກາຍ ຫຼື ການເຄື່ອນໄຫວຂອງຜູ້ນຳໃຊ້.

**ຄຳແນະນຳ**

ກ. ໝາຍເສັ້ນສີສະທ້ອນໃສ່ບ່ອນທີ່ສຳຄັນເຊັ່ນ : ບ່ອນນັ່ງ ຫຼື ບ່ອນຢືນຂອງຜູ້ນຳໃຊ້

ຂ. ສ້າງໂອກາດການເຂົ້າເຖິງໂຄງປະກອບຕ່າງໆຢ່າງສະດວກສະບາຍໃສ່ບ່ອນນັ່ງ ຫຼື ບ່ອນຢືນຂອງຜູ້ນຳໃຊ້

ຄ. ຈັດສິ່ງຂອງຕ່າງໆໃຫ້ຢູ່ໃກ້ມື ຫຼື ສາມາດຈັບບາຍໄດ້.

ງ. ສະໜອງບ່ອນຫ່ວາງທີ່ເໝາະສົມໃຫ້ແກ່ຜູ້ນຳໃຊ້ເຄື່ອງຊ່ວຍ ຫຼື ອຸປະກອນຊ່ວຍສ່ວນຕົວ. ຄວນອອກແບບເຟີນິເຈີພິເສດ ສຳລັບຜູ້ທີ່ມີຄວາມຕ້ອງການໃຊ້ສິ່ງທີ່ມີລາຄາແພງ, ຕັ່ງສຳລັບເດັກທີ່ມີຄວາມເປັນພິການທາງດ້ານຮ່າງກາຍ ອາດຈະມີຂະໜາດແຕກຕ່າງກັນໄປແຕ່ສາມາດນຳໃຊ້ສຳລັບອ່ານ ແລະ ຂຽນໜັງສື ຢ່າງສະດວກສະບາຍ, ເຟີນິເຈີນີ້ສາມາດອອກແບບຕາມແບບຂອງທ້ອງຖິ່ນ ດັ່ງຕົວຢ່າງລຸ່ມນີ້.

- ແບບຕັ່ງທົ່ວໄປ ດັດປັບຕັ່ງໂດຍເຮັດໃຫ້ ປັບຕັ່ງໃຫ້ສາມາດ
- ສຳລັບຜູ້ຮຽນປະຖົມ ພື້ນຮອງຕີນເຄື່ອນທີ່ໄດ້ ເລື່ອນຂຶ້ນ - ເລື່ອນລົງ

1. ກິດຈະກຳການຮຽນ-ການສອນສຳລັບຜູ້ຮຽນທີ່ເປັນຄົນພິການ

1.1 ການດັດປັບເນື້ອໃນຫຼັກສູດ

- ການກຳນົດມາດຕະຖານຫຼັກສູດສະເພາະ ເພື່ອສອນເດັກພິການສະເພາະດ້ານ ນັບແຕ່ຊັ້ນອະນຸບານສຶກສາຈົນເຖິງຊັ້ນມັດທະຍົມສຶກສາຊຶ່ງຖືວ່າເປັນຫຼັກສູດສະເພາະ ໂດຍການດັດປັບຈາກຫຼັກສູດແຫ່ງຊາດໃຫ້ແທດເໝາະກັບຄວາມເປັນພິການ ເພື່ອສອນຜູ້ຮຽນພິການທີ່ມີລະດັບຄວາມເປັນພິການຂ້ອນຂ້າງໜັກເຊັ່ນ : ເດັກພິການຫູ-ປາກ ແລະ ເດັກທີ່ທີ່ມີຄວາມບົກຜ່ອງທາງສະຕິປັນຍາຂ້ອນຂ້າງໜັກ ແລະ ປະເພດອື່ນໆທີ່ບໍ່ສາມາດຮຽນຮູ້ຕາມຫຼັກສູດແຫ່ງຊາດໄດ້ ຈຶ່ງຈຳເປັນຕ້ອງກຳນົດມາດຕະຖານຫຼັກສູດສະເພາະການກຳນົດມາດຕະຖານຫຼັກສູດສະເພາະບໍ່ແມ່ນການສ້າງຂຶ້ນມາໃໝ່ ຫຼື ການນຳເອົາຫຼັກສູດຊັ້ນປະຖົມສຶກສາຍົກໄປສອນໃນຊັ້ນມັດທະຍົມສຶກສາ ແຕ່ຈະມີການປັບເນື້ອໃນຫຼັກສູດແຫ່ງຊາດເຊັ່ນ : ເນື້ອໃນຫຼັກສູດສຳລັບຜູ້ຮຽນພິການຫູ- ປາກຈະບໍ່ສາມາດອ່ານອອກສຽງໄດ້.
- ການກຳນົດມາດຕະຖານຫຼັກສູດເພີ່ມເຕີມ ເພື່ອສອນທັກສະທີ່ຈຳເປັນໃຫ້ແກ່ເດັກພິການເຊັ່ນ :ທັກສະໃນການດຳລົງຊີວິດ, ການຮັບປະທານອາຫານ, ການຮັກສາດູແລເຮືອນຊານ , ການທຳຄວາມສະອາດຮ່າງກາຍ, ທັກສະໃນການສ້າງຄວາມຄຸ້ນເຄີຍກັບສະພາບແວດລ້ອມ ແລ ະ ການເຄື່ອນໄຫວ, ທັກສະທາງສັງຄົມ ແລະ ອື່ນໆ ເພື່ອສອນເດັກພິການ.

1.2 ແຜນຈັດການສຶກສາສະເພາະບຸກຄົນ individualized Education Plan ( IEP )

ຄູສອນຈຳເປັນຕ້ອງໃຊ້ນຳໃຊ້ແຜນການສຶກສາສະເພາະບຸກຄົນເປັນແຜນການທີ່ສອດຄ່ອງກັບຄວາມຕ້ອງການທີ່ຈຳເປັນພິເສດຂອງເດັກພິການທີ່ກ່ຽວຂ້ອງກັບສິ່ງອຳນວຍຄວາມສະດວກອຸປະກອນການຮຽນ-ການສອນ, ຂະບວນການ

ຮຽນ- ການສອນ, ການວັດ-ປະເມີນຜົນ ແລະ ການຊ່ວຍເຫຼືອອື່ນໆທາງການສຶກສານອກຈາກນັ້ນເປັນແຜນການສຶກສາສະເພາະເຈາະຈົງສໍາລັບເດັກພິການຄົນນັ້ນ ໃນວິຊາ ຫຼື ທັກສະ ທີ່ເປັນຈຸດອ່ອນ, ແຜນການສຶກສາສະເພາະບຸກຄົນນີ້ສ້າງຂື້ນມາເພື່ອໃຫ້ເດັກພິການບັນລຸຕາມຈຸດປະສົງ ແລະ ເປົ້າໝາຍທີ່ກໍານົດໄວ້ໃນແຜນການສຶກສາສະເພາະບຸກຄົນ.

1.) ຄວາມໝາຍຂອງແຜນຈັດການສຶກສາສະເພາະບຸກຄົນ.

ແຜນຈັດການສຶກສາສະເພາະບຸກຄົນເປັນແຜນຈັດການສຶກສາທີ່ຈັດຂື້ນເປັນລາຍລັກອັກສອນໂດຍການຮ່ວມມືກັບຜູ້ປົກຄອງ, ຜູ້ບໍລິຫານໂຮງຮຽນ, ຄູສອນ ແລະ ແພດ ໂດຍກໍານົດເນື້ອໃນຂອງຫຼັກສູດ ແລະ ການຊ່ວຍເຫຼືອຫຼັກສູດພິເສດ ໃຫ້ເໝາະກັບຄວາມຕ້ອງການພິເສດຂອງແຕ່ລະຄົນ. ດັ່ງນັ້ນດ ແຜນການສຶກສາສະເພາະບຸກຄົນ ຈຶ່ງບໍ່ແມ່ນແຜນຈັດການການສອນປະຈໍາວັນ ແຕ່ເປັນແຜນການສຶກສ່ປະຈໍາປີ.

2.) ຈຸດປະສົງຂອງການນໍາໃຊ້ແຜນຈັດປະສົບການສຶກສາສະເພາະບຸກຄົນ.

- ເພື່ອຊ່ວຍໃຫ້ເດັກໄດ້ຮຽນຮູ້ ແລະ ຊ່ວຍໃຫ້ເດັກມີໂອກາດພັດທະນາຕາມຄວາມສາມາດທີ່ແຕກຕ່າງຂອງເດັກແຕ່ລະຄົນ.
- ເພື່ອເປັນເຄື່ອງມືໃນການປະເມີນຄວາມກ້າວໜ້າທາງການຮຽນຮູ້ຂອງເດັກແຕ່ລະຄົນຢ່າງມີລະບຽບແບບແຜນ.

3.) ຜົນປະໂຫຍດຂອງແຜນການສຶກສາສະເພາະບຸກຄົນ.

ຊ່ວຍໃຫ້ຄູຮູ້ໜ້າທີ່ຂອງຕົນເອງໃນດ້ານຕ່າງໆເຊັ່ນ : ວິທີການສອນ, ການກະກຽມສື່ການຮຽນ-ການສອນ ແລະ ສິ່ງອໍານວຍຄວາມສະດວກໃຫ້ເໝາະສົມກັບເດັກແຕ່ລະຄົນຜູ້ຮຽນຈະຮັບຮູ້ວ່າຕົນເອງຈະຮຽນຫຍັງ ຜູ້ປົກຄອງຮູ້ວ່າໂຮງຮຽນຈະສອນຫຍັງໃຫ້ແກ່ເດັກ ແລະ ຜູ້ປົກຄອງຈະສົ່ງເສີມລູກຂອງຕົນເອງຢ່າງໃດໃຫ້ເປັນຂັ້ນຕອນທີ່ຕໍ່ເນື່ອງຜູ້ບໍລິຫານຊາບວ່າ ຈະຕ້ອງກະກຽມບຸກຄະລາກອນທີ່ຈະໃຫ້ບໍລິການກັບເດັກໂດຍສະເພາະໃຫ້ມີສ່ວນຮ່ວມໃນການຈັດແຜນການສອນ ແລະ ການວັດ-ປະເມີນຜົນ ແລະ ປັບປຸງ.

- ແຜນການຈັດການສຶກສາສະເພາະບຸກຄົນ ແມ່ນຈັດສະເພາະຜູ້ທີ່ມີຄວາມພິເສດ ຕົວຢ່າງ : ນັກຮຽນເກັ່ງພິເສດ, ນັກຮຽນທີ່ເປັນຄົນພິການ, ນັກຮຽນທີ່ມີຄວາມຕ້ອງການພິເສດ... ສາມາດປະຕິບັດຕາມແບບຟອມລຸ່ມນີ້:

## 2. ເຄື່ອງມື ( Tools )

**4.1. ນິຕິກໍາ ແລະ ນະໂຍບາຍທີ່ກ່ຽວຂ້ອງ ( ເບິ່ງໃນພາກທີ 1 ແລະ ສຶກສາເພີ່ມເຕີມໃນເອກະສານ ນິຕິກໍາຕ່າງໆ ) :**

**4.2. ການຈັດສັນງົບປະມານ:**

ໂຮງຮຽນຄວນມີການວາງແຜນ ແລະ ຈັດສັນງົບປະມານສະເພາະ ວຽກງານການສຶກສາຮຽນຮ່ວມ ເພື່ອສະໜັບສະໜູນຜູ່ຮຽນທີ່ເປັນພິການເຊັ່ນ : ການປັບສະພາບແວດລ້ອມພາຍໃນໂຮງຮຽນ, ການສອນເພີ່ມໃຫ້ແກ່ຜູ່ຮຽນທີ່ເປັນພິການ, ຈັດຊື້ອຸປະກອນສື່ການຮຽນການສອນທີ່ຈໍາເປັນ.

**4.3. ການໃຫ້ບໍລິການເພີ່ມເຕີມ:**

ການໃຫ້ບໍລິກສານໝາຍເຖິງ ການບໍລິການຕ່າງໆເພື່ອສະໜັບສະໜູນໃຫ້ແກ່ຜູ່ຮຽນທີ່ເປັນພິການແຕ່ລະປະເພດເຊັ່ນ: ການເຝິກອົບຮົມ, ການກຽມຄວາມພ້ອມດ້ານການຮຽນຮູ້ ແລະ ຟື້ນຟູສະມັດຕະພາບຂອງຜູ້ທີ່ເປັນພິການລາຍລະອຽດດັ່ງລຸ່ມນີ້:

1) ການໃຫ້ບໍລິການຜູ່ຮຽນທີ່ພິການທາງດ້ານການເບິ່ງເປັນຄື: ການສອນເພີ່ມ, ການນໍາພາທາງ, ການຜະລິດສື່, ກາຍະບໍາບັດ, ກິດຈະກໍາບໍາບັດ ແລະ ການເຝິກອົບຮົມທັກສະພື້ນຖານ ເຊັ່ນ: ທໍາຄວາມຄຸ້ນເຄີຍກັບສະພາບແວດ

ລ້ອມ, ການເຄື່ອນໄຫວ, ທັກສະການອ່ານ ການຂຽນ ແລະ ພິມຕົວອັກສອນຟູ, ທັກສະໃນການນຳໃຊ້ເຄື່ອງເທັກໂນໂລຊີ. ທັກສະການດຳລົງຊີວິດປະຈຳວັນ.

2) ການໃຫ້ບໍລິການຜູ່ຮຽນທີ່ພິການທາງດ້ານການໄດ້ຍິນ: ການສອນເພີ່ມ, ການຜະລິດສື່, ການເຝິກການເວົ້າ ແລະ ການສື່ສານ, ກິດຈະກຳບຳບັດ, ຜູ້ແປພາສາມື, ຜູ້ຊ່ວຍຄູ.
3) ການໃຫ້ບໍລິການຜູ່ຮຽນທີ່ພິການທາງດ້ານການຮ່າງກາຍຄື: ການສອນເພີ່ມ, ການຜະລິດສື່, ກາຍະບຳບັດ, ກິດຈະກຳບຳບັດ, ທັກສະໃນການນຳໃຊ້ເຄື່ອງເທັກໂນໂລຊີ, ທັກສະທາງສັງຄົມ, ທັກສະການຊ່ວຍເຫຼືອຕົນເອງ, ພາລະ ແລະ ສິລະປະສຶກສາ.
4) ການໃຫ້ບໍລິການຜູ່ຮຽນທີ່ພິການທາງດ້ານມັນສະໝອງ ແລະ ສະຕິປັນຍາ, ການເວົ້າ ແລະ ພາສາ, ພຶດຕິກຳ ແລະ ອາລົມ, ໂອທິສຕິກ ແລະ ພິການຊໍ້າຊ້ອນຄື: ການສອນເພີ່ມ, ການຜະລິດສື່, ການເຝິກການເວົ້າ ແລະ ການສື່ສານ, ກາຍຍະບຳບັດ, ກິດຈະກຳບຳບັດ, ຜູ່ຊ່ວຍຄູ, ເທັກສະການນຳໃຊ້ເຄື່ອງເຕັກໂນໂລຊີ, ທັກສະທາງສັງຄົມ, ທັກສະຊ່ວຍເຫຼືອຕົວເອງ.

4.4. ການຊ່ວຍເຫຼືອອື່ນໆທາງການສຶກສາ:

ການຊ່ວຍເຫຼືອອື່ນໆທາງດ້ານການສຶກສາ ໝາຍເຖິງມາດຕະການອື່ນທີ່ນອກເໜືອ ຈາກສິ່ງອຳນວຍຄວາມສະດວກ, ສື່ການຮຽນ-ການສອນ, ການໃຫ້ບໍລິການທີ່ສົ່ງເສີມ ແລະ ສະໜັບສະໜູນການຮຽນຮູ້ຂອງຜູ້ຮຽນທີ່ເປັນພິການ.

1) ການຊ່ວຍເຫຼືອຜູ່ເປັນພິການດ້ານການເບິ່ງເຫັນຄື: ເຕັກນິກການສອນ, ການວັດ ແລະ ປະເມີນຜົນການຮຽນ, ການຈັດຫາຜູ້ຊ່ວຍຄູ, ຫຼື ອາສາສະໝັກ ແລະ ການແນະນຳຄອບຄົວ.
2) ການຊ່ວຍເຫຼືອຜູ້ຮຽນທີ່ມີບັນຫາການໄດ້ຍິນຄື: ການດັດປັບເນື້ອໃນຫຼັກສູດ, ເຕັກນິກການສອນ, ການວັດ ແລະ ການປະເມີນຜົນນັກຮຽນເປັນລາຍບຸກຄົນ, ການຈັດຫາອາສາສະໝັກ ແລະ ການເຝິກທັກສະວິຊາຊີບຂັ້ນພື້ນຖານ.
3) ການຊ່ວຍເຫຼືອຜູ່ຮຽນທີ່ພິການທາງດ້ານມັນສະໝອງ ແລະ ສະຕິປັນຍາ, ການເວົ້າ ແລະ ພາສາ, ພຶດຕິກຳ ແລະ ອາລົມ, ໂອທິສຕິກ ແລະ ພິການຊໍ້າຊ້ອນຄື:ການດັດປັບເນື້ອໃນຫຼັກສູດ, ເຕັກນິກການສອນ, ການວັດ ແລະ ການປະເມີນຜົນນັກຮຽນເປັນລາຍບຸກຄົນ, ການຈັດຫາອາສາສະໝັກ ແລະ ການເຝິກທັກສະວິຊາຊີບຂັ້ນພື້ນຖານ.

**4.5. ການປະສານງານກັບຜູ້ປົກຄອງ**

ພະຍາຍາມສົ່ງເສີມໃຫ້ຜູ້ປົກຄອງ ມີສ່ວນຮ່ວມໃນການສຶກສາອົບຮົມ, ດູແລຜູ້ຮຽນທີ່ເປັນຄົນພິການໃຫ້ຫຼາຍຂຶ້ນໂດຍຄູສອນຄວນຈັດເຝິກອົບຮົມໃຫ້ຜູ້ປົກຄອງຜູ້ຮຽນທີ່ເປັນພິການໃນດ້ານການຢູ່, ຊ່ວຍເຫຼືອ ດ້ານການຮຽນ ໂດຍໃຊ້ພາສາທີ່ເຂົ້າໃຈງ່າຍ ແລະ ຄວນຕິດຕໍ່ຫາຜູ້ປົກຄອງເດັກພິການເປັນປົກກະຕິ.

**4.6. ການເກັບກຳຂໍ້ມູນ.**

ການເກັບກຳຂໍ້ມູນເປັນສິ່ງສຳຄັນ ແລະ ເປັນພື້ນຖານ ໃນການວາງແຜນການສຶກສາ ສຳລັບຜູ້ຮຽນທີ່ເປັນພິການ.

1. ຂໍ້ມູນກ່ຽວກັບຜູ່ພິການ ໂຮງຮຽ-ນຄວນປະສານສົມທົບກັບຄະນະການສຶກສາຂັ້ນບ້ານ, ສະມາຄົມພໍ່ແມ່ນັກຮຽນ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອເກັບກຳຂໍ້ມູນ ແລະ ສ້າງຖານຂໍ້ມູນ ແລະ ສ້າງຖານຂໍ້ມູນສຳລັບຄົນພິການແຕ່ລະປະເພດ ເພື່ອເປັນຂໍ້ມູນໃນການວາງແຜນການສຶກສາ ເພື່ອຮັບປະກັນໃຫ້ເດັກພິການທຸກຄົນມີໂອກາດ ໄດ້ເຂົ້າເຖິງການສຶກສາຢ່າງສະເໝີພາບ ແລະ ເທົ່າທຽມກັນ ໂດຍນຳໃຊ້ແຜນທີ່ການສຶກສາຂັ້ນບ້ານ.

2. ຂໍ້ມູນກ່ຽວກັບບຸກຄະລາກອນ: ແມ່ນການເກັບກຳຈຳນວນຄູ-ອາຈານທີ່ສອນຜູ້ຮຽນທີ່ເປັນພິການ ໃນໂຮງຮຽນຮຽນຮ່ວມ ແລະ ໂຮງຮຽນສຶກສາພິເສດ ທີ່ມີວຸດທິດ້ານການສຶກສາພິເສດ ເພື່ອເປັນຂໍ້ມູນ ໃນການວາງແຜນໃນການບັນຈຸບຸກຄະລາກອນຢ່າງຖືກຕ້ອງ ແລະ ວາງແຜນ ໃນການພັດທະນາຄຸນນະພາບຂອງວຽກງານການສຶກສາຮຽນຮ່ວມ ແລະ ການສຶກສາພິເສດ.
3. ຂໍ້ມູນກ່ຽວກັບເຄືອຂ່າຍ: ແມ່ນມາຈາກຂໍ້ມູນຂອງບັນດາອົງການທີ່ກ່ຽວຂ້ອງ ທາງການສຶກສາສຳລັບຜູ້ຮຽນທີ່ເປັນພິການເຊັ່ນ: ບັນດາສະມາຄົມ, ມູນລະນິທິ, ແລະ ອົງການອື່ນໆທີ່ກ່ຽວເຊິ່ງເປັນອົງການທີ່ສຳຄັນ ແລະ ເປັນປະໂຫຍດ ໃນການພັດທະນາບຸກຄະລາກອນ, ການໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນດ້ານບຸກຄະລາກອນ, ສື່ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ.
4. ຂໍ້ມູນກ່ຽວກັບສື່ການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກ ເພື່ອເປັນຂໍ້ມູນໃນການວາງແຜນການສະໜອງສື່ ແລະ ສິ່ງອຳນວຍຄວາມສະດວກທີ່ຈຳເປັນເຊັ່ນ: ເຄື່ອງຊ່ວຍຟັງ, ລໍ້ເລື່ອນ, ແວ່ນຕາ, ແວ່ນຂະຫຍາຍ, ຄອມພິວເຕີ, ທາງເນີນ, ຫ້ອງນໍ້າ ແລະ ອື່ນໆ ສຳລັບຜູ້ຮຽນທີ່ເປັນຄົນພິການ.

# ບົດທີ 10
# ຄວາມເປັນພິການ

## 1. ນິຍາມຄົນພິການ

ຄົນພິການແມ່ນຜູ້ມີຄວາມບົກຜ່ອງ ຫຼື ສູນເສຍໜ້າທີ່ຂອງອະໄວຍະວະ ແລະ ອີງຄະສ່ວນໃດສ່ວນໜຶ່ງ ຂອງຮ່າງກາຍ , ຈິດໃຈດ ມັນສະໝອງ ຫຼື ສະຕິປັນຍາ ລວມທັງການເບິ່ງເຫັນ, ການໄດ້ຍິນ ແລະ ການປາກເວົ້າ ໂດຍ ບໍ່ຈໍາແນກສາເຫດຂອງຄວາມເປັນພິການ, ຊຶ່ງຄວາມເປັນພິການນັ້ນ ໄດ້ເປັນອຸປະສັກໃນການເຄື່ອນໄຫວກິດຈະກໍາປະຈໍາ ວັນ ແລະ ການເຂົ້າຮ່ວມກິດຈະກໍາທາງສັງຄົມຢ່າງເຕັມສ່ວນ.

## 2. ປະເພດຄວາມເປັນພິການ.

1. ພິການທາງດ້ານການເບິ່ງເຫັນ.
2. ພິການທາງດ້ານການໄດ້ຍິນ
3. ພິການທາງດ້ານສະຕິປັນຍາ.
4. ພິການທາງດ້ານຮ່າງກາຍ
5. ຄວາມບົກຜ່ອງທາງດ້ານຄວາມຮູ້
6. ພິການທາງດ້ານການເວົ້າ ແລະ ພາສາ.
7. ພິການທາງດ້ານພຶດຕິກໍາ ຫຼື ອາລົມ
8. ບຸກຄົນໂອທິສຕິກ
9. ພິການຊໍ້າຊ້ອນ

## 3. ສິ່ງກີດຂວາງຂອງຄົນພິການ

ສໍາລັບຄົນພິການເປັນເລື່ອງຍາກທີ່ຕ້ອງໃຊ້ຊີວິດໃນພື້ນທີ່ສາທາລະນະເນື່ອງຈາກ ຮ່າງກາຍຖືກຈໍາກັດໂດຍສະເພາະຜູ້ທີ່ຕ້ອງໃຊ້ລົດເຂັນ ເພາະສະຖານທີ່ຕ່າງໆບໍ່ໄດ້ອອກແບບສະເພາະສໍາລັບຄົນພິການ ເກີດໃຫ້ໄປມາລໍາບາ, ເດັກທີ່ເປັນພິການປະເພດຕ່າງໆມີຄວາມອາຍທີ່ຈະໃຊ້ຊີວິດຮ່ວມກັບຄົນປົກກະຕິ, ພວກຄິດວ່າເຂົາ ມີຈຸດດ້ອຍກວ່າຄົນອື່ນ ( ບໍ່ປົກກະຕິ ) ເຊິ່ງແນວຄິດນີ້ສິ່ງຜົນທາງດ້ານຈິດໃຈຂອງຄົນພິການເກີດຄວາມຕໍ່າຕ້ອຍນ້ອຍໃຈ ໃນຕົວເອງ.

## 4. ອຸປະສັກໃນການດໍາລົງຊີວິດຂອງຄົນພິການ

1. ບໍ່ໄດ້ຮັບໂອກາດ
   - ບໍ່ໄດ້ຮັບການສຶກສາ
   - ໄດ້ເຮັດວຽກ
   - ຈາກຄອບຄົວ
2. ສະພາບແວດລ້ອມບໍ່ເອື້ອຍອໍານວຍສໍາລັບຄົນພິການ
   - ຫ້ອງນໍ້າສະຖານີລົດໄຟ-ລົດເມ - ຕະຫຼາດ
   - ສະຖານທີ່ອື່ນໆ
   -

# ບົດທີ 11
# ການຮຽນຮ່ວມສໍາລັບເດັກທີ່ມີບັນຫາທາງດ້ານພຶດຕິກໍາ

## 1. ການຈຳແນກເດັກທີ່ມີຄວາມຕ້ອງການພິເສດຢູ່ໃນຫ້ອງຮຽນຮ່ວມທົ່ວໄປ

## ວິທີສັງເກດເດັກທີ່ມີຄວາມຕ້ອງການພິເສດ.

ຖ້າເປັນເດັກທີ່ມີຄວາມພິເສດທາງດ້ານຮ່າງກາຍ ເຊັ່ນ : ພິການຕາ, ພິການຫູ ຫຼື ພິການແຂນ ຂາ, ພວກເຮົາກໍ່ຈະສາມາດຈຳແນກໄດ້ງ່າຍ, ແຕ່ສຳລັບເດັກທີ່ມີບັນຫາທາງດ້ານພຶດຕິກຳ ແລະ ບັນຫາທາງດ້ານການຮຽນຮູ້ ຄູອາຈານມັກຈະພົບຄວາມຫຍຸ້ງຍາກໃນການຈຳແນກເດັກດັ່ງກ່າວ.

ເດັກທີ່ມີບັນຫາທາງດ້ານພຶດຕິກຳສ່ວນໃຫ່ຍ ຈະມີຜົນສືບເນື່ອງມາຈາກຄວາມຂັດແຍ່ງຂອງເດັກກັບສະພາບແວດລ້ອມ ຫຼື ຄວາມຂັດແຍ່ງທີ່ເກີດຂຶ້ນພາຍໃນຕົວເດັກເອງ, ພາໃຫ້ເດັກຂາດຄວາມສາມາດໃນການຮຽນຮູ້, ຂາດຄວາມສຳພັນທີ່ດີກັບໝູ່ເພື່ອນ, ມີພຶດຕິກຳທີ່ບໍ່ເໝາະສົມເມື່ອປຽບທຽບກັບເດັກໃນໄວດຽວກັນ, ມີພຶດຕິກຳທີ່ບໍ່ເໝາະສົມ, ເກັບກົດທາງອາລົມໂດຍສະແດງອອກທາງດ້ານຮ່າງກາຍ, ເດັກທີ່ມີບັນຫາທາງພຶດຕິກຳມີການສະແດງອອກໃນຫຼາຍລັກສະນະດັ່ງນີ້:

ກ. ຄວາມປະພຶດຜິດປົກກະຕິເຊັ່ນ :

ມີລັກສະນະກ້າວລ້າວ, ທະເລາະວິວາດ, ທຳຮ້າຍຜູ້ອື່ນ, ຂາດຄວາມຮັບຜິດຊອບ, ໃຊ້ສຽງດັງ, ມັກຂີ້ລັກ ແລະ ເວົ້າຈາຫຍາບຄາຍ...

ຂ. ບຸກຄະລິພາບຜິດປົກກະຕິ ເຊັ່ນ :

ມັກແກ້ຕົວ, ແຍກຕົວອອກຈາກສັງຄົມ, ຂາດຄວາມໝັ້ນໃຈ, ດຶງຜົມ, ກັດເລັບ, ບໍ່ຄ່ອຍມັກເວົ້າ, ເສຍໃຈງ່າຍ, ເບິ່ງໂລກໃນແງ່ຮ້າຍ....

ຄ. ຂາດວຸທິພາວະ ເຊັ່ນ :

ມີສະມະທິສັ້ນ, ບໍ່ມີຄວາມກະຕືລືລົ້ນ, ບໍ່ສົນໃຈສິ່ງຮອບຕົວ, ມັກຫຼິ້ນກັບເດັກທີ່ມີອາຍຸນ້ອຍກ່ວາ.

ງ. ມີບັນຫາທາງສັງຄົມ ເຊັ່ນ :

ຄົບເພື່ອນທີ່ດີ, ມັກໜີໂຮງຮຽນ, ມັກທ່ຽວກາງຄືນ, ມັກໜີອອກຈາກບ້ານ... ສຳລັບເດັກທີ່ມີບັນຫາທາງການຮຽນຮູ້ອາດແບ່ງອອກເປັນຫຼາຍປະເພດ, ແຕ່ລະປະເພດມີພຶດຕິກຳຫຼາຍລັກສະນະ.ພວກເຮົາຈະສັງເກດເຫັນ ເຊັ່ນ :

- ປະເພດເດັກທີ່ມີບັນຫາດ້ານການອ່ານ.
- ປະເພດເດັກທີ່ມີບັນຫາດ້ານການຄິດຄຳນວນ.
- ປະເພດເດັກທີ່ມີບັນຫາດ້ານການສະກົດຄຳ.
- ປະເພດເດັກທີ່ມີບັນຫາດ້ານການຂຽນ.
- ປະເພດເດັກທີ່ມີບັນຫາດ້ານຄວາມຈຳ.
- ປະເພດເດັກທີ່ມີບັນຫາດ້ານສັງຄົມ.

## 2. ກໍລະນີສຶກສາ

- ໃຫ້ນັກຮຽນອ່ານ ແລະ ວິເຄາະກໍລະນີສຶກສາດັ່ງລຸ່ມນີ້:
- ກໍລະນີສຶກສາ 1 = ດອກບົວແຍ້ມບານ.
- ກໍລະນີສຶກສາ 2 = ເດັກທີ່ຫຼົງທາງ.
- ກໍລະນີສຶກສາ 3 = ຄວາມເຈັບປວດທີ່ບໍ່ມີໃຜຮູ້ທາງອາລົມ.
- ກໍລະນີສຶກສາ 4 = ຝັນຂອງແມ່ຍັງບໍ່ທັນເປັນຈິງ.

## ກໍລະນີສຶກສາ 1 ດອກບົວແຍ້ມບານ

" ລາວເປັນຄົນອາຍ ຍ້ອນວ່າສິບຂອງລາວແວ່ງ ແລະ ເບິ່ງຈັ່ງໜຶ່ງກໍ່ຄືວ່າລາວເປັນພິການທາງສະໝອງ"ນັ້ນຄືຄໍາຢືນຢັນຂອງຄູສອນອະນຸບານທັງ 4 ຄົນ. ຄູເຫຼົ່ານີ້ເຄີຍມີຄວາມທໍ້ໃຈເພາະແມ່ຂອງວຽງບໍ່ໄດ້ສົ່ງລາວມາໂຮງຮຽນປົກກະຕິນັບຕັ້ງແຕ່ມື້ບຸນກິນຈຽງ ເດືອນ 12 ( ທັນວາ ) ເປັນຕົ້ນມາລາວຂາດໂຮງຮຽນຫຼາຍມື້ " ພວກເຮົາເຄີຍໄດ້ໂອ້ລົມກັບພໍ່ແມ່ຂອງລາວ, ແຕ່ແລ້ວກໍ່ບໍ່ເຫັນວ່າຈະເອົາໃຈໃສ່ຊຸກຍູ້ລາວ "

ໂດຍຜ່ານທາງປ່ອງຢ້ຽມຂອງຫ້ອງຮຽນອະນຸບານ. ຂອ້ຍຈັບຈ້ອງເບິ່ງວຽງທີ່ໂຄ້ງຫົວຂອງລາວລົງໃສ່ຕັກແມ່ຢ່າງສະໜິດແໜ້ນໃນມື້ນັ້ນ. ແມ່ຂອງວຽງມາໂຮງຮຽນຂອ້ຍຈິ່ງມີໂອກາດສໍາພາດລາວ.ວຽງມີອາຍຸ 5 ປີ ລາວເບິ່ງເໝືອນກັບວ່າບໍ່ເປັນຄົນສົນໃຈກັບການຟັງ, ຮ້ອງເພງ ຫຼື ເວົ້າລົມກັບຫຍັງເລີຍເມື່ອໄດ້ນັ່ງໝູນຕັກແມ່ ໃກ້ວົງລ້ອມຂອງເພື່ອນຮ່ວມຫ້ອງທີ່ຂ້ອນຂ້າງຫ້າວຫັນ, ວຽງມີສີໜ້າເສົ້າໆ ແລະ ເລື່ອນລອຍລາວມີບັນຫາທາງສະໝອງກັບທີ່ຄູໄດ້ບອກເລົ່າໃຫ້ຂ້ອຍຟັງບໍ ?

ຂ້ອຍເດີນເຂົ້າໄປ ພ້ອມກັບໂຄ້ງຄໍານັບຫ້ອງຮຽນ ແລ້ວຂ້ອຍກໍ່ນັ່ງລົງງຽບໆຢູ່ຂ້າງວຽງ ແລະ ແມ່ຂອງລາວປະມານ 10 ນາທີ . ວຽງບໍ່ໄດ້ເຄື່ອນອອກໄປໃສ. ແມ່ຂອງແມ່ບອກຂ້ອຍວ່າລາວເອງ ແລະ ສາມີເປັນຄົນເຜົ່າມົ້ງ " ວຽງຈະເວົ້າພາສາມົ້ງຢູ່ເຮືອນ ລາວບໍ່ຮູ້ພາສາລາວປານໃດ ຍ້ອນວ່າ ລາວຂີ້ອາຍທີ່ຈະອອກໄປຫຼິ້ນນອກບ້ານ ເຊິ່ງມັນກໍ່ຍ້ອນສິບແວ່ງນັ້ນເອງ " ຂ້ອຍຄ່ອຍໆຖາມວຽງເພື່ອໃຫ້ລາວອ້າງປາກລົມນໍາ, ແມ່ຂອງລາວແປ ລາວບໍ່ສາມາດເຂົ້າໃຈພາສາລາວ, ຂ້ອຍນຶກໄດ້ເລີຍ ວຽງປະຕິບັດຕາມຄໍາຂໍຮ້ອງຂອງແມ່ແລ້ວລາວກໍ່ອ້າງປາກ ຂ້ອຍເຫັນວ່າ ລາວບໍ່ມີຮອຍແຍກທີ່ແພດານປາກມີແຕ່ສິບແວ່ງເທົ່ານັ້ນ. ແມ່ຂອງລາວຖາມວ່າ ຂ້ອຍສາມາດປົວແປງໃຫ້ລາວໄດ້ບໍ ? ບໍ່ດ ຂ້ອຍຕອບ, ແຕ່ຂ້ອຍຄິດວ່າຫຼັງຈາກທີ່ວຽງມີອາຍຸຄົບ 7-8 ປີ ເຈົ້າສາມາດຂໍໃຫ້ທາງແພດຢູ່ວຽງຈັນຊ່ວຍຫຍິບໃຫ້ໄດ້. ວຽງຄົງຈະເຂົ້າໃຈຄວາມໝາຍຂອງສຽງທີ່ພວກເຂົາລົມກັນເປັນພາສາລາວ. ລາວກະຊິບໃສ່ຫູແມ່ເບົາເປັນພາສາມົ້ງ ແລະ ກໍ່ຍິ້ມ.

ຈາກນັ້ນຂ້ອຍກໍ່ຖາມພວກເດັກຜູ້ອື່ນໆ ໃນຫ້ອງວ່າໃຜສາມາດເວົ້າພາສາມົ້ງໄດ້. ( ພວກຄູໄດ້ບອກໃຫ້ຂ້ອຍຮູ້ກ່ອນແລ້ວວ່າບໍ່ມີຜູ້ໃດໃນໂຮງຮຽນເວົ້າພາສາມົ້ງໄດ້ ເຖິງແມ່ນວ່າຈະມີເດັກເຜົ່າມົ້ງທັງໝົດ 8 ຄົນ ແລະ ເຜົ່າຂະມຸອີກ ຫຼາຍຄົນ) . ເດັກຍິງ 2ຄົນພ້ອມເດັກຊາຍຜູ້ໜຶ່ງໄດ້ຫຍັບເຂົ້າມາຢ່າງກ້າຫານ. ຂ້ອຍຂໍໃຫ້ພວກເຂົາຊ່ອຍສອນນັບແຕ່ພາສາມົ້ງ 1, 2, 3 ຂອ້ຍຈັບເອົາອຸປະກອນທີ່ຂຽນເລກ 1, 2, 3 ເປັນພາສາມົ້ງ. ພວກເຮົາເວົ້າເປັນພາສາລາວ ແລະ ກໍ່ເວົ້າເປັນພາສາມົ້ງທຸກຄົນຍິ້ມຫົວຢ່າງຄຶກຄື້ນ ທີ່ມີໂອກາດໄດ້ຮຽນພາສາໃໝ່.

ຂ້ອຍແນມເບິ່ງວຽງໃນທັນໃດນັ້ນລາວກໍ່ຕັ້ງຕົວຂຶ້ນນັ່ງ ແລະ ມີຄວາມເບັ່ງບານອອກມາເໝືອນກັບ ດອກບົວທີ່ພວມແຕກຊໍ່ຂຶ້ນມາຈາກໜອງຕົມດ ລາວເລີ່ມເວົ້າຈຳນວນເປັນພາສາລາວ ແລະ ມົ້ງ ພ້ອມກັບພວກເຮົາ.ຫຼັງຈາກນັ້ນ, ຂ້ອຍກໍ່ເອົາບັດອັນໜຶ່ງໃຫ້ລາວຖືແລ້ວລາວກໍ່ເປັນຜູ້ທຳອິດໃນຮອບຕໍ່ໄປ.

ໃນຕອນເຄື່ອນອອກຈາກຫ້ອງ, ຂ້ອຍໄດ້ລົມກັບຄູຂອງລາວກ່ຽວກັບການໃຫ້ໂອກາດເດັກໄດ້ສອນເຊິ່ງກັນ ແລະ ກັນ ເປັນບາງຄຳເວົ້າ ຫຼື ອາດຈະເປັນເພງລາວ, ເພງມົ້ງ ຫຼື ຂະມຸ " ການປະຕິບັດຄືແນວນີ້ຈະຊ່ວຍເປັນການສ້າງຂົວຕໍ່ທາງພາສາ ແລະ ເຮັດທຸກຄົນມີຄວາມຮູ້ສຶກທີ່ດີຕໍ່ເດັກທີ່ເປັນຊົນເຜົ່າ " ຂ້ອຍກ່າວບອກ.

ຂະນະທີ່ຜູ້ຢ້ຽມຢາມກຳລັງຈະກັບ, ຄູຜູ້ໜຶ່ງໄດ້ຖາມຂ້ອຍວ່າ " ທ່ານຄິດວ່າວຽງ ເປັນຄົນພິການທາງສະໝອງບໍ? " ຂ້ອຍປ່ຽນການສົນທະນາ ຈາກພາສາລາວເປັນພາສາອັງກິດທັນທີ ແລະ ເວົ້າແບບບໍ່ມີສາລະປະມານໜຶ່ງນາທີກັບຄູທີ່ພວມຈ້ອງເບິ່ງຂ້ອຍແບບຢາກຮູ້ຢາກເຫັນອີ່ຫຼີ " ພວກເຈົ້າເຂົ້າໃຈບໍ່ວ່າຂ້ອຍເວົ້າຫຍັງ ?"ຂ້ອຍເປັນພາສາລາວ ແນ່ນອນພວກເຂົາເຈົ້າບໍ່ເຂົ້າໃຈ, ພວກຄູກໍ່ເຫັນດ້ວຍ.

" ຂ້ອຍສົງໄສວ່າ ສິ່ງນັ້ນກໍ່ເປັນບັນຫາຂອງວຽງເໝືອນກັນ, ພວກເຈົ້າເວົ້າພາສາທີ່ແປກສຳລັບລາວເຮັດໃຫ້ລາວບໍ່ເຂົ້າໃຈ. ລາວບໍ່ສາມາດເຂົ້າໃຈ ພວກເຈົ້າ ແລະ ພາສາທີ່ລາວບໍ່ສາມາດເວົ້ານັ້ນ ແຫຼະ ຍິ່ງເພີ່ມທະວີຄວາມອາຍ ໃຫ້ລາວເປັນສອງເທົ່າ ເພາະສິບກໍ່ແວ່ງແລ້ວ. ພວກເຈົ້າສາມາດຊຸກຍູ້ໃຫ້ເດັກທີ່ເປັນເຜົ່າມົ້ງລວມທັງຕົວວຽງເອງຊ່ວຍສອນບາງຄຳສັບມົ້ງ ໃຫ້ທຸກຄົນໄດ້ບໍ່ ? " ໄດ້.

ຜູ້ອຳນວຍການໂຮງຮຽນຕອບແບບລັ່ງເລໃຈເພາະຢ້ານວ່າຈະເປັນການກະທຳຜິດຕໍ່ລະບຽບການສອນທີ່ຕ້ອງເປັນພາສາລາວພຽງແຕ່ຢ່າງດຽວ.

" ຄັນຊັ້ນວຽງເປັນພິການທາງສະໝອງບໍ່ ? "ຄູຕັ້ງຄຳຖາມນີ້ຄືນອີກ. ຂ້ອຍຫັນກັບໄປເບິ່ງວຽງ ແລະ ແມ່ຂອງລາວທີ່ພວມຍິ້ມແຍ້ມອ່ານປຶ້ມນິທານທີ່ຄູຜະລິດເອງເປັນພາສາລາວຢູ່. ວຽງພວມມີທ່າທາງເໝືອນກັບດອກບົວທີ່ພວມບານແຍ້ມ ແລະ ໜ້າຖະໜອມຮັກ. ຈາກນັ້ນຂ້ອຍກໍ່ເຫັນລາວຍົກນິ້ວມືຂຶ້ນໜຶ່ງນິ້ວ, ແລ້ວສອງ ແລະ ສາມນິ້ວ " ແລ້ວພວກເຈົ້າເດຄິດວ່າແນວໃດ ?"

## ກໍລະນີສຶກສາ 2 ເດັກທີ່ຫຼົງທາງ.

ສິ່ງທີ່ຊຸກຊ້ອນງຽບໆ ຢູ່ບົນທົ່ງພຽງນັ້ນ ແມ່ນໂຮງຮຽນມັດທະຍົມຂອງແຂວງວຽງຈັນ, ສ ປປລາວ. ພວກນັກຮຽນຈະເດີນທາງມາໂຮງຮຽນແຫ່ງນີ 15 ກິໂລແມັດ ຫ່າງຈາກບ້ານຢູ່ຂອງເຂົາມັນແມ່ນ 1 ໃນ 3 ໂຮງຮຽນຂອງເມືອງໂພນໂຮງ.

ສົ້ນເປັນນັກຮຽນຍິງຊົນເຜົ່າຂະມຸ ພວມຮຽນຢູ່ ມ2 ຝາຫ້ອງທີ່ລາວຮຽນຢູ່ແອ້ມດ້ວຍກະແຕະໄມ້ໄຜ່ສັ້ນ ໂດຍພໍ່ແມ່ນັກຮຽນ, ອັນເປັນການປະກອບສ່ວນແກ່ໂຮງຮຽນ . ກະດານກໍາເປັນຄື້ນຫຼຸບໂນນ ແລະ ມົວ, ຍາກທີ່ຈະອ່ານໄດ້. ຕົ້ນນົກຍຸງທີ່ພວມເບັ່ງບານລຽງເປັນແຖວເປັນສິ່ງປະດັບປະດາເດັ່ນ. ພວກນັກຮຽນພາກັນນັ່ງເປັນມາທີ່ສັ່ນຄອນ ແລະ ມີຫົວຕະປູແນນອອກມາ. ໂດຍປົກກະຕິຈະມີນັກຮຽນ 3 ຄົນ ນັ່ງຮ່ວມມ້ານັ່ງດຽວກັນ ໂດຍບໍ່ມີທີ່ວ່າງເພື່ອເຄື່ອນໄຫວ.

ອຸປະກອນການຮຽນຂອງສົ້ນ ປະກອບດ້ວຍຖົງໃສ່ປື້ມທີ່ຂາດຫ້ຽນ, ປື້ມຂຽນບາງໆ 2 ຫົວ, ບິກແດງ 1 ກ້ານ ແລະ ຂື້ນສ່ວນບັນທັດທີ່ຫັກແລ້ວ.

ຄວາມຂາດເຂີນຊຸ້ນສິນ ໄດ້ບີບບັງຄັບໃຫ້ພໍ່ຂອງລາວຕ້ອງໄປຊອກວຽກເຮັດງານທຳທີ່ອື່ນ, ສ່ວນແມ່ຂອງລາວຮັບຈ້າງຫາລາຍໄດ້ປະຈຳວັນເຮັດວຽກໜັກຢູ່ໄຮ່ຢູ່ນາຕັ້ງແຕ່ເຊົ້າຈົນຄໍ່າເພື່ອຫາລ້ຽງສົ້ນ ແລະນ້ອງໆ ອີກ 6 ຄົນ.

ນັບແຕ່ພໍ່ຂອງສົ້ນຈາກບ້ານໄປດ ສົ້ນກໍ່ກາຍເປັນຄົນອ່ອນແອລົງບໍ່ເໝືອນກ່ອນ. ເພື່ອນໆ ແລະອາຈານສອນຂອງລາວຮູ້ສຶກວ່າລາວໄດ້ປ່ຽນແປງໄປຢ່າງຮຸນແຮງ, ກ່ອນໜ້ານີ້ບໍ່ນານ, ສົ້ນ ຮຽນໄດ້ດີແຕ່ດຽວນີ້ພຽງແຕ່ນັ່ງໃນຫ້ອງຮຽນນານໆກໍ່ບໍ່ໄດ້ແລ້ວ, ມີບາງຄັ້ງ ສົ້ນແລ່ນອອກຕະເຫຼີດອອກຈາກຫ້ອງໄປຢູ່ເດີ່ນໂຮງຮຽນ, ລາວບໍ່ຮູ້ສຶກຕົວຊໍ້າວ່າແສງແດດເຜົາໄໝ້ລາວ ລາວຢາກຢູ່ຄົນດຽວ, ຢາກຢູ່ງຽບໆ. ດຽວນີ້ລາວບໍ່ຖາມຫຍັງຄູເລີຍ ມີໜ້ອຍທີ່ສຸດທີ່ລາວຈະພົວພັນເພື່ອນຮ່ວມຫ້ອງ ມີແຕ່ລົມກັບເພື່ອນຢູ່ຫ້ອງອື່ນທີ່ມາຈາກບ້ານຂະມຸດຽວກັນກັບລາວ.

ເພື່ອນຮ່ວມຫ້ອງຂອງລາວຮູ້ວ່າດີລາວເປັນຄົນດີ, ແຕ່ພວກເຂົາພາກັນເວົ້າວ່າ " ສົ້ນມີການກະທຳແປກໆ ຢາກໃຫ້ລາວຢູ່ກັບພວກເຮົາ ແລະ ບໍ່ໃຫ້ປົບໜີພວກເຮົາ ພວກເຮົາຮັກລາວ ແລະ ຢາກໃຫ້ລາວກັບມາອີກ,ລາວຮູ້ສຶກຕົວຕໍ່າຕ້ອຍນ້ອຍໃຈ ແລະ ພວກເຮົາເອງກໍ່ຮູ້ສຶກເສຍໃຈດ້ວຍ "

ອາຈານສອນຂອງຂ້ອຍ ໄດ້ພະຍາຍາມຕິດຕໍ່ພົວພັນກັບແມ່ຂອງລາວແຕ່ຍັງບໍ່ປະສົບຜົນສຳເລັດເທື່ອ, ລາວຢາກຈະຊ່ວຍສົ້ນ, ລາວຢາກແປງປ່ຽນຊີວິດຂອງສົ້ນໃນໄວນີ້, ສົ້ນເປັນເດັກຊຸ່ມຕົວທີ່ພົບພໍ້ໃນໂຮງຮຽນຮ່ວມ. ຫາກບໍ່ແມ່ນຍ້ອນບັນຍາກາດທາງສັງຄົມ, ສະພາບຂອງຄູອາຈານ ແລະ ເພື່ອນໆຂອງລາວທີ່ໄດ້ມີການປັບປຸງດີແລ້ວດ ສົ້ນອາດອອກໂຮງຮຽນໄປແຕ່ດົນແລ້ວກໍ່ເປັນໄດ້.

## ກໍລະນີສຶກສາ 3 ຄວາມເຈັບປວດທີ່ບໍ່ມີໃຜຮູ້ຂອງດາລົມ.

ດາລົມອາຍຸ 10 ປີ ຕອນທີ່ພວກເຮົາພົບລາວເປັນຄັ້ງທຳອິດ, ລາວຫຼີ້ນເຕັ້ນເຊືອກກັບໝູ່ຜູ້ຍິງດ້ວຍກັນຢູ່ບົນຖະໜົນທີ່ເປື້ອນຂອງບ້ານພວກເຮົາ. ໂອລາວຫຼີ້ນໄດ້ໄວ! ພວກໝູ່ດ້ວຍກັນກອນລາວໜ້ອຍໜຶ່ງ, ຂ້ອຍສັງເກດເບິ່ງກໍ່ບໍ່ເຂົ້າໃຈເປັນຫຍັງຈິ່ງເປັນແນວນັ້ນ.

ຫຼາຍອາທິດຕໍ່ມາພວກເຮົາມັກໄດ້ຍິນສຽງຮ້ອງໄຫ້ທີ່ໜ້າກົວໃນຊ່ວງກາງຄືນ,ສຽງນັ້ນແກ່ຍາວໄປເລື້ອຍໆຈົນຮອດ 2 ຊົ່ວໂມງແລ້ວມັນກໍ່ເກີດຂຶ້ນອີກໃນເວລາ 2-3 ຄືນຕໍ່ມາ ແລະ ກໍ່ເກີດຂຶ້ນທັງກາງເວັນຕື່ມອີກ ຂ້ອຍແປກໃຈ ຫຼື ວ່າເດັກນ້ອຍຖືກໃຜຕີບໍ.?

ວັນຕໍ່ມາຂ້ອຍຖາມນາຍຄູທີ່ຢູ່ຂ້າງບ້ານກ່ຽວກັບສຽງຮ້ອງໄຫ້ນັ້ນລາວເວົ້າວ່ານັ້ນແມ່ນດາລົມບໍ່ມີໃຜຮູ້ຈັກວ່າລາວເປັນຫຍັງຈິ່ງຮ້ອງໄຫ້ " ລາວເປັນບ້າ ແລະ ພວກເຮົາກໍ່ບໍ່ຮູ້ຈະຊ່ວຍລາວແນວໃດ, ລາວຮຽນຊ້າ, ເດັກນ້ອຍບາງຄົນກໍ່ຫົວເຍາະເຍີ້ຍລາວ ."

ຕໍ່ມາເມື່ອຂ້ອຍໄດ້ຍິນສຽງຮ້ອງໄຫ້ຂອງດາລິມຂອ້ຍກໍໄປທີ່ເຮືອນຂອງລາວ ແລະ ຂໍເຂົ້າໄປເບິ່ງລາວ, ລາວຢູ່ໃນອາການທີ່ບໍ່ຮູ້ສຶກຕົວ, ຮ້ອງດ້ວຍຄວາມເຈັບຢ່າງດຸຮ້າຍ ແລະ ບໍ່ອາດມີໃຜເຂົ້າໃກ້ໄດ້. ຂ້ອຍເຂົ້າໄປທາບທາມ ແລະ ຈັບມືຂອງລາວໄວ້ ອີກບໍ່ນານລາວກໍ່ຢຸດຮ້ອງໄຫ້, ລາວອ່ອນເພຍໄປໝົດ.

ແມ່ຕູ້ ແລະ ແມ່ເປັນຄົນທຸກຍາກຈົນ ແລະ ເຈັບໂຊກ ແນ່ນອນວ່າລາວບໍ່ໄດ້ຮັບໂພຊະນາການທີ່ດີ, ດາລິມມີບັນຫາກ່ຽວກັບຕັບຊະນິດໜຶ່ງ ແລະ ຫົວໃຈ, ເພິ່ນເວົ້າໃຫ້ຟັງ ລາວເຈັບເປັນພ້ອມກັບຜິວໜັງ ແລະ ຕາເຫຼືອງລ່າເກືອບທຸກເດືອນ ແລະ ບໍ່ມັກໄປໂຮງຮຽນ " ຂ້ອຍເປັນຄົນຈີ່ຍາກ, ພວກໝູ່ ແລະ ຄູມັກກວນຂ້ອຍ, ຂ້ອຍຊັງໂຮງຮຽນ"

ພວກເຮົາຖາມແມ່ຂອງລາວຖ້າວ່າພວກເຮົາສາມາດເອົາລາວໄປກວດເບິ່ງຕັບ ແລະ ຫົວໃຈນຳທ່ານໝໍ. ຕອນຕົ້ນດາລິມປະຕິເສດບໍ່ຢາກໄປ. ມີໝໍຫຼາຍຄົນສັກຢາໃຫ້ລາວ ແລະ ກໍ່ບໍ່ບອກລາວວ່າເປັນຫຍັງ ຂ້ອຍໃຫ້ສັນຍານກັບລາວວ່າໄປເທື່ອນີ້ບໍ່ມີສັກຢາອີກ. ພວກເຮົາໄດ້ເຂົ້າພົບແພດຊ່ຽວຊານດ້ານຫົວໃຈ, ແພດບອກວ່າລາວມີບັນຫາໜ້ອຍໜຶ່ງເວລາເກີດ ແລະ ຕັບມີປັກກະຕິອາດເປັນເພາະຕັບອັກເສບ, ລາວຕ້ອງກິນອາຫານທີ່ດີ ແລະ ເພີ່ມມິນຕາມິນ " ບາງຄັ້ງການຂາດມິນຕາມິນໃດໜຶ່ງອາດສາມາດເປັນເຫດໃຫ້ເກີດບັນຫາດ້ານຄວາມຮູ້ສຶກຢ່າງຮ້າຍແຮງ ດັ່ງເຊັ່ນ ການຮ້ອງໄຫ້ຂອງລາວ."

ຂ້ອຍຖາມແມ່ຂອງລາວຖ້າດາລິມ ແລະ ອ້າຍຂອງລາວສາມາດມາກິນເຂົ້າແລງນຳຄອບຄົວຂອງຂ້ອຍທຸກມື້ ພວກເຂົາຕອບຕົກລົງ. ພວກເຂົາໄດ້ຮັບມິນຕາມິນ, ຜັກ ແລະ ຊີ້ນທຸກແລງ.ຫຼັງຈາກນັ້ນໜຶ່ງເດືອນສຽງຮ້ອງໄຫ້ກໍ່ຢຸດຕິ ແລະ ກໍ່ບໍ່ໄດ້ຍິນອີກເລີຍ. ສຸຂະພາບຂອງດາລິມດີຂຶ້ນ ແລະ ທຸກຄົນກໍ່ສັງເກດເຫັນ.

ແຕ່ລາວຍັງບໍ່ມັກໂຮງຮຽນ ແລະຄ້າງຫ້ອງອີກ." ຂ້ອຍຈື່ຈຳນວນ ແລະ ໜັງສືບໍ່ໄດ້ດີ.ຂ້ອຍຂຽນກໍ່ບໍ່ໄດ້. "ລາວອ້າງວ່າຂ້ອຍບອກລາວວ່າລາວມີບັນຫາຄືກັບລູກສາວຂອງຂ້ອຍ. ພວກເຮົາຊື້ເຄື່ອງຄິດໄລ່ເລກເປັນຂອງຂັວນວັນເກີດຂອງລາວ. ລາວດີໃຈຫຼາຍພວກເຮົາຊອກຫາຄູສອນຄົນລາວມາສອນເພີ່ມ ໃນເວລາພັກຮຽນປະຈຳປີ ແລະ ພວກເຮົາກໍ່ໄດ້ເອົາລາວໄປເຂົ້າໂຮງຮຽນປະຖົມທີ່ມີຄູມາດຖານດີ. ພວກເຮົາໄດ້ອະທິບາຍໃຫ້ຄູຂອງດາລິມຟັງກ່ຽວກັບບັນຫາຄວາມຈື່ຈຳຂອງລາວ ແລະ ຮ້ອງຂໍໃຫ້ລາວ ສາມາດໃຊ້ເຄື່ອງຄິດໄລ່ເລກ ແລະ ໃຫ້ລາວໄດ້ທ່ອງຈຳສິ່ງຕ່າງໆແບບສັ້ນໆເທົ່ານັ້ນ.

ໃນປີນັ້ນດາລິມຮຽນດີຂຶ້ນ ແລະ ເລີ່ມມັກໂຮງຮຽນ. ປີຕໍ່ມາຄອບຄົວຂອງຂ້ອຍໄດ້ຈາກປະເທດລາວໄປ. ດາລິມຮູ້ສຶກຜິດຫັວງທີ່ສຸດທີ່ພວກຂ້ອຍໄດ້ຈາກໄປ, ລາວບໍ່ຍອມໄປສົ່ງພວກຂ້ອຍທີ່ສະໜາມບິນ.

6 ເດືອນຕໍ່ມາ. ຂ້ອຍກັບຄືນມາລາວອີກ,ໃນຂະນະທີ່ຂ້ອຍລົງຈາກລົດຕັກຊີ, ແມ່ຂອງລາວກໍ່ຟ້າວແລ່ນມາຫາຂ້ອຍ " ດາລິມຕາຍເມື່ອ 2 ອາທິດແລ້ວນີ້. ລາວປ່ວຍ ແລະ ລ່າເຫຼືອງລົງອີກລາວບໍ່ຍອມ ໄປຫາທ່ານໝໍໂດຍບໍ່ມີເຈົ້າ. ລາວໄດ້ຂາດໂຮງຮຽນຫຼາຍ ແລະ ຄູກໍ່ບໍ່ເຂົ້າໃຈບັນຫາຄວາມຈື່ຈຳຂອງລາວ, ພວກໝູ່ຄູ່ກໍ່ລົບກວນຫຼອກລໍ້, ລາວຢາກອອກໂຮງຮຽນ, ລາວຄິດວ່າເຈົ້າຄົງບໍ່ກັບມາຊອກລາວອີກໂສກເສົ້າຫຼາຍ ແລະກໍ່ດັບຄວາມຫັວງລົງ. "

## ກໍລະນີສຶກສາ 4 ຝັນຂອງແມ່ຍັງບໍ່ເປັນຈິງ.

ຂັນທະລີເປັນຄົນມີຄວາມໝັ້ນໃຈ, ສະຫຼາດ, ຮູບຮ່າງນ້ອຍ ແລະ ໜ້າຮັກ. ລາວມີບັນຫາໃນການເບິ່ງສິ່ງຂອງທີ່ຢູ່ໄລຍະໄກ. ແມ່ເປັນຜູ້ໄປຮັບ-ສົ່ງລາວໄປໂຮງຮຽນມັດທະຍົມແຂວງວຽງຈັນເຊິ່ງນັ້ນບໍ່ແມ່ນວຽກທີ່ງ່າຍເລີຍ. ເຖິງຢ່າງນັ້ນກໍ່ຕາມ,

ຄອບຄົວກໍ່ມີພັນທະສະໜັບສະໜູນລາວເມື່ອເຫັນວ່າລາວຍັງມີຄວາມບົ່ງຊ້ອນຢູ່. ພໍ່ຂອງລາວຊ່ວຍສອນພາສາຝຼັ່ງ, ສ່ວນເອື້ອຍຂອງຂັນທະລີຊ່ວຍການຮໍາຮຽນຂອງລາວ. ຂັນທະລີຮຽນດີພໍສົມຄວນ, ລາວຢູ່ອັນດັບທີ 18 ຂອງຈໍານວນນັກຮຽນທັງໝົດ 38ຄົນ. ຄູຈັດໃຫ້ລາວນັ່ງຢູ່ກາງແປ້ນມາແຖວໜ້າ. ສີດໍາມືວທຂອງກະດານເຮັດໃຫ້ລາວອ່ານສິ່ງທີ່ຄູຂຽນບໍ່ໄດ້, ບັນດາຄູສອນຂອງລາວກໍ່ຮູ້ວ່າ ລາວມີບັນຫາ ແຕ່ກໍ່ຊ່ວຍຫັຍງບໍ່ໄດ້. ພວກຄູໄດ້ແຕ່ຊຸກຍູ້ໃຫ້ເພື່ອນຂອງລາວອ່ານໃຫ້. ຄວາມຮັກແພງຊ່ວຍເຫຼືອກັນລະຫ່ວາງເພື່ອນດ້ວຍກັນເຮັດໄດ້ດີ. ຂັນທະລີສະແດງຄວາມຫ້າວຫັນແຂງແຮງ ແລະ ເຕັ້ນເຊືອກໃນເວລາເລີກຫຼິ້ນເພື່ອເຮັດໃຫ້ເພື່ອນເຊື່ອວ່າລາວສາມາດເຮັດສິ່ງທີ່ເພື່ອນໆເຮັດໄດ້ເໝືອນກັນ.

ຂັນທະລີເປັນຄົນຮຽນໄດ້ດີ, ແມ່ຂອງລາວກ່າວ; ແຕ່ລາວຢາກເອົາລູກສາວໄປກວດເບິ່ງສາຍຕາ ແລະ ໃສ່ແວ່ນຕາໃຫ້ແຕ່ຊໍ້າພັດບໍ່ມີເງີນ.ລາວເຊື່ອວ່າຖ້າເຮັດສິ່ງນີ້ຈະຊ່ວຍລູກໄດ້.

ບາງຄັ້ງແມ່ກໍ່ປາດຖະໜາຢາກໃຫ້ມີໃຜຜູ້ໜຶ່ງຊ່ວຍພາລາວໄປໂຮງຮຽນ, ເຖີງແມ່ນວ່າເພື່ອນບ້ານຈະເປັນຄົນມີນໍ້າໃຈ ແລະມັກຊ່ວຍເຫຼືອ ແຕ່ພວກເຂົາເຈົ້າກໍ່ມີບັນຫາຫຼາຍຢ່າງໃນຊີວິດເໝືອນກັນ.

ການຮຽນຮ່ວມໄດ້ດໍາເນີນການແກ້ບັນຫາການເບິ່ງບໍ່ເຫັນຂອງຂັນທະລີເຊັ່ນດຽວກັບບັນຫາຂອງຜູ້ອື່ນໆ. ໂຮງຮຽນໃຫ້ໂອກາດເປັນສ່ວນໜຶ່ງຂອງສັງຄົມ ແລະ ໄດ້ຮັບການສຶກສາ. ແຕ່ວ່າມີຜູ້ໃດແດ່ບໍ່ ຈະຊ່ວຍໃຫ້ຄວາມຕັ້ງໃຈຂອງແມ່ຂັນທະລີກາຍເປັນຈິງ ? ໃຜຈະເປັນຜູ້ໂຄສະນາຊຸກຍູ້ເພື່ອຊ່ວຍຂັນທະລີ?

- ແບ່ງນັກຮຽນອອກເປັນ 8 ກຸ່ມ:

ກຸ່ມທີ 1 ແລະ ກຸ່ມທີ 2 ໃຫ້ອ່ານ ແລະ ວິເຄາະກໍລະນີສຶກສາ 1

ກຸ່ມທີ 3 ແລະ ກຸ່ມທີ 4 ໃຫ້ອ່ານ ແລະ ວິເຄາະກໍລະນີສຶກສາ 2

ກຸ່ມທີ 5 ແລະ ກຸ່ມທີ 6 ໃຫ້ອ່ານ ແລະ ວິເຄາະກໍລະນີສຶກສາ 3

ກຸ່ມທີ 7 ແລະ ກຸ່ມທີ 8 ໃຫ້ອ່ານ ແລະ ວິເຄາະກໍລະນີສຶກສາ 4

- ຄູຢາຍຄໍາຖາມຄົ້ນຄິດໃຫ້ນັກຮຽນໃນແຕ່ລະກຸ່ດັ່ງນີ້:

  1. ພວກນ້ອງຄິດວ່າໃນກໍລະນີການສຶກສາທີ່ໄດ້ອ່ານ ແລະ ຄົ້ນຄ້ວານັ້ນເດັກມີຄວາມຕ້ອງການພິເສດຄືແນວໃດ ?
  2. ຖ້າເປັນຄູຢູ່ໃນຫ້ອງທີ່ມີເດັກພິເສດດັ່ງກ່າວພວກນ້ອງຈະມີວິທີແກ້ໄຂແນວໃດ ? ເພື່ອໃຫ້ການຊ່ວຍເຫຼືອແກ່ເດັກ ຫຼື ແນະນໍາຜູ້ປົກຄອງຂອງເດັກ ?
     - ແຕ່ລະກຸມຂຶ້ນສະເໜີຜົນຂອງການຄົ້ນຄ້ວາຂອງກຸ່ມຕົນ.
     - ຄູສະເໜີແນະເພີ່ມເຕີມບາງຈຸດທີ່ເຫັນຄວນ.

## 3.ໃຈຄວາມ.

ການຈໍາແນກເດັກທີ່ມີຄວາມຕ້ອງການພິເສດຢູ່ໃນຫ້ອງຮຽນທົ່ວໄປ, ຖ້າເປັນເດັກທີ່ມີຄວາມພິການທາງດ້ານຮ່າງກາຍ ພວກເຮົາກໍ່ສາມາດຈໍາແນກໄດ້ງ່າຍ,ແຕ່ສໍາລັບເດັກທີ່ມີບັນຫາທາງດ້ານພຶດຕິກໍາສ່ວນໃຫ່ຍຈະມີຜົນສືບເນື່ອງມາຈາກຄວາມຂັດແຍ່ງຂອງເດັກກັບສະພາບແວດລ້ອມ ຫຼື ຄວາມຂັດແຍ່ງທີ່ເກີດຂຶ້ນພາຍໃນຕົວເດັກເອງ, ພາໃຫ້ເດັກຂາດ

ຄວາມສາມາດໃນການຮຽນຮູ້, ຂາດຄວາມສຳພັນທີ່ດີກັບໝູ່ເພື່ອນ, ມີພຶດຕິກຳທີ່ບໍ່ເໝາະສົມເມື່ອປຽບທຽບກັບເດັກໃນໄວດຽວກັນ, ມີພຶດຕິກຳທີ່ບໍ່ເໝາະສົມທາງອາລົມ, ເດັກທີ່ມີບັນຫາທາງພຶດຕິກຳມີການສະແດງອອກທາງດ້ານການປະພຶດ ເຊັ່ນ : ທຳຮ້າຍຜູ້ອື່ນ, ຂີ້ລັກ, ໃຊ້ສຽງດັງ, ດ້ານບຸກຄະລິກຜິດປົກກະຕິເຊັ່ນ : ມັກເກັບຕົວ ແຍກຕົວອອກຈາກສັງຄົມ ຂາດວຸດທິພາວະ ເຊັ່ນ : ບໍ່ມີກະຕືລືລົ້ນ, ບໍ່ສົນໃຈສິ່ງຮອບຕົວບັນຫາທາງດ້ານສັງຄົມ ເຊັ່ນ : ຄົບເພື່ອນບໍ່ດີ, ມັກໜີໂຮງຮຽນ. ສະນັ້ນ ຄູສອນໃນຫ້ອງຮຽນຮ່ວມຕ້ອງໄດ້ເອົາໃຈໃສ່ພິເສດ ເພື່ອຊ່ວຍເດັກທາງດ້ານການ ສຶກສາແນວຄິດເປັນປົກກະຕິ ແລະ ຕເນື່ອງ.

**ບົດທີ 12**

## ການກຳນົດຊອກຮູ້ຄວາມຕ້ອງການຂອງເດັກທີ່ມີບັນຫາທາງດ້ານສາຍຕາ

### 1. ເດັກທີ່ມີຄວາມບົກຜ່ອງທາງດ້ານເບິ່ງເຫັນ.

ການໃຊ້ຫຼາຍຄຳສັບເພື່ອພັນລະນາຄວາມແຕກຕ່າງ ແລະ ປະເພດຂອງຄວາມພິການສາຍຕາ ເຊັ່ນ: ສາຍຕາສັ້ນ, ຕາຟາງ ແລະ ຕາບອດ. ມີຫຼາຍບັນຫາຂອງເດັກທີ່ແກ້ໄຂໄດ້ຖືກຕ້ອງຢ່າງງ່າຍໆ ດ້ວຍການໃສ່ແວ່ນຕາເມື່ອບັນຫາຫາກຖືກກຳນົດໄດ້. ແຕ່ວ່າ ບາງກໍລະນີຄວາມພິການຈະເຫັນໄດ້ຊັດເຈນວ່າ. ບາງສັນຍານເຕືອນສາມາດສັງເກດໄດ້ບໍ່ຍາກ ແຕ່ກໍ່ເປັນໄປໄດ້ວ່າບາງບັນຫາບໍ່ສາມາດສັງເກດເຫັນໄດ້. ສຳລັບເດັກທີ່ບໍ່ສາມາດມອງເຫັນຄູຄວນປະຕິບັດບາງຢ່າງດັ່ງນີ້:

- ເວລາເດັກເຫຼົ່ານີ້ມາໂຮງຮຽນຄັ້ງທຳອິດ, ຄວນຮັບປະກັນເດັກ ແລະ ຜູ້ປົກຄອງແບບສ່ວນຕົວໃຫ້ເດັກຮູ້ຈັກວ່າທ່ານເປັນໃຜ ດ້ວຍການໂອ້ລົມກັບເດັກ, ອະທິບາຍສິ່ງທີ່ທ່ານເຮັດ ແລະ ໃຫ້ເດັກໄດ້ຈັບຕ້ອງທ່ານ.
- ແນະນຳເດັກທີ່ຢູ່ໃນຫ້ອງຮຽນຊ່ວຍອະທິບາຍໃຫ້ພວກເຂົາຊາບ ກ່ຽວກັບຄວາມຫຍຸ້ງຍາກຂອງເດັກທີ່ບໍ່ເຫັນຮຸ່ງໃຫ້ພວກເຂົາຮູ້ວ່າເດັກຜູ້ນີ້ມາໂຮງຮຽນເໝືອນກັບທຸກໆຄົນ ແລະ ສາມາດເຮັດໄດ້ຫຼາຍຢ່າງ ໂດຍໃຊ້ການລູບຄຳ ແລະ ດົມກິ່ນ, ແນະນຳວ່າເດັກອາດຕ້ອງການຄວາມຊ່ວຍເຫຼືອໃນບາງກິດຈະກຳພິເສດແຕ່ພວກເຂົາສາມາດຮຽນຈາກກັນໄດ້.
- ແນະນຳໃຫ້ເດັກຮູ້ຈັກເພື່ອນຮ່ວມຫ້ອງ. ຖ້າເດັກບໍ່ສາມາດມອງເຫັນໝູ່ຄວນບອກຊື່ຂອງເດັກບາງຄົນໃຫ້ລາວຟັງ, ປ່ອຍໃຫ້ເດັກໄດ້ເວົ້າລົມກັນຈົນກ່ວາເດັກຈະສາມາດຈື່ສຽງ ແລະ ຊື່ກັນ, ໃຫ້ເດັກໄດ້ລູບຄຳແລ້ວບອກຊື່ຜູ້ອື່ນໆອີກ ເພື່ອໃຫ້ເດັກທີ່ມີບັນຫາການມອງເຫັນຮູ້ກັນໝົດທຸກຄົນ.
- ເດັກທີ່ມີບັນຫາການມອງເຫັນບໍ່ສາມາດຮູ້ຈັກວ່າແມ່ນໃຜຢູ່ໃກ້ຕົນ, ເຂົາບໍ່ຮູ້ວ່າໄດ້ພົບກັບໃຜ. ເວລາທ່ານຢູ່ກັບເດັກທີ່ມອງບໍ່ເຫັນຄວນເວົ້າກັບເດັກ ເດັກຈະຮູ້ຈັກວ່າທ່ານຢູ່ກັບເຂົາ. ຄວນບອກນັກຮຽນໃນຫ້ອງໃຫ້ເຮັດໃນລັກສະນະດຽວກັບຄູ.
- ຂຽນຕົວໃຈໃສ່ກະດານ, ສອນໃຫ້ນັກຮຽນຂຽນກະດານແບບດຽວກັບທ່ານເຮັດ.
- ເດັກແຕ່ລະຄົນທີ່ມີບັນຫາການມອງເຫັນມີຄວາມຕ້ອງການຜູ້ຊ່ວຍອ່ານ ເພື່ອຮຽນອ່ານ, ຜູ້ຊ່ວຍອ່ານອາດເປັນເພື່ອນໃນຫ້ອງດຽວກັນ ຫຼື ນັກຮຽນທີ່ຢູ່ຫ້ອງໃຫ່ຍກ່ວາ.
- ເດັກທີ່ມີການມອງເຫັນເລັກນ້ອຍອາດສາມາດຮຽນອ່ານ ແລະ ຂຽນໄດ້ເໝືອນກັບເດັກທົ່ວໄປໃນຫ້ອງ. ຄວນສອນເດັກໃຫ້ຮູ້ຂຽນຕົວໜັງສື ແລະ ຕົວເລກກ່ອນ, ທ່ານສາມາດສອນໃຫ້ເດັກຂຽນດ້ວຍສໍຂາວໃສ່ກະດານນ້ອຍ, ຕິດເສັ້ນເຊືອກໃສ່ກະດານເພື່ອໃຫ້ເດັກສາມາດລູບຄຳ ແລະ ໃຊ້ມັນເປັນເສັ້ນນຳໃນເວລາຂຽນ.
- ຄວນໃຊ້ໜ້າກາກທີ່ເປັນປ່ອງ ( ເຄື່ອງສະເພາະເດັກສາຍຕາບໍ່ຈ້ອມ ) ເພື່ອໃຫ້ເດັກສາມາດຕິດຕາມແຖວ ແລະ ຕອນທີ່ພວມອ່ານ.

#### 1.1 ສັນຍານເຕືອນທີ່ບົ່ງບອກວ່າເດັກມີບັນຫາສາຍຕາ.

- ຕົວຊີ້ບອກທາງກາຍະພາບ ( ທາງນອກ ) ອາດມີຕາແດງ, ສະເກັດບິນເປືອກຕາຢູ່ລະຫ່ວາງຂົນຕາ, ມີຂີ້ຕາ ຫຼື ຕາບວມ, ຕາປຽກ ຫຼື ນໍ້າໝອງ, ຕາອຽງ, ຕານ້ອຍຕາໃຫ່ຍ, ໜັງຕາເກີນ ແລະ ຫ່ຽວແຫ້ງ.
- ນັກຮຽນມັກສີຕາ ຫຼື ໃນຂະນະເຮັດວຽກ.
- ນັກຮຽນສີຕາໃນຂະນະເຮັດວຽກທີ່ຕ້ອງໃຊ້ສາຍຕາຢູ່ໃກ້.
- ນັກຮຽນອັດ ຫຼື ບັງຕາເບື້ອງໜຶ່ງເວລາເບິ່ງ, ອຽງຫົວ ຫຼື ດັນຫົວໄປທາງໜ້າ.
- ພຶດຕິກຳບົນໃບໜ້າຜິດປົກກະຕິ: ນັກຮຽນຫຼີ່ຕາເລື້ອຍໆ , ກະພິບຕາເລື້ອຍໆທຳໜ້າຫົ້ວຄິ້ວຂະໝວດ ຫຼື ມີການພັ້ຽນຂອງໃບໜ້າເວລາອ່ານ.
- ບໍ່ສາມາດວາງ ຫຼື ເກັບວັດຖຸນ້ອຍໆໄດ້.
- ຄວາມຮູ້ສຶກສຳພັດ ຫຼື ບັນຫາຫຍຸ້ງຍາກຂະໜາດເບົາ: ນັກຮຽນອາດຈະສະແດງຄວາມຮູ້ສຶກແບບບໍ່ປົກກະຕິເພື່ອເປີດແສງສະຫ່ວາງດ້ວຍການອັດຕາ ຫຼື ຫຼີ່ຕາ. ນັກຮຽນອາດມີບັນຫາຫຍຸ້ງຍາກໃນການເບິ່ງແສງມົວ ຫຼື ບໍ່ສາມາດມອງເຫັນເມື່ອມີຄວາມມືດ.
- ມີບັນຫາໃນການອ່ານ : ມີຄວາມຫຍຸ້ງຍາກຜິດປົກກະຕິໃນການອ່ານ ຫຼື ເວລາເຮັດວຽກທີ່ຮຽກຮ້ອງໃຫ້ເອົາປື້ມ ຫຼື ວັດຖຸເຂົ້າໃກ້ຕາ. ແຕ່ວ່ານັກຮຽນອາດເຮັດໄດ້ດີຈາກຄຳແນະນຳ ຫຼື ກິດຈະກຳປາກເປົ່າ.
- ນັກຮຽນອາດມີຄວາມຫຍຸ້ງຍາກກັບການຂຽນຄື : ການຂຽນບໍ່ຖືກບ່ອນ.
- ການມີບັນຫາໃນການເບິ່ງໄກອາດເປັນຜົນໃຫ້ນັກຮຽນຫຼີກໜີເດີ່ນຫຼິ້ນ ຫຼື ຫຼີກລ້ຽງກິດຈະກຳທີ່ເປັນເຄື່ອງຈັກທັງໝົດ. ເດັກປະເພດນີ້ອາດມັກການອ່ານ ຫຼື ກິດຈະກຳດ້ານວິຊາການ.

**ກິດຈະກຳ 1**

ອຸປະກອນ.

- ເຈ້ຍຂາວແຜ່ນໃຫ່ຍ.
- ເຟີດຂຽນ.

ວິທີດຳເນີນກິດຈະກຳ.

1. ໃຫ້ນັກຮຽນບອກສະພາບບັນຫາ ແລະ ວິທີປະຕິບັດຕໍເຂົາເວລາມາໂຮງຮຽນຄັ້ງທຳອິດຂອງເດັກທີ່ມີບັນຫາດ້ານສາຍຕາ ?

2. ສັນຍານທີ່ບົ່ງບອກວ່າເຂົາມີບັນຫາດ້ານສາຍຕາ ?

- ນັກຮຽນແບ່ງກຸ່ມ 5-7 ຄົນຄົ້ນຄ້ວາ
- ຕ່າງໜ້າ 2-3 ກຸ່ມນຳສະເໜີ ແລ້ວສົນທະນາຖົກຖຽງ.
- ຄູສະຫຼຸບສັງລວມຮ່ວມກັບນັກຮຽນ ອີງໃສ່ເນື້ອໃນຂ້າງເທິງ ແລະ ເຫດຜົນທີ່ນັກຮຽນແຕ່ລະກຸ່ມອ້າງມາ.

**1.2 ສາເຫດຂອງບັນຫາການສູນເສຍສາຍຕາ.**

ສາຍເຫດທົ່ວໄປມີດັ່ງນີ້:

- ພະຍາດຊຶມເຊື້ອທີ່ຕິດໂດຍແມ່ລະຫ່ວາງຖືພາ 3 ເຖິງ 4 ເດືອນ ທຳອິດ.
- ພະຍາດຊຶມເຊື້ອທີ່ຕິດໂດຍເດັກ ເຊັ່ນ ເ ພະຍາດໝາກແດງ, ໝາກສຸກໝາກໃສ.
- ການຂາດສານອາຫານຂອງແມ່ ຫຼື ຕອນເປັນເດັກ ( ການກິນໝາກໄມ້ສີຂຽວ, ສີ ເຫຼືອງ ແລະ ຜັກຊະນິດຕ່າງໆ ຈະຊ່ວຍປ້ອງກັນຕາ )
- ການຊຶມເຊື້ອຕາ.
- ການບາດເຈັບຕາ.
- ເນື້ອງອກໃນສະໝອງທີ່ກະທົບປະສາດຕາ.
- ການກະທົບຂອງສະໝອງ.
- ການບອດຍ້ອນຂາດມິນຕາມິນ A ໃນອາຫານທີ່ຮັບປະທານ ( Xerophtalmia)
- ການບອດທາງນ້ຳທີ່ມີສາເຫດມາຈາກການອາບນ້ຳທີ່ມີເຊື້ອພະຍາດ.

ກິດຈະກຳ 2

ອຸປະກອນ.

- ເຈ້ຍຂາວແຜ່ນໃຫ່ຍ.
- ເຟີດຂຽນ.

ວິທີດຳເນີນກິດຈະກຳ.

- ຄູຕັ້ງກະທູ້ “ ໃຫ້ນັກຮຽນບອກສາເຫດຂອງບັນດາດ້ານສາຍຕາ ” ?
- ນັກຮຽນແບ່ງກຸ່ມ 5-7 ຄົນຄົ້ນຄ້ວາ
- ຕ່າງໜ້າ 2-3 ກຸ່ມນຳສະເໜີ ແລ້ວສົນທະນາຖົກຖຽງ.
- ຄູສະຫຼຸບສັງລວມຮ່ວມກັບນັກຮຽນ ອີງໃສ່ເນື້ອໃນຂ້າງເທິງ ແລະ ເຫດຜົນທີ່ນັກຮຽນແຕ່ລະກຸ່ມອ້າງມາ.

**1.3 ການປັບຫ້ອງຮຽນ : ການກະທຳທີ່ຄູສາມາດເຮັດ .**

ຊອກຮູ້ວ່າ ບ່ອນໃດເປັນບ່ອນດີທີ່ສຸດສຳລັບເດັກເພື່ອໃຫ້ເຫັນກະດານ, ຍົກຕົວຢ່າງ : ເມື່ອເວລານັ່ງຢູ່ທາງໜ້າຫ້ອງຮຽນ.

- ບໍ່ຄວນໃຫ້ແສງສະທ້ອນໃສ່ກະດານ ແລະ ຄວນຮັບປະກັນວ່າສໍຂາວທີ່ຂຽນໃສ່ກະດານນັ້ນແຈ່ມແຈ້ງ.
- ຖ້າຫາກສາຍຕາຂອງເດັກແພ້ແສງ, ໃຫ້ລາວຍ້າຍອອກຈາກປ່ອງຢ້ຽມ, ໃຫ້ລາວໃສ່ໝວກຍາວເພື່ອເປັນຮົ່ມສາຍຕາ ຫຼື ໃຫ້ລາວໃຊ້ແຜ່ນກະດານບັງເປັນຮົ່ມເວລາອ່ານ ແລະຂຽນ.

- ຄວນຮັບປະກັນວ່າເດັກຮູ້ເສັ້ນທາງໃນບໍລິເວນໂຮງຮຽນ ແລະ ຫ້ອງຮຽນ, ຄູ ແລະ ນັກຮຽນປົກກະຕິຄວນຈູງພິການນັກຮຽນພິການຕາ ໂດຍໃຫ້ລາວຢູ່ດ້ານຫຼັງບ່ຽງໜ້ອຍໜຶ່ງ ແລະ ຈັບຂໍ້ສອກ. ເຕືອນລາວຖ້າມີສິ່ງຂີດຂວາງເຊັ່ນ : ມີຂັ້ນໄດ ຫຼື ທາງແຄບ.

**ກິດຈະກຳ 2**

ອຸປະກອນ.

- ເຈ້ຍຂາວແຜ່ນໃຫ່ຍ.
- ເຟີດຂຽນ.

ວິທີດຳເນີນກິດຈະກຳ.

- ຄູຕັ້ງກະທູ້ " ໃຫ້ນັກຮຽນບອກວິທີປັບສະພາບຫ້ອງຮຽນ ເພື່ອສິດສອນເດັກທີ່ມີບັນຫາດ້ານສາຍຕາ "?
- ນັກຮຽນແບ່ງກຸ່ມ 5-7 ຄົນຄົ້ນຄ້ວາ
- ຕ່າງໜ້າ 2-3 ກຸ່ມນຳສະເໜີ ແລ້ວສົນທະນາຖົກຖຽງ.
- ຄູສະຫຼຸບສັງລວມຮ່ວມກັບນັກຮຽນ ອີງໃສ່ເນື້ອໃນຂ້າງເທິງ ແລະ ເຫດຜົນທີ່ນັກຮຽນແຕ່ລະກຸ່ມອ້າງມາ.

**1.4 ຍຸດທະສາດການສິດສອນ.**

- ຂຽນໂຕໃຫ່ຍໃສ່ກະດານ ຫຼື ໃຊ້ເຄື່ອງປະຈັກຕາ. ການໃຊ້ສໍສີຂຽນກໍ່ສາມາດໃຊ້ໄດ້. ປ່ອຍໃຫ້ເດັກຫຍັບເຂົ້າໃກ້ກະດານຫຼື ອຸປະກອນສິດສອນ ເພື່ອໃຫ້ພວກເຂົາເຫັນໄດ້ງ່າຍ.
- ອ່ານແຮງໆ ສິ່ງທີ່ຂຽນໃສ່ກະດານ.
- ກະກຽມອຸປະກອນການສອນທີ່ເດັກສາມາດອ່ານໄດ້ງ່າຍຂຶ້ນເຊັ່ນ : ວ່າ ອຸປະກອນສິ່ງພິມຂະໜາດໃຫ່ຍກ້ວາງ, ນັກຮຽນຜູ້ອື່ນໆ ສາມາດຊ່ວຍເຫຼືອໃນການກະກຽມສິ່ງເຫຼົ່ານີ້ ຫຼື ວ່າ ເຂົາອາດຈະເຮັດໂຟໂຕໂກປີຂະຫຍາຍຮູບໃຫ້ໃຫ່ຍຂຶ້ນ ຫຼື ພິມໃສ່ຕົວພິມຂະໜາດໃຫ່ຍຈາກຄອມເພີເຕີ. ສິ່ງດັ່ງກ່າວຈະສາມາດຊ່ວຍໃນການອ່ານຂອງນັກຮຽນທີ່ມີບັນຫາທາງດ້ານສາຍຕາ.
- ນັກຮຽນບາງຄົນອາດມີບັນຫາໃນການເບິ່ງແຖວປຶ້ມຂຽນ. ເຂົາຄວນໄດ້ຮັບປຶ້ມຂຽນທີ່ມີເສັ້ນແຖວໜາ.
- ເດັກບາງຄົນໄດ້ຮັບຜົນປະໂຫຍດຈາກການໃຊ້ເຄື່ອງຂະຫຍາຍໃນການອ່ານ.
- ຊຸກຍູ້ເດັກໃຫ້ໃຊ້ໄມ້ຊີ້ ຫຼື ໃຊ້ນີ້ວມືເວລາອ່ານ. ປົກປິດສ່ວນທີ່ບໍ່ໄດ້ອ່ານຈິ່ງໄວ້ແຕ່ສ່ວນທີ່ພວມອ່ານ. ໃຫ້ໃຊ້ກະດານຕັ້ງປຶ້ມເພື່ອປ້ອງກັນການສະທ້ອນແສງ.
- ເດັກທີ່ບັນຫາສາຍຕາ ( ບໍ່ເຫັນຮຸ່ງດີ ) ຈຳເປັນຕ້ອງຮຽນໂດຍຜ່ານການສຳພັດ ແລະ ການຟັງໄປພ້ອມໆກັນພວກເຂົາຄວນໄດ້ຮັບໂອກາດໃນການຈັບສິ່ງຂອງ.
- ຈັບຄູ່ກັບເດັກທີ່ສາຍຕາດີ ຜູ້ທີ່ສາມາດຊ່ວຍເຫຼືອໃນການຈັດຕັ້ງການຮຽນຮູ້, ເພື່ອນທີ່ຈັບຄູ່ກັນອາດສາມາດຊ່ວຍຫາໜ້າປຶ້ມທີ່ຖືກຕ້ອງ, ລື້ມຄືນຄຳແນະນຳຂອງຄູ ແລະ ອື່ນໆ.

- ໃຫ້ຄໍາເວົ້າຊົມເຊີຍ ຫຼື ແຕະເບົາໆເພື່ອໃຫ້ກໍາລັງໃຈເດັກ.
- ໃຊ້ຊື່ຂອງນັກຮຽນໃນລະຫ່ວາງມີການສົນທະນາເພື່ອໃຫ້ເດັກຮູ້ວ່າໃຜພວມເວົ້າຢູ່.
- ຄວນມີລູກຄິດ ( Abacus )ໄວ້ໃຫ້ເດັກໃນຊົ່ວໂມງຮຽນຄະນິດສາດ.
- ສາມາດອັດເທັບ ບັນດາບົດຮຽນທີ່ສອນໃສ່ກະແຊັດສໍາລັບຮຽນຄືນເວລາຢູ່ບ້ານ ຫຼື ເປັນການທົບທວນບົດຮຽນຄືນ. ນັກຮຽນທີ່ມີປະສົບການຫຍຸ້ງຍາກໃນການຂຽນກໍສາມາດສະໜອງຂໍ້ມູນທາງເທັບຟັງສຽງ, ປື້ມຮຽນທີ່ອັດໃສ່ເທັບບາງຄັ້ງກໍ່ມີຢູ່ໃນຫ້ອງສະໝຸດ.

## 2. ການປັບສະພາບແວດລ້ອມຫ້ອງຮຽນຮ່ວມ

ການວັດແທກສາຍຕາແມ່ນໃຫ້ເດັກຢືນ ຫຼື ນັ່ງຫ່າງຈາກແຜ່ນປ້າຍວັດແທກໄລຍະ 6 ແມັດ ແລະ ຄວນແທກເທື່ອລະເບື້ອງ ໂດຍໃຊ້ອຶ້ງມືປິດຕາຂ້າງໃດຂ້າງໜຶ່ງໄວ້ ແລ້ວໃຫ້ເດັກອ່ານຕົວໜັງສື “ E” ຫຼື ຕົວເລກ ນັບແຕ່ຕົວໃຫ່ຍສຸດ ຫາຕົວນ້ອຍຕາມລໍາດັບ ຖ້າເດັກສາມາດອ່ານໄດ້ແຖວທີ 4 ຢ່າງໜ້ອຍຂຶ້ນໄປຈົນຮອດແຖວທີ 7 ຫຼື ລະດັບສາຍຕາຢູ່ລະຫ່ວາງ 6/6-6/18 ສະແດງວ່າສາຍຕາປົກກະຕິ. ຖ້າເດັກສາມາດອ່ານໄດ້ແຕ່ແຖວທີ1 ຫາແຖວທີ 3ຫຼື ລະດັບສາຍຕາຢູ່ລະຫ່ວາງນ້ອຍກ່ວາ 6/18-6/60 ສະແດງວ່າສາຍຕາພິການ ຫຼື ສາຍຕາບົກຜ່ອງບໍ່ຮ້າຍແຮງ. ຖ້າເດັກບໍ່ສາມາດອ່ານໄດ້ແຖວທີ 1 ຫຼື ລະດັບສາຍຕາຕໍ່າກ່ວາ 6/60 ສະແດງວ່າສາຍຕາພິການ ຫຼື ສາຍຕາບົກຜ່ອງຮ້າຍແຮງ.

ການຈັດສະພາບໃນຫ້ອງຮຽນຕ້ອງໃຫ້ມີແສງສະຫວ່າງພຽງພໍ, ຈັດນັກຮຽນຜູ້ທີ່ສາຍຕາບໍ່ດີມານັ່ງທາງໜ້າເພື່ອໃຫ້ນັກຮຽນສະດວກໃນການເບິ່ງເຫັນ.

## 3. ຍຸດທະສາດໃນການສິດສອນເດັກຕາບອດ.

ເດັກຕາບອດບໍ່ສາມາດມອງເຫັນ ຫຼື ເຫັນໄດ້ໜ້ອຍທີ່ສຸດ : ພວກເຂົາອາດສາມາດຮູ້ແສງຄວາມມືດເທົ່ານັ້ນ, ຂໍ້ແນະນໍາຂ້າງເທິງສາມາດນໍາໃຊ້ໄດ້ເໝືອນກັນກັບສິ່ງເຫຼົ່ານີ້. ແຕ່ຍັງມີສິ່ງອື່ນອີກທີ່ຄວນພິຈາລະນາ.

- ເດັກຕາບອດຄວນຮຽນອັກສອນຟູ ( Braille ) ນີ້ເປັນການໃຫ້ພາຫະນະຂອງການອ່ານ ແລະ ຂຽນ . ອັກສອນຟູສາມາດຜະລິດໄດ້ໂດຍກົງໃສ່ເຄື່ອງພິມອັກສອນຟູ. ອັກສອນຟູຍັງສາມາດຜະລິດໄດ້ຈາກເຄື່ອງຄອມເພີເຕີ ແລະ ພິມອອກມາດ້ວຍເຄື່ອງພິມອັກສອນຟູ .ເມື່ອເດັກສາມາດໃຊ້ອັກສອນຟູ, ເດັກຈະສາມາດຮຽນຄຽງຄູ່ໄປກັບເດັກຕາດີໄດ້. ໃນກໍລະນີນີ້ຄູກໍ່ຕ້ອງຮຽນຮູ້ອັກສອນຟູເຊັ່ນກັນ.
- ພາບນູນສາມາດແຕ້ມໃສ່ເຈ້ຍອັກສອນຟູໄດ້ ໂດຍໃຊ້ແຜ່ນຮອງພິເສດ ແລະ ເຂັມສະໂຕລັສຜະລິດພາບຫລຸບໂນນທີ່ສາມາດສໍາພັດໄດ້, ພາບໃນລັກສະນະດຽວກັນນີ້ຍັງສາມາດຜະລິດໄດ້ດ້ວຍການນໍາໃຊ້ວັດຖຸທ້ອງຖິ່ນເຊັ່ນ: ເຊືອກ, ຊາຍ, ໄມ້ ແລະ ແກ່ນພືດ, ຄູສາມາດລໍາດັບການຊ່ວຍເຫຼືອຂອງເດັກຕາດີໃນການຜະລິດສື່ການສອນ. ສື່ການສອນເຫຼົ່ານີ້ສາມາດຊ່ວຍເດັກອື່ນໆນໍາອີກ.
- ລູກຄິດ, ມັນຊ່ວຍເດັກທຸກຄົນໃນການຮຽນຄະນິດສາດ.

- ເດັກຕາບອດຈຳເປັນຕ້ອງຮຽນການເຄື່ອນທີ່ໂດຍຜ່ານກິດຈະກຳເພື່ອໃຫ້ເຂົ້າໃຈສິ່ງທີ່ຕ້ອງເຮັດ, ຄູຄວນວາງທ່າທີ່ຖືກຕ້ອງ.
- ເດັກຕາບອດຄວນໄດ້ຮັບການສົ່ງເສີມໃນການຍ່າງທີ່ເປັນເອກະລາດພາຍໃນໂຮງຮຽນໂດຍໃຊ້ໄມ້ເທົ້າ, ໄມ້ເທົ້າຄວນມີຄວນຍາວຈາກພື້ນໄປຫາເຄິ່ງກາງລະຫ່ວາງແຂນສອກກັບແອວ. ໄມ້ເທົ້າທີ່ສັ້ນເກີນໄປຈະເຮັດໃຫ້ຜູ້ໃຊ້ກົ່ງຫຼັງເວລາຍ່າງ, ບໍ່ຄວນຍ້າຍສິ່ງກີດຂວາງຕະຫຼອດເວລາໃນເມື່ອເດັກພວມເຝິກເພື່ອເຄື່ອນທີ່ອ້ອມມັນ. ອາດຈະມີການຕຳ ແລະ ລົ້ມ; ບໍ່ຄວນໄປຫຍຸ້ງຫາກເຫັນມັນເກີດຂຶ້ນຄືແນວນັ້ນ.
- ທັກສະໃນການດຳລົງຊີວິດປະຈຳວັນ ເຊັ່ນ : ການແຕ່ງກິນ ເປັນສິ່ງທີ່ເຮັດໃຫ້ຄົນຕາບອດຫຍຸ້ງຍາກເປັນພິເສດ , ເຖິງຍາມໃດກໍ່ຕາມ, ເດັກກໍ່ຈຳເປັນຕ້ອງຮຽນຮູ້ທັກສະເຫຼົ່ານີ້ເປັນຂັ້ນຕອນ. ເລີ່ມຈາກກິດຈະກຳທີ່ມີຄວາມຊ່ຽງຕ່ຳກ່ອນທີ່ຈະກ້າວໄປສູ່ກິດຈະກຳທີ່ມີຄວາມຊ່ຽງຈາກການຖືກໄຟໄໝ້.
- ເມື່ອທ່ານໄດ້ຂໍ້ສັງເກດຕ່າງໆແລ້ວ, ການປັບ ແລະ ຍຸດທະສາດຫລາຍຢ່າງຈະສາມາດໃຫ້ຄວາມສະດວກໃນການຮຽນຮູ້ຂອງເດັກທັງໝົດໃນຫ້ອງ, ໂດຍມີການພິຈາລະນາເຖິງວິທີທີ່ສາມາດຫລຸດຜ່ອນອຸປະສັກກີດຂວາງການຮຽນຮູ້ປະສົບການຂອງເດັກຕາບອດ, ທ່ານສາມາດປັບປຸງການສິດສອນເດັກທຸກຄົນຂອງທ່ານ.

**ກິດຈະກຳ 3** ອຸປະກອນ.

- ເຈ້ຍຂາວແຜ່ນໃຫ່ຍ.
- ເຟີດຂຽນ.

ວິທີດຳເນີນກິດຈະກຳ.

- ຄູຕັ້ງກະທູ້ “ ໃຫ້ນັກຮຽນບອກວິທີສິດສອນເດັກທີ່ມີບັນຫາດ້ານສາຍຕາ ແລະ ເດັກຕາບອດ
- ນັກຮຽນແບ່ງກຸ່ມ 5-7 ຄົນຄົ້ນຄ້ວາ
- ຕ່າງໜ້າ 2-3 ກຸ່ມນຳສະເໜີ ແລ້ວສົນທະນາຖົກຖຽງ.

ຄູສະຫຼຸບສັງລວມຮ່ວມກັບນັກຮຽນ ອີງໃສ່ເນື້ອໃນຂ້າງເທິງ ແລະ ເຫດຜົນທີ່ນັກຮຽນແຕ່ລະກຸ່ມອ້າງມາ.

**3. ໃຈຄວາມ.**

ໂດຍທົ່ວໄປເດັກທີ່ມີບັນຫາດ້ານສາຍຕາຈະມີລັກສະນະແຕກຕ່າງກັນ ແລະ ສາມາດແບ່ງອອກເປັນ 3 ປະເພດຄື : ສາຍຕາສັ້ນ, ຕາຟາງ ແລະ ຕາບອດ, ບາງກໍລະນີແກ້ໄຂໄດ້ງ່າຍໂດຍການໃຊ້ແວ່ນຕາ.ສຳລັບເດັກຕາບອດຄູຄວນເອົາໃຈໃສ່ແນະນຳໃຫ້ເດັກຮູ້ຈັກກັບຄູ ແລະເພື່ອນຮ່ວມຫ້ອງດ້ວຍສຳນຽງ ແລະ ການສຳພັດ. ຄູສາມາດປັບຫ້ອງຮຽນ ແລະ ປັບວິທີການສິດສອນແບບງ່າຍໆໄດ້ສຳລັບເດັກທີ່ເບິ່ງບເຫັນດີເຊັ່ນ: ໃຫ້ເດັກນັ່ງໃກ້ກະດານ, ບໍ່ໃຫ້ມີແສງສະທ້ອນໃສ່ກະດານ ແລະ ສິ່ງທີ່ຂຽນໃສ່ກະດານຕ້ອງສາມາດອ່ານໄດ້ງ່າຍໂດຍການຂຽນໂຕໃຫ່ຍຂຶ້ນ ແລະ ກະດານບໍ່ເປື້ອນ, ສ່ວນເດັກຕາບອດຄວນກຽມເຂົາໃຫ້ຮູ້ຈັກຂຽນແລະ ອ່ານອັກສອນຟູກ່ອນເຂົ້າຮຽນຈະເປັນການດີທີ່ສຸດ ແລະ ຄູກໍ່ຕ້ອງຮຽນຮູ້ອັກສອນດັ່ງກ່າວເໝືອນກັນ.

## ຄຳຖາມ

1. ມີສັນຍານເຕືອນຄືແນວໃດ ?ທີ່ບົ່ງບອກວ່າເດັກມີບັນຫາສາຍຕາ?
2. ສາເຫດຂອງການສູນເສຍສາຍຕາມີຄືແນວໃດ?
3. ການປັບຫ້ອງຮຽນມີຄວາມຈຳເປັນ ຫຼື ບໍ່ຖ້າມີຄວນປະຕິບັດຄືແນວໃດ?
4. ຍຸດທະສາດການສອນເດັກທີ່ມີບັນຫາສາຍຕາຄວນເຮັດແນວໃດ?
5. ຍຸດທະສາດການສອນຄົນຕາບອດຄວນເຮັດແນວໃດ ?

# ບົດທີ 13

# ການກຳນົດຊອກຮູ້ຄວາມຕ້ອງການຂອງເດັກທີ່ມີບັນຫາການໄດ້ຍິນ

## 1. ເດັກທີ່ບົ່ງບອກທາງດ້ານການໄດ້ຍິນ.

ພວກເຮົາມັກຈະສັນຕິຖານແລະ ເຂົ້າໃຈວ່າເດັກສາມາດໄດ້ຍິນທັງທີ່ຄວາມເປັນຈິງແລ້ວເຂົາອາດມີບັນຫາໃນການໄດ້ຍິນ . ເດັກບໍ່ສາມາດບອກພວກເຮົາວ່າພວກເຂົາມີບັນຫາໃນການຟັງຍ້ອນເຂົາອາດບໍ່ຮູ້ແນ່ຊັດວ່າສິ່ງທີ່ໄດ້ຍິນນັ້ນແມ່ນຫຍັງ. ການສູນເສຍການໄດ້ຍິນຂັ້ນເບົາຈະມີທົ່ວໄປຫຼາຍກ່ວາການໝວກສະນິດໃນໝູ່ປະຊາກອນນັກຮຽນ, ຄູຄວນຈື່ໄວ້ອີກວ່າບາງບັນຫາໃນການໄດ້ຍິນເກີດຂຶ້ນ ແລະ ກໍ່ຫາຍໄປ ເຮັດໃຫ້ເດັກໂອນອຽງ ມີການຕິດເຊື້ອທາງຫູບໍ່ຫາຍ ແລະ ການໄດ້ຍິນຂອງເຂົາກໍ່ໄດ້ຮັບຜົນກະທົບ.

ເດັກທີ່ບັນຫາການໄດ້ຍິນອາດຈະ .

- ມີຄວາມຕັ້ງໃຈຕໍ່າ: ຖ້ານັກຮຽນບໍ່ມີຄວາມຕັ້ງໃຈໃນຫ້ອງຮຽນ, ມີຄວາມເປັນໄປໄດ້ທີ່ນັກຮຽນຈະບໍ່ສາມາດໄດ້ຍິນສິ່ງທີ່ເວົ້າ ຫຼື ສຽງທີ່ເດັກໄດ້ຍິນອາດຈະຜິດພ້ຽນ. ເນື່ອງຈາກເຫດຜົນເຫຼົ່ານີ້ເດັກຈະຟັງສິ່ງທີ່ຄູເວົ້າບໍ່ເຂົ້າຄື້ນ ຫຼື ບໍ່ພະຍາຍາມຕັ້ງໃຈຟັງ, ມີໜ້ອຍທີ່ສຸດທີ່ນັກຮຽນອາດຕັ້ງໃຈພິເສດດ້ວຍຄວາມພະຍາຍາມເພື່ອກຳນົດສິ່ງທີ່ພວມເວົ້າ.
- ມີການພັດທະນາດ້ານການເວົ້າ/ພາສາຕໍ່າ: ການເວົ້າບໍ່ທັນຂອດ, ບໍ່ປົກກະຕິ ແລະ ຜິດພ້ຽນອາດເກີດມາຈາກການສູນເສຍການໄດ້ຍິນ ຫຼື ວ່າເດັກຈະເວົ້າແຮງ ຫຼື ຄ່ອຍປົກກະຕິ.

### 1.1 ສັນຍານເຕືອນທີ່ບົ່ງບອກວ່າເດັກມີບັນຫາດ້ານການຟັງ;

ບາງສັນຍານເຕືອນທີ່ບົ່ງບອກວ່າເດັກມີບັນຫາດ້ານການຟັງ ຫຼື ການໄດ້ຍິນ:

- ມີຄວາມຫຍຸ້ງຍາກໃນການຕິດຕາມການແນະນຳ, ເດັກທີ່ມີຄວາມຫຍຸ້ງຍາກຜິດປົກກະຕິໃນການຮັບຟັງການແນະນຳປາກເປົ່າ ອາດມີບັນຫາດ້ານການໄດ້ຍິນ.
- ເດັກອາດມີການຕອບສະໜອງທີ່ດີຕໍ່ກິດຈະກຳທີ່ຈະມອບໝາຍ ເມື່ອໃດຫາກຄູໃຫ້ຄວາມໃກ້ຊິດເຂົາ ຫຼື ໃຫ້ວຽກກິດຈະກຳແບບຂຽນແທນທີ່ຈະເປັນການໃຫ້ແບບປາກເປົ່າ.
- ນັກຮຽນອາດຈະງ່ຽງຫົວໄປມາຊ້າຍ-ຂວາເພື່ອໃຫ້ໄດ້ຍິນດີ.
- ບັນຫາຂອງການໄດ້ຍິນເປັນສາເຫດທີ່ເດັກເຝົ້າເບິ່ງນັກຮຽນຜູ້ອື່ນພວມເຮັດຫຍັງກ່ອນຈະເລີ່ມວຽກຂອງຕົນ ຫຼື ອາດຈ້ອງມອງເບິ່ງເພື່ອນຮ່ວມຫ້ອງ ຫຼື ຈ້ອງເບິ່ງຄູເພື່ອຫາເບິ່ງເງື່ອນໄຂບັນຫາ.
- ເດັກອາດມີຄວາມຫຍຸ້ງຍາກໃນການຟັງເມື່ອຜູ້ອື່ນອ່ານເບິ່ງບົດຮຽນ ຫຼື ເດັກອາດຮ້ອງຂໍໃຫ້ເພື່ອນ ຫຼື ຄູສອນເວົ້າແຮງຂຶ້ນ.
- ບາງຄັ້ງເດັກອາດຕັ້ງຄຳຖາມບໍ່ຖືກ ຫຼື ຕອບບໍ່ໄດ້.
- ເດັກທີ່ສູນເສຍການໄດ້ຍິນຈະມັກເຮັດວຽກໃນກຸ່ມນ້ອຍ, ມັກນັ່ງໃນພື້ນທີ່ຂ້ອນຂ້າງສະຫງົບຂອງຫ້ອງຮຽນ ຫຼື ມັກນັ່ງແຖວໜ້າ.

- ນັກຮຽນອາດຈະອາຍ, ອາດຈະຖອນຕົວ ຫຼື ອາດຈະສະແດງຄວາມດື້ ແລະ ບໍ່ຟັງຄວາມເຊື່ງມັນເປັນປະຕິກິລິຍາຕໍ່ການສູນເສຍການໄດ້ຍິນຂອງນັກຮຽນ.
- ນັກຮຽນອາດອິດອັດ ລັ່ງເລໃນການປະກອບສ່ວນໃນບັນດາກິດຈະກຳປາກເປົ່າ, ເຂົາອາດຈະບໍ່ໄດ້ຫົວນຳໝູ່ຖ້າມີການເວົ້າຕະຫຼົກ ຫຼື ເຂົາອາດບໍ່ເຂົ້າໃຈໃນເລື່ອງທີ່ເວົ້າຂັບຂັນ.
- ນັກຮຽນອາດມັກຢູ່ໂດດດ່ຽວຈາກກິດຈະກຳທາງສັງຄົມ.
- ນັກຮຽນອາດແປຄວາມໝາຍທີ່ສະແດງອອກບົນໃບໜ້າການເຄື່ອນໄຫວຮ່າງກາຍ ແລະຂໍ້ມູນແວດລ້ອມແທນທີ່ຈະເປັນພາສາເວົ້າ ແລະ ຍ້ອນແນວນັ້ນຈິ່ງເຮັດໃຫ້ເຂົາເຮັດການສະຫຼຸບແບບຜິດໆ.
- ນັກຮຽນອາດຈະຈົ່ມຢູ່ເລື້ອຍໆວ່າເຈັບຫູ, ໜາວ, ຮູຄໍໄຄ່ ຫຼື ອາດອາວິດານຄໍໄຄ່ບໍ່ເຊົາ.
- ນັກຮຽນອາດມີນໍ້າໜອງອອກມາຈາກຫູ ຄູຄວນຈຳໄວ້ວ່າຕ້ອງປຶກສາສົນທະນາການສັງເກດຂອງທ່ານກັບຜູ້ປົກຄອງ ແລະ ເອົາຂໍ້ມູນສະທ້ອນກັບພວກເຂົາເພາະເຂົາຮູ້ຈັກລູກຕົນເອງດີທີ່ສຸດ.

  ຂໍ້ມູນເພີ່ມເຕີມ : ການຮູ້ຈັກສັນຍາຍໃນເດັກອ່ອນ.

  ▶ໃນຂະນະທີ່ຍັງເປັນເດັກອ່ອນເດັກຈະມີການສ້າງສຽງປົກກະຕິຄືກັບເດັກອ່ອນແຕ່ວ່າບໍ່ໄດ້ຮຽນປາກຈົນກ່ວາລາວຈະໃຫ່ຍຂຶ້ນ.

  ▶ເດັກບໍສາມາດສັງເກດສຽງໄດ້ຖ້າລາວບໍ່ເຫັນສຽງນັ້ນມາຈາກໃສ.

  ▶ລາວບໍ່ສາມາດປະຕິບັດຄຳສັ່ງ ຫຼື ສິ່ງທີ່ບອກໃຫ້ເຮັດ.

  ▶ຫູເດັກຊຶມເຊື້ອມີໜອງໄຫຼອອກມາ.

  ▶ເດັກຈະສັງເກດສົບຂອງຜູ້ທີ່ກຳລັງເວົ້າ.

  ▶ເດັກງ່ຽງຫູຂ້າງໜຶ່ງເພື່ອໃຫ້ໄດ້ຍິນ.

  ▶ເດັກມັກເວົ້າແຮງ ແລະຈະແຈ້ງ.

  ▶ເດັກມັກຈະງຽບມີລັກສະນະທະຍາຍຄາຍ ແລະ ມັກຢູ່ໂດດ່ຽວ.

  ▶ເດັກອາດຈະບໍ່ສາມາດຮຽນໄດ້ດີເທົ່າທີ່ຄວນຈະເປັນ.

  **ກິດຈະກຳ 1**

  ອຸປະກອນ.

- ເຈ້ຍຂາວແຜ່ນໃຫ່ຍ.
- ເຟີດຂຽນ.

  ວິທີດຳເນີນກິດຈະກຳ.

- ຄູຕັ້ງຄຳຖາມ “ ໃຫ້ນັກຮຽນບອກສະພາບບັນຫາທົ່ວໄປຂອງເດັກທີ່ມີບັນຫາການໄດ້ຍິນ ແລະ ສັນຍານທີ່ບົ່ງບອກວ່າເຂົາມີບັນຫາດ້ານການຟັງ ”?

- ນັກຮຽນແບ່ງກຸ່ມ 5-7 ຄົນຄົ້ນຄ້ວາ
- ຕ່າງໜ້າ 2-3 ກຸ່ມນຳສະເໜີ ແລ້ວສົນທະນາຖົກຖຽງ.

ຄູສະຫຼຸບສັງລວມຮ່ວມກັບນັກຮຽນ ອີງໃສ່ເນື້ອໃນຂ້າງເທິງ ແລະ ເຫດຜົນທີ່ນັກຮຽນແຕ່ລະກຸ່ມອ້າງມາ.

**1.2 ສາເຫດຂອງບັນຫາການໄດ້ຍິນ.**

ເດັກບາງຄົນມີບັນຫາການໄດ້ຍິນມາແຕ່ເກີດ; ບາງຄົນອາດສູນເສຍການໄດ້ຍິນໃນເວລາຕໍ່ມາ ສາເຫດທົ່ວໄປມີດັ່ງນີ້:

1. ກຳມະພັນ( ບັນຫາການໄດ້ຍິນເກີດຂຶ້ນໃນຄອບຄົວໃດໜຶ່ງ ເຖິງແມ່ນວ່າພໍ່ແມ່ຂອງເດັກຈະບໍ່ເປັນ. ໂດຍທົ່ວໄປມັນມັກຈະເກີດກັບເດັກຊາຍຫຼາຍກ່ວາເດັກຍິງໃນບັນດາປະເທດທີ່ຮັ່ງມີ )
2. ແມ່ມີພະຍາດໝາກແດງ( ຫັດເຢຍລະມັນ ) ໃນລະຫ່ວາງການຕັ້ງຄັນອ່ອນ.
3. ຂາດສານໄອໂອດີນໃນທາດອາຫານທີ່ແມ່ກິນ.
4. ການເກີດກ່ອນກຳນົດ.
5. ພະຍາດຊຶມເຊື້ອຫູໂດຍສະເພາະການຊຶມເຊື້ອແບບຊຳເຮື້ອມີໜອງໃນ.
6. ຂີ້ຫູໜາຕັນຊ່ອງຮູຫູ.
7. ເຂດເຫຍື້ອຫຸ້ມສະໝອງອັບແສບ.
8. ໄຂ້ຍຸງຂຶ້ນສະໝອງ ( ໄຂ້ຊັກ ) ແລະ ການກິນຢາເກີນຂະໜາດໃນການປິ່ນປົວ. ເຖິງຢ່າງໃດກໍ່ຕາມ, ໜຶ່ງໃນສາມກໍລະນີທີ່ເປັນສາເຫດຂອງບັນຫາການໄດ້ຍິນຍັງບໍ່ສາມາດຊາບສາເຫດໄດ້.

**ກິດຈະກຳ 2**

ອຸປະກອນ.

- ເຈ້ຍຂາວແຜ່ນໃຫ່ຍ.
- ເຟີດຂຽນ.

ວິທີດຳເນີນກິດຈະກຳ.

- ຄູຕັ້ງກະທູ້ “ ໃຫ້ນັກຮຽນບອກສາເຫດຂອງການໄດ້ຍິນ ”?
- ນັກຮຽນແບ່ງກຸ່ມ 5-7 ຄົນຄົ້ນຄ້ວາ
- ຕ່າງໜ້າ 2-3 ກຸ່ມນຳສະເໜີ ແລ້ວສົນທະນາຖົກຖຽງ.

ຄູສະຫຼຸບສັງລວມຮ່ວມກັບນັກຮຽນ ອີງໃສ່ເນື້ອໃນຂ້າງເທິງ ແລະ ເຫດຜົນທີ່ນັກຮຽນແຕ່ລະກຸ່ມອ້າງມາ.

**1.3 ການປັບຫ້ອງຮຽນ : ການກະທຳທີ່ຄູສາມາດເຮັດ.**

3. ເດັກຄວນນັ່ງໃກ້ຄູເທົ່າທີ່ພໍເປັນໄປໄດ້( ບໍ່ໃຫ້ຫ່າງເກີນ 3 ແມັດ ) ໃຫ້ນັກຮຽນຕັ້ງໃຈກ່ອນທີ່ທ່ານຈະເວົ້າ.

4. ຄູຕ້ອງໝັ້ນໃຈວ່າຕົນຢືນ ຫຼື ນັ່ງຕ້ອງເຊິ່ງໜ້າກັບນັກຮຽນ ຢ່າໃຊ້ປຶ້ມບັງໜ້າເວລາອ່ານ,ເວົ້າໄປນຳເວລາຂຽນກະດານ.
5. ໃຫ້ໝັ້ນໃຈວ່າແສງສະຫ່ວາງບໍ່ໄດ້ມາຈາກດ້ານຫຼັງຂອງທ່ານ ເພາະໃບໜ້າຂອງທ່ານຈະຢູ່ໃນເງົາຮົ່ມ ຄວນເຮັດວຽກໃນແສງສະຫ່ວາງພໍ ເພື່ອໃຫ້ເດັກສາມາດ ເຫັນໜ້າ ມື ແລະ ຮີບສົບ.
6. ນັກຮຽນບາງຄົນໄດ້ຜົນປະໂຫຍດຈາກການໄດ້ເຫັນທັງນາຍຄູ, ສະນັ້ນຕຳແໜ່ງຂອງເດັກໃນຫ້ອງຮຽນຄວນຈັດໃຫ້ສອດຄ່ອງເໝາະສົມ ຫຼື ຈັດໂຕະແບບທີ່ນັກຮຽນອາດສາມາດມອງເຫັນໜ້າກັນໄດ້.
7. ພະຍາຍາມຫຼຸດຜ່ອນສຽງດັງໃນຫ້ອງຮຽນ ຄວນໃຊ້ຫ້ອງທີ່ຢູ່ບ່ອນມີຄວາມງຽບຂອງໂຮງຮຽນ.
8. ເດັກອາດຈະບໍ່ຕັ້ງໃຈໃສ່ສິ່ງໃດໜຶ່ງເປັນເວລານານ, ຊອກວິທີທີ່ຈະໃຫ້ເຂົາຕັ້ງໃຈສົນໃຈສິ່ງທີ່ທ່ານພວມເວົ້າເຂົາຈິ່ງຈະຕ້ອງການຟັງທ່ານ.
9. ເວລາທ່ານທຳການສື່ສານກັບເດັກ, ຄວນໃຫ້ເວລາເຂົາໄດ້ຟັງ ແລະ ໄດ້ຄິດ.
10. ຖ້າເດັກຕອບທ່ານເປັນສຽງອອກມາດ້ວຍຄຳເວົ້າທີ່ບໍ່ຖືກປານໃດ, ທ່ານຄວນເວົ້າຄືນຄຳທີ່ເດັກພະຍາຍາມເວົ້ານັ້ນຢ່າງຖືກຕ້ອງ ແລະ ຊ້າໆ.
11. ຄວນເຄື່ອນໄຫວມືໃນເວລາທ່ານເວົ້າເຊັ່ນ : ການສະແດງສິ່ງໃດໜຶ່ງທີ່ມີຂະໜາດໃຫ່ຍ. ບາງຄັ້ງທ່ານອາດຈະເຄື່ອນຍ້າຍຕົວຂອງທ່ານເວລາເວົ້າ.
12. ການໃຊ້ເຄື່ອງຊ່ວຍຟັງ ຄວນຫຼຸດຜ່ອນສຽງທີ່ມາຈາກອ້ອມຮອບຫ້ອງຮຽນຫຼືກລັ້ງການມີຫຼາຍຄົນເວົ້າພ້ອມໆກັນ.

**ກິດຈະກຳ 3**

ອຸປະກອນ.

- ເຈ້ຍຂາວແຜ່ນໃຫ່ຍ.
- ເຟີດຂຽນ.

ວິທີດຳເນີນກິດຈະກຳ.

- ຄູຕັ້ງກະທູ້ " ໃຫ້ນັກຮຽນບອກວິທີສະພາບປັບຫ້ອງຮຽນເພື່ອສິດສອນເດັກທີ່ມີບັນຫາການໄດ້ຍິນ "?
- ນັກຮຽນແບ່ງກຸ່ມ 5-7 ຄົນຄົ້ນຄ້ວາ
- ຕ່າງໜ້າ 2-3 ກຸ່ມນຳສະເໜີ ແລ້ວສົນທະນາຖົກຖຽງ.

ຄູສະຫຼຸບສັງລວມຮ່ວມກັບນັກຮຽນ ອີງໃສ່ເນື້ອໃນຂ້າງເທິງ ແລະ ເຫດຜົນທີ່ນັກຮຽນແຕ່ລະກຸ່ມອ້າງມາ.

## 2. ການປັບສະພາບຫ້ອງຮຽນຮ່ວມສຳລັບເດັກທີ່ມີບັນຫາທາງດ້ານສາຍຕາ..

- ຖ້າຫາກເຄື່ອງຊ່ວຍຟັງໃຫ້ສະມອງໃຫ້ເດັກແລ້ວຕ້ອງຮັບປະກັນວ່າເດັກໄດ້ໃສ່ມັນ ; ເຄື່ອງນັ້ນເປີດຢູ່ບໍ ແລະ ຖ່ານ. ( ແບັດເຕີຣີ ) ກໍ່ຍັງໃຊ້ໄດ້ບໍ່.

- ໃຊ້ຄໍາສັບ ແລ ປະໂຫຍກງ່າຍດາຍຄຽງຄູ່ກັບການໃຊ້ທ່າທາງ ແລະ ຮູບພາບ ເພື່ອຊ່ວຍໃຫ້ເດັກເຂົ້າໃຈສິ່ງທີ່ທ່ານພວມເວົ້າ.
- ເດັກທີ່ມີບັນຫາການໄດ້ຍິນຮຽນຮູ້ຈາກການເຫັນຫຼາຍກ່ວາຟັງເຖິງແມ່ນວ່າຄູຈະໃຊ້ທັງສອງຢ່າງຄວນສະແດງໃຫ້ເຂົາໄດ້ເຫັນສິ່ງທີ່ທ່ານຄາດຫວັງວ່າຈະໃຫ້ເຂົາເຮັດ,ຄວນໃຊ້ອຸປະກອນທີ່ເປັນຮູບພາບ ຫຼື ບັດສັນຍາລັກ.
- ຈັບຄູ່ນັກຮຽນທີ່ມີບັນຫາໄດ້ຍິນກັບນັກຮຽນທີ່ໄດ້ຍິນດີ, ຄູ່ຂອງລາວສາມາດຊອກຫາໜ້າປື້ມທີ່ຖືກຕ້ອງ; ລື້ມຄືນຄໍາແນະນໍາຂອງທ່ານ ແລະ ອື່ນໆ.
- ສົ່ງເສີມນັກຮຽນທີ່ມີບັນຫາການໄດ້ຍິນເຝົ້າເບິ່ງ ແລະ ຟັງນັກຮຽນຜູ້ອື່ນໃນເວລາຕອບຄໍາຖາມຂອງທ່ານ,ຖ້າພວກເຂົາບໍ່ສາມາດເຫັນນັກຮຽນຜູ້ອື່ນ ແລະ ບໍ່ໄດ້ຍິນຄໍາຕອບທ່ານອາດເວົ້າຄືນສິ່ງທີ່ເຂົາເວົ້າໂດຍທີ່ທ່ານຢູ່ເຊິ່ງໜ້າເດັກທີ່ມີບັນຫາການໄດ້ຍິນ.
- ກວດກາເບິ່ງນັກຮຽນວ່າເຂົາເຂົ້າໃຈສິ່ງທີ່ເຂົາກໍາລັງຈະເຮັດບໍ?
- ເດັກທີ່ມີບັນຫາການໄດ້ຍິນອາດຈະພົບຄວາມຫຍຸ້ງຍາກຫຼາຍໃນສະພາບຂອງກຸ່ມຍ້ອນວ່າການສົນທະນາທັງໝົດສືບຕໍ່ກັນໄປໃນເວລາດຽວກັນໂດຍມີຫຼາຍຄົນເວົ້າ. ຄູສອນສາມາດໝູນໃຊ້ເວລາເຫຼົ່ານີ້ເພື່ອໃຫ້ຄໍາແນະນໍາເຊິ່ງໜ້າຕໍ່ນັກຮຽນທີ່ມີບັນຫາດ້ານການຟັງ.
- ຖ້າວ່າເດັກປາກບໍ່ແຈ້ງ ຫຼື ປາກບໍ່ຂອດ, ຄວນໃຊ້ເວລາຮັບຟັງສິ່ງທີ່ເດັກພະຍາຍາມຈະບອກທ່ານ. ຄວນຊ່ວຍລາວໃນການໃຊ້ຄໍາ ແລະ ໄວຍະກອນທີ່ຖືກຕ້ອງແຕ່ກໍ່ຄວນຊົມເຊີຍຄວາມພະຍາຍາມເວົ້າຂອງເຂົາ.
- ຊຸກຍູ້ໃຫ້ເດັກອີກຜູ້ໜຶ່ງນັ່ງໃກ້ ແລະ ບັນທຶກ.

**3.ຍຸດທະສາດການສິດສອນນັກຮຽນຫູໜວກ.**

ຕໍ່ກັບພວກເດັກຫູໜວກ,ພວກເດັກທີ່ໄດ້ຍິນໜ້ອຍທີ່ສຸດນັ້ນ - ພາຫະນະຕົ້ນຕໍຂອງການສື່ສານຈະຕ້ອງຜ່ານພາສາມື, ການອ່ານຮີບສົບ ຫຼື ການອ່ານ ແລະ ການຂຽນກໍ່ສາມາດນໍາໃຊ້ເປັນພາຫະນະເສີມຂອງການສື່ສານ. ຂໍ້ແນະນໍາທີ່ໄວ້ໃຫ້ກ່ອນນີ້ ສາມາດນໍາໃຊ້ກັບເດັກຫູໜວກ ນອກຈາກນີ້ສາມາດພິຈາລະນາຈາກລຸ່ມນີ້ອີກ.

1. ຄູຈໍາເປັນຕ້ອງຮຽນຮູ້ພາສາມື ເຊິ່ງຖືກໃຊ້ໂດຍຄົນຫູໜວກໃນປະເທດຂອງເຂົາເຈົ້າ. ຄົນຫູໜວກທີ່ໄດ້ຮັບການເຝິກອົບຮົມມາເປັນຜູ້ສອນມີມັກຈະເປັນຄູທີ່ດີທີ່ສຸດ.
2. ເດັກໜຸ່ມຮຽນຮູ້ພາສາມືໄດ້ໄວ ເຖິງວ່າຄູ ແລະ ພໍ່ແມ່ຂອງເຂົາຈະເຮັດບໍ່ຄ່ອຍຖະໜັດປານໃດກໍ່ຕາມ, ຖ້າທ່ານໝັ່ນປະຕິບັດຫຼາຍເທົ່າໃດທ່ານກໍ່ຈະໃຊ້ພາສາມືໄດ້ດີພຽງນັ້ນ.
3. ຄູສາມາດທວນຄືນບົດຮຽນໂດຍຜ່ານພາສາສໍາລັບນັກຮຽນຫູໜວກ ຫຼື ເລືອກໃຊ້ພາສາເວົ້າ ແລະພາສາມື ໃນລະຫວ່າງສອນບົດຮຽນ.

4. ຈັດຄູສອນພາສາມື ໃຫ້ມາໂຮງຮຽນສະໝໍ່າສະເໝີ. ຄົນຫູໜວກທີ່ໃຫຍ່ແລ້ວສາມາດນໍາໃຊ້ເປັນອາສາສະໝັກໃນຫ້ອງຮຽນເພື່ອຊ່ວຍເຫຼືອເດັກຫູໜວກ ແລະ ໃຫ້ຄວາມສະດວກການສື່ສານລະຫ່ວາງເດັກ, ຄູ ແລະ ເພື່ອນຮ່ວມຫ້ອງ.
5. ເມື່ອທັກສະດ້ານພາສາຂອງເດັກພັດທະນາຂຶ້ນ, ຄວນນໍາໃຊ້ການອ່ານເຂົ້າມາ ຖືວ່າເປັນການໃຫ້ສື່ທີ່ສໍາຄັນທີ່ສຸດຂອງການຮຽນຮູ້ສໍາລັບເດັກ ແລະ ໃນການສື່ສານກັບຜູ້ອື່ນ.
6. ພະຍາຍາມຮັບປະກັນວ່ານັກຮຽນຫູໜວກໄດ້ຮັບບົດຮຽນທີ່ເປັນບົດຂຽນຈາກຄູ ຫຼື ຈາກ ເພື່ອນ. ຄວນພະຍາຍາໃຫ້ປຶ້ມອ່ານ ແລະ ເອກະສານເລື້ອຍໆເທົ່າທີ່ເປັນໄປໄດ້.

**ກິດຈະກໍາ 4**

ອຸປະກອນ.

- ເຈ້ຍຂາວແຜ່ນໃຫ່ຍ.
- ເຟີດຂຽນ.

**ວິທີດໍາເນີນກິດຈະກໍາ.**

- ຄູຕັ້ງກະທູ້ “ ໃຫ້ນັກຮຽນບອກວິທີສິດສອນເດັກທີ່ມີບັນຫາການໄດ້ຍິນ ”?
- ນັກຮຽນແບ່ງກຸ່ມ 5-7 ຄົນຄົ້ນຄ້ວາ
- ຕ່າງໜ້າ 2-3 ກຸ່ມນໍາສະເໜີ ແລ້ວສົນທະນາຖົກຖຽງ.

ຄູສະຫຼຸບສັງລວມຮ່ວມກັບນັກຮຽນ ອີງໃສ່ເນື້ອໃນຂ້າງເທິງ ແລະ ເຫດຜົນທີ່ນັກຮຽນແຕ່ລະກຸ່ມອ້າງມາ.

**4. ໃຈຄວາມ.**

ເດັກທີ່ມີບັນຫາການໄດ້ຍິນມັກຈະມີຄວາມຕັ້ງໃຈຕໍ່າໃນການຮຽນຮູ້ ເນື່ອງຈາກວ່າພວກເຂົາບໍ່ສາມາດໄດ້ຍິນຊັດເຈນສິ່ງທີ່ຄູເວົ້າ ແລະ ການພັດທະນາທາງດ້ານພາສາ ແລະ ການເວົ້າຈະຊັກຊ້າ. ຄູສາມາດປັບຫ້ອງຮຽນ ແລະ ປັບວິທີການສິດສອນແບບງ່າຍດາຍໄດ້ເຊັ່ນ : ຄູຄວນເວົ້າຢູ່ໃກ້ກັບເດັກເຫຼົ່ານີ້ ຫຼື ເວົ້າແຮງຂຶ້ນ ແລະ ຄູບໍ່ຄວນປິ່ນຫຼັງໃສ່ເດັກເວລາເວົ້າ ບາງຄັ້ງອາດໃຫ້ນັກຮຽນຢູ່ຂ້າງຊ່ວຍເຫຼືອເພີ່ມເຕີມ.ການປ່ຽນແປງການກະທໍາທີ່ຈໍາເປັນຈະເປັນການຊ່ວຍເຫຼືອ ສະໜັບສະໜູນໃຫ້ແກ່ເດັກເຫຼົ່ານີ້ສາມາດຮຽນໃນຫ້ອງຮ່ວມຮຽນ.

## ຄໍາຖາມ:

1. ມີສັນຍານເຕືອນແນວໃດແດ່ທີ່ບົ່ງບອກວ່າເດັກມີບັນຫາດ້ານການໄດ້ຍິນ.
2. ສາເຫດບັນຫາຂອງການໄດ້ຍິນມີຄືແນວໃດ ?
3. ຄວນມີການປັບສະພາບຫ້ອງຮຽນຄືແນວໃດ?
4. ຍຸດທະສາດການສິດສອນນັກຮຽນຫູໜວກມີຄືແນວໃດ

# ບົດທີ 14
# ປະເພດເດັກທີ່ບໍ່ໄດ້ເຂົ້າຮຽນ

## 1. ບາງປະເພດເດັກທີ່ບໍ່ໄດ້ເຂົ້າໂຮງຮຽນ

- ເດັກຊົນເຜົ່າທີ່ບໍ່ໄດ້ເຂົ້າໃຈບົດຮຽນ ຫຼື ປື້ມແບບຮຽນພາສາລາວ
- ເດັກທີ່ບໍ່ເຄີຍຖືກຮຽນຮ້ອງໃຫ້ເຂົ້າຮຽນໃນກິດຈະກໍາ
- ເດັກທີ່ບໍ່ເຄີຍມີສ່ວນຮ່ວມໃນການຮຽນ
- ເດັກທີ່ເບິ່ງກະດານ ຫຼື ປື້ມແບບຮຽນບໍ່ເຫັນ ຫຼື ບໍ່ໄດ້ຍິນຄູເວົ້າ
- ເດັກທີ່ຮຽນອ່ອນ ແລະ ບໍ່ເຄີຍມີໃຜ ພະຍາຍາມຊ່ວຍເຫຼືອເຂົາເຈົ້າ.

ເດັກເລົ່ານີ້ອາດຈະມັກນັ່ງຢູ່ດ້ານຫຼັງຂອງຫ້ອງຮຽນ ແລະ ບໍ່ດົນກໍ່ອາດຈະອອກ ໂຮງຮຽນ ໃນຖານະທີ່ເປັນຄູພວກເຮົາ ຄວນມີຄວາມຮັບຜິດຊອບ ການສ້າງສະພາບແວດລ້ອມໃນການຮຽນຮູ້ໃຫ້ເດັກທຸກຄົນ ສາມາດຮໍ່າຮຽນໄດ້ ເຮັດໃຫ້ເດັກທຸກຄົນຢາກຮຽນ ແລະ ເຮັດໃຫ້ເດັກທຸກຄົນ ຮູ້ສຶກວ່າພວກເຂົາຖືກບັນຈຸຢູ່ໃນຫ້ອງຮຽນ ແລະ ໂຮງຮຽນຂອງພວກເຮົາ.




ຮູບ ເດັກທີ່ບໍ່ມີໂອກາດເຂົ້າໂຮງຮຽນ

## 2.ການຊອກຮູ້ອຸປະສັກທີ່ກີດຂວາງການຮຽນຮ່ວມ.

### 2.1. ຄວາມໝາຍ ແລະ ຄວາມສາຄັນຂອງແຜນທີ່ການສຶກສາບ້ານ

ແຜນທີ່ການສຶກສາບ້ານ ແມ່ນ ແຜນວາດອັນໜຶ່ງ ທີ່ສາມາດຊີ້ບອກທີ່ຕັ້ງຂອງບ້ານ,ເຮືອນສຳນັກງານອົງການຕ່າງໆ ແລະ ອື່ນໆ ພາຍໃນບ້ານ ສາມາດຮູ້ເຖິງສະຖິຕິຂອງເດັກ ໃນເກນອາຍຸ 6- 14 ປີໄດ້ເຂົ້າຮຽນ,ບໍ່ໄດ້ເຂົ້າຮຽນຢູ່ແຕ່ລະຄອບຄົວ.

ແຜນທີ່ການສຶກສາ ເປັນບ່ອນອີງອັນໜຶ່ງທີ່ມີຄວາມສຳຄັນ ຕໍ່ການພັດທະນາເສດຖະກິດ-ສັງຄົມ ພາຍໃນບ້ານ ຖ້າຫາກມີແຜນທີ່ການສຶກສາ ສາມັນຈະຊ່ວຍໃຫ້ພວກເຮົາຮູ້ໄດ້ບັນດາຂໍ້ມູນ,ສະຖິຕິຕ່າງໆ ແລະ ສະພາບການສຶກສາຢູ່ໃນບ້ານ ເປັນຕົ້ນເດັກຢູ່ໃນເກນອາຍຸ 6-14 ປີ ໄດ້ເຂົ້າຮຽນບໍ່ໄດ້ເຂົ້າຮຽນ,ຢູ່ເຮືອນຫຼັງໃດ ແລະ ຍັງເປັນບ່ອນອີງໃຫ້ແກ່ການພັດທະນາການສຶກສາເຮັດໃຫ້ອັດຕາສຸດທິ(ເປີເຊັນເຂົ້າຮຽນຕາມເກນອາຍຸ) ການເຂົ້າຮຽນປະຖົມເພີ່ມຂຶ້ນ ອັດຕາການປະລະການຮຽນ ແລະ ອັດຕາຄ້າງຫ້ອງຫຼຸດລົງ.

ດັ່ງນັ້ນ, ຄພສບ ມີຄວາມຈຳເປັນຕ້ອງໄດ້ສ້າງແຜນທີ່ການສຶກສາຂອງບ້ານ ເພື່ອຕິດຕາມເກັບກຳຂໍ້ມູນ ແລະ ຊຸກຍູ້ຊ່ວຍເຫຼືອເດັກໃນເກນອາຍຸ 6-14 ປີ ທຸກຄົນພາຍໃນບ້ານໄດ້ຮັບການສຶກສາຢ່າງທົ່ວເຖິງ.



ຮູບ : ການວາງແຜນທີການສຶກສາພັດທະນາຂັ້ນບ້ານ

### 2.2. ຄວາມໝາຍ,ຄວາມສຳຄັນຂອງການວາງແຜນພັດທະນາການສຶກສາຂັ້ນບ້ານ.

**1. ຄວາມໝາຍ**

ໝາຍເຖິງຂະບວນການກຳນົດໜ້າວຽກ ທີ່ຈຳເປັນຂອງການຄຸ້ມຄອງ ແລະ ພັດທະນາການສຶກສາຢູ່ໃນບ້ານ ເພື່ອໃຫ້ບັນລຸຕາມຄາດໝາຍທີ່ສຳຄັນຂອງການສຶກສາຂັ້ນບ້ານທີ່ວາງໄວ້.ເຮັດໃຫ້ສະມາຊິກຂອງບ້ານມີຄວາມຮູ້,ມີຄຸນສົມບັດ ແລະ ມີຄວາມສາມາດຂັ້ນພື້ນຖານໃນການດຳລົງຊີວິດ,ມີຄວາມສຸກ ເປັນສະມາຊິກທີ່ດີຂອງສັງຄົມ ແລະ ຂອງຊາດ.

**2. ຄວາມສຳຄັນ**

ການວາງແຜນພັດທະນາການສຶກສາຂັ້ນບ້ານມີຄວາມສໍາຄັນ ແລະ ຈໍາເປັນ ຍ້ອນວ່າ: ມາເປັນການກະກຽມໃນການເຮັດວຽກການແກ້ໄຂບັນຫາທີ່ກ່ຽວຂ້ອງກັບການພັດທະນາການສຶກສາຂອງບ້ານໄວ້ລ່ວງໜ້າຊ່ວຍໃຫ້ການປະຕິບັດວຽກງານທີ່ກ່ຽວຂ້ອງ ກັບ ການພັດທະນາການສຶກສາດໍາເນີນໄປຢ່າງມີຂັ້ນຕອນ ເປັນລະບົບຊ່ວຍໃຫ້ການນໍາໃຊ້ທຶນຮອນ ແລະ ຊັບພະຍາກອນໃນການປະຕິບັດວຽກງານຄຸ້ມຄ່າ ແລະ ປະສິດທິຜົນ ທັງຊ່ວຍໃຫ້ເຮົາຮູ້ຈັກການປະສານງານ, ປະສານແຜນ,ປະສານໂຄງການກັບພາກສ່ວນຕ່າງໆ ເພື່ອດຶງດູດເອົາຄົນຈາກພາກສ່ວນຕ່າງໆ ເຂົ້າມາມີສ່ວນຮ່ວມໃນການປະຕິບັດວຽກງານ ແລະ ສະດວກໃນການກໍາກັບຕິດຕາມ,ປະເມີນຜົນສໍາເລັດຈາກການປະຕິບັດວຽກງານ.

ນອກຈາກນັ້ນ,ການວາງແຜນການສຶກສາຂັ້ນບ້ານ ຍັງມີຄວາມສໍາຄັນອີກຢ່າງໜຶ່ງວ່າ:ມັນເປັນການກໍານົດຢ່າງຈະແຈ້ງຈຸດໝາຍ ຫຼື ໜ້າວຽກທີ່ຕ້ອງການຢາກປັບປຸງ ແລະ ພັດທະນາການສຶກສາຢູ່ໃນບ້ານໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ຄວາມຕ້ອງການ ແລະ ຄວາມອາດສາມາດຂອງຊຸມຊົນຢູ່ໃນບ້ານຊ່ວຍໃຫ້ເຮົາເປັນເຈົ້າການ ໃນດ້ານເວລາ ຫຼີກເວັ້ນການເຮັດວຽກແບບພ້າວຟັ່ງ, ແລ່ນນໍາເວລາຫຼືລໍຖ້າວຽກມາຫາຈຶ່ງເຮັດ ແລະ ຍັງຊ່ວຍໃຫ້ເຮົາສາມາດເຕົ້າໂຮມ ຫຼື ດຶງດູດ ເອົາຄົນຈາກພາກສ່ວນຕ່າງໆເຂົ້າມີສ່ວນຮ່ວມໃນການສ້າງແຜນ ຫຼື ການປະຕິບັດແຜນໃຫ້ໄດ້ຫຼາຍທີ່ສຸດ.

3. **ການວາງແຜນການພັດທະນາການສຶກສາຂັ້ນບ້ານ**

ແມ່ນ ຂັ້ນຕອນໜຶ່ງຂອງຂະບວນການພັດທະນາການສຶກສາຂອງບ້ານ ເຊິ່ງຕາມປົກກະຕິແລ້ວການວາງແຜນພັດທະນາການສຶກສາທີ່ຖືກວິທີນັ້ນ,ຈະຕ້ອງເລີ່ມຈາກ

(1) ການເກັບກາຂໍ້ມູນ,ການວິເຄາະຂໍ້ມູນ, ສະພາບບັນຫາ ແລະ ການການົດວິທີການເພື່ອແກ້ໄຂ ແລ້ວຈຶ່ງນາໄປ

(2) ຂຽນເປັນແຜນ

(3) ປະຕິບັດຕາມແຜນ

(4) ຕິດຕາມ, ທົບທວນຄວາມຄືບໜ້າ ແລະ ສະຫຼຸບຖອດຖອນບົດຮຽນ.





ຮູບ: ການວາງແຜນການສຶກສາພັດທະນາຂັ້ນບ້ານ

# ບົດທີ 15

# ການວາງແຜນສຳລັບການສອນ ແລະ ການຮຽນຮູ້

## 1. ກິດຈະກຳປະຈຳວັນ

ການເຮັດກິດຈະວັດປະຈຳວັນຢ່າງມີລະບົບບໍ່ພຽງແຕ່ຊ່ວຍໃຫ້ເຮົາເຮັດວຽກໄດ້ຢ່າງມີປະສິດທິພາບເທົ່ານັ້ນ ແຕ່ເປັນການສ້າງນິດໃສທີ່ເຮັດໃຫ້ເຮົາບັນລຸເປົ້າໝາຍ ແລະ ປະສົບຜົນສຳເລັດໄດ້. ໃນບົດຄວາມນີ້ເຮົາລວບລວມ ໙ ກິດຈະວັດປະຈຳວັນທີ່ຈະຊ່ວຍປ່ຽນແປງຊີວິດຂອງເຮົາໃຫ້ດີຂຶ້ນພ້ອມທັງເສີມສ້າງສຸຂະພາບກາຍ ແລະ ສຸຂະພາບຈິດໃຫ້ເຮົາກ້າວເຂົ້າສູ້ຄວາມທ້າທາຍໃໝ່ໆທີ່ເຂົ້າມາໃນຊີວິດ ຕາມລາຍລະອຽດດັ່ງລຸ່ມນີ້:

1.1 ຕື່ນນອນໃນຊ່ວງເວລາດຽວກັນເປັນປະຈຳທຸກວັນ

1.2 ອອກກຳລັງກາຍເປັນປະຈຳ

1.3 ໃຊ້ເວລາຢູ່ກັບຄວາມງຽບ

1.4 ອ່ານວັນລະນິດ

1.5 ຈົດບັນທຶກເປັນປະຈຳ

1.6 ຈັດສັນເວລາເປັນສ່ວນໆ

1.7 ແບ່ງເວລາໃນການຫຼິ້ນມືຖື

1.8 ເລີກນິດໃສນອນເດິກ

1.9 ນວດເປັນປະຈຳ

## 2. ຄວາມຮັບຜິດຊອບຂອງເດັກ

ກ່ອນທີ່ຈະເວົ້າເຖິງຄວາມຮັບຜິດຊອບຂອງເດັກ ເປັນຄຳຖາມທີ່ໜ້າຄິດຢູ່ຄຳຖາມໜຶ່ງຄື: ຄວາມຮັບຜິດຊອບເປັນສິ່ງທີ່ເກີດມີຂຶ້ນເອງ ຫຼື ເປັນສິ່ງທີ່ຕ້ອງຮຽນຮູ້ ຈາກທີ່ໄດ້ກ່າວມາແລ້ວ ວ່າຜູ້ທີ່ມີຄວາມຮັບຜິດຊອບທີ່ຈະປະຕິບັດພະລະກິດທີ່ຕົນໄດ້ກະທຳໄດ້ສຳເລັດລຸລ່ວງໄປໄດ້ໂດຍດີ ບໍ່ຕ້ອງມີການຄວບຄຸມ ຫຼື ບັງຄັບຈາກຜູ້ອື່ນ ແລະ ເປັນຜູທີ່ໄດ້ຍອມຮັບຜົນການກະທຳຂອງຕົນເອງທັງຄວາມຮັບຜິດຊອບດັ່ງນັ້ນ, ຖ້າຄວາມຮັບຜິດຊອບເປັນສິ່ງທີ່ເກີດຂຶ້ນເອງ ຖືເປັນສິ່ງທີ່ມີມາແຕ່ກຳເນີດເຊັ່ນກັບລັກສະນະອື່ນໆ ທີ່ໄດ້ຮັບການຖ່າຍທອດຈາກບັນພະບຸລຸດ ກໍ່ຍ່ອມໝາຍຄວາມວ່າເດັກທຸກຄົນທີ່ເກີດມາຈະມີຄວາມຮັບຜິດຊອບ ຫຼື ມີຄວາມຮັບຜິດຊອບຕິດຕົວມາພ້ອມ ໝາຍເຖິງຕໍ່ໄປດ້ວຍວ່າ ຖ້າເດັກຄົນໃດທີ່ພໍ່ແມ່ ຫຼື ບັນພະບູລຸດທີ່ມີຄວາມຮັບຜິດຊອບຫຼາຍ ຫຼື ໜ້ອຍ ເດັກນ້ອຍຄົນນັ້ນກໍ່ຍ່ອມຈະຕ້ອງມີຄວາມຮັບຜິດຊອບຫຼາຍ ຫຼື ໜ້ອຍ ຕິດຕາມໄປນຳ ດ້ວຍທີ່ປະກົດພົບວ່າ ຄວາມຈິງບໍ່ໄດ້ເປັນແນວນັ້ນ ເດັກຈະບໍ່ຮູ້ວ່າອັນໃດເປັນພະລະກິດທີ່ເຂົາຈະໄດ້ເຮັດ ຖ້າບໍ່ໄດ້ເຮັດການບອກເລົ່າ ຫຼື ສັ່ງສອນ ຫຼື ຈະຮູ້ວ່າອັນໃດທີ່ເຂົາໄດ້ເຮັດໄດ້ກະທຳ ແຕ່ຖ້າບໍ່ໄດ້ຮັບການຝຶກແອບໃຫ້ກະທຳເມື່ອເຖິງເວລາອັນສົມຄວນແລ້ວດ້ວຍວິທີການທີ່ເໝາະສົມຄວນ ແລະ ດ້ວຍວິທີການທີ່ເໝາະສົມເຂົາກໍ່ຈະບໍ່ສາມາດປະຕິບັດພະລະກິດທີ່ເຂົາຈະທຳ ດັ່ງນັ້ນ, ການເປັນຜູ້ທີ່ມີຄວາມຮັບຜິດຊອບຈຶ່ງບໍ່ແມ່ນສິ່ງທີ່ເກີດຂຶ້ນເອງແຕ່ເປັນສິ່ງທີ່ຕ້ອງຮຽນຮູ້

## 3. ການວາງແຜນການສອນ

ການວາງແຜນການສອນເປັນການຕຽມການສອນລ່ວງໜ້າ ເຮັດໃຫ້ຄູມີແນວທາງການໃນການສອນໄດ້ຮູ້ວ່າຈະສອນໃນເນື້ອຫາຫຍັງ, ໃນເວລາໃດ, ເພື່ອຈຸດປະສົງອັນໃດ , ສອນໂດຍວິທີໃດ, ໃຊ້ສື່ຫຍັງປະກອບການສອນ ແລະ ການວັດ ແລະ ປະເມີນຜົນດ້ວຍວິທີໃດ ການວາງແຜນການສອນສາມາດເຮັດໄດ້ 2 ລັກສະນະຄື: ການວາງແຜນໄລຍະຍາວແລະ ການວາງແຜນໄລຍະສັ້ນ ໃນການວາງແຜນຕ້ອງສຶກສາວິເຄາະຫຼັກສູດ ແລະ ສຶກສາແນວທາງການຈັດກິດຈະກຳການຮຽນຮູ້ຂອງກຸ່ມສາລະການຮຽນຮູ້ທີ່ກ່ຽວຂ້ອງກ່ຽວກັບວິໃສທັດຖູນນະພາບຜູ້ຮຽນ ຈະຊ່ວຍໃຫ້ການຈັດການຮຽນການສອນສອດຄ່ອງກັບຫຼັກການ ຈຸດໝາຍຂອງຫຼັກສູດ ເພື່ອໃຫ້ການສອນບັນລຸຜົນສຳເລັດຕາມຈຸດປະສົງ ຜູ້ສອນຄວນໄດ້ວາງແຜນ ແລະ ຂຽນແຜນການສອນດ້ວຍຕົນເອງຢ່າງຮອບຄອບ ຊັດເຈນເຖິງແນວທາງການນຳຫຼັກສູດໄປໃຊ້ ໃນຮູບຂອງການຈັດກິດຈະກຳການຮຽນການສອນໃຫ້ມີຄວາມສອດຄ່ອງສຳພັນກັນຂອງອົງປະກອບຂອງການຈັດກິດຈະກຳການຮຽນການສອນ ເພື່ອໃຫ້ບັນລຸດຈຸດມຸ້ງໝາຍຂອງການສອນຕາມຫຼັກສູດ ເມື່ອນຳແຜນການສອນໄປໃຊ້ ຄວນໄດ້ດຳເນີນການສອນຕາມແຜນທີ່ວ່າງໄວ້ ກໍ່ຈະເປັນການວາງແຜນການສອນທີ່ໃຫ້ຄູນຄ່າຢ່າງແທ້ຈິງ.

## 4. ການສິດສອນຢ່າງມີປະສິດທິຜົນໃນຫ້ອງຮຽນທີ່ມີນັກຮຽນຫຼາກຫຼາຍ.

ການຈັດການຮຽນການສອນນັ້ນສາມາດຈັດໄດ້ຫຼາຍຮູບແບບ ເຊິ່ງໃນແຕ່ລະແບບນັ້ນໄດ້ນຳວິທີການຈັດລະບົບການຮຽນການສອນເຂົ້າມາເພື່ອໃຫ້ຂະບວນການຮຽນການສອນ ມີປະສິດທິພາບ ບັນລຸຕາມຈຸດປະສົງທີ່ກຳນົດໄວ້ ເຊັ່ນດຽວກັນກັບການປະກອບກິດຈະການທົ່ວໄປ ຫາກງານໃດທີ່ນຳໃຊ້ວິທີການຈັດລະບົບການທຳງານເຂົ້າໄປ ງານນັ້ນຍ່ອມດຳເນີນໄປດ້ວຍດີ ແລະ ມີປະສິດທິພາບເຊັ່ນດຽວກັນ, ການໃຊ້ວິທີການຈັດລະບົບຕ່າງໆ ລວມທັງງານທີ່ກ່ຽວກັບການຮຽນການສອນນີ້ ສ່ວນໃຫ່ຍຈະຕ້ອງເລີ່ມຕົ້ນຈາກການວາງແຜນ ການຈັດການຮຽນຮູ້ຖືເປັນສ່ວນນຶ່ງຂອງລະບົບການສອນ ທີ່ເນັ້ນການຕຽມການສອນລ່ວງໜ້າ ກ່ອນສອນໂດຍສຶກສາຂໍ້ມູນທີ່ກ່ຽວຂ້ອງ ແລ້ວຈຶ່ງຂຽນເປັນແຜນການສອນ ຫຼື ແຜນການຈັດການຮຽນຮູ້ຢ່າງເປັນລະບົບ ແລະ ສາມາດກວດສອບຂັ້ນຕອນຕ່າງໆໄດ້.

**ຂໍ້ແນະນຳພິເສດກ່ຽວກັບການສິດສອນໃນຫ້ອງຮຽນແບບສ້າງສັນ**

ການປະຕິບັດວິໄນ ໃນທາງບວກຈຳເປັນຕ້ອງໄດ້ຮັບການສະໜັບສະໜູນຈາກການສິດສອນ ແບບທາງບວກ ມີວິທີທີ່ເປັນທາງບວກອີກຫຼາຍໆຢ່າງ ທີ່ທ່ານສາມາດປ້ອງກັນການປະພຶດທີ່ບໍ່ເໝາະສົມ ເມື່ອເວລາທ່ານສິດສອນ ຫຼື ຢ່າງໜ້ອຍກໍ່ເພື່ອຈັດການກັບການປະພຶດນັ້ນຢ່າງມີປະສິດທິຜົນ ແລະ ບໍ່ທຳລາຍບັນຍາກາດໃນຫ້ອງຮຽນຂອງທ່ານ. ໃນຂ້າງລຸ່ມນີ້ມີຂໍ້ແນະນຳ 6 ຢ່າງ. ນອກເໜືອຈາກນີ້ທ່ານສາມາດມີຄຳຄິດອັນໃດອີໄດ້ບໍ່?

1. ໃຫ້ມີຈຸດສຸມ ແລະ ເວົ້າຈາຢ່າງນິ້ມນວນ. ໃຫ້ມີຄວາມແນ່ໃຈວ່າທ່ານໄດ້ເອົາໃຈໃສ່ຕໍ່ທຸກຄົນຢູ່ໃນຫ້ອງຮຽນ ກ່ອນທ່ານຈະເລີ່ມສອນບົດຮຽນຂອງທ່ານ. ໃຫ້ລໍຖ້າເພື່ອຈະເລີ່ມສອນຈົນກວ່າທຸກຄົນໄດ້ມີຄວາມມິດງຽບລົງ. ຄູສອນຜູ້ທີ່ມີປະສົບການຮູ້ຈັກວ່າ ຄວາມມິດງຽບໃນຕອນສອນບົດຮຽນແມ່ນ ພາກສ່ວນທີ່ມີປະສິດມີຜົນທີ່ສຸດ. ການເຂົາເຈົ້າເນັ້ນໃສ່ການລໍຖ້າ ໂດຍຂະຫຍາຍມັນອອກໄປແຕ່ 3 ຫາ 5 ວິນາທີ ພາຍຫຼັງທີ່ຫ້ອງຮຽນໄດ້ມິດງຽບໄປແລ້ວ. ນັກຮຽນຈະສຳນຶກໄດ້ວ່າຫາກຄູສອນລໍຖ້າຄວາມຕັ້ງໃຈຂອງເຂົານານສໍ່າໃດ ເຂົາກໍ່ຈະມີເວລາຫວ່າງໜ້ອຍ ໃນຕອນທ້າຍ

ຂອງຊົ່ວໂມງສອນ. ຫຼັງຈາກຊ່ວງລໍຖ້າແລ້ວ ໃຫ້ເລີ່ມສອນບົດຮຽນໂດຍນຳສຽງຄ່ອຍກວ່າສຽງທຳມະດາ. ຄູສອນຜູ້ທີ່ເວົ້າຈາຈະນີ້ມນວນຈະມີຫ້ອງຮຽນທີ່ສະຫງົບ ແລະ ມີດງຽບກວ່າຫ້ອງອື່ນທີ່ຄູໃຊ້ສຽງດັງແຮງ. ນັກຮຽນຂອງຄູຜູ້ນັ້ນຈະນັ່ງເບັ້ງເພື່ອຈະໄດ້ຍິນສຽງຄູເວົ້າ.

2. ໃຫ້ຄຳແນະນຳໂດຍກົງ. ຄວາມບໍ່ແນ່ນອນຈະເພີ່ມລະດັບຂອງຄວາມຕື່ນເຕັ້ນຢູ່ໃນຫ້ອງຮຽນ. ຄວນດຳເນີນການສອນແຕ່ລະຫ້ອງ ດ້ວຍການບອກນັກຮຽນຂອງທ່ານໂດຍກົງເລີຍວ່າ ຈະມີຫຍັງເກີດຂຶ້ນ. ໃຫ້ສະເໜີໂດຍສັງເຂບວ່າອັນໃດທີ່ທ່ານ ແລະ ນັກຮຽນຂອງທ່ານຈະເຮັດໃນຊ່ວງເວລານັ້ນ. ທ່ານສາມາດຕັ້ງກອບເວລາສຳລັບກິດຈະກຳບາງຢ່າງ. ທ່ານສາມາດປະສົມປະສານການໃຫ້ຄຳແນະນຳໂດຍກົງກັບ ການເນັ້ນເພື່ອລວມເອົາເວລາໃນຕອນທ້າຍຂອງຊ່ວງເວລາດັ່ງກ່າວສຳລັບນັກຮຽນເພື່ອຈະເຮັດກິດຈະກຳຕາມທີ່ເຂົາເຈົ້າເລືອກເອົາ. ທ່ານອາດຈະສິ້ນສຸດ.ການພັນລະນາກິດຈະກຳຂອງຫ້ອງຮຽນດ້ວຍການເວົ້າວ່າ ຄູຄິດວ່າ ພວກເຮົາຈະມີເວລາຈຳນວນໜຶ່ງໃນຕອນທ້າຍຂອງກິດຈະກຳເພື່ອໃຫ້ພວກນ້ອງໄດ້ລົມກັບໝູ່ເພື່ອນ, ໄປຫ້ອງສະໝຸດ ຫຼື ເຮັດວຽກໃຫ້ທັນກັບຫ້ອງອື່ນໆ.

3. ການຊຸກຍູ້ຕິດຕາມ ແລະ ການຊ່ວຍເຫຼືອ. ໃຫ້ຍ່າງວົນວຽນໄປມາ, ໃຫ້ລຸກຂຶ້ນແລ້ວຍ່າງອ້ອມຮອບໄປຕາມຫ້ອງຮຽນ, ໂດຍສະເພາະໃນເວລານັກຮຽນກຳລັງເຮັດບົດເຝິກຫັດພາກຂຽນ ຫຼື ເຮັດວຽກເປັນກຸ່ມກາໃຫ້ກວດເບິ່ງຄວາມຄືບໜ້າຂອງການເຮັດວຽກຂອງເຂົາ. ຢ່າຂັດຈັ່ງຫວະ ຫຼື ພະຍາຍາມປະກາດແບບທົ່ວໄປ ເວັ້ນເສຍແຕ່ວ່າ ທ່ານສັງເກດເຫັນວ່ານັກຮຽນຫຼາຍໆຄົນພົບບັນຫາຍຸ້ງຍາກແບບດຽວກັນ. ໃຫ້ໃຊ້ສຽງທີ່ຄ່ອຍໆ ແລະ ນັກຮຽນຈະຮູ້ສຶກຊາບຊຶ້ງຕໍ່ການເອົາໃຈໃສ່ແບບສ່ວນຕົວ ແລະ ໃນທາງທີ່ດີຂອງທ່ານ.

4. ການໃຊ້ສັນຍານແບບບໍ່ເວົ້າຈາ. ຢູ່ໃນບາງຫ້ອງຮຽນ ຄູສອນມີກະດິ່ງນ້ອຍຢູ່ເທິງໜ້າໂຕະຂອງເພິ່ນ. ເມື່ອຄູສັ່ນກະດິ່ງເຖິງວ່າຈະສັ່ນຄ່ອຍໆ ກໍ່ຈະເຮັດໃຫ້ທຸກໆຄົນຕັ້ງໃຈຄູສອນບາງຄົນໄດ້ສະແດງໃຫ້ເຫັນເຖິງວິທີການສະຫຼາດຫຼາຍຢ່າງ ໃນຫຼາຍປີຜ່ານມາໃນການໃຊ້ປະໂຫຍດຈາກ ສັນຍານແບບບໍ່ຕ້ອງເວົ້າຢູ່ໃນຫ້ອງຮຽນ.ຄູບາງຄົນຈະໃຊ້ວິທີເປີດ - ປິດ ສະວິກໄຟແບບໄວໆ. ບາງຄົນເອົາກະດິ່ງໄວ້ໃນຖົງໂສ້ງ, ບາງຄົນໃຊ້ກະດານດ້ວຍສໍຂາວ ຫຼື ສໍດຳ ສັນຍານແບບບໍ່ປາກເວົ້າ ຍັງສາມາດສະແດງອອກທາງໃບໜ້າ, ທ່າທາງຂອງຮ່າງກາຍ ແລະ ສັນຍານມື. ຄວນເອົາໃຈໃສ່ຄັດເລືອກປະເພດຂອງສັນຍານ - ທ່າທາງທີ່ທ່ານໃຊ້ຢູ່ໃນຫ້ອງຮຽນ. ຄວນໃຊ້ເວລາ ເພື່ອອະທິບາຍສິ່ງທີ່ທ່ານຕ້ອງການ. ໃຫ້ນັກຮຽນເຮັດໃນເວລາທ່ານໃຊ້ສັນຍານ - ທາທາງ.

5. ການແລກປ່ຽນ. ບໍ່ມີພຽງແຕ່ທ່ານເທົ່ານັ້ນ ທີ່ຕ້ອງການຢາກຮູ້ກ່ຽວກັບນັກຮຽນຂອງທ່ານເອງ ພວກເຂົາກໍ່ຢາກຮູ້ກ່ຽວກັບຕົວທ່ານ ແລະ ຄວາມສົນໃຈຂອງທ່ານເຊັ່ນດຽວກັນ. ໃນບັນຈຸເອົາບັນດາສິ່ງຂອງສ່ວນຕົວເຂົາໃນຫ້ອງຂອງທ່ານ. ຮູບຄອບຄົວ ຫຼື ສິ່ງຕ່າງໆຂອງງານ ອະດິເລກ ຫຼື ຂອງສະສົມຕ່າງໆທີ່ຢູ່ເທິງໂຕະຂອງທ່ານນັ້ນຈະເປັນຕົ້ນເຫດ. ໃຫ້ມີການສົນທະນາສ່ວນຕົວຂອງນັກຮຽນ. ເມື່ອເຂົາເຈົ້າຮູ້ຈັກທ່ານດີຂຶ້ນ ທ່ານກໍ່ຈະເຫັນວ່າ ບັນຫາຂອງການໃສວິໄນຈະໜ້ອຍລົງ.

6. ການແຊກແຊງຄວາມເອົາໃຈໃສ່ຕໍ່າ. ຄູສອນທີ່ມີປະສິດທິພາບຈະດູແລເອົາໃຈໃສ່ເລື່ອງທີ່ວ່ານັກຮຽນຈະບໍ່ຖືກຍ້ອງຍໍ ສຳລັບການປະພຶດທີ່ເໝາະສົມ ເພື່ອໃຫ້ກາຍເປັນຈຸດສົນໃຈ. ຄູສອນດັ່ງກ່າວຈະຕິດຕາມກຳກັບກິດຈະກຳຢູ່ໃນຫ້ອງ ໂດຍການເຄື່ອນໄຫວໄປມາຮອບຫ້ອງຮຽນ ແລະ ຄາດຄະເນໄດ້ບັນຫາຕ່າງໆກ່ອນມັນຈະເກີດຂຶ້ນ. ວິທີການປະຕິບັດຕໍ່ຜູ້ຮຽນຜູ້ປະພຶດບໍ່ເໝາະສົມນັ້ນແມ່ນ ເຮັດງຽບໆບໍ່ໃຫ້ເປັນສິ່ງສັງເກດເຫັນ. ນັກຮຽນຜູ້ອື່ນໆຮຽນຈະ

ບໍ່ໄດ້ຖືກລົບກວນ. ຕົວຢ່າງ: ຄະນະທີ່ພວມສອນບົດຮຽນໃນຫ້ອງ, ຄູສອນຈະໃຊ້ປະໂຫຍດຈາກວິທີການເອີ້ນຊື່ນັກຮຽນ. ຖ້າຫາກເຫັນນັກຮຽນ ຫຼື ເວົ້າລົມບໍ່ຕັ້ງໃຈມີສ່ວນຮ່ວມ, ຄູສອນກໍ່ພຽງເວົ້າຊື່ນັກຮຽນຜູ້ທີ່ພວມລົມກັນຢູ່ແບບທຳມະຊາດໄປເລີຍ ເຊັ່ນ: ເຈົ້າເຫັນບໍ່, ທ້າວໃຈ, ພວກເຮົາເອົາອັນໜຶ່ງມາໃສ່ໃນຖົງທີ ສິບ ໃນເມື່ອ ທ້າວໃຈ ໄດ້ຍິນຊື່ຕົນເອງ ກໍ່ຈະເຮັດໃຫ້ລາວກັບຄືນມາສູ່ກິດຈະກຳ ແລະ ນັກຮຽນຜູ້ອື່ນຈະບໍ່ສັງເກດເຫັນພິລຸດຫຍັງໝົດ.

# ບົດທີ 16

# ການກວດກາ ແລະ ສອບເສັງລຳລັບເດັກທີ່ມີຄວາມຕ້ອງການ

## 1. ສະພາບທົ່ວໄປການກວດກາ ແລະ ສອບເສັງ

ສະພາບທົ່ວໄປການກວດກາສາລັບເດັກມີຄວາມຕ້ອງການບໍ່ມີຈັກເທື່ອທີວ່າເດັກສອງຄົນ ຈະເໝືອນກັນເຮົາລອງທົບທວນເບິ່ງຫ້ອງຮຽນ ຫ້ອງໜຶ່ງທີ່ເຮົາເຄີຍເຂົ້າຮຽນຂອງນັກຮຽນສອງຄົນໃນຫ້ອງອາດມີໄວອາຍຸເໝືອນກັນ ແຕ່ວ່າພວກເຂົ້າຈະມີສິ່ງເໝືອນກັນທຸກຢ່າງບໍ່ ເປັນໄປບໍ່ໄດ້ທີ່ຈະມີສິ່ງເໝືອນກັນຖ້າເປັນຄືດັ່ງກ່າວ ພວກເຂົາມີຄວາມແຕກຕ່າງກັນຄື:

- ເດັກບາງຄົນອາດຈະສູງ.
- ເດັກບາງຄົນອາດຈະຕົວນ້ອຍ
- ເດັກບາງຄົນຂີ້ອາຍ
- ເດັກບາງຄົນມັກພັດທະໜ້າກ້າຫານ
- ເດັກບາງຄົນຮຽນໄດ້ໄວ້
- ເດັກບາງຄົນຮຽນຊ້າ
- ເດັກບາງຄົນມັກຫຼີ້ກິລາ

  ເດັກບາງຄົນມັກສີລະປະວັນະຄະດີ
- ເດັກບາງຄົນມັກອ່ານ
- ເດັກບາງຄົນບໍ່ມັກ
- ເດັກບາງຄົນຂີ້ດື້
- ເດັກບາງຄົນຄຳຮູແລະອື່ນໆ.

ການສອບເສັງສຳລັບເດັກທີ່ມີບັນຫາທາງດ້ານຮ່າງກາຍຕ້ອງເອົາໃຈສຳລັບຄູທຸກຄົນໃນເວລາສອບເສັງເຮົາຕ້ອງເອົາພິເສດຂອງເດັກພິການຕ້ອງຈະແຍກຕ່າງກັບເດັກທີ່ສົມບູນ ຫຼື ເຮົາຕ້ອງເອົາຄຳສັບງ່າຍໆ ຄວາມໝາຍຈະແຕກຕ່າງກັນແຕ່ສາມາດເສັງນ້ຳກັນໄດ້,ຄວາມພິການມີຫຼາຍສາເຫດເຊັ່ນ: ຕັ້ງແຕ່ກຳເນີດ,ຕາສັ້ນຫຼືຕາບອດ,ແຂນຂາ,ຜິດປົກກະຕິຫຼືສະໝອງພັດທະນາຊ້າ,ຜິດປົກກະຕິ ຄວາມພິການຍັງມີສາຍເຫດມາຈາກອຸປະຕິເຫດເຊັ່ນ:ການຖືກໄຟ້ໃໝ້,ຕົກຈາກທີ່ສູງຫຼືອຸປະຕິເຫດທາງຍົນຖະໜົນເດັກທີ່ປ່ວຍໄຂ້ດ້ວຍພະຍາດທີກ່ຽວຂ້ອງ,ກ້າມຊີ້ນ ໂປລີໂອແລະໄຂ້ຊັກກໍ່ການເປັນເດັກພິການໄດ້.

## 2. ທາງເລືອກໃນການສອບເສັງ

ທາງເລືອກການສອບເສັງສຳລັບເດັກເປັນພິການຫຼາຍບັນຫາແມ່ນຄູມີຄວາມຕ້ອງການພິຂອງເດັກ

ແຕ່ລະຄົນມີຄວາມແຕກຕ່າງກັນບາງຄັ້ງຈະພົບເຫັນໃນເວລາສອນຫຼືສອບເສັງມີຄວາມຍຸ່ງຍາກຕ້ອງຊ່ວຍເຫຼືອພິເສດສໍາລັບເດັກຕ້ອງໃຊ້ເວລາພໍສົມຄວນ ຄູຕ້ອງລົງເລິກຕໍ່ເດັກພິການໃນເວລາສອນ,ຫຼືເອົາເດັກໄປສໍາພາດນໍ້າ ພໍ່ ແມ່ ຂອງເດັກ ຫຼື ພີ່ນ້ອງຂອງເດັກເພື່ອເຂົ້າໃຈຄວາມຍຸ່ງຍາກຂອງເດັກແລະຄອບຄົວຄູຕ້ອງຈໍາເປັນ ຂໍຄໍາປຶກສານໍາຄະນະອໍານວຍການໂຮງຮຽນ,ຂໍໃຫ້ແພດກວດຫຼືຈິດຕະວິທະຍາຊ່ວຍຕີລະຄາສາເຫດຂອງເດັກມີຄສາມຍຸ່ງຍາກໃນເວລານຽນ ຫຼື ສອບເສັງຮ່ວມກັນຊອກວິທີ່ໃຫ້ການຊ່ວຍເລືອສາຍເຫດທີ່ເໝາະສົມໃຫ້ຄູແລະເດັກ.

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ວິທະຍາໄລຄູຫຼວງພະບາງ

ພາກວິຊາ ສາຍຄູປະຖົມ

ເລກທີ......................

ທີ່ຫຼວງພະບາງ, ວັນທີ........................

# ແຜນການສອນລາຍວິຊາ ວິທີສອນຫ້ອງຮຽນຮ່ວມ

## ສົກສຶກສາ 2022-2023

## (Course Syllabus)

| | | | |
|---|---|---|---|
| **ຊື່ຫຼັກສູດ** | ພາສາລາວ: ສາຂາວິຊາ ຄູປະຖົມ | | |
| | ພາສາອັງກິດ: Associate Degree of Primary Teacher Education | | |
| **ຊື່ວິຊາ** | ພາສາລາວ: ວິທີສອນຫ້ອງຮຽນຮ່ວມ | | |
| | ພາສາອັງກິດ: Teaching inclusive education | | |
| **ລະຫັດວິຊາ** | | | |
| **ຈຳນວນ ໜ່ວຍກິດ** | 2(1-2-2) | ຈຳນວນຊົ່ວໂມງ | 48 |
| **ໝວດວິຊາ** | ວິຊາສະເພາະ | | |
| **ສອນປີທີ** | ປີ 1 | ພາກຮຽນທີ | 2 |
| **ພາສາທີ່ນຳໃຊ້** | ພາສາລາວ | | |

| | | | |
|---|---|---|---|
| **ໃນການສອນ** | | | |
| **ວິຊາບັງຄັບທີ່ຕ້ອງຮຽນກ່ອນ** | ບໍ່ມີ | | |
| **ຊື່ອາຈານສອນ 1** | | ເບີໂທລະສັບ | |
| | ທີ່ຢູ່ອີເມວ | | |
| | ຫ້ອງການປະຈຳ/ບ່ອນສັງກັດ | | |
| | ຄູສອນປະຈຳ/ຄູຮັບເຊີນ | | |
| **ຊື່ອາຈານສອນ 2** | | ເບີໂທລະສັບ | |
| | ທີ່ຢູ່ອີເມວ | | |
| | ຫ້ອງການປະຈຳ/ບ່ອນສັງກັດ | | |
| | ຄູສອນປະຈຳ/ຄູຮັບເຊີນ | | |
| **ຄຳອະທິ ບາຍຫຍໍ້ຂອງວິຊາ** | ນັກສຶກສາຈະໄດ້ຮຽນຮູ້ກ່ຽວກັບ: ບັນດານິຕິກຳທີ່ກ່ຽວຂ້ອງ. ຄວາມໝາຍ, ຄຸນລັກສະນະ, ອົງປະກອບ ແລະ ຄຸນປະໂຫຍດຂອງການສຶກສາຮຽນຮ່ວມແລະເປັນເພື່ອນມິດໃນການຮຽນຮູ້. ການສະໜອງການສຶກສາຮຽນຮ່ວມຕາມໂຄງສ້າງຊີດ ແຜນການສອນສໍາລັບການສອນ ແລະ ການຮຽນຮູ້, ການສິດສອນພາສາລາວໃຫ້ເດັກຊົນເຜົ່າ, ການກວດກາ ແລະ ສອບເສັງສໍາລັບສໍາລັບເດັກທີ່ມີຄວາມຕ້ອງການພິເສດແລະ ບັນດາສິ່ງທີ່ຕ້ອງເອົາໃຈໃສ່ໃນສິດສອນສໍາລັບເດັກທີ່ມີຄວາມຕ້ອງການພິເສດ. | | |
| **ຈຸດປະສົງຂອງວິຊາ** | ເມື່ອຮຽນຈົບນັກສຶກສາຄູສາມາດ: ນໍາໃຊ້ບັນດາແນວຄວາມຄິດ, ທິດສະດີຫຼັກການ ໃນການຈັດການຊ່ວຍເຫຼືອສິດສອນໃຫ້ເດັກທີ່ມີຄວາມຕ້ອງການພິເສດ ຫຼື ເດັກພິການໃນຫ້ອງຮຽນທີ່ເປັນການຮ່ວມໄດ້. ສາມາດຈັດການຮຽນ-ການສອນໃຫ້ສອດຄ່ອງຕາມຄວາມຕ້ອງການຂອງເດັກພິເສດ ແລະ ເດັກທີ່ມີແຕກຕ່າງ, ເດັກທີ່ມີຄວາມຫຼາກຫຼາຍໃນຫ້ອງຮຽນໄດ້ ແລະ ສາມາດຊອກຫາຊ່ອງທາງໃນການໃຫ້ການຊ່ວຍເຫຼືອເດັກ | | |

| | |
|---|---|
| | ພິເສດໃຫ້ປະສົບຜົນສຳເລັດໄດ້ຕາມຄວາມຄາດໝາຍ. |
| | **ດ້ານຄວາມຮູ້:** ມີຄວາມຮູ້ທາງດ້ານເນື້ອໃນ ແລະ ບໍລິບົດກ່ຽວກັບການສຶກສາຮຽນຮ່ວມ, ນິຕິກຳ ແລະ ນະໂຍບາຍທີ່ກ່ຽວກັບການສຶກສາຮຽນຮ່ວມ, ຄວາມໝາຍ,ຄວາມສຳຄັນ, ຄຸນລັກສະນະ, ອົງປະກອບຫ້ອງຮຽນຮ່ວມ, ບົດບາດ ຍິງ-ຊາຍ ເຂົ້າໃນການຮຽນ-ການສອນ, ການຮຽນຮ່ວມສຳລັບເດັກທີ່ມີບັນຫາທາງດ້ານພຶດຕິກຳ, ຮ່າງກາຍ, ສາຍຕາ, ການໄດ້ຍິນ. ການສອນພາສາລາວໃຫ້ເດັກຊົນເຜົ່າ |
| **ຄາດໝາຍຜົນການຮຽນຂອງວິຊາ** | **ດ້ານທັກສະ:** ສາມາດຜັນຂະຫຍາຍບັນດາກິດຈະກຳການຊອກຮູ້ ແລະ ການຊ່ວຍເຫຼືອເດັກທີ່ມີຄວາມຕ້ອງການພິເສດ |
| | **ດ້ານການນຳໃຊ້:** ນັກສຶກສາສາມາດຜັນຂະຫຍາຍທິດສະດີ ແລະ ຫຼັກການເຂົ້າໃນການຈັດການຮຽນ-ການສອນການສຶກສາຮຽນຮ່ວມ |
| | **ດ້ານທັກສະທາງສັງຄົມ:** ເດັກທີ່ມີຄວາມຕ້ອງການພິເສດສາມາດດຳລົງຊີວິດຮ່ວມກັນກັບເດັກປົກກະຕິພາຍໃນສັງຄົມຢ່າງມີຄວາມສຸກ |

**ແຜນການສອນ** (**Course outline**)

| **ອາທິດທີ** | **ເນື້ອໃນ** | **ວິທີຈັດຕັ້ງການຮຽນການສອນ/ກິດຈະກຳ** |
|---|---|---|
| 1 | 1. ນິຍາມ:<br>2. ສົນທິສັນຍາສາກົນ ວ່າດ້ວຍ ສິດທິມະນຸດ ສະບັບເລກທີ 217 A (III) ລົງວັນທີ 10 ທັນວາ 1946<br>3. ສົນທິສັນຍາສາກົນວ່າດ້ວຍສິດທິຂອງຄົນພິການ (CRPD)<br>4. ສົນທິສັນຍາສາກົນ ວ່າດ້ວຍ ການຈຳກັດ ການຈຳແນກແມ່ຍິງໃນທຸກຮູບແບບ 34/180 ລົງວັນທີ 18/12/1979<br>5. ສົນທິສັນຍາສາກົນ ວ່າດ້ວຍ ສິດທິເດັກ ສະບັບເລກທີ 44/25 ລົງວັນທີ 20/11/1989<br>6. ກົດໝາຍວ່າດ້ວຍການສຶກສາ 2015<br>7. ມະຕິຕົກລົງຂອງສະພາແຫ່ງຊາດກ່ຽວກັບການຮັບຮອງເອົາເອີ່ນຊື່ ແລະ ຈຳນວນຊົນເຜົ່າ<br>8. ນະໂຍບາຍແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມ (2010)<br>9. ຍຸດທະສາດແລະແຜນປະຕິບັດງານແຫ່ງຊາດວ່າດ້ວຍ | ▪ ສອນແບບບັນຍາຍ ໂດຍເນັ້ນຜູ້ຮຽນເປັນຫຼັກດ້ວຍການອະທິບາຍ, ສົນ ທະນາ ແລະ ການຕັ້ງຄຳຖາມ |

| | | |
|---|---|---|
| | ການສຶກສາຮຽນຮ່ວມ (2011-2015)<br>10. ວິໄສທັດຮອດປີ 2030 ຂອງລັດຖະບານສປປ ລາວ<br>11. ວິໄສທັດຮອດ 2030 ຂອງກະຊວງສຶກສາທິການ ແລະ ກິລາ | |
| 2 | **ບົດທີ 2**<br>**ຄວາມໝາຍ,ຄຸນລັກສະນະ, ອົງປະກອບ ແລະ ຄຸນປະໂຫຍດ ຂອງຫ້ອງຮຽນຮ່ວມ ແລະເປັນເພື່ອນມິດໃນການຮຽນຮູ້**<br>1. ຄວາມໝາຍຂອງການສຶກສາຮຽນຮ່ວມ<br>2. ຄຸນລັກສະນະຂອງຫ້ອງຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້<br>ອົງປະກອບຂອງຫ້ອງຮຽນຮ່ວມ ແລ ເປັນເພື່ອນມິດໃນການຮຽນຮູ້<br>ປະໂຫຍດຂອງຫ້ອງຮຽນຮ່ວມແລະເປັນເພື່ອນມິດໃນການຮຽນຮູ້ | ▪ ສອນແບບການສອນແບບສົນທະນາໂດຍເນັ້ນໃຫ້ນັກສຶກສາຄົ້ນຄວ້າເປັນກຸ່ມ<br>▪ ສະຫຼຸບບັນເດັ່ນທີ່ສຳຄັນໃນການເຮັດວຽກກຸ່ມພ້ອມທັງສະຫຼຸບໃຈຄວາມເນື້ອໃນຂອງບົດຮຽນ. |
| 3 | **ບົດທີ 3**<br>**ການສຶກສາຮຽນຮ່ວມຢູ່ໃນ ສປປ ລາວ**<br>1. ສາລະຄະດີການສຶກສາຮຽນຮ່ວມ (Video ວີດີໂອ)<br>2. 17 ຕົວຊີ້ບອກ | ▪ ສອນແບບສົນທະນາໂດຍເນັ້ນຜູ້ຮຽນເປັນຫຼັກດ້ວຍການອະທິບາຍ ແລະ ການຕັ້ງຄຳຖາມ<br>ສະຫຼຸບປະເດັນສົນທະ ນາ ພ້ອມທັງສະຫຼຸບເນື້ອໃນໃຈຄວາມຂອງບົດ ຮຽນ. |
| 4 | **ບົດທີ 4**<br>**ແນວຄວາມຄິດ, ຫຼັກການ, ຄວາມສຳຄັນ ແລະ ຮູບແບບການຮຽນຮ່ວມ ແລະ ການສຶກສາພິເສດ**<br>1. ແນວຄວາມຄິດການສຶກສາຮຽນຮ່ວມ ແລະ ການສຶກສາພິເສດ<br>2. ຫຼັກການການສຶກສາຮຽນຮ່ວມ ແລະ ການສຶກສາພິເສດ<br>3. ການສຶກສາຮຽນຮ່ວມ<br>4. ຄວາມສຳຄັນການສຶກສາຮຽນຮ່ວມ<br>5. ຮູບແບບການສຶກສາຮຽນຮ່ວມສຳລັບຜູ້ຮຽນທີ່ເປັນຄົນພິການ | ▪ ສອນແບບສຳມະນາ ໂດຍເນັ້ນຜູ້ຮຽນເປັນຫຼັກດ້ວຍການຈັດເປັນກຸ່ມ, ສົນທະນາ ແລະ ການຕັ້ງຄຳຖາມ<br>▪ ສະຫຼຸບປະເດັນສົນທະ ນາການເຮັດວຽກກຸ່ມພ້ອມທັງສະຫຼຸບໃຈຄວາມເນື້ອໃນຂອງບົດຮຽນ. |
| 5 | **ບົດທີ 5**<br>**ຊຸມຊົນ ແລະ ຫຼັກສູດ**<br>1. ຊຸມຊົນກັບຫ້ອງຮຽນ<br>2. ຫ້ອງຮຽນກັບຊຸມຊົນ | ▪ ສອນແບບອະທິບາຍໂດຍເນັ້ນຜູ້ຮຽນເປັນຫຼັກດ້ວຍການສົນທະນາ ແລະ ການຕັ້ງຄຳຖາມ |

| | | |
|---|---|---|
| | | ▪ ສະຫຼຸບປະເດັນສົນທະ ນາພ້ອມທັງສະຫຼຸບໃຈ ຄວາມເນື້ອໃນຂອງບົດ ຮຽນ. |
| 6 | **ບົດທີ 6**<br>**ຂັ້ນຕອນເພື່ອຈະກາຍເປັນໂຮງຮຽນທີ່ມີສະພາບແວດລ້ອມເປັນການຮຽນຮ່ວມ ແລະ ເປັນເພື່ອມິດໃນການຮຽນຮູ້**<br>1. ວິທີວາງແຜນເພື່ອກະຈາຍເປັນໂຮງຮຽນທີ່ມີສະພາບແວດລ້ອມໂຮງຮຽນ ເອື້ອອຳນວຍຕໍ່ການຮຽນຮ່ວມ ແລະ ເປັນເພື່ອມິດໃນການຮຽນຮູ້<br>2. ວິທີຕິດຕາມຄວາມກ້າວໜ້າ | ▪ ສອນແບບອະທິບາຍ ໂດຍເນັ້ນຜູ້ຮຽນເປັນຫຼັກດ້ວຍສົນທະນາ, ການຕັ້ງຄຳຖາມ ແລະ ຈັດເປັນກຸ່ມ<br>▪ ສະຫຼຸບປະເດັນການເຮັດວຽກເປັນກຸ່ມພ້ອມທັງສະຫຼຸບໃຈຄວາມເນື້ອໃນຂອງບົດຮຽນ. |
| 7 | **ບົດທີ 7**<br>**ຄວາມສະເໝີພາບຍິງ-ຊາຍໃນການສຶກສາ**<br>1. ຄວາມໝາຍຄວາມສຳຄັນເພດ ແລະ ບົດບາດຍິງ-ຊາຍ<br>2. ການເຊື່ອມບົດບາດຍິງ-ຊາຍເຂົ້າໃນການຮຽນ-ການສອນ<br>3. ການເຊື່ອມບົດບາດຍິງ-ຊາຍໃນການສຶກສາແມ່ນແນວໃດ<br>4. ເປັນຫຍັງຈຶ່ງຕ້ອງການເຊື່ອມບົດບາດຍິງ-ຊາຍ? | ▪ ສອນແບບຈັດກຸ່ມ ໂດຍເນັ້ນຜູ້ຮຽນເປັນຫຼັກດ້ວຍການອະທິບາຍ, ສົນ ທະນາ ແລະ ການຕັ້ງຄຳຖາມ<br>▪ ສະຫຼຸບປະເດັນການສົນທະນາເປັນກຸ່ມ ພ້ອມທັງສະຫຼຸບໃຈຄວາມເນື້ອໃນຂອງບົດຮຽນ. |
| 8 | **ບົດທີ 8**<br>**ການສອນພາສາລາວໃຫ້ເດັກຊົນເຜົ່າ**<br>1. ຄວາມສຳຄັນຂອງພາສາລາວ<br>2. ບົດບາດຂອງພາສາລາວໃນໂຮງຮຽນປະຖົມສຶກສາ<br>3. ບາງຫຼັກການຂອງການສອນພາສາລາວສຳລັບນັກຮຽນຊົນເຜົ່າ<br>4. ບາງວິທີສອນທີ່ຄວນນຳໃຊ້ສອນພາສາລາວສຳລັບນັກຮຽນຊົນເຜົ່າ | ▪ ສອນແບບສຳມະນາ ໂດຍເນັ້ນຜູ້ຮຽນເປັນຫຼັກດ້ວຍການອະທິບາຍ, ສົນ ທະນາ ແລະ ການຕັ້ງຄຳຖາມ<br>▪ ສະຫຼຸບປະເດັນສົນທະ ນາພ້ອມທັງສະຫຼຸບໃຈ ຄວາມເນື້ອໃນຂອງບົດ ຮຽນ. |
| 9 | **ບົດທີ ໑**<br>**ການສະໜອງການສຶກສາຮຽນຮ່ວມຕາມໂຄງສ້າງຊິດ (SEAT Framework)**<br>1. ການກຽມຄວາມພ້ອມໃຫ້ແກ່ຜູ້ຮຽນ<br>2. ສະພາບແວດລ້ອມ | ▪ ສອນແບບອະທິບາຍ ໂດຍເນັ້ນຜູ້ຮຽນເປັນຫຼັກດ້ວຍການສົນທະນາເປັນກຸ່ມ ແລະ ການຕັ້ງຄຳຖາມ<br>▪ ສະຫຼຸບປະເດັນສົນທະ ນາເປັນກຸ່ມ |

| | | |
|---|---|---|
| | 3. ກິດຈະກໍາການຮຽນ-ການສອນສໍາລັບຜູ່ຮຽນທີ່ເປັນຄົນພິການ | ພ້ອມທັງສະ ຫຼຸບໃຈຄວາມເນື້ອໃນຂອງບົດຮຽນ. |
| 10 | **ບົດທີ 10**<br>**ຄວາມຕ້ອງການຂອງຄົນເປັນພິການ**<br>1. ນິຍາມຄົນພິການ<br>2. ປະເພດຄວາມເປັນພິການ<br>3. ສິ່ງກີດຂວາງຄົນພິການ<br>4. ອຸປະສັກໃນການດໍາລົງຊີວິດຂອງຄົນພິການ | ▪ ສອນແບບສໍາມະນາ ໂດຍເນັ້ນຜູ້ຮຽນເປັນຫຼັກດ້ວຍ ການສົນທະນາ ແລະ ການຕັ້ງຄໍາຖາມ<br>▪ ສະຫຼຸບປະເດັນສົນທະນາພ້ອມທັງສະຫຼຸບໃຈ ຄວາມເນື້ອໃນຂອງບົດ ຮຽນ. |
| 11 | **ບົດທີ 11**<br>**ການຮຽນຮ່ວມສໍາລັບເດັກທີ່ມີບັນຫາທາງດ້ານພຶດ ຕິກໍາ**<br>1. ການຈໍາແນກເດັກທີ່ມີຄວາມຕ້ອງການພິເສດຢູ່ໃນຫ້ອງຮຽນທົ່ວໄປ<br>2. ກໍລະນີສຶກສາ<br>2.1 ດອກບົວແຍ້ມບານ<br>2.2 ເດັກທີ່ຫຼົງທາງ<br>2.3 ຄວາມເຈັບປວດທີ່ບໍ່ມີໃຜຮູ້ຂອງດາລິມ<br>2.4 ຝັນຂອງແມ່ຍັງບໍ່ເປັນຈິງ | ▪ ສອນແບບສໍາມະນາ ໂດຍເນັ້ນຜູ້ຮຽນເປັນຫຼັກດ້ວຍການສົນທະນາເປັນຄູ່ ແລະ ການຕັ້ງຄໍາຖາມ<br>▪ ສະຫຼຸບປະເດັນສົນ ທະນາເປັນຄູ່ ພ້ອມທັງສະຫຼຸບເນື້ອໃນໃຈຄວາມຂອງບົດຮຽນ. |
| 12 | **ບົດທີ 12**<br>**ການກໍານົດຊອກຮູ້ຄວາມຕ້ອງການຂອງເດັກທີ່ມີບັນຫາດ້ານສາຍຕາ**<br>1. ສະພາບທົ່ວໄປຂອງນັກຮຽນທີ່ມີບັນຫາດ້ານສາຍຕາ ແລະ ການປະຕິບັດຕໍ່ນັກຮຽນໃນເວລາມາໂຮງຮຽນຄັ້ງທໍາອິດ<br>2. ການປັບສະພາບແວດລ້ອມຫ້ອງຮຽນ<br>3. ຍຸດທະສາດໃນການສິດສອນນັກຮຽນທີ່ມີບັນຫາດ້ານສາຍຕາ | ▪ ສອນແບບສໍາມະນາ ໂດຍເນັ້ນຜູ້ຮຽນເປັນຫຼັກດ້ວຍການອະທິບາຍ, ສົນທະນາ ແລະ ການຕັ້ງຄໍາຖາມ<br>▪ ສະຫຼຸບປະເດັນສົນທະ ນາພ້ອມທັງສະຫຼຸບເນື້ອໃນໃຈຄວາມຂອງບົດຮຽນ. |
| 13 | **ບົດທີ 13**<br>**ການກໍານົດຊອກຮູ້ຄວາມຕ້ອງການຂອງເດັກທີ່ບັນຫາການໄດ້ຍິນ**<br>1. ສະພາບທົ່ວໄປຂອງນັກຮຽນທີ່ມີບັນຫາການຟັງ<br>2. ການປັບສະພາບແວດລ້ອມຫ້ອງຮຽນ | ▪ ສອນແບບສໍາມະນາ ໂດຍເນັ້ນຜູ້ຮຽນເປັນຫຼັກດ້ວຍການອະທິບາຍ, ສົນ ທະນາ ແລະ ການຕັ້ງຄໍາຖາມ<br>▪ ສະຫຼຸບປະເດັນສົນທະ ນາພ້ອມ |

| | | |
|---|---|---|
| | 3. ຍຸດທະສາດໃນການສິດສອນນັກຮຽນທີ່ມີບັນຫາການໄດ້ຍິນ | ທັງສະຫຼູບເນື້ອໃນໃຈຄວາມຂອງບົດຮຽນ. |
| 14 | **ບົດທີ 14**<br>**ປະເພດເດັກທີ່ບໍ່ໄດ້ເຂົ້າຮຽນ**<br>1. ບາງປະເພດຂອງເດັກທີ່ມີບັນບໍ່ໄດ້ເຂົ້າຮຽນ<br>2. ການຊອກຮູ້ອຸປະສັກທີ່ກີດຂວາງການຮຽນຮ່ວມ<br>2.1 ບາງເຫດຜົນຂອງເດັກທີ່ບໍ່ໄດ້ມາໂຮງຮຽນ<br>2.2 ສະພາບແວດລ້ອມຄອບຄົວ<br>2.3 ສະພາບແວດລ້ອມຂອງຊຸມຊົນ<br>2.4 ສະພາບແວດລ້ອມໃນໂຮງຮຽນ | ▪ ສອນແບບລະດົມສະໝອງ ໂດຍເນັ້ນຜູ້ຮຽນເປັນຫຼັກດ້ວຍການສົນທະ ນາເປັນກຸ່ມ ແລະ ການຕັ້ງຄຳຖາມ<br>▪ ສະຫຼູບປະເດັນສົນ ທະນາເປັນກຸ່ມພ້ອມທັງສະ ຫຼູບເນື້ອໃນໃຈຄວາມຂອງບົດຮຽນ. |
| 15 | **ບົດທີ 15**<br>**ການວາງແຜນການສອນສຳລັບການສອນ ແລະ ການຮຽນຮູ້**<br>1. ກິດຈະວັດປະຈຳວັນ<br>2. ຄວາມຮັບຜິດຊອບຂອງເດັກ<br>3. ການວາງແຜນການສອນ<br>4. ການສິດສອນຢ່າງມີປະສິດທິຜົນຢູ່ໃນຫ້ອງຮຽນທີ່ມີນັກຮຽນຫຼາກຫຼາຍ | ▪ ສອນແບບຈັດກຸ່ມໂດຍເນັ້ນຜູ້ຮຽນເປັນຫຼັກດ້ວຍການອະທິບາຍ, ສົນທະນາ ແລະ ການຕັ້ງຄຳຖາມ<br>▪ ສະຫຼູບປະເດັນສົນ ທະນາພ້ອມທັງສະຫຼູບເນື້ອໃນໃຈຄວາມຂອງບົດຮຽນ. |
| 16 | **ບົດທີ 16**<br>**ການກວດກາ ແລະ ສອບເສັງສຳລັບເດັກທີ່ມີຄວາມຕ້ອງການພິເສດ**<br>1. ສະພາບທົ່ວໄປຂອງການກວດກາ ແລະສອບເສັງ<br>2. ທາງເລືອກໃນການສອບເສັງ | ▪ ສອນແບບລະດົມສະໝອງໂດຍເນັ້ນຜູ້ຮຽນເປັນຫຼັກດ້ວຍການອະທິບາຍ, ສົນທະນາ ແລະ ການຕັ້ງຄຳຖາມ<br>▪ ສະຫຼູບປະເດັນສົນທະ ນາພ້ອມທັງສະຫຼູບເນື້ອໃນໃຈຄວາມຂອງບົດຮຽນ. |
| **ອຸປະກອນຮັບໃຊ້** | ໂປຣເຈັກເຕີ້, ຄອມພິວເຕີ, LCD/PowerPoint, Video, ເຈ້ຍແຜ່ນໃຫຍ່, ສະກ໋ອດເຈ້ຍ, ເຈ້ຍ A4, ເອກະສານປະກອບການຮຽນ, ໃບກິດຈະກຳ | |
| **ແຫຼ່ງການຮຽນຮູ້** | ▪ ຫໍສະໝຸດ, ເອກະສານທາງເອເລັກໂທຣນິກ (Internet) | |

| | |
|---|---|
| **ເອກະສານອ້າງອີງ** | ▪ ນະໂຍບາຍແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມ 2010, ຍຸທະສາດ ແລະ ແຜນການຈັດຕັ້ງປະຕິບັດວຽກງານການສຶກສາຮຽນຮ່ວມແຕ່ປີ 2011-2015, ກົດໝາຍວ່າດ້ວຍການສຶກສາສະບັບປັບປຸງ,ວິໄສທັດ<br>▪ ຄູ່ມືເຫຼັ້ມທີ 1 ການສ້າງສະພາບແວດລ້ອມເພື່ອເປັນການສຶກສາຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ປີ 2012<br>▪ ຄູ່ມືເຫຼັ້ມທີ 2 ການຈັດການສອນຫ້ອງຮຽນຮ່ວມ ແລະ ເປັນເພື່ອມິດໃນການຮຽນຮູ້ ປີ 2012<br>▪ ປຶ້ມວິທີສິດສອນຫ້ອງຮຽນຮ່ວມສາຍຄູປະຖົມ ປີ 2009.<br>▪ ເອກະສານຮຽງຮຽງປະກອບການສອນສາຍຄູອະນຸບານ ລະບົບ 12+4 ແລະ 12+2 ປີ 2015-2016.<br>▪ ສາລະຄະດີການສຶກສາຮຽນຮ່ວມ https://www.youtube.com/watch?v=KZdIjw58uGM |
| **ການວັດ ແລະ ປະເມີນຜົນການຮຽນ** | 1. ການຮຽນຄິດໄລ່ເປັນຄະແນນສ່ວນຮ້ອຍ ດັ່ງນີ້:<br>• ການຂຶ້ນຫ້ອງ 10%<br>• ການຮ່ວມກິດຈະກຳກຸ່ມ 10%<br>• ການປະຕິບັດກິດຈະກຳບຸກຄົນ 20%<br>• ສອບເສັງກາງພັກຮຽນ 20%<br>• ສອບເສັງທ້າຍພາກຮຽນ 40%<br>2. ການຄິດໄລ່ຄ່າລະດັບ ແມ່ນໃຫ້ປະຕິບັດຕາມເກນການປະເມີນຜົນການຮຽນ ລາຍວິຊາ ໃນມາດຕະຖານຫຼັກສູດແຫ່ງຊາດ. |
| **ຜູ້ຮຽບຮຽງ** | ຊອ.ປທ ຄຳພົງ ອິນທະວັນ<br>ວິທະຍາໄລຄູຫຼວງພະບາງ<br>Tel: 020 54334224<br>Email: khamphong.in@gmail.com |

# ເອກະສານອ້າງອີງ


1. ນະໂຍບາຍແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມ ( 2010 )
2. ຍຸທະສາດ ແລະ ແຜນການຈັດຕັ້ງປະຕິບັດວຽກງານການສຶກສາຮຽນຮ່ວມແຕ່ປີ ( 2011-2015)
3. ກົດໝາຍວ່າດ້ວຍການສຶກສາສະບັບປັບປຸງ, ວິໄສທັດ .
4. ຄູ່ມືເຫຼັ້ມທີ 1 ການສ້າງສະພາບແວດລ້ອມເພື່ອເປັນການສຶກສາຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ປີ (2012 )
5. ຄູ່ມືເຫຼັ້ມທີ 2 ການຈັດການສອນຫ້ອງຮຽນຮ່ວມ ແລະ ເປັນເພື່ອມິດໃນການຮຽນຮູ້ ປີ( 2012 )
6. ປື້ມວິທີສິດສອນຫ້ອງຮຽນຮ່ວມສາຍຄູປະຖົມ ປີ ( 2009 )
7. ເອກະສານຮຽງຮຽງປະກອບການສອນສາຍຄູອະນຸບານ ລະບົບ 12+4 ແລະ 12+2 ປີ 2015-2016.
8. ສາລະຄະດີການສຶກສາຮຽນຮ່ວມ https://www.youtube.com/watch?v=KZdIjw58uGM